ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ອະທິບາຍຄໍາສັບ ກົດໝາຍ

# Lao Legal Terms

ຄະນະ ນິຕິສາດ ແລະ ລັດຖະສາດ

ມະຫາ ວິທະຍາໄລແຫ່ງຊາດ, ກະຊວງສຶກສາ ທິການ

2007

# ອະທິບາຍຄຳສັບ ກົດໝາຍ

# Lao Legal Terms

**ຂຽນແລະກວດແກ້ໂດຍ: ຄູອາຈານ ຄະນະ ນິຕິສາດ ແລະ ລັດຖະສາດ**

**ອຸປະຖຳໂດຍ:** ໂຄງການຮ່ວມມືລະຫວ່າງຄະນະນິຕິສາດແລະລັດຖະສາດ
ກັບໂຄງການ Sida

ຜະລິດປີ 2007
ພິມຄັ້ງທີ 1
C ສະຫງວນລິຂະສິດ
ນະຄອນຫຼວງວຽງຈັນ

ປື້ມນີ້ໄດ້ຮັບການກວດກາຜ່ານ
ຄະນະກຳມະການກວດແກ້ ຄນລ
ຄັ້ງວັນທີ 26/11/2007
ເຫັນດີໃຫ້ຈັດພິມໄດ້

# ຄຳນຳ

ການສຶກສາທາງດ້ານກົດໝາຍ ຢູ່ ສປປລາວມີການພັດທະນາມາແຕ່ປີ 1986 ເຊິ່ງເລີ່ມຈາກໂຮງຮຽນກົດໝາຍ ທີ່ສ້າງຂຶ້ນໂດຍກະຊວງຍຸຕິທຳເມື່ອກ່ອນ ແລະ ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດໃນປັດຈຸບັນ ທີ່ໄດ້ສ້າງບຸກຄະກອນພັນຄົນອອກຮັບໃຊ້ສັງຄົມ. ແຕ່ເຖິງຢ່າງໃດກໍຕາມ, ຄຽງຄູ່ການສ້າງນັກກົດໝາຍທາງດ້ານປະລິມານ ພວກເຮົາກໍໄດ້ເຫັນເຖິງຄວາມສຳຄັນໃນການພັດທະນາຄຸນນະພາບຂອງການສຶກສາ ທາງດ້ານກົດໝາຍໄປພ້ອມກັນ. ດັ່ງນັ້ນ, ຄະນະນິຕິສາດ ແລະ ລັດຖະສາດຈຶ່ງໄດ້ສ້າງ ທີມງານວິຊາການຄົ້ນຄ້ວາສັບກົດໝາຍຂຶ້ນ ເພື່ອເປັນການຕອບ ສະໜອງອຸປະກອນການສຶກສາຕາມຄວາມຮຽກຮ້ອງຕ້ອງການ. ພວກເຮົາໄດ້ເລີ່ມຄົ້ນຄ້ວາຕັ້ງແຕ່ປີ 2005 ແລະ ສຳເລັດໃນຂັ້ນພື້ນຖານ ປີ 2007.

ຈຸດປະສົງຂອງການສ້າງປື້ມຄຳສັບກົດໝາຍແມ່ນ ເພື່ອເຮັດໃຫ້ ນັກສຶກສາ ແລະ ຜູ້ສົນໃຈໃນການຄົ້ນຄ້ວາກົດໝາຍມີຄວາມເຂົ້າໃຈງ່າຍຂຶ້ນ. ດັ່ງນັ້ນ, ທີມງານພວກເຮົາໄດ້ມີຄວາມພະຍາຍາມແປສັບກົດໝາຍແຫ່ງ ສປປ ລາວ ມາອະທິບາຍໃນທາງທິດສະດີ ແລະພຶດຕິກຳຕົວຈິງໄປຄຽງຄູ່ກັນ ໂດຍພາຍໃຕ້ການສະໜັບສະໜູນດ້ານທຶນຈາກໂຄງການ SIDA ປະຈຳຄະນະ.

ປື້ມຄຳສັບເຫລັ້ມນີ້ໄດ້ກວມເອົາບັນດາສັບທີ່ເປັນພື້ນຖານຂອງກົດໝາຍໃນຂົງເຂດກົດໝາຍແພ່ງ, ກົດໝາຍອາຍາ, ກົດໝາຍການດຳເນີຄະດີແພ່ງ, ກົດໝາຍການດຳເນີນຄະດີອາຍາ, ກົດໝາຍລັດຖະທຳມະນູນ, ກົດໝາຍປົກຄອງ, ກົດໝາຍທຸລະກິດ ແລະກົດໝາຍສາກົນ. ຈາກຜົນງານທີ່ໄດ້ຈັດທຳມານີ້, ພວກເຮົາເຊື່ອໝັ້ນວ່າ ຈະເປັນຜົນປະໂຫຍດໃຫ້ແກ່ນັກສຶກສາ ແລະ ບັນດາທ່ານທີ່ຄົ້ນຄ້ວາກົດໝາຍໄດ້ຂັ້ນພື້ນຖານ, ເນື່ອງຈາກວ່າ ການສ້າງປື້ມສັບກົດໝາຍນີ້ ແມ່ນເປັນຜົນງານໃນຂັ້ນຕົ້ນ ຂອງຄະນະອາຈານ ຄນລ ຈຶ່ງເຊື່ອແນ່ວ່າ ອາດຈະມີບາງຂໍ້ຜິດພາດບາງປະການ, ທີມງານຄົ້ນຄ້ວາສັບກົດໝາຍ ຄະນະນິຕິສາດ ແລະ ລັດຖະສາດ ຍິນດີຈະຮັບເອົາຄຳຕິຊົມ ຈາກບັນດາທ່ານເພື່ອນຳໄປປັບປຸງໃນອະນາຄົດ.

## ຄະນະ ທີມງານຄົ້ນຄວ້າ

ທ່ານ ຮຈ ສົມພັນ ຈັນທະລີວົງ ຮອງຄະນະບໍດີ   ຫົວໜ້າ.

ອາຈານສອນ  ກົດໝາຍການປົກຄອງ

ທ່ານ ຮຈ ວຽງວິໄລ ທ່ຽງຈັນໄຊ ຮອງຄະນະບໍດີ.

ອາຈານສອນ ກົດໝາຍອາຍາ

ທ່ານ ອຈ ໄພມະນີ ໄຊວົງສາ ຫົວໜ້າ ພາກ ລັດຖະສາດ.

ອາຈານສອນກົດໝາຍທຸລະກິດ

ທ່ານ ອຈ ແສງເພັດ ອຸໄທ ຫົວໜ້າ ພາກ ພົວພັນສາກົນ.

ອາຈານສອນກົດໝາຍສາກົນ

ທ່ານ ອຈ ວິໄຊ ສີຫາປັນຍາ ຫົວໜ້າ ພາກ ນິຕິສາດ.

ອາຈານສອນ ກົດໝາຍແພ່ງ

ທ່ານ ອຈ ບຸນຄົງ ເພັດດາວຮຸ່ງ ຮອງ ຫົວໜ້າ ພາກ ພົວພັນສາກົນ

ອາຈານສອນ ກົດໝາຍລັດຖະທຳມະນູນ

ທ່ານ ອຈ ທອງຈັນ ສຸກສະກຸນ ຮອງຫົວໜ້າ ພະແນກຄົ້ນຄວ້າ ວິທະຍາສາດ ເລຂາ

ສອນກົດໝາຍສິ່ງແວດລ້ອມສາກົນ

# ອະທິບາຍຄຳສັບກົດໝາຍຕາມລັດຖະທຳມະນູນ

**ເອກະລາດ** ຄວາມໝາຍຕາມລັດຖະທຳມະນູນແມ່ນບໍ່ຂຶ້ນກັບໃຜ, ເປັນອິດສະຫລະ.

**ອະທິປະໄຕ** ແມ່ນອຳນາດສູງສຸດໃນການປົກຄອງໃນຂອບເຂດດິນແດນຂອງຕົນ.

**ກຳມະກອນ** ແມ່ນຜູ້ທີ່ອອກແຮງງານດ້ວຍຮ່າງກາຍ ແລະ ມັນສະໝອງ.

**ກະສິກອນ** ແມ່ນບຸກຄົນທີ່ທຳການຜະລິດທາງດ້ານການປູກຝັງ, ລ້ຽງສັດ,

**ປັນຍາຊົນ** ແມ່ນບຸກຄົນທີ່ມີຄວາມຮູ້, ຄວາມສະຫຼາດທີ່ເກີດຈາກການຮຽນ, ການຄົ້ນຄິດ ແລະ ປະສົບການ.

**ຫລັກແຫລ່ງ** ແມ່ນແກ່ນສານ,ຕົ້ນຕໍ, ຮາກເຫງົ້າ ຫລື ສິ່ງທີ່ເປັນຕົ້ນຕໍ.

**ລະບົບການເມືອງ** ແມ່ນໂຄງສ້າງທາງດ້ານການການເມືອງການປົກຄອງ.

**ແກນນຳ** ແມ່ນຜູ້ນຳພາໃນລະບົບການເມືອງຂອງປະເທດເຊັ່ນ: ພັກປະຊາຊົນປະຕິວັດລາວ.

**ສະພາແຫ່ງຊາດ (ມາດຕາ 2 ກມ ສະພາແຫ່ງຊາດ)** ແມ່ນອົງການຕົວແທນແຫ່ງສິດອຳນາດ ແລະ ສິດຜົນປະໂຫຍດ ຂອງປະຊາຊົນ.

**ຫລັກການທົ່ວໄປ** ແມ່ນເນື້ອໃນສຳຄັນທີ່ຍຶດຖືເປັນແນວທາງປະຕິບັດ ຫຼື ແນວທາງທີ່ຕັ້ງໄວ້ເພື່ອດຳເນີນການ ໃດໜຶ່ງ.

**ສະເໝີພາບ** ແມ່ນມີຄວາມເທົ່າທຽມກັນ.

**ໂດຍກົງ** ບໍ່ໃຫ້ຜູ້ອື່ນເຮັດແທນຕາມສະພາບຕົວຈິງ (ກມ ເລືອກຕັ້ງ)

**ປິດລັບ** ແມ່ນບໍ່ໃຫ້ຄົນອື່ນຮູ້ ແລະ ເຫັນ. (ບໍ່ເປີດເຜີຍ)

**ກຽດສັກສີ** ແມ່ນຊື່ສຽງຄວາມຍົກຍ້ອງນັບຖື, ຄວາມມີໜ້າມີຕາໃນສັງຄົມຂອງຕົວບຸກຄົນ.

**ຄວາມໄວ້ວາງໃຈ** ແມ່ນການໃຫ້ຄວາມນັບຖື, ຄວາມເຊື່ອຖື ຫຼື ໃຫ້ຄວາມເຊື່ອໝັ້ນ.

**ຫລັກການລວມສູນ** ແມ່ນການຍຶດຖື ເນື້ອໃນລວມທີ່ສຳຄັນ ໂດຍຜ່ານປະຊາມະຕິ ຫຼື ແນວທາງທີ່ຕັ້ງໄວ້ ເພື່ອ ດຳເນີນການແບບລວມ.

**ປະຊາທິປະໄຕ** ແມ່ນອຳນາດເປັນຂອງປະຊາຊົນ, ການຖືສຽງສ່ວນຫລາຍເປັນໃຫຍ່

**ປົກປ້ອງ** ແມ່ນການຄຸ້ມຄອງຮັກສາໄວ້ ເພື່ອບໍ່ໃຫ້ຖືກແຕະຕ້ອງ ຫລື ຖືກລ່ວງລະເມີດ.

**ສິດອິດສະຫລະພາບ** ແມ່ນສິດສ່ວນຕົວຂອງບຸກຄົນ ທີ່ຜູ້ອື່ນບໍ່ສາມາດລ່ວງລະເມີດໄດ້.

**ນະໂຍບາຍ** ແມ່ນວິທີການດຳເນີນການ,ວິທີປະຕິບັດທີ່ຖືວ່າເປັນແນວທາງດຳເນີນການ.

**ອາດຍາສິດ** ແມ່ນຜູ້ມີອຳນາດຢ່າງເດັດຂາດ

**ຂົ່ມຂູ່** ແມ່ນວິທີການໃດໜຶ່ງ ເພື່ອເຮັດໃຫ້ຄົນອື່ນມີຄວາມຢ້ານກົວ

**ຮ່າງກາຍ** ແມ່ນຕົນຕົວຂອງຄົນທີ່ປະກອບດ້ວຍອະໄວຍະວະຕ່າງໆ.

**ຊີວິດ** ໝາຍເຖິງການດຳລົງຢູ່ໂດຍປົກກະຕິ.

**ຈິດໃຈ** ແມ່ນໃຈ ຫລື ອາລົມທາງຈິດ.

**ເສີມຂະຫຍາຍ** ເຮັດໃຫ້ກວ້າງຂວາງກວ່າ ຫລືເຮັດໃຫ້ດີຂຶ້ນ.

**ຊົນເຜົ່າ** ແມ່ນເຊື້ອແນວ, ພົງພັນຂອງຄົນ.

**ສາສະນິກະຊົນ** ບຸກຄົນທີ່ນັບຖືສາດສະໜາ.

**ພຸດທະສາສະນິກະຊົນ** ແມ່ນບຸກຄົນທີ່ນັບຖືສາດສະໜາພຸດ

**ພິກຂຸ** ນັກບວດໃນສາດສະໜາພຸດ,ຖືສິນ 227 ຂໍ້, ບຸກຄົນທີ່ບວດເປັນພະ(ຄູບາ).

**ສາມະເນນ** ແມ່ນນັກບວດໃນສາດສະໜາພຸດ, ບຸກຄົນໄດ້ບວດເປັນຈົວ.

**ນັກບວດ** ແມ່ນບຸກຄົນທີ່ບວດໃນສາດສະນໜາໃດສາດສະໜາໜຶ່ງ.

**ສາດສະໜາ** ແມ່ນຄຳສັ່ງສອນຂອງສາດສະດາ.

**ລັດຖະທຳມະນູນ**ແມ່ນກົດຂໍ້ບັງຄັບຂັ້ນພື້ນຖານທີ່ຂຽນໄວ້ເປັນລາຍລັກອັກສອນແລະບໍ່ເປັນລາຍລັກອັກສອນ, ເປັນທັງກົດໝາຍສູງສຸດເພື່ອໃຊ້ໃນການປົກຄອງປະເທດ.

**ເຄົາລົບ** ສະແດງຄວາມນັບຖື,ບໍ່ລ່ວງເກີນ ເຊັ່ນ: ເຄົາລົບຜູ້ໃຫຍ່,ເຄົາລົບສິດຂອງຜູ້ອື່ນ.

**ເຂັ້ມງວດ** ເຮັດຢ່າງຈິງຈັງ,ເຄັ່ງຄັດ.

**ຈົງຮັກພັກດີ** ເຮັດສິ່ງໃດສິ່ງໜຶ່ງ,ຫລືຕັດສິນໃຈຢ່າງໃດຢ່າງໜຶ່ງຢ່າງຕາຍໃຈ.

**ຊັບສິນ** ວັດຖຸທັງທີ່ມີຮູບຮ່າງແລະບໍ່ມີຮູບບຮ່າງຊຶ່ງອາດມີລາຄາແລະຖືເອົາໄດ້.

**ມິດຕະພາບ** ຄວາມເປັນເພື່ອນເປັນໝູ່.

**ສັນຕິ** ຄວາມສະຫງົບ

**ສະໜັບສະໜູນ** ເຫັນດີ,ເຫັນພ້ອມ,ອຸປະຖຳຄ້ຳຊູ.

**ສັນຕິພາບ** ຄວາມເປັນຢູ່ຢ່າງສະຫງົບສຸກ,ຄວາມປອດໄພ.

**ສະຖຽນລະພາບ** ຄວາມໝັ້ນຄົງ.

**ກົນໄກ** ລະບົບທີ່ຈະເຮັດໃຫ້ວຽກງານບັນລຸຜົນສຳເລັດຕາມຈຸດປະສົງ ເຊັ່ນ: ກົນໄກການປົກຄອງ, ກົນໄກຄຸ້ມຄອງເສດຖະກິດ,ກົນໄກບໍລິຫານເກື້ອກຸນ,ກົນໄກຕະຫລາດ.

**ສັງຄົມນິຍົມ** ສັງຄົມທີ່ຄົນຍ່ອມຮັບນັບຖື ແລະນິຍົມຊົມຊອບ.

**ວົງຄະນະຍາດແຫ່ງຊາດ** ເປັນຂອງໝົດທຸກຄົນໃນຊາດ.

**ບູລິມະສິ**ດ ສິດທີ່ໄດ້ຮັບເປັນພິເສດກວ່າໝູ່.

**ຊັບພະຍາກອນມະນຸດ** ຄົນ.

**ຄຸນສົມບັດ** ມາດຕະຖານວັດແທກຄຸນຄ່າຄວາມດີຂອງຄົນ.

**ສອກຫລີກ** ເປັນສະຖານທີ່ຫ່າງໄກຈາກຕົວເມືອງຢູ່ແຈຫລືມູມໃດມູມໜຶ່ງ.

**ອະນຸລັກ** ຮັກສາໄວ້ຕາມເດີມ.

**ເອກະລັກ** ມີລັກສະນະສະເພາະອັນໃດອັນໜຶ່ງຂອງວັດຖຸ.

**ມູນເຊື້ອ** ມີພື້ນຖານມາແຕ່ດັ່ງເດີມ.

**ສິນລະປະວັນນະຄະດີ** ໜັງສືທີ່ມີຄວາມສວຍສົດງົດງາມມີສິລະປະໃນຕົວ.

**ການປະດິດຄິດແຕ່ງ** ຫນ້າທີ່ໃນການຈັດທຳຂຶ້ນທາງດ້ານມັນສະໝອງ.

**ມໍລະດົກ** ຊັບສິ່ງຂອງຂອງຜູ້ທີ່ເສຍຊີວິດ.

**ບູລະນະປະຕິສັງຂອນ** ສ້ອມແປງຄືນໃໝ່ໃຊ້ສຳລັບກັບວັດວາສາດສະໜາ.

**ວັດຖຸບູຮານ** ສິ່ງຂອງວັດຖຸທີ່ເກົ່າແກ່.

**ປູສະນີຍະສະຖານ** ສະຖານທີ່ເກົ່າແກ່ຄວນສັກກາລະບູຊາ.

**ສື່ມວນຊົນ** ນັກຂ່າວ.

**ສະຕິປັນຍາ** ຄວາມຮອບຮູ້.

**ກິລາກາຍະກຳ** ການຫລິ້ນ,ອອກກຳລັງທາງດ້ານຮ່າງກາຍ.

**ວິຊາຊີບ** ກ່ຽວກັບອາຊີບ ຫລືວິຊາສະເພາະໃດໜຶ່ງ

**ສະຫວັດດີການສັງຄົມ** ການຊ່ວຍເຫລືອໃຫ້ແກ່ສັງຄົມ.

**ບຳນານ** ລັດຖະກອນຜູ້ທີ່ໝົດອາຍຸການເຮັດວຽກແລ້ວອອກພັກຜ່ອນ.

**ຜູ້ເສຍອົງຄະ** ຜູ້ທີ່ມີອະໄວຍະວະສ່ວນໃດສ່ວນໜຶ່ງຫລືອັນໃດອັນໜຶ່ງເສຍໄປ.

**ຄວາມໝັ້ນຄົງ** ແມ່ນເລື້ອງຂອງຄວາມແໜ້ນໜາ,ທົນທານ.

**ຄວາມຮູ້** ສິ່ງທີ່ສະສົມມາຈາກການສຶກສາຮ່ຳຮຽນ,ການຄົ້ນຄ້ວາ,ປະສົບການ, ຄວາມສາມາດໃນທາງປະຕິບັດ ແລະທັກສະ.

**ຄວາມສາມາດ** ແມ່ນເລື້ອງທີ່ເຮັດສິ່ງໃດສິ່ງໜຶ່ງໄດ້.

**ວິຊາສະເພາະ** ວິຊາໃດວິຊາໜຶ່ງທີ່ໄດ້ຮຽນມາ.

**ຍຸດທະສິນ** ສິນລະປະທີ່ເປັນຍຸດທະສາດຈຸດສຳຄັນ.

**ຍຸດທະວິທີ** ວິທີສູ້ຕໍ່ສູ້,ວິທີໂຕຕອບ.

**ພະລາທິການ** ກັບທີ່

**ສິດ** ສິ່ງທີ່ຄວນຈະໄດ້ເຮັດ.

**ພັນທະ** ສິ່ງທີ່ຄວນເຮັດ,ໜ້າທີ່ທີ່ຕ້ອງເຮັດ.

**ສັນຊາດລາວ** ແມ່ນບຸກຄົນທີ່ໄດ້ສັນຊາດລາວ.

**ສິດເທົ່າທຽມກັນ** ສິ່ງທີ່ຄວນໄດ້ຮັບຢ່າງສະເໝີກັນ.

**ພູມລຳເນົາ** ຖິ່ນຖານບ້ານເກີດ ຫລືຖິ່ນຖານບ້ານເດີມ.

**ລ່ວງລະເມີດ** ລ່ວງເກີນຂໍ້ຫ້າມ.

**ເຊື່ອຖື** ການໃຫ້ຄວາມເຄົາລົບນັບຖື,ສາມາດຍອມປະຕິບັດໄດ້.

**ຄວາມສະຫງົບ** ແມ່ນເລື້ອງທີ່ເຮັດໃຫ້ມິດງຽບ,ບໍ່ມີຄວາມວຸ້ນວາຍ,ສະພາບເປັນປົກກະຕິ.

**ຊາວຕ່າງດ້າວ** ແມ່ນບຸກຄົນຕ່າງປະເທດທີ່ມາອາໄສຢູ່ໃນດິນແດນຂອງປະເທດໃດປະເທດໜຶ່ງໂດຍຍັງຖືສັນຊາດເດີມຂອງຕົນຢູ່.

**ຜູ້ບໍ່ມີສັນຊາດ** ແມ່ນບຸກຄົນທີ່ບໍ່ຖືສັນຊາດໃດ.

**ຄວາມເປັນທຳ** ແມ່ນເລື້ອງທີ່ເຮັດໃຫ້ຖືກຕ້ອງຕາມຄວາມເປັນຈິງ.

**ນິຕິບັນຍັດ** ການແຕ່ງຕັ້ງຂໍ້ກົດໝາຍ ແລະການອອກກົດໝາຍ.

**ຕິດຕາມກວດກາ** ພິຈາລະນາເບິ່ງໃຫ້ຮອບຄອບຖີ່ຖ້ວນ.

**ບໍລະຫານ** ປົກຄອງ,ດຳເນີນການ,ຈັດການ.

**ລົບລ້າງ** ບໍ່ເອົາຕາມ,ບໍ່ປະຕິບັດຕາມ.

**ຕຳແໜ່ງ** ສິດແລະໜ້າທີ່ທາງຝ່າຍບໍລິຫານ.

**ສ້າງຕັ້ງ** ກໍ່ໃຫ້ເກີດຂຶ້ນ

**ຍຸບເລີກ** ລົບລ້າງຫລືບໍ່ໃຫ້ມີ (ເວົ້າສະເພາະອົງການຈັດຕັ້ງ).

**ນິລະໂທດກຳ** ບໍ່ໃຫ້ມີໂທດ ຫລືພົ້ນໂທດ (ສະເພາະນັກໂທດ).

**ປະທານສະພາແຫ່ງຊາດ** ຜູ້ເປັນຫົວໜ້າຝ່າຍອົງການນິຕິບັນຍັດ.

**ຄະນະປະຈຳສະພາແຫ່ງຊາດ** ກຸ່ມຄົນທີ່ເຮັດວຽກປະຈຳຢູ່ສະພາແຫ່ງຊາດໂດຍມີການຄັດເລືອກ ຈາກສະມາຊິກສະພາ.

**ປະກາດ** ແຈ້ງການໃຫ້ຮູ້,ບອກເລົ່າໃຫ້ຮູ້.

**ຊາຕາກຳ** ຜົນທີ່ເກີດຂຶ້ນ,ຜົນຕິດຕາມມາ,ສິ່ງທີ່ເກີດຂຶ້ນ.

**ກຳມາທິການ**ກຳມະການໃຫຍ່ໄດ້ແກ່ຄະນະບຸກຄົນທີ່ໄດ້ຮັບແຕ່ງຕັ້ງໄດ້ເຮັດໜ້າທີ່ ຫລືພິຈາລະນາສອບສວນບັນຫາໃດບັນຫາໜຶ່ງ,ເຊິ່ງມີຖານະສຳຄັນກ່ວາກຳມະການ.

**ລັດຖະບັນຍັດ** ເປັນນິຕິກຳໜຶ່ງທີ່ສ້າງຂຶ້ນເພື່ອໃຊ້ບັງຄັບມີລັກສະນະຄ້າຍຄືກົດໝາຍທີ່ສະພາ-ແຫ່ງ ຊາດຮັບຮອງແລ້ວ. ເປັນການສ້າງຂຶ້ນໂດຍປະທານປະເທດຕາມການສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ

**ລັດຖະດຳລັດ** ເປັນການສ້າງຂຶ້ນໂດຍປະທານປະເທດຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ. ເປັນນິຕິກຳກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ.

**ລາຍລັກອັກສອນ** ເຮັດເປັນຕົວໜັງສື.

**ກຽດຕິຄຸນ** ກຽດຊື່ສຽງລືຊາຍ້ອນຄຸນງາມຄວາມດີ,ຊື່ສຽງດີງດັງ

**ອະໄພຍະໂທດ** ບໍ່ໃຫ້ມີໂທດ,ພົ້ນໂທດ (ກັບບຸກຄົນທົ່ວໄປ).

**ພາວະສຸກເສີນ** ສະພາບທີ່ເກີດຂຶ້ນຢ່າງວອງໄວ.

**ມະຕິ** ເຫັນດີ,ເຫັນພ້ອມ,ຄຳຕົກລົງ.

**ດຳລັດ** ເປັນຂໍ້ບັງຄັບ,ຂໍ້ລະບຽບທີ່ສ້າງຂຶ້ນໂດຍນາຍົກລັດຖະມົນຕີໃນຖານະຫົວໜ້າລັດຖະບານ. ງົດການປະຕິບັດເວັ້ນ ຫລືຢຸດການປະຕິບັດ.

**ອົງການທຽບເທົ່າກະຊວງ** ເປັນໜ່ວຍງານຂອງລັດຂັ້ນກະຊວງແຕ່ບໍ່ເອີ້ນວ່າກະຊວງ.

**ທະບວງ** ເປັນໜ່ວຍງານຂອງລັດທີ່ມີຖານະສູງກວ່າກົມແຕ່ຕ່ຳກວ່າກະຊວງ

**ລັດຖະບານ** ແມ່ນອົງການປົກຄອງປະເທດ,ອົງການບໍລິຫານປະເທດ.

**ລັດຖະປະສາດ** ການປົກຄອງ.

**ລັດຖະປະສາສະໂນບາຍ** ວິທີການປົກຄອງປະເທດ,ນະໂຍບາຍການປົກຄອງປະເທດ.:

**ຜົນສັກສິດ** ສິ່ງທີ່ບັງຄັບໃຫ້ເກີດຜົນຂຶ້ນມາ.

**ອົງການ** ສູນກາງຂອງກິດຈະການທີ່ຄົນຮ່ວມແຮງຮ່ວມປັດໃຈກໍ່ສ້າງຂຶ້ນເປັນໜ່ວຍງານ ຫລືຂະແໜງ ການເພື່ອດຳເນີນງານຕາມເປົ້າໝາຍ ແລະຈຸດປະສົງໃດໜຶ່ງຂອງຕົນ.

**ອົງກອນ** ແມ່ນການຈັດຕັ້ງ ແລະໜ່ວຍງານຍ່ອຍຂອງໜ່ວຍງາຍໃຫຍ່ທີ່ເຮັດໜ້າທີ່ສຳພັນກັນ ຫລືຂຶ້ນ ຕໍ່ກັນ ແລະກັນ.

# ວັດຈະນານຸກົມ ກ່ຽວກັບກົດໝາຍ ແລະ ການປົກຄອງ

**ກະຊວງ** ແມ່ນອົງການນຶ່ງຂອງການບໍລິຫານຂັ້ນສູນກາງ ທີ່ຂຶ້ນກັບລັດຖະບານ ແລະ ມີລັດຖະມົນຕີວ່າການ

**ການກວດກາ** ແມ່ນການຊອກຮູ້ການ ເຄື່ອນໄຫວວຽກງານທີ່ຖືກ ຕ້ອງ ແລະບໍ່ຖືກຕ້ອງ ເພື່ອຫາວິທີແກ້ໄຂຂໍ້ບົກພ່ອງ

**ການປາໄສ** ແມ່ນການກ່າວຄຳເຫັນ ຢ່າງເປັນທາງການຕໍ່ກອງ ປະຊຸມ ຫລື ການຊຸມ ນຸມຕ່າງໆ

**ສູນທອນພົດ** ແມ່ນການກ່າວຄຳເຫັນ ຢ່າງເປັນທາງການຂອງຜູ້ນຳຂັ້ນສູງ

**ອົງການບໍລິຫານລັດຂັ້ນສູນກາງ** ແມ່ນອົງການປົກຄອງ ລະ ດັບຊາດ ທີ່ມີອຳນາດ ໃນການບໍລິຫານ, ການວາງ ຍຸດທະສາດ ວາງແຜນທາງ ດ້ານເສດຖະກິດ-ສັງຄົມ, ວຽກງານ ປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກ ງານການພົວ ພັນຕ່າງປະເທດ

**ອົງການບໍລິຫານລັດຂັ້ນທ້ອງຖິ່ນ** ແມ່ນການຈັດຕັ້ງ ຖັດຈາກຂັ້ນສູນກາງ ເຊັ່ນ: ຂັ້ນແຂວງ, ນະຄອນຫລວງ, ຂັ້ນເມືອງ, ເທດສະບານ ແລະ ຂັ້ນບ້ານ

**ການມອບໝາຍ** ແມ່ນການມອບວຽກງານໃດນຶ່ງໃຫ້ຜູ້ອື່ນ, ໃນຂົງເຂດການບໍລິຫານ ແມ່ນຫົວໜ້າມອບວຽກໃຫ້ແກ່ຜູ້ໃດຜູ້ນຶ່ງເຮັດທີ່ມີລັກສະນະທາງການ ຫລື ທົ່ວໄປ

**ການຮ່ວມມື** ແມ່ນການສ້າງຄວາມສຳ ພັນຈາກສອງຝ່າຍຫລື ຫລາຍຝ່າຍ ເພື່ອເຮັດ ກິດຈະການໃດນຶ່ງຮ່ວມກັນ

**ການຂັດຂວາງການຈາລະຈອນ** ການກະທຳສິ່ງໃດສິ່ງນຶ່ງ ທີ່ເປັນການກີດຂວາງ ຕາມທ້ອງຖະໜົນ

**ການພັດທະນາ** ແມ່ນການເຄື່ອນໄຫວວຽກ ງານໃດນຶ່ງ ເພື່ອຈຸດປະ ສົງໃຫ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ມີຄຸນນະພາບ

**ການແກ້ບັນຫາ** ແມ່ນການຊອກຫາທາງອອກທີ່ເໝາະສົມ

**ການແກ້ໄຂເພີ່ມເຕີມ** ແມ່ນການກະທຳສິ່ງໃດສິ່ງ ນຶ່ງຂອງອົງກອນທີ່ມີອຳນາດ ເພື່ອໃຫ້ສອດຄ່ອງ ກັບເງື່ອນໄຂຕົວຈິງ

**ການເຂົ້າເມືອງ** ແມ່ນບຸກຄົນຕ່າງປະເທດ ເຂົ້າໄປປະເທດໃດນຶ່ງ ໂດຍຜ່ານດ່ານກວດຄົນເຂົ້າເມືອງ ທີ່ມີເອກະສານອະນຸຍາດ ຈາກລັດທີ່ຕົນຖືສັນຊາດ

**ການອົບພະຍົບ** ແມ່ນການເຄື່ອນຍ້າຍຖິ່ນຖານຈາກທີ່ເດີມໄປຢູ່ແຫ່ງອື່ນ ທັງພາຍໃນ ແລະ ຕ່າງປະເທດ

**ກົມ** ແມ່ນອົງກອນນຶ່ງທີ່ຂຶ້ນກັບກະຊວງ, ອົງການທຽບເທົ່າກະຊວງ ຫລື ທະບວງ ແລະ ເປັນອົງການທີ່ຊ່ວຍ ວຽກໃຫ້ລັດຖະ ມົນຕີ ຫລື ຫົວໜ້າອົງການດັ່ງກ່າວ

**ກອງເລຂານຸການ** ແມ່ນໜ່ວຍງານນຶ່ງທີ່ເຮັດ ວຽກຊ່ວຍລັດຖະບານ ຫລື ນາຍົກລັດຖະມົນຕີ

**ກິດຈະການຂອງຊາດໂດຍທົ່ວໄປ** ແມ່ນກິດຈະການທາງດ້ານການເມືອງ, ເສດຖະກິດ, ສັງຄົມວັດທະນະທຳ ແລະ ການປ້ອງກັນຄວາມສະ ຫງົບ

**ກົດລະບຽບ** ແມ່ນຂໍ້ກຳນົດສະເພາະກ່ຽວກັບການເຄື່ອນໄຫວຂອງ ການຈັດຕັ້ງ, ຂະແໜງການ ແລະ ກຸ່ມຄົນໃນຂົງເຂດໃດ ນຶ່ງ

**ກົດໝາຍການປົກຄອງທ້ອງຖິ່ນ** ແມ່ນຂໍ້ກນົດທີ່ລະບຸກ່ຽວກັບພາລະບົດບາດແລະໜ້າທີ່ຂອງອົງການຈັດຕັ້ງຂັ້ນ ແຂວງ, ນະຄອນຫລວງ, ເມືອງ, ເທດສະບານ ແລະ ຂັ້ນບ້ານ.

**ການບໍລິການສາທາລະນະ** ແມ່ນລັດຖະບານ ໄດ້ສ້າງສິ່ງອຳນວຍຄວາມສະດວກໃນການດຳລົງຊີວິດຂອງ ພົນລະເມືອງ

**ກົດໝາຍການເຊົ່າເຮືອນ** ແມ່ນຂໍ້ກຳນົດກ່ຽວກັບການການໃຊ້ສິດເຊົ່າເຮືອນ ແລະ ສິດໃນການພັກພາ ອາໄສ

**ກົດໝາຍການເຊົ່າທີ່ດິນ** ແມ່ນຂໍ້ກຳນົດກ່ຽວກັບການໃຊ້ສິດໃນການເຊົ່າທີ່ດິນ ແລະ ການນຳໃຊ້

**ການເລືອກຕັ້ງ** ແມ່ນ ການ ນຳໃຊ້ສິດ ຂອງ ພົນລະ ເມືອງ ເພື່ອເລືອກເອົາຕົວແທນຂອງຕົນໄປເປັນສະມາຊິກສະພາ ຫລື ອົງກອນໃດນຶ່ງ

**ມົນລະພິດທາງອາກາດ** ແມ່ນຄວາມປົນເປື້ອນເກີນອັດຕາສ່ວນໃນອາກາດ ຂອງສານພິດ ທີ່ເປັນອັນຕະລາຍຕໍ່ສຸ ຂະພາບ ຂອງຄົນ ແລະ ສັດ

**ກົດໝາຍກ່ຽວກັບການປ້ອງກັນ ແລະ ຄຸ້ມຄອງສັດປ່າ** ຂໍ້ກຳນົດກ່ຽວກັບການຈຳກັດການລ່າສັດ ທີ່ຜິດກົດໝາຍ ແລະ ມາດຕະການ ສະກັດກັ້ນ

**ການປົກຄອງ ຕົນເອງ** ແມ່ນຄວາມເປັນເອກະລາດໃນການບໍລິຫານຕົນເອງໃນລະດັບທ້ອງຖິ່ນ ຕາມກົດໝາຍກຳນົດໃຫ້

**ການຈາລະຈອນ** ແມ່ນການນຳໃຊ້ຍານພາ ຫານະສັນຈອນຕາມທ້ອງຖະໜົນ

**ການຮ້ອງທຸກຕໍ່ລັດ** ແມ່ນການຮ້ອງຂໍ, ສະເໜີຕໍ່ອົງການຈັດຕັ້ງລັດຂອງພົນລະເມືອງ ເພື່ອໃຫ້ແກ້ໄຂ ຫລື ຊົດເຊີຍ ຫລື ໃຫ້ກະທຳຢ່າງໃດຢ່າງນຶ່ງ

**ສັນຊາດ** ແມ່ນການຮັບຮູ້ ສະຖານະ ຂອງບຸກຄົນ ຕາມກົດໝາຍ ວ່າ ເປັນພົນລະເມືອງຂອງປະເທດ ຫລື ລັດໃດ ລັດໜຶ່ງ

**ກົດໝາຍປ່າໄມ້** ແມ່ນຂໍ້ກຳນົດກ່ຽວກັບການ ຄຸ້ມຄອງ ແລະ ການນຳໃຊ້ ປ່າໄມ້

**ກົດໝາຍປົກຄອງ** ແມ່ນກົດໝາຍທີ່ກຳນົດກ່ຽວກັບອຳນາດລັດ ແລະ ການບໍລິຫານລັດ. ແມ່ນຂະແໜງນຶ່ງຂອງລະ ບົບກົດໝາຍ ເຊິ່ງດັດປັບ ສາຍ ພົວພັນສັງຄົມໃນຂົງ ເຂດການບໍລິຫານລັດ. ແມ່ນຂໍ້ກຳນົດທີ່ລະບຸກ່ຽວ ກັບຫລັກການ ການເຄື່ອນ ໄຫວຂອງລັດ,ໜ້າທີ່, ພາລະບົດບາດຂອງອົງການບໍລິຫານລັດ

**ເຂດແດນ** ແມ່ນການແບ່ງຂອບເຂດ ໃນການປົກຄອງ ດິນແດນ ຂອງແຕ່ລະທ້ອງຖິ່ນ

**ດິນແດນ** ແມ່ນອົງປະກອບໜຶ່ງຂອງການເປັນລັດ ຊຶ່ງ ກວມເອົາ ພື້ນແຜ່ນດິນ, ນ່ານນ້ຳ ແລະ ນ່ານຟ້າ

**ໄປສະນີ** ຂໍ້ກຳນົດກ່ຽວກັບຄວາມຮັບຜິດຊອບການຝາກເຄື່ອງ ຂອງຕ່າງໆ ທາງໄປສະນີ ສິດ ແລະ ພັນທະຂອງຜູ້ ຝາກ ແລະ ຜູ້ໃຫ້ບໍລິການ

**ກົດໝາຍລັດຖະບານ** ແມ່ນຂໍ້ກຳນົດກ່ຽວກັບການເຄື່ອນໄຫວຂອງລັດຖະ ບານ ກຳນົດ ພາລະບົດບາດ ແລະ ໜ້າທີ່, ແລະ ລະ ບອບວິທີເຮັດວຽກ

**ກົດໝາຍລົງທະບຽນເອກະສານ** ແມ່ນຂໍ້ກຳນົດກ່ຽວກັບການລົງທະບຽນການເຄື່ອນໄຫວ ຂອງນິຕິບຸກຄົນ ແລະ ພົນລະເມືອງ ທີ່ມີຜົນຢັ້ງຢືນ ທາງດ້ານກົດໝາຍ

**ທະບຽນ** ແມ່ນການລົງບັນທຶກຢັ້ງຢືນຄວາມຖືກຕ້ອງ ແລະ ເປັນຈິງຂອງເອກະສານ

**ສຳນັກງານປະທານປະເທດ** ແມ່ນຫ້ອງການເຮັດ ວຽກ ງານຂອງປະມຸກລັດ

**ສຳເນົາຮັບຮອງວ່າຖືກຕ້ອງ** ແມ່ນການຢັ້ງຢືນທີ່ເປັນ ທາງການວ່າເອກະສານນັ້ນ ແມ່ນຖືກຕ້ອງຕາມສະບັບເດີມ

**ສຳນັກງານນາຍົກລັດຖະມົນຕີ** ແມ່ນບ່ອນເຮັດວຽກຂອງ ລັດຖະບານ ແລະ ເປັນອົງການຊ່ວຍວຽກໃຫ້ແກ່ນາ ຍົກລັດຖະ ມົນຕີ

**ສະພາວິທະຍາສາດ** ແມ່ນອົງການຈັດຕັ້ງນຶ່ງທີ່ມີ ບົດບາດໃນການພິຈາລະ ນາຮັບຮອງຜົນຂອງການຄົ້ນຄວ້າວິທະຍາສາດ

**ສະພາ** ແມ່ນອົງການທີ່ເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນ.

ລະບົບສະພາສ່ວນໃຫຍ່ມີ 2 ລະບົບ:ລະ ບົບ ສະພາຄູ່ ແລະ ສະພາດ່ຽວ.

1. *ສະພາຄູ່*, ປະກອບມີ ສະພາສູງ ແລະ ສະພາຕ່ຳ ເຊັ່ນ *ສະພາໄດເອດ, ລັດຖະສະພາ, ສະພາ*
2. *ສະພາດ່ຽວ*ໄດ້ແກ່ ສະພາແຫ່ງຊາດ,

**ສະພາແຫ່ງຊາດ** ແມ່ນອົງການຕົວແທນແຫ່ງສິດອຳນາດ ແລະຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ເປັນອົງການອຳນາດ ແຫ່ງລັດ ແລະ ທັງເປັນອົງການນິຕິບັນຍັດ ທີ່ມີສິດຕັດສິນບັນຫາພື້ນຖານຂອງປະເທດຊາດ, ຕິດຕາມການກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນ ແລະອົງການໄອຍະການປະຊາຊົນ

**ສາທາລະນະ** ແມ່ນເປັນຂອງສ່ວນລວມ ເຊັ່ນ ຖ້າເປັນຊັບສິນບັດກໍເປັນຂອງປະຊາຊົນທັງໝົດ ໂດຍລັດເປັນຜູ້ບໍລິຫານ ແລະ ຄຸ້ມຄອງ

**ປະເທດ** ແມ່ນເຂດການປົກຄອງຕົນເອງທີ່ມີພື້ນແຜ່ນດິນອັນຄົບຖ້ວນ,ມີອະທິປະໄຕ, ມີສະຖຽນລະພາບ ພາຍໃນປະ ເທດ, ມີພົນລະເມືອງ ປະ ຊາກອນ,ຄວາມເປັນ ເອກະ ລາດ ທາງດ້ານການເມືອງ, ເສດຖະກິດ

**ປະທານປະເທດ** ແມ່ນບຸກຄົນທີ່ເປັນປະມຸກລັດ ແລະ  ເປັນຜູ້ຕາງໜ້າ ໃຫ້ປະຊາຊົນຢູ່ພາຍໃນ ແລະຕ່າງປະ ເທດ

**ປະທານາທິບໍດີ** ແມ່ນບຸກຄົນທີ່ເປັນປະມຸກລັດທີ່ໄດ້ມາຈາກການເລືອກຕັ້ງ. ແມ່ນຜູ້ບໍລິຫານສູງສຸດ ແຫ່ງລັດສຳລັບປະເທດປົກຄອງແບບປະທາ ນາທິບໍດີ ເຊັ່ນ ອາເມລິກາ

**ຕາປະທັບ** ເປັນເຄື່ອງໝາຍ ແລະ ເອກະລັກສະເພາະຂອງອົງການຈັດຕັ້ງຂອງພາກລັດ ແລະພາກເອກະຊົນ; ຕາປະທັບແມ່ນມີອຳນາດບັງຄັບ ທີ່ເປັນທາງການ

**ການປັບໄໝທາງບໍລິຫານ** ແມ່ນໂທດຕົ້ນຕໍທາງບໍລິ ຫານ ເຊິ່ງຜູ້ລະເມີດຈະຕ້ອງ ຈ່າຍເປັນເງິນຕາມການກຳນົດໄວ້ໃນລະບຽບການ

**ມອບອຳນາດ.** ແມ່ນການໃຫ້ສິດແລະ ໜ້າທີ່ ໃນການຕັດສິນ ແລະ ກະທຳຢ່າງໃດຢ່າງນຶ່ງ

ໜ້າທີ່

ພັນທະ

**ວາງແຜນ** ແມ່ນການຄາດຄະເນການເຄື່ອນໄຫວວຽກງານລ່ວງໜ້າໃນກິດຈະການໃດນຶ່ງ

**ແຜນການ** ແມ່ນແຜນວຽກທີ່ໄດ້ຮັບ ຮອງແລ້ວ ແລະ ສາມາດ ຈັດຕັ້ງປະຕິບັດ

**ຄະນະກຳມະການກວດກາແຫ່ງລັດ** ແມ່ນອົງການຈັດຕັ້ງນຶ່ງ ທີ່ມີ ບົດບາດໃນການກວດກາການ ເຄື່ອນໄຫວຂອງອົງ ການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ

**ຄອບຄົວ** ເປັນຫົວໜ່ວຍນຶ່ງຂອງການຈັດຕັ້ງຂັ້ນບ້ານ ທີ່ມີສະມາ ຊິກຈຳນວນນຶ່ງຢູ່ຮ່ວມກັນ

**ຄົນບໍ່ມີສັນຊາດ** ແມ່ນບຸກຄົນທີ່ບໍ່ຮູ້ວ່າຕົນຖື ສັນຊາດໃດ ແລະ ມີຖິ່ນກຳ ເນີດມາຈາກໃສ

**ຄົນຕ່າງຊາດ** ແມ່ນຄົນຕ່າງປະເທດທີ່ເຂົ້າໄປປະເທດໃດນຶ່ງເພື່ອເຮັດ ວຽກ ຫລື ທ່ອງທ່ຽວທີ່ມີລັກ ສະນະຊົ່ວຄາວ

**ຄົນຕ່າງດ້າວ** ແມ່ນຄົນຕ່າງປະເທດທີ່ມາອາໄສ ແລະ ດຳລົງຊີວິດ ຢູ່ປະເທດໃດນຶ່ງໂດຍບໍ່ໄດ້ຖື ສັນຊາດຂອງປະເທດນັ້ນ , ແຕ່ຍັງຮັກສາສັນຊາດເດີມຂອງຕົນໄວ້

**ຊົ່ວຄາວ** ມີກຳນົດ ແລະ ມີໄລຍະເວລາອັນສັ້ນ

**ຊັບສິນສາທາລະນະ** ແມ່ນຊັບສິນບັດສ່ວນລວມ ໂດຍແມ່ນລັດເປັນຜູ້ຄຸ້ມ ຄອງ ແລະ ປົກປັກຮັກສາ

**ບ້ານ** ແມ່ນເຂດປົກຄອງຂັ້ນຮາກຖານ ທີ່ຂຶ້ນກັບເມືອງ ຫລື ເທດສະບານ, ບ້ານນຶ່ງປະ ກອບດ້ວຍ ຫລາຍຄອບຄົວ

**ບໍ່ຊອບທາງກົດໝາຍ** ແມ່ນການປະພຶດທີ່ຂັດກັບ ບະບຽບ, ກົດໝາຍ ແລະ ລັດຖະທຳມະນູນ

**ນະຄອນ** ແມ່ນເຂດການປົກຄອງ ທ້ອງຖິ່ນ ໃນຕົວເມືອງໃຫຍ່ ທີ່ມີຊຸມຊົນໜາແໜ້ນ, ເຊິ່ງປະກອບ ດ້ວຍຫລາຍເທດສະບານ, ເປັນໃຈກາງທາງດ້ານການເມືອງ, ເສດຖະກິດ, ວັດທນະທຳ- ສັງຄົມ ແລະ ການບໍລິການ ທີ່ມີບົດບາດຊຸກຍູ້ທາງດ້ານເສດຖະກິດ-ສັງຄົມຂອງປະເທດຊາດ.

**ນະຄອນຫລວງ** ແມ່ນຕົວເມືອງທີ່ຖືກກຳນົດເປັນເມືອງເອກຂອງປະເທດ

**ນາຍບ້ານ** ແມ່ນຜູ້ທີ່ໄດ້ຖືກເລືອກຕັ້ງຈາກປະຊາຊົນ ໃຫ້ດຳລົງຕຳແໜ່ງເປັນຜູ້ບໍລິຫານພາຍໃນ ບ້ານ

**ນາຍົກລັດຖະມົນຕີ** ແມ່ນຫົວໜ້າລັດຖະບານ, ເປັນຜູ້ຊີ້ນຳ ແລະ ນຳພາ ການເຄື່ອນໄຫວ ຂອງລັດ ຖະບານ ແລະ ອົງການປົກ ຄອງທ້ອງຖິ່ນ

**ຫ້ອງການ** ແມ່ນສະຖານທີ່ ບ່ອນເຮັດວຽກທາງລັດຖະການ. ແມ່ນການຈັດຕັ້ງນຶ່ງ ທີ່ເຮັດ ວຽກ ທາງດ້ານບໍລິຫານຢູ່ໃນອົງການຈັດຕັ້ງໃດນຶ່ງ.

ສຳລັບຢູ່ຂັ້ນເມືອງຈະມີຫ້ອງການຕ່າງໆທີ່ມີສາຍຕັ້ງຂຶ້ນກັບກະຊວງ

**ຫ້ອງວ່າການ** ເປັນບ່ອນເຮັດວຽກຂອງເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ເຈົ້າເມືອງ

**ພະແນກ** ແມ່ນອົງການຈັດຕັ້ງທີ່ຮັບ ຜິດຊອບວຽກງານໃດນຶ່ງ ທີ່ ຖັດຈາກຂັ້ນກົມ. ເປັນອົງການ ຈັດຕັ້ງທີ່ຮັບຜິດວຽກ ງານໃດນຶ່ງຢູ່ຂັ້ນແຂວງ

**ແກ້ໄຂບາງສ່ວນ** ເປັນວິທີການແກ້ໄຂຂອງ ອົງການບໍລິຫານ, ອົງການບໍລິຫານມີສິດ ແກ້ໄຂ ຂໍ້ສະເໜີທັງໝົດ ຫລື ບາງສ່ວນ

**ເກີນຂອບເຂດອຳນາດ** ແມ່ນການໃຊ້ສິດ ແລະ ໜ້າທີ່ນອກກົດໝາຍທີ່ໄດ້ກຳນົດໄວ້

**ເມືອງ** ແມ່ນເຂດການປົກຄອງຂັ້ນ ທ້ອງຖິ່ນທີ່ຂຶ້ນກັບແຂວງ, ນະຄອນ ຫລື ນະຄອນ ຫລວງ

**ແຂວງ** ແມ່ນເຂດການປົກຄອງ ທ້ອງຖິ່ນຂັ້ນສູງສຸດທີ່ປະ ກອບດ້ວຍຫລາຍເມືອງ

**ເຈົ້າຄອງນະຄອນຫລວງ** ເປັນຜູ້ທີ່ຖືກແຕ່ງຕັ້ງໂດຍປະທານປະເທດ ໃຫ້ເປັນຜູ້ ປົກຄອງ ນະຄອນ ຫລວງ

**ເຈົ້າເມືອງ** ເປັນຜູ້ທີ່ຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ໃຫ້ເປັນຜູ້ປົກຄອງຂັ້ນເມືອງ

**ເຈົ້າແຂວງ** ເປັນຜູ້ທີ່ຖືກແຕ່ງຕັ້ງໂດຍ ປະທານປະເທດ ໃຫ້ເປັນຜູ້ປົກຄອງຂັ້ນແຂວງ

**ຫົວໜ້າເທດສະບານ** ເປັນຜູ້ທີ່ຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ໃຫ້ເປັນຜູ້ປົກຄອງຂັ້ນ ເທດສະບານ

**ໃບອະນຸຍາດ** ແມ່ນເອກະສານທີ່ອອກໃຫ້ໂດຍທາງການ ເພື່ອສາ ມາດ ດຳເນີນກິດຈະການໃດນຶ່ງ ຕາມຕາມຈຸດປະສົງຂອງການຮ້ອງຂໍ

**ຕາປະທັບ.** ແມ່ນເຄື່ອງໝາຍທີ່ເປັນ ທາງການ ແລະ ມີລັກສະ ນະ ອຳນາດບັງຄັບ

**ເທດສະບານ** ແມ່ນເຂດປົກຄອງທ້ອງຖິ່ນທີ່ເປັນຕົວເມືອງ ມີຄວາມ ໜາແໜ້ນ ແລະ ມີການພັດ ທະນາທາງດ້ານ ເສດຖະ ກິດ ແລະ ສັງຄົມ. ເປັນທີ່ຕັ້ງຂອງການປົກຄອງແຂວງ, ເມືອງ ຫລື ນະ ຄອນ

**ທະບວງ** ແມ່ນອົງການນຶ່ງທີ່ມີຖະນະທຽບເທົ່າກະຊວງ, ແມ່ນອົງການຈັດຕັ້ງຂັ້ນສູນກາງ

**ໜ່ວຍ(ຂັ້ນບ້ານ)** ແມ່ນຫົວໜ່ວຍການຈັດຕັ້ງທີ່ຂຶ້ນກັບບ້ານ, ບ້ານນຶ່ງປະກອບມີຫລາຍໜ່ວຍ

**ໜ່ວຍງານ** ແມ່ນຂະແໜງທີ່ເຄື່ອນໄຫວ ວຽກງານສະເພາະດ້ານໃນຫ້ອງການໃດນຶ່ງ

**ລະເມີດ** ແມ່ນການກະທຳທີ່ຝືນກັບ ລະບຽບການປົກຄອງທີ່ກຳນົດໄວ້

**ໜ້າທີ່ທາງບໍລິຫານໂດຍທົ່ວໄປ** ແມ່ນຂໍ້ກຳນົດການເຄື່ອນ ໄຫວຂອງອົງການບໍລິຫານລັດ

**ໜັງສືມອບອຳນາດ** ແມ່ນເອກະສານມອບຄວາມຮັບຜິດຊອບໃຫ້ການຈັດ ຕັ້ງ ຫລື ບຸກຄົນ ທີ່ ເປັນທາງ ການ

**ລັດ** ລັດແມ່ນການຈັດຕັ້ງພິເສດ ອຳນາດການເມືອງຂອງຊົນຊັ້ນທີ່ຄອບຄອງທາງດ້ານເສດຖະ ກິດ ( ຂອງຊາວຜູ້ອອກແຮງງານ ໂດຍມີຊົນຊັ້ນກຳມະກອນເປັນຜູ້ນຳໜ້າ - ໃນສັງຄົມນິຍົມ ) , ມີກົງ ຈັກພິເສດ ແລະ ສາມາດເຮັດໃຫ້ລະບຽບຂອງຕົນມີຜົນບັງຄັບສຳລັບປະຊາຊົນທັງໝົດປະເທດ .

**ລັດຖະມົນຕີ** ແມ່ນສະມາຊິກລັດຖະບານ ທີ່ຮັບຜິດຊອບວຽກງານຢູ່ກະຊວງ ຫລື ອົງການທຽບເທົ່າກະຊວງ

**ລັດຖະບານ** ແມ່ນອົງການບໍລິຫານແຫ່ງລັດ ຊຶ່ງປະກອບດ້ວຍ ນາ ຍົກລັດຖະມົນຕີ, ຮອງນາ ຍົກລັດຖະມົນຕີ,ລັດຖະມົນ ຕີວ່າການກະຊວງ, ລັດຖະ ມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ແລະ ຫົວ ໜ້າອົງການທຽບເທົ່າກະ ຊວງ ໂດຍແມ່ນນາຍົກລັດຖະມົນຕີເປັນຫົວໜ້າລັດ ຖະບານ

**ອຳນາດບໍລິຫານ** ແມ່ນການເຄື່ອນຂອງລັດ ຖະບານ ທີ່ລັດຖະທຳມະ ນູນ ແລະ ກົດໝາຍກ່ຽວຂ້ອງ ໄດ້ກຳນົດໄວ້

**ອຳນາດຕຸລາການ** ແມ່ນການເຄື່ອນຂອງສານ ທີ່ລັດຖະທຳມະນູນ ແລະ ກົດໝາຍກ່ຽວຂ້ອງໄດ້ກຳ ນົດໄວ້

**ອຳນາດລັດ** ແມ່ນການບັງຄັບທີ່ອີງໃສ່ ລັດຖະທຳມະນູນ, ກົດ ໝາຍ ແລະ ຂໍ້ກຳນົດທີ່ ການຈັດຕັ້ງຂອງລັດ ກຳນົດໄວ້

**ອຳນາດນິຕິບັນຍັດ** ແມ່ການເຄື່ອນຂອງສະພາ ທີ່ລັດຖະທຳມະນູນ ແລະ ກົດໝາຍກ່ຽວຂ້ອງໄດ້ກຳ ນົດໄວ້

**ການສະໜັບສະໜູນ** ແມ່ນການເຫັນດີ, ການອອກສຽງເຫັນພ້ອມນຳຝ່າຍໃດຝ່າຍນຶ່ງ

**ການກວດສອບບັນຊີ** ແມ່ນການໃຊ້ນັກວິຊາການ ຈາກພາກລັດ ຫລື ພາກເອກະຊົນເພື່ອຊອກຫາຂໍ້ ມູນທາງການເງິນ.

**ການປະຕິຮູບ** ແມ່ນການປັບປຸງນະໂຍ ບາຍເກົ່າບາງສ່ວນ ແລ້ວ ສ້າງອັນໃໝ່ມາທົດແທນ ໂດຍຕັ້ງເປົ້າໝາຍໄວ້ໃຫ້ດີຂຶ້ນກ່ວາເກົ່າ

**ໃບຄະແນນ** ແມ່ນເອກະສານທີ່ສະແດງຜົນການສຶກສາ ແລະມີຄວາມສຳຄັນໃນການຢັ້ງຢືນການສຶກສາຜ່ານມາ

**ການແຕ່ງຕັ້ງ** ແມ່ນການມອບສິດ ແລະ ໜ້າທີ່ໃຫ້ບຸກຄົນເພື່ອຮັບຜິດຊອບວຽກງານໃດນຶ່ງ

**ການໄລ່ອອກ** ແມ່ນວິໄນທາງບໍລິຫານ ເຊິ່ງປະຕິບັດຕໍ່ພະນັກງານທີ່ປະພຶດຕົນຜິດຕໍ່ລະບຽບ ໂດຍ ມີມະຕິຕົກລົງໃຫ້ອອກຈາກໜ້າທີ່ໂດຍທາງການ

**ປົດຕຳແໜ່ງ** ແມ່ນການລົບລ້າງໜ້າທີ່, ຄວາມຮັບຜິດຊອບ ໂດຍເປັນທາງການ

**ເລື່ອນຕຳແໜ່ງ** ແມ່ນການຍົກລະດັບຄວາມ ຮັບຜິດຊອບວຽກງານໃຫ້ສູງກວ່າເກົ່າ

**ເລື່ອນຊັ້ນ** ແມ່ນການຍົກລະດັບວິຊາສະເພາະໃຫ້ສູງກວ່າເກົ່າ

**ໂຍກຍ້າຍ** ແມ່ນການເອົາພະນັກງານ ຈາກບ່ອນເດີມ ໄປເຮັດວຽກຢູ່ບອ່ນໃໝ່

**ອົງການນິຕິບັນຍັດ** ແມ່ນສະພາແຫ່ງຊາດ ເຊິ່ງເຮັດໜ້າທີ່ໃນການຄົ້ນ ຄ້ວາ ແລະ ພິຈາລະນາ ຮັບຮອງກົດໝາຍ

**ລັດຖະບັນຍັດ** ແມ່ນຂໍ້ກຳນົດເຊິ່ງມີຜົນບັງຄັບຫຼຸດຈາກກົດໝາຍລົງມາ ໂດຍແມ່ນປະທານປະເທດ ເປັນຜູ້ວາງອອກ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.

**ລັດຖະດຳລັດ** ແມ່ນຄຳຕົງລົງຂອງປະ ທານປະເທດທີ່ມີຜົນບັງຄັບສະເພາະໂດຍແມ່ນປະ ທານປະເທດເປັນຜູ້ວາງ ອອກຕາມການສະເໜີຂອງລັດຖະບານ ຫຼື ພາກສ່ວນ ອື່ນ ທີ່ກ່ຽວຂ້ອງ.

**ດຳລັດ** ແມ່ນຂໍ້ກຳນົດຂອງລັດຖະ ບານ ຫຼື ນາຍົກ ລັດຖະມົນ ຕີເປັນຜູ້ວາງອອກໃນຂົງເຂດການ ບໍລິຫານລັດ

**ຄຳສັ່ງ** ແມ່ນຂໍ້ບັງຄັບທົ່ວໄປວາງ ອອກເພື່ອຈັດຕັ້ງປະຕິບັດ ວຽກງານໃດນຶ່ງ.

**ຂໍ້ຕົກລົງ** ແມ່ນຂໍ້ກຳນົດ ທີ່ມີຜົນບັງ ຄັບສະເພາະເພື່ອຮັບໃຊ້ ວຽກງານບໍລິຫານ,ຊີ້ທົ່ວ ໜ້າອົງ ການຈັດຕັ້ງທີ່ກ່ຽວ ຂ້ອງເປັນຜູ້ວາງອອກ.

**ແຈ້ງການ** ແມ່ນເອກະສານທີ່ອົງການຈັດຕັ້ງຂັ້ນຕ່າງໆ ວາງອອກ ເພື່ອແຈ້ງໃຫ້ພາກສ່ວນທີ່ ກ່ຽວຂ້ອງຊາບ ຫຼື ຈັດຕັ້ງ ປະຕິບັດວຽກງານໃດໜຶ່ງ

**ປະກາດ** ແມ່ນການບອກຂ່າວໃຫ້ ການຈັດຕັ້ງ ຫລື ສ່ວນບຸກຄົນຮູ້ ແລະ ຮັບຊາບ.

**ຜູ້ສັງເກດການ** ແມ່ນຜູ້ຖືກເຊີນເຂົ້າຮ່ວມໃນກອງປະຊຸມໃດນຶ່ງ ເພື່ອຮັບຮູ້ຂໍ້ມູນໂດຍມີເປົ້າໝາຍ ຈະເຂົ້າເປັນສະມາຊິກຂອງ ການຈັດຕັ້ງໃດນຶ່ງໃນອານາຄົດ.

**ການປະເມີນ** ແມ່ນການຕີລາຄາໝາກ ຜົນ ດ້ານດີ ແລະດ້ານອ່ອນ ຂອງການປະຕິບັດວຽກງານ

**ໜ້າທີ່ຮັບຜິດຊອບ** ໝາຍເຖິງພະນັກງານຂອງລັດຕ້ອງຮັບປະກັນໃນການປະຕິບັດວຽກງານ ຕາມ ການມອບໝາຍ

**ສຳນັກງານຂອງລັດຖະບານ** ແມ່ນບ່ອນປະຈຳການຂອງຄະນະລັດຖະບານ ສຳລັບ ສປປ ລາວ ເອີ້ນວ່າ ສຳນັກ ງານນາຍົກລັດຖະມົນຕີ; ປະເທດທຶນນິຍົມເອີ້ນວ່າ ທຳນຽບ ລັດຖະບານ.

**ການກຳໜົດໜ້າທີ່** ການວາງຂອບເຂດສິດ-ອຳນາດໃນການປະຕິບັດວຽກງານ ໃຫ້ພະນັກງານ ຫລື ການຈັດຕັ້ງ.

**ການຮັບ.** ແມ່ນ ການບັນຈຸພະນັກ ງານ ຫລື ການປະກອບສະມາຊິກໃໝ່ ເຂົ້າໃນວຽກງານໃດນຶ່ງ

**ລົງປະຊາມະຕິ** ແມ່ນລົງຄວາມເຫັນໃນ ການຕັດສິນບັນຫາໃດນຶ່ງ ໂດຍຖືເອົາຄະແນນສຽງສ່ວນ ຫລາຍເປັນຫລັກ

**ສະມາຊິກ** ແມ່ນບຸກຄົນທີ່ເຂົ້າຮ່ວມ ວຽກງານ ຫລື ການຈັດຕັ້ງ ດຽວກັນ;

**ການປະຊຸມ** ແມ່ນການຮຽກໂຮມເອົາສາມະຊິກເຂົ້າມາປຶກສາຫາລືວຽກງານໃດນຶ່ງ

**ລະບຽບການປະຊຸມ** ແມ່ນ ການກຳນົດວາລະກອງປະຊຸມ ບໍ່ວ່າກອງປະຊຸມໃດກໍຕ້ອງສ້າງ ແຜນປະຊຸມ ເພື່ອໃຫ້ຜູ້ເຂົ້າຮ່ວມຮັບຮູ້ ແລະ ປະຕິບັດ ເປັນເອກະພາບ

**ບໍລິຈາກ** ແມ່ນການສະລະວັດຖຸສິ່ງຂອງຕ່າງໆ ດ້ວຍຄວາມສະໝັກໃຈໂດຍບໍ່ໄດ້ຄິດຄ່າ ຫລື ກຳໄລໃດໆ ທັງສິ້ນ

**ປະທານ** ແມ່ນບຸກຄົນໄດ້ຮັບການຕົກລົງ ໃຫ້ເປັນຜູ້ຕາງໜ້າ ນຳພາວຽກງານ ຫລື ເປັນຜູ້ຮັບຜິດຊອບ ກອງປະຊຸມ

**ພາວະສຸກເສີນ** ແມ່ນເຫດການທີ່ເກີດຂຶ້ນ ຮີບດ່ວນໂດຍມີການຈັດຕັ້ງ ຫລື ຝ່າຍປົກຄອງເປັນຜູ້ປະກາດ

**ບໍລິຫານ** ແມ່ນການຈັດຕັ້ງ - ວາງແຜນ ໃນການເຮັດວຽກງານໂດຍທົ່ວໄປ

**ການດຳເນີນຄະດີທາງປົກຄອງ** ແມ່ນຂະບວນການພິຈາ ລະນາບັນຫາທີ່ເກີດຂຶ້ນ ໃນຂົງເຂດຂອງການບໍລິຫານລັດ

**ການແນະນຳທາງປົກຄອງ** ແມ່ນຄຳສັ່ງທາງປົກຄອງ ເຊິ່ງມີຜົນບັງຄັບທາງກົດໝາຍ

**ມາດຕະການບັງຄັບ** ໝາຍເຖິງຂໍ້ກຳນົດທາງບໍລິຫານເຊິ່ງໄດ້ແກ່ ການປັບໄໝ, ການຈຳກັດ ແລະ ອື່ນໆ

**ອົງການບໍລິຫານ** ແມ່ນການຈັດຕັ້ງ ທີ່ເຮັດ ໜ້າທີ່ໃນການວາງແຜນ ແລະ ປະຕິບັດວຽກງານພັດທະນາເສດຖະກິດສັງຄົມ ເພື່ອໃຫ້ສຳ ເລັດຕາມ ການກຳນົດໄວ້.

**ການຮັບຮອງ** ແມ່ນການຢັ້ງຢືນ ຮັບຮູ້ວ່າ ເອກະສານ ຫລື ລະບຽບການຕ່າງໆແມ່ນຖືກຕ້ອງ ມີຜົນບັງຄັບ ແລະ ນຳໄປປະຕິບັດໄດ້

**ລາຍງານ** ແມ່ນການສົ່ງຂໍ້ມູນ ກ່ຽວກັບການເຄື່ອນໄຫວວຽກງານຂອງອົງການຈັດ ຕັ້ງໃດນຶ່ງ ໃຫ້ແກ້ອົງການຈັດຕັ້ງຂັ້ນເທິງຂອງຕົນ

**ວິໄນ** ແມ່ນມາດຕະການບັງຄັບນຶ່ງທາງບໍລິຫານ ທີ່ວາງລະບຽບໃສ່ ສະມາຊິກ ຜູ້ທີ່ລະເມີດຕໍ່ລະບຽບ ເຊິ່ງມີລັກສະນະເຂັ້ມງວດ ເຊັ່ນ ການປົດຊັ້ນ, ປົດຕຳແໜ່ງ, ບໍ່ເລື່ອນຂັ້ນເງິນເດືອນ,...

**ຂໍ້ບົກພ່ອງ** ແມ່ນ ຈຸດທີ່ຄ້າງຄາພາຍໃນຕົວພະນັກງານເອງ ເຊິ່ງບໍ່ສາມາດປະຕິບັດໄປຕາມລະບຽບ ແລະ ແຜນ ການທີ່ ໄດ້ກຳນົດໄວ້

**ຜູ້ມີອຳນາດ** ແມ່ນຜູ້ທີ່ໄດ້ຮັບສິດພິເສດ ຕາມກົດໝາຍ ແລະ ລະບຽບການ

**ຮັກສາການ** ບັດແມ່ນການປະຕິບັດໜ້າທີ່ແທນຕາມການມອບໝາຍຂອງຜູ້ເປັນຫົວໜ້າ

**ວ່າການແທນ** ແມ່ນການປະຕິບັດວຽກງານໃນຕຳແໜ່ງໃດນຶ່ງ ທີ່ບໍ່ມີຫົວໜ້າ ຈົນກວ່າຈະມີການແຕ່ງຕັ້ງຢ່າງເປັນທາງການ

**ການວາງຜັງເມືອງລະດັບຊາດ** (ກມ ປຄ) ແມ່ນການວາງທິດທາງລວມໄລຍະຍາວ ແລະ ໄລຍະທາງກາງໃນຂອບເຂດທົ່ວປະເທດ ກ່ຽວກັບການກຳນົດເຂດທີ່ຈະສ້າງ ແລະ ຂະຫຍາຍຕົວເມືອງ , ເຂດຈຸດສຸມດ້ານເສດຖະກິດ - ວັດທະນະທຳສັງຄົມ , ເຂດປ່າໄມ້ ແລະ ປ່າສະຫງວນ , ເຂດຊັບພະຍາກອນທຳມະຊາດອື່ນໆ , ເຂດປ້ອງກັນຊາດ - ປ້ອງກັນຄວາມສະຫງົບ , ຕາໜ່າງເສັ້ນທາງ ແລະ ອື່ນໆ ໂດຍອີງໃສ່ຈຸດພິເສດທາງດ້ານພູມສາດ , ປະຊາກອນ , ຊັບພະຍາກອນທຳມະຊາດ , ເສດຖະກິດ ແລະ ສາຍພົວພັນລະຫວ່າງພາກສ່ວນຕ່າງໆ ຂອງປະເທດ.

**ການວາງຜັງເມືອງລະດັບທ້ອງຖິ່ນ** (ກມ ປຄ) ແມ່ນການວາງທິດທາງໃຫຍ່ໄລຍະຍາວແລະໄລຍະກາງໃນພາກໃດພາກໜຶ່ງຂອງປະເທດກ່ຽວກັບການກຳນົດເຂດທີ່ຈະສ້າງ ແລະ ຂະຫຍາຍຕົວເມືອງ , ເຂດຈຸດສຸດດ້ານເສດຖະກິດ - ວັດທະນະທຳສັງຄົມເຂດປ່າໄມ້ ແລະ ປ່າສະຫງວນ , ເຂດຊັບພະຍາກອນທຳມະຊາດອື່ນໆ , ເຂດປ້ອງກັນຊາດ - ປ້ອງກັນຄວາມສະຫງົບ , ຕາໜ່າງເສັ້ນທາງ ແລະ ອື່ນໆ ໂດຍອີງໃສ່ຈຸດພິເສດທາງດ້ານພູມສາດ, ປະຊາກອນ, ຊັບພະຍາກອນທຳມະຊາດ, ເສດຖະກິດ ແລະ ມີລັກສະນະລະອຽດກວ່າຜັງເມືອງລະດັບຊາດ.

**ການວາງຜັງເມືອງລະດັບແຂວງ** (ກມ ປຄ) ແມ່ນການວາງທິດທາງຕົ້ນຕໍໄລຍະຍາວ ແລະ ໄລຍະທາງໃນຂອບເຂດແຂວງໃດແຂວງໜຶ່ງຂອງປະເທດ ກ່ຽວກັບການກຳນົດເຂດທີ່ຈະສ້າງ ແລະ ຂະຫຍາຍຕົວເມືອງ , ເຂດຈຸດສຸມດ້ານ ເສດຖະກິດ - ວັດທະນະທຳສັງຄົມ , ເຂດປ່າໄມ້ ແລະ ປ່າສະຫງວນ , ເຂດຊັບພະຍາກອນທຳມະຊາດອື່ນໆ, ຕາໜ່າງເສັ້ນທາງ, ເຂດປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະ ອື່ນໆ ໂດຍອີງໃສ່ຈຸດພິເສດທາງດ້ານພູມສາດ, ປະຊາກອນ, ຊັບພະຍາກອນທະມະຊາດ, ເສດຖະກິດ ແລະ ມີລັກສະນະລະອຽດກວ່າຜັງເມືອງລະດັບພາກ.

**ການວາງຜັງເມືອງລະດັບຕົວເມືອງ** (ກມ ປຄ) ແມ່ນການກຳນົດພື້ນທີ່ດິນກ່ຽວກັບການສ້າງ ແລະ ຂະຫຍາຍຕົວເມືອງ ໂດຍຈັດສັນເປັນເຂດທີ່ຢູ່ອາໄສ, ເຂດສຳນັກງານອົງການ, ເຂດກະສິກຳ, ເຂດອຸດສາຫະກຳ, ເຂດການຄ້າ ແລະ ການບໍລິການ, ເຂດເສັ້ນທາງຄົມມະນາຄົມ ແລະ ການຂົນສົ່ງ, ເຂດວັດທະນະທຳ ແລະ ກິລາ, ສວນສາທາລະນະ, ເຂດປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ເຂດສາທາລະນະປະໂຫຍດ, ສາທາລະນູປະໂພກ ແລະ ອື່ນໆ.

**ການຈັດສັນຄຸ້ມຄືນໃໝ່** (ກມ ປຄ) ແມ່ນການຈັດສັນ, ປັບປຸງບູລະນະຄຸ້ມທີ່ບໍ່ໄດ້ມາດຕະຖານຕາມທີ່ໄດ້ ກຳນົດໄວ້ໃນລະບຽບການນຳໃຊ້ທີ່ດິນຂອງເຂດທີ່ມີຜັງເມືອງ. ( ມາດຕາ 21 )

**ການຈັດສັນທີ່ດິນສະເພາະໃນຕົວເມືອງ** (ກມ ປຄ)  ແມ່ນການຈັດສັນທີ່ດິນສະເພາະ ທີ່ຢູ່ໃນຂອບເຂດພື້ນທີ່ດິນຈຳກັບໃດໜຶ່ງຂອງຜັງເມືອງ ເພື່ອສ້າງ ແລະ ຂະຫຍາຍລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກ ແລະ ກິດຈະການເສດຖະກິດ -ສັງຄົມອື່ນໆ.

**ການຈັດສັນຕອນດິນ** (ກມ ປຄ)   ແມ່ນການຈັດແບ່ງຕອນດິນເພື່ອຮັບປະກັນໃຫ້ຕົວເມືອງມີຄວາມສະຫງົບຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສວຍງາມ , ຄວາມສະດວກ ແລະ ໃຫ້ຖືກຕ້ອງຕາມຜັງເມືອງ.(ມາດຕາ 23)

# ກົດໝາຍອາຍາ ແລະ ການດຳເນີນຄະດີອາຍາ

**ການກະທຳຜິດ** ການກະທຳຜິດແມ່ນທຸກການກະທຳຫຼືທຸກການເມີນເສີຍທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ແລະ ສັງຄົມຂອງ ສ ປປ ລາວ ຕໍ່ກຳມະສິດຂອງລັດຂອງລວມໝູ່ ແລະ ຂອງບຸກຄົນ,ຊີວິດ,ສຸກຂະພາບ,ສິດແລະເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຊຶ່ງບົ່ງໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນ ຂອງ ສ ປປ ລາວທີ່ໄດ້ກຳນົດໂທດທາງອາຍາຈະຖືວ່າ ເປັນການກະທຳຜິດທາງອາຍາ.

1. *ການກະກຽມ.*

ການກະກຽມໃຫ້ແກ່ການກະທຳຜິດແມ່ນການຫ້າງຫາພາຫະນະອຸບປະກອນ, ການສ້າງເງື່ອນໄຂ ຫຼື ປັດໃຈອື່ນໆໃຫ້ແກ່ການກະທຳຜິດໂດຍເຈດຕະນາ.

2. *ການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈ.*

ການເລີກລົ້ມການກະທຳຜິດດ້ວຍຄວາມສະໝັກໃຈແມ່ນການຢຸດເຊົາການກະທຳຜິດຂອງບຸກຄົນໃດໜຶ່ງດ້ວຍຄວາມສະໝັກໃຈໂດຍບໍ່ສືບຕໍ່ການກະທຳຜິດນັ້ນໃຫ້ສຳເລັດຜົນ,

**ກົດໝາຍອາຍາ** ກົດໝາຍອາຍາແມ່ນບັນດາຂໍ້ກຳນົດທີ່ວາງອອກແລະຮັບປະກັນໂດຍລັດຊຶ່ງກຳນົດ: ບັນດາພຶດຕິກຳທີ່ເປັນການກະທຳຜິດທາງອາຍາ,ກຳນົດໂທດ,ວິທີການກ່ຽວກັບການວາງໂທດ,ສາເຫດແລະເງື່ອນໄຂທີ່ພາໃຫ້ພົ້ນ, ທີ່ພາໃຫ້ຜ່ອນຫຼືເພີ່ມຄວາມຮັບຜິດຊອບທາງອາຍາ.ນອກຈາກນີ້ຍັງກຳນົດສາເຫດ ແລະເງື່ອນໄຂອື່ນທີ່ພາໃຫ້ພົ້ນຈາກການປະຕິບັດໂທດ.

**ການຮ່ວມກັນກະທຳຜິດ** ການຮ່ວມກັນກະທຳຜິດແມ່ນການເຂົ້າຮ່ວມໃນການກະທຳຜິດໂດຍເຈດຕະນາແຕ່ສອງຄົນຂຶ້ນໄປ.

**ກະສຽນອາຍຸທາງອາຍາ** ກະສຽນອາຍຸທາງອາຍາແມ່ນການກຳນົດເກນອາຍຸຂອງຜູ້ກະທຳຜິດທາງອາຍາທີ່ມີອາຍຸ ແຕ່ 15 ປີຂຶ້ນໄປ (ກ. ອາຍາ ຂອງ ສ ປປ ລາວ).

**ການພາກໂທດ** ການພາກໂທດ ແມ່ນການບໍ່ໃຫ້ຜູ້ຖືກຕັດສິນລົງໂທດ ປະຕິບັດໂທດ ດ້ວຍການໂຈະການປະຕິບັດໂທດໄວ້. ຖ້າວ່າພາຍໃນກຳນົດ ຫ້າປີ ຜູ້ຖືກສານຕັດສິນພາກໂທດ ບໍ່ໄດ້ກະທຳຜິດເທື່ອໃໝ່ໂດຍເຈດຕະນາອີກ ໂທດທີ່ພາກໄວ້ນັ້ນກໍຈະຕົກໄປ.

**ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ** ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂແມ່ນການປ່ອຍຕົວນັກໂທດກ່ອນກຳນົດ ຕໍ່ຜູ້ທີ່ຖືກສານຕັດສິນລົງໂທດຕັດ ອິດສະລະພາບໂດຍໃຫ້ຜູ້ທີ່ຖືກ ປ່ອຍຕົວຕ້ອງປະຕິບັດຕາມເງື່ອນໄຂຂອງສານ ພາຍໃນກຳນົດ ຫ້າປີ(ມາດຕາ 52 ກອາຍາ).

**ການທໍລະຍົດຕໍ່ຊາດ** ການທໍລະຍົດຕໍ່ຊາດ ແມ່ນການເຄື່ອນໄຫວຂອງພົນລະເມືອງຂອງຊາດໜຶ່ງ ທີ່ໄດ້ພົວພັນ ແລະ ຮ່ວມມືກັບຄົນຕ່າງປະເທດ ຫລື ອົງການຈັດຕັ້ງຕ່າງປະເທດ ເພື່ອຫວັງທຳລາຍຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ຂອງ ຊາດ. ຕົວຢ່າງ: ມາດຕາ 56 ກົດໝາຍອາຍາ

**ການກະບົດ** ການກະບົດ ແມ່ນ ການເຂົ້າຮ່ວມ ເຄື່ອນໄຫວກໍ່ຄວາມວຸ້ນວາຍ ເພື່ອໂຄ່ນລົ້ມອຳນາດການປົກຄອງ ຫລື ເພື່ອເຮັດໃຫ້ອຳນາດການປົກຄອງອ່ອນເພັຽ.

**ການເປັນນັກສືບສອດແນມ** ການເປັນນັກສືບສອດແນມ ແມ່ນ ການເຄື່ອນໄຫວຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫລື ຄົນບໍ່ມີສັນຊາດ ທີ່ໄດ້ເກັບກຳຂ່າວ ຫລື ເອກະສານກ່ຽວກັບຄວາມລັບຂອງລັດ ຫລື ຄວາມລັບທາງລັດຖະການ ເພື່ອສ້າງຄວາມເສັຍຫາຍ ຫລື ມ້າງເພ ຊາດ. ຕົວຢ່າງ : ມາດຕາ 58 ກົດໝາຍອາຍາ

**ການປອງຮ້າຍ** ແມ່ນການທຳຮ້າຍຮ່າງກາຍຜູ້ນຳ ສະມາຊິກຄອບຄົວ ຫຼື ຄະນະທີ່ຕິດຕາມ ມານຳ, ພະນັກງານຂອງລັດ, ບຸກຄົນທີ່ເຄື່ອນໄຫວວຽກງານຂອງ ອົງການຈັດຕັ້ງລັດ ຫລື ອົງການຈັດຕັ້ງສັງຄົມຂອງປະເທດໃດໜຶ່ງ ເພື່ອແນໃສ່ທຳລາຍມ້າງເພອຳນາດແຫ່ງລັດ ຫລື ເຮັດໃຫ້ອຳນາດແຫ່ງລັດອ່ອນເພັຽ ຫຼື ເພື່ອແນໃສ່ແບ່ງແຍກ, ທຳລາຍສາຍພົວພັນລະຫວ່າງຊາດ ຫຼື ຍຸໂຍງສົ່ງເສີມກໍ່ໃຫ້ເກີດສົງຄາມ.

**ການທຳລາຍມ້າງເພ** ການທຳລາຍມ້າງເພ ແມ່ນ ການເຄື່ອນໄຫວສ້າງຄວາມ ເສັຍຫາຍຕໍ່ຊັບສິນຂອງລັດຫລື ສັງຄົມ ເພື່ອແນໃສ່ເຮັດໃຫ້ລັດອ່ອນເພັຽ ແລະ ເສດຖະກິດແຫ່ງຊາດຊຸດໂຊມເຊັ່ນ(ອົງຕາມ 61).

**ການທຳລາຍກິດຈະການຂອງລັດ ຫລື ຂອງສັງຄົມ** ການທຳລາຍກິດຈະການຂອງລັດ ຫລື ສັງຄົມ ແມ່ນ ການສວຍໃຊ້ໜ້າທີ່ ຕຳແໜ່ງຂອງບຸກຄົນໃດໜຶ່ງ ດ້ວຍການກະທຳ ຫລື ການເມີນເສີຍ ຫລື ດ້ວຍການຍຸແຍ່ປັ່ນປ່ວນ ພາຍໃນໃຫ້ມີຄວາມແຕກແຍກ ເຊັ່ນ ການເຄື່ອນໄຫວ ທຳລາຍກິດຈະການດ້ານ ອຸດສາຫະກຳ, ການຄ້າ, ຂົນສົ່ງ, ກະສິກຳ, ການເງິນ, ພື້ນຖານເສດຖະກິດ, ແລະ ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງຂອງລັດ ແລະ ສັງຄົມ ເພື່ອເຮັດໃຫ້ລັດອ່ອນເພັຽ ແລະ ເສດຖະກິດແຫ່ງຊາດຊຸດໂຊມ

**ການໂຈລະກຳ** ການໂຈລະກຳ ແມ່ນ ການຈັດຕັ້ງເປັນກຸ່ມ ປະກອບອາວຸດແລ້ວໂຈມຕີ, ທຳລາຍໂຮງຈັກໂຮງງານ, ສຳນັກງານ, ອົງການຈັດຕັ້ງຂອງລັດ ຫຼື ສັງຄົມ, ຈັບ ຫລື ຂ້າພະນັກງານ, ປະຊາຊົນ ຫລື ປຸ້ນເອົາຊັບສົມບັດຂອງລັດ, ຂອງລວມໝູ່, ຂອງບຸກຄົນ ເພື່ອທຳລາຍພື້ນຖານຄວາມເປັນລະບຽບຮຽບຮ້ອຍຂອງສັງຄົ

**ການປອມແປງເງິນ**

**ການປອມແປງເອກະສານ** ການປອມແປງເງິນ ແມ່ນການໃຊ້ເຄື່ອງພິມ ຫລື ໃຊ້ວິທີການອື່ນ ເພື່ອເຮັດໃຫ້ສະພາບຂອງເງິນກີບ ຫຼື ເງິນຕາຕ່າງປະເທດ ມີການລອກລຽນແບບ ແລະນຳອອກຈຳໜ່າຍຢູ່ ພາຍໃນປະເທດ

**ການຟອກເງິນ** ການຟອກເງິນແມ່ນການເຄື່ອນໄຫວເພື່ອເຮັດໃຫ້ເງິນຫຼືວັດຖຸສິ່ງຂອງທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍເຊັ່ນ: ການສໍ້ລາດ
ບັງຫຼວງ,ຄ້າຂາຍຢາເສບຕິດ,ຄ້າມະນຸດ,ຄ້າອາວຸດເສິກຫຼືການກະທຳຜິດອື່ນໆ ມາເປັນເງິນທີ່ຖືກຕ້ອງຕາມກົດໝາຍ ດ້ວຍການນຳເຂົ້າຝາກທະນາຄານ,ຊື້ທີ່ດິນ,ຊື້ເຮືອນ,ໃຫ້ຜູ້ອື່ນກູ້ຢືມຫລືດ້ວຍວິທີການອື່ນໆ.

**ການໂຄສະນາຕ້ານ ສ ປປ ລາວ** ການໂຄສະນາຕ້ານ ສ ປປ ລາວໝາຍເຖິງການໂຄສະນາໃສ່ຮ້າຍປ້າຍສີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບິດເບືອນແນວທາງ ນະໂຍບາຍຂອງ ພັກ, ລະບຽບກົດໝາຍຂອງລັດ, ປ່າວຂ່າວທີ່ບໍ່ມີມູນຄວາມຈິງ ດ້ວຍການເວົ້າ, ການຂຽນ, ການພິມ, ຮູບເງົາ, ວີດີໂອ, ຮູບພາບ ຫຼື ດ້ວຍຮູບການອື່ນໆ ທີ່ມີເນື້ອໃນຕ້ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອເຮັດໃຫ້ເກີດມີຄວາມວຸ້ນວາຍ ແລະ ເຮັດໃຫ້ອຳນາດແຫ່ງລັດອ່ອນເພັຽ

**ການແບ່ງແຍກຄວາມສາມັກຄີ** ການແບ່ງແຍກຄວາມສາມັກຄີ ແມ່ນ ການກະທຳທີ່ກໍ່ໃຫ້ເກີດຄວາມແຕກແຍກ ຫລື ກໍ່ຄວາມອາຄາດບາດໝາງ ລະຫວ່າງຊົນຊາດ, ຊົນເຜົ່າ ເພື່ອທຳລາຍຄວາມສາມັກຄີປວງຊົນ ພາຍໃນຊາດ.

**ການເນລະເທດ** ການເນລະເທດ ແມ່ນ ມາດຕະການໜຶ່ງທາງກົດໝາຍຕໍ່ຜູ້ກະທຳຜິດໂດຍການສົ່ງຕົວຜູ້ກ່ຽວອອກນອກປະເທດ. ມາດຕະການດັ່ງກ່າວນີ້ແມ່ນຈະປະຕິບັດ ຕໍ່ຜູ້ກະທຳຜິດທີ່ເປັນຄົນຕ່າງປະເທດ,ຄົນຕ່າງດ້າວທີ່ໄດ້ກະທຳຜິດຕາມກົດໝາຍ ຂອງ ສ ປປ ລາວ ແຕ່ມີການຮ້ອງຂໍຈາກປະເທດກ່ຽວຂ້ອງເພື່ອໃຫ້ປະຕິບັດໂທດຢູ່ປະເທດດັ່ງກ່າວ?

**ການວາງໂທດ** ການວາງໂທດແມ່ນການເລືອກເຟັ້ນປະເພດແລະລະດັບອັນແນ່ນອນຂອງໂທດໃສ່ຜູ້ກະທຳຜິດໃນພາກຕົວຈິງແນໃສ່ຮັບປະກັນຈຸດປະສົງຂອງການລົງໂທດ.ການລົງໂທດ? ສຶກສາເບິ່ງຕື່ມ.

**ການລັກຊັບ** ການລັກຊັບ ແມ່ນ ການເອົາຊັບຂອງຜູ້ອື່ນມາເປັນຂອງຕົນໂດຍລັບຫລັງ ຫຼືໂດຍທີ່ເຈົ້າຊັບບໍ່ຮູ້ .

**ການເປັນແພດເຖື່ອນ** ການເປັນແພດເຖື່ອນ ແມ່ນ ການປະກອບອາຊີບປິ່ນປົວຄົນເຈັບ ຫຼື ຫາລາຍໄດ້ ຂອງນາຍໝໍ ຫຼື ບຸກຄົນທົ່ວໄປ ໂດຍບໍ່ໄດ້ຮັບອະນຸຍາດໃຫ້ ປິ່ນປົວ ຫຼື ຫາລາຍໄດ້ຢ່າງເປັນທາງການ.

**ການຫຼິ້ນການພະນັນທີ່ຕ້ອງຫ້າມ** ການຫຼິ້ນການພະນັນທີ່ຕ້ອງຫ້າມ ແມ່ນ ການຫຼິ້ນການພະນັນທີ່ບໍ່ອະນຸຍາດໃຫ້ຫຼິ້ນ, ຊຶ່ງລັດຈະເປັນຜູ້ກຳນົດການພະນັນຕ່າງໆທີ່ບໍ່ອະນຸຍາດໃຫ້ຫຼິ້ນໄວ້ໃນລະບຽບການສະເພາະ.

**ການເປັນນັກເລງອັນທະພານ** ການເປັນນັກເລງອັນທະພານ ແມ່ນ ການທີ່ບໍ່ເຄົາລົບນັບຖືລະບຽບວິໄນ ຂອງການດຳລົງຊີວິດຂອງສັງຄົມ ຫຼື ໄດ້ໃຊ້ຄວາມຮຸນແຮງ, ໃຊ້ການນາບຂູ່, ໃຊ້ຄວາມຫຍາບຊ້າ ຫລື ໄດ້ມີການກະທຳອື່ນໆ ຊຶ່ງຝືນຕໍ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ

**ການລະເມີດກົດຈາລະຈອນພາໃຫ້ເກີດອຸບປະຕິເຫດ** ການລະເມີດກົດຈາລະຈອນພາໃຫ້ເກີດອຸບປະຕິເຫດ ໝາຍເຖິງ ຄວາມປະໝາດຫຼືເລີ່ນເລີ້ຂອງຜູ້ຂັບຂີ່ພາຫະນະບົນທ້ອງຖະໜົນໄດ້ລະເມີດລະບຽບຈະລາຈອນພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ຜູ້ອື່ນຖືກບາດເຈັບຫຼືເສັຍຊີວິດ

**ການຄາດຕະກຳ** ການຄາດຕະກຳ ແມ່ນ ການເຮັດໃຫ້ຜູ້ອື່ນເສັຽຊີວິດໂດຍເຈດຕະນາ. ການຄາດຕະກຳອາດຈັດເປັນສອງປະເພດ ຄື: ການຄາດຕະກຳ ໂດຍທົ່ວໄປ ແລະການຄາດຕະກຳທີ່ມີການໄຕ່ຕອງ ຫຼື ມີແຜນການໄວ້ລ່ວງໜ້າ.ຊຶ່ງໝາຍເຖິງການເຮັດໃຫ້ຜູ້ອື່ນເສັຽຊີວິດໂດຍເຈດຕະນາ, ຊຶ່ງຜູ້ກະທຳຜິດໄດ້ມີແຜນການ ແລະ ມີການກະກຽມລ່ວງໜ້າແລ້ວ ການທີ່ເຮັດ ໃຫ້ຄົນອື່ນ ເສັຍຊີວິດໂດຍບໍ່ເຈດຕະນາ

**ການປ້ອຍດ່າ** ການປອ້ຍດ່າ ແມ່ນ ການໃຊ້ວາຈາ, ຂຽນ ຫລື ກະທຳແນວຫຍາບຊ້າໃສ່ຜູ້ອື່ນ ເພື່ອໃຫ້ເສື່ອມເສັຽຊື່ສຽງ ຫຼື ກຽດສັກສີ.

**ການທຳຮ້າຍຮ່າງກາຍ** ການທຳຮ້າຍຮ່າງກາຍ ແມ່ນ ການເຮັດໃຫ້ຜູ້ອື່ນ ໄດ້ຮັບບາດເຈັບ, ຊຶ່ງຜູ້ກະທຳຜິດອາດເຮັດຂຶ້ນ ໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ.

**ການຫຼຸລູກ** ການຫຼຸລູກໂດຍບໍ່ຖືກຕ້ອງຕາມກົດໝາຍໝາຍເຖິງການທຳແທ້ງຫຼືທຳການຫຼຸລູກດ້ວຍຕົນເອງ ຫຼື ໃຫ້ຜູ້ອື່ນກະທຳໃຫ້ ຢ່າງຜິດກົດໝາຍ.

**ການນິນທາ** ການນິນທາ ແມ່ນ ການເຮັດໃຫ້ຜູ້ອື່ນເສື່ອມເສັຽຊື່ສຽງ ຫຼື ກຽດສັກສີ ດ້ວຍການຂຽນ, ການເວົ້າ ຫລື ດ້ວຍຮູບການອື່ນໆ ເຖິງວ່າເລື້ອງດັ່ງຈະເປັນຄວາມຈິງກໍຕາມ.

**ການໃສ່ຮ້າຍ** ການໃສ່ຮ້າຍ ແມ່ນ ການເວົ້າຫຼືກະທຳສິ່ງໃດສິ່ງໜຶ່ງເພື່ອໃສ່ຄວາມຄົນອື່ນ ໂດຍບໍ່ມີມູນຄວາມຈິງ ດ້ວຍການຂຽນ, ການເວົ້າ ຫລືດ້ວຍຮູບການອື່ນໆຊຶ່ງເຮັດໃຫ້ເສື່ອມເສັຽຊື່ສຽງຫຼືກຽດສັກສີ.

**ການໝິ່ນປະໝາດຊາກສົບ ຫຼື ຊື່ສຽງຂອງຜູ້ຕາຍ** ການໝິ່ນປະໝາດຊາກສົບຫຼືຊື່ສຽງຂອງຜູ້ຕາຍ ແມ່ນ ການກະທຳ ຫລື ໃຊ້ວາຈາຢ່າງຫຍາບຊ້າ ຕໍ່ຊາກສົບ, ຊື່ສຽງ, ບ່ອນຝັງສົບ ຫລື ທາດຂອງຜູ້ຕາຍ ຊຶ່ງເປັນການແຕະຕ້ອງຈິດໃຈຂອງມະຫາຊົນ ຫຼື ຍາດຂອງຜູ້ທີ່ໄດ້ລ່ວງລັບໄປແລ້ວ.

**ການບັງຄັບ** ການບັງຄັບ ແມ່ນ ການໃຊ້ກຳລັງ ຫລື ອາວຸດ ຫລື ການນາບຂູ່ ເພື່ອໃຫ້ກະທຳ ຫລື ບໍ່ໃຫ້ກະທຳສິ່ງໃດສິ່ງໜຶ່ງ ທີ່ຕົນຕ້ອງການ ຊຶ່ງເປັນການຂັດກັບຈຸດປະສົງຂອງຜູ້ຖືກບັງຄັບ ແລະ ກໍ່ຄວາມເສັຽຫາຍແກ່ຜູ້ກ່ຽວ.

**ການຂາຍຄົນ** ການຂາຍຄົນ ແມ່ນ ການນຳເອົາຜູ້ໃດຜູ້ໜຶ່ງ ໄປໃຫ້ຜູ້ອື່ນຄອບຄອງຫຼືເປັນເຈົ້າກຳມະສິດຢ່າງຂາດຕົວ ແລະ ໄດ້ຄ່າຕອບແທນຕາມທີ່ໄດ້ຕົກລົງກັນ.

**ການລັກພາຕົວ** ການລັກພາຕົວ ໝາຍເຖິງ ການເອົາຕົວບຸກຄົນໃດໜຶ່ງໄປກັກໄວ້ ແລະ ໃຊ້ທຸກວິທີການ ເພື່ອຮຽກເອົາຄ່າໄຖ່ ຫຼືສິ່ງຕອບແທນ .

**ການຈັບເປັນຕົວປະກັນ** ການຈັບເປັນຕົວປະກັນ ໝາຍເຖິງ ການບັງຄັບ, ຈັບຕົວ ຫຼືກັກຂັງບຸກຄົນໃດໜຶ່ງໄວ້ ແລະ ຂົ່ມຂູ່ ວ່າ ຈະຂ້າ, ທຸບຕີ ຫຼື ສືບຕໍ່ກັກຂັງຜູ້ກ່ຽວໄວ້ ເພື່ອບັງຄັບໃຫ້ຜູ້ອື່ນ ໃຫ້ກະທຳ ຫຼືບໍ່ໃຫ້ກະທຳສິ່ງໃດສິ່ງໜຶ່ງທີ່ເປັນເງື່ອນໄຂໃຫ້ແກ່ການປ່ອຍຕົວປະກັນ.

**ການລ່ວງລະເມີດເຄຫະສະຖານ** ການລ່ວງລະເມີດເຄຫະສະຖານ ແມ່ນ ການລ່ວງເຂົ້າໄປໃນສະຖານທີ່ພັກອາໄສສ່ວນຕົວຂອງຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ເປັນເຈົ້າຂອງ ດ້ວຍການໃຊ້ຄວາມຮຸນແຮງ, ການນາບຂູ່, ການໃຊ້ເອກະສານປອມ, ການປອມຕົວເປັນເຈົ້າໜ້າທີ່ ຫລື ດ້ວຍວິທີການອື່ນໆ.

**ການລ່ວງລະເມີດຄວາມລັບສ່ວນຕົວ** ການລ່ວງລະເມີດຄວາມລັບສ່ວນຕົວ ແມ່ນ ການເປີດເຜີຍຄວາມລັບ ຂອງຜູ້ອື່ນທີ່ເຈົ້າໜ້າທີ່ ຫຼື ພະນັກງານໄດ້ຮູ້ຈັກໃນເວລາປະຕິບັດວຽກງານວິຊາສະເພາະ ຫລື ໜ້າທີ່. ໃນກໍລະນີດຽວກັນບຸກຄົນໃດໜຶ່ງ ຫາກໄດ້ ລັກເປີດຈົດໝາຍ, ໂທລະເລກ, ເອກະສານອື່ນໆ ຫຼື ລັກຟັງໂທລະສັບ ຂອງຜູ້ອື່ນຊຶ່ງເປັນການກໍ່ຄວາມເສັຽຫາຍແກ່ຜູ້ກ່ຽວນັ້ນກໍຈະຖືວ່າເປັນການລະເມີດຄວາມລັບສ່ວນຕົວ.

**ການປຸ້ນຊັບ** ການປຸ້ນຊັບ ແມ່ນ ການໃຊ້ກຳລັງ, ໃຊ້ອາວຸດບຸກລຸກ ຫລື ໄດ້ໃຊ້ການນາບຂູ່ໂດຍກົງຕໍ່ຊີວິດ ຫລື ສຸກຂະພາບຂອງຜູ້ອື່ນ ເພື່ອເອົາຊັບ.

**ການສໍ້ໂກງຊັບ** ການສໍ້ໂກງຊັບ ແມ່ນ ການໃຊ້ເລ້ລ່ຽມກົນອຸບາຍຕົວະຍົວະຫລອກລວງ ດ້ວຍວິທີຕ່າງໆ ເພື່ອເຮັດໃຫ້ຜູ້ອື່ນເອົາຊັບໃຫ້ຕົນ.

**ການຍັກຍອກຊັບ** ການຍັກຍອກຊັບ ແມ່ນ ການສວຍໃຊ້ຄວາມເຊື່ອໃຈເພື່ອຫລັກໂລບເອົາ, ຕັດຮອນເອົາ ຫລື ສັບປ່ຽນເອົາຊັບທີ່ຕົນໄດ້ຖືກມອບໝາຍໃຫ້ປົກປັກຮັກສາ ຫລື ຄຸ້ມຄອງ.

**ການທຳມິດສາຈານ** ການທຳມິດສາຈານ ແມ່ນ ການກະທຳຂອງຜູ້ທີ່ມີເມັຍ ຫລື ຜົວ ແລ້ວ ຫາກໄດ້ເສບສົມກັບຜູ້ອື່ນທີ່ບໍ່ແມ່ນຜົວຫຼືເມັຍຕົນ.

**ການຂົ່ມຂືນທຳຊຳເລົາ** ການຂົ່ມຂືນທຳຊຳເລົາ ແມ່ນ ການມີເພດສຳພັນ ກັບຜູ້ຍິງທີ່ບໍ່ແມ່ນເມັຽຕົນ ໂດຍຄວາມຝືນໃຈ ດ້ວຍການໃຊ້ກຳລັງ, ໃຊ້ອາວຸດນາບຂູ່, ໃຊ້ຢາສະຫລົບ, ໃຊ້ສິ່ງມຶນເມົາ ຫລື ໃຊ້ວິທີອື່ນໆ ທີ່ເຮັດໃຫ້ຜູ້ກ່ຽວຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫລືອຕົນເອງໄດ້ .

**ການທຳຊຳເລົາເດັກ** ການທຳຊຳເລົາເດັກ ແມ່ນ ການມີເພດສຳພັນ(ຮ່ວມປະເວນີ)ກັບເດັກຍິງ ຫລື ເດັກຊາຍທີ່ມີອາຍຸຕ່ຳກ່ວາ ສິບຫ້າປີ .

**ການເປັນໂສເພນີ** ການເປັນໂສເພນີ ແມ່ນ ການຫາລາຍໄດ້ ດ້ວຍການຂາຍປະເວນີໃຫ້ຜູ້ອື່ນເສບສົມ.

**ການທຳລາມົກ.** ການທຳລາມົກ ແມ່ນ ການເສບສົມ(ມີເພດສຳພັນ, ຮ່ວມເພດ) ຫລື ເຜີຍອະໄວຍະວະເພດຂອງຕົນ ຕໍ່ໜ້າຊຸມຊົນ ຫລື ຢູ່ໃນສະຖານທີ່ສາທາລະນະ

**ການທຳອະນາຈານ** ການທຳອະນາຈານ ແມ່ນການກະທຳທີ່ແຕະຕ້ອງ ເຖິງຄວາມອາຍທາງເພດຂອງບຸກຄົນອື່ນ ໂດຍຝືນໃຈຂອງຜູ້ກ່ຽວ

**ການເຜີຍແຜ່ສິ່ງລາມົກ** ການເຜີຍແຜ່ສິ່ງລາມົກ ແມ່ນ ການຜະລິດ ຫລື ນຳເອົາໜັງສື, ຮູບ, ຟິມ ວິດີໂອ ໂປ້ ຫຼື ເປືອຍກາຍ ຫລື ສິ່ງອື່ນໆທີ່ ເປັນການກະຕຸ້ນທາງເພດ ແລະ ຂັດກັບວັດທະນະທຳອັນດີງາມຂອງຊາດ ຫຼືອອກຈຳໜ່າຍ ຫລື ເຜີຍແຜ່ທາງກ້ວາງ ຫລື ທາງເລິກ

**ການທຳລາຍປ່າໄມ້** ການທຳລາຍປ່າໄມ້ ແມ່ນ ການຕັດໄມ້, ຖາງປ່າ ໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບປ່າໄມ້, ຈູດປ່າ ຫລື ທຳລາຍປ່າໄມ້ດ້ວຍວິທີການອື່ນໆ

**ການທຳລາຍເຄື່ອງປູກ** ການທຳລາຍເຄື່ອງປູກ ແມ່ນ ການທຳລາຍເຄື່ອງປູກຂອງລັດ, ລວມໝູ່, ອົງການຈັດຕັ້ງສັງຄົມ ຫລື ພົນລະເມືອງ

**ການລ່າເນື້ອ(ໂດຍບໍ່ຖືກຕ້ອງຕາມກົດໝາຍ)** ການລ່າເນື້ອໂດຍບໍ່ຖືກຕ້ອງຕາມກົດໝາຍ ແມ່ນ ການລ່າເນື້ອ ໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບການລ່າເນື້ອເຊັ່ນ: ລ່າສັດທີ່ຫວງຫ້າມ, ລ່າເນື້ອໃນລະດູ ຫລື ໃນເຂດທີ່ຫວງຫ້າມ ຫລື ດ້ວຍເຄື່ອງມືທີ່ເກືອດຫ້າມ ແລະ ອື່ນໆ

**ການຂາຍສິນຄ້າທີ່ເກືອດຫ້າມ** ການຂາຍສິນຄ້າເກືອດຫ້າມ ໝາຍເຖິງການນຳເອົາສິນຄ້າທີ່ລັດ(ທາງການ)ຫ້າມອອກຈຳໜ່າຍ ນຳອອກຂາຍໂດຍທົ່ວໄປ. ສິນຄ້າທີ່ເກືອດຫ້າມ ອາດໄດ້ແກ່ ຢາຝິ່ນ, ທາດເຄມີ ແລະອື່ນໆ

**ການກັກຕຸນສິນຄ້າ** ການກັກຕຸນສິນຄ້າ ແມ່ນ ການກັກຕຸນ, ຊຸກເຊື່ອງສິນຄ້າໄວ້ໃນວິສາຫະກິດ, ບໍລິສັດ, ຫ້າງຮ້ານຂອງຕົນ ຫລື ຢູ່ບ່ອນອື່ນເພື່ອສ້າງຄວາມປັ່ນປ່ວນທາງດ້ານເສດຖະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ

**ການປອມແປງຕາຊັ່ງຫຼືການວັດແທກ** ການປອມແປງຕາຊັ່ງຫລືການວັດແທກໝາຍເຖິງການດັດແປງອຸບປະກອນຊັ່ງເຄື່ອງຫລືອຸບປະກອນສຳລັບການວັດແທກຕ່າງໆ ຊຶ່ງນຳຜົນເສັຍຫາຍມາສູ່ເສດຖະກິດ ແລະ ການຈາລະຈອນສິນຄ້າ.

**ການປອມແປງເຊັກ ຫຼື ພັນທະບັດ** ການປອມແປງເຊັກຫລືພັນທະບັດໝາຍເຖິງການຂຽນ, ເຊັນ ຫລືການທີ່ເຮັດໃຫ້ໃບແຊັກ ບໍ່ຖືກຕ້ອງກັບຄວາມເປັນຈິງ, ການລອກລຽນແບບພັນທະບັດດ້ວຍການອັດສຳເນົາຫລືດ້ວຍວິທີໃດກໍຕາມແລະນຳໃຊ້ແຊັກຫລືພັນທະບັດດັ່ງກ່າວເພື່ອຈຸດປະສົງໃດໜຶ່ງ.

**ການສວຍໃຊ້ອຳນາດ** ການສວຍໃຊ້ອຳນາດໝາຍເຖິງ ພະນັກງານທີ່ໄດ້ອີງໃສ່ອຳນາດ, ຕຳແໜ່ງ, ໜ້າທີ່ຂອງຕົນຫາຜົນປະໂຫຍດສ່ວນຕົວຊຶ່ງເປັນການກໍ່ຄວາມເສັຽຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫລື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ

**ການໃຊ້ອຳນາດເກີນຂອບເຂດ** ການໃຊ້ອຳນາດເກີນຂອບເຂດ ແມ່ນ ການປະຕິບັດໜ້າທີ່ເກີນຂອບເຂດອຳນາດຂອງ ພະນັກງານ ທີ່ລະບຽບກົດໝາຍໄດ້ກຳນົດໄວ້ຊຶ່ງກໍ່ຄວາມເສັຽຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫລື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ

**ການປະລະໜ້າທີ່** ການປະລະໜ້າທີ່ແມ່ນການລະເລີຍ, ການ ເມີນເສີຍບໍ່ປະຕິບັດໜ້າທີ່ຂອງພະນັກງານທີ່ການຈັດຕັ້ງໄດ້ມອບໝາຍໃຫ້ ຊຶ່ງພາໃຫ້ເກີດຄວາມເສັຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫລື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ

**ການເລີ່ນເລີ້ໃນການປະຕິບັດໜ້າທີ່** ການເລີ່ນເລີ້ໃນການປະຕິບັດໜ້າທີ່ ແມ່ນ ການປະຕິບັດໜ້າທີ່ວຽກງານຂອງພະນັກງານທີ່ຕົນ ໄດ້ຮັບມອບໝາຍ ຫລື ໄດ້ປະຕິບັດ ໜ້າທີ່ວຽກງານດັ່ງກ່າວໂດຍຂາດຄວາມເອົາໃຈໃສ່, ຂາດນ້ຳໃຈຮັບຜິດຊອບ ຊຶ່ງພາໃຫ້ເກີດຄວາມເສັຽຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫລື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ

**ການໃຫ້ການເທັດ** ການໃຫ້ການເທັດ ໝາຍເຖິງ ພະຍານ, ຜູ້ຖືກເສັຽຫາຍ, ຜູ້ຊ່ຽວຊານ, ຜູ້ແປພາສາ ໄດ້ເຈດຕະນາ ໃຫ້ການ, ໃຫ້ຄຳເຫັນ ຫລື ແປພາສາບໍ່ຖືກຕາມ ຄວາມຈິງຕໍ່ສານ ຫລື ຕໍ່ເຈົ້າໜ້າທີ່ ເພື່ອຜົນປະໂຫຍດອັນໃດອັນໜຶ່ງໃນເວລາດຳເນີນຫຼືພິຈາລະນາຄະດີ

**ການປິດບັງການກະທຳຜິດ.**ການປິດບັງການກະທຳຜິດ ໝາຍເຖິງ ການທີ່ຜູ້ໃດຜູ້ໜຶ່ງໄດ້ຮູ້ ຫລືໄດ້ເຫັນການກະທຳຜິດຂອງຜູ້ອື່ນ ແລ້ວ ບໍ່ລາຍງານຕໍ່ເຈົ້າໜ້າທີ່

**ການຊຸກເຊື່ອງຜູ້ກະທຳຜິດ** ການຊຸກເຊື່ອງຜູ້ກະທຳຜິດ ແມ່ນ ການຕົກລົງ ໃຫ້ຄຳໝັ້ນສັນຍາກັບຜູ້ກະທຳຜິດໄວ້ກ່ອນແລ້ວ ຫາກໄດ້ຊຸກເຊື່ອງ ຫລື ໃຫ້ຄວາມຊ່ວຍເຫລືອແກ່ຜູ້ກະທຳຜິດ ເພື່ອໃຫ້ພົ້ນຈາກການຈັບກຸມ ຫລື ຈາກການດຳເນີນຄະດີ

**ການທຳລາຍຫຼັກຖານ** ການທຳລາຍຫຼັກຖານ ແມ່ນ ການລົບລ້າງຮ່ອງຮອຍ, ຊຸກເຊື່ອງເອກະສານ ຫລື ວັດຖຸສິ່ງຂອງຊຶ່ງເປັນຫລັກຖານຢັ້ງຢືນການກະທຳຜິດ

**ການຍັກຍອກຂອງກາງ** ການຍັກຍອກຂອງກາງ ແມ່ນ ການຂາຍ, ຊຸກເຊື່ອງ, ເຈືອດຈາ, ນຳໃຊ້, ສັບປ່ຽນ ຫລື ໄດ້ເຮັດໃຫ້ຂອງກາງເສັຽຫາຍ ຫລື ອື່ນໆຂອງ ພະນັກງານທີ່ມີໜ້າທີ່ຮັບຜິດຊອບປົກປັກຮັກສາຊັບ ຫລື ວັດຖຸສິ່ງ ຊຶ່ງເປັນຂອງກາງ ໂດຍບໍ່ຖືກຕ້ອງຕາມກົດໝາຍ

**ການດຳເນີນຄະດີອາຍາ** ການດຳເນີນຄະດີອາຍາແມ່ນການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການປະຊາຊົນ, ສານປະຊາຊົນ ແລະຜູ້ເຂົ້າຮ່ວມອື່ນໆໃນການດຳເນີນຄະດີ ເພື່ອຊອກໃຫ້ເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນແລະຮອບຄອບ, ນຳເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ ບໍ່ປະປ່ອຍໃຫ້ຜູ້ກະທຳຜິດຫລົບຫລີກອອກຈາກການປະຕິບັດໂທດໄປໄດ້ ແລະ ຫລີກເວັ້ນການລົງໂທດຜູ້ບໍ່ໄດ້ກະທຳຜິດ.

**ການໝິ່ນປະໝາດເຈົ້າໜ້າທີ່** ການໝິ່ນປະມາດເຈົ້າໜ້າທີ່ ແມ່ນ ການກະທຳ, ໃຊ້ວາຈາແນວຫຍາບຊ້າ ຫລື ໄດ້ຫາຄວາມບໍ່ຈິງໃສ່ເຈົ້າໜ້າທີ່ເພື່ອເຮັດໃຫ້ເສັຽຊື່ສຽງ, ເສັຽບົດບາດ ຊຶ່ງເຮັດໃຫ້ຂາດຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນ

**ການປອມແປງເອກະສານ** ການປອມແປງເອກະສານຫລືການໃຊ້ເອກະສານປອມ ແມ່ນ ການປອມແປງເນື້ອໃນ, ລາຍເຊັນ, ຕາປະທັບ, ໄດ້ຕັດ ຫລື ເພີ່ມຂໍ້ຄວາມໃດ ຂໍ້ຄວາມໜຶ່ງໃນເອກະສານຊຶ່ງໄດ້ສ້າງຜົນເສັຍຫາຍຕໍ່ສັງຄົມ.

**ການໃຊ້ເອກະສານປອມ**

**ການຫາຄວາມບໍ່ຈິງໃສ່ຜູ້ອື່ນ** ການຫາຄວາມບໍ່ຈິງໃສ່ຜູ້ອື່ນ ແມ່ນ ການປັກປ້ຳທຳລາຍຜູ້ອື່ນໂດຍເຈດຕະນາ ໄດ້ແຈ້ງຄວາມບໍ່ຈິງຕໍ່ເຈົ້າໜ້າທີ່ເພື່ອໃຫ້ດຳເນີນຄະດີ ຫລື ຈັບກຸມຜູ້ນັ້ນ.

**ການຊັນນະສູດຊາກສົບ** ການຊັນນະສູດຊາກສົບແມ່ນການພິສູດໃຫ້ເຫັນຂໍ້ເທັດຈິງຂອງການເສັຍຊີວິດ.ການຊັນນະສູດຊາກສົບຕ້ອງດຳເນີນຢູ່ສະຖານທີ່ເກີດເຫດ ໂດຍຊ້ອງໜ້າພະຍານຢ່າງໜ້ອຍສອງຄົນ ແລະ ມີຜູ້ຊ່ຽວຊານການແພດ(ນິຕິເວດ)ເຂົ້າຮ່ວມນຳ.
ໃນກໍລະນີຈຳເປັນໄອຍະການ ປະຊາຊົນ ແລະຜູ້ຕາງໜ້າອົງການປົກຄອງບ້ານທີ່ກ່ຽວຂ້ອງຕ້ອງເຂົ້າຮ່ວມທຳການຊັນນະສູດນຳ[1].

[1] ມາດຕາ 48 ກ.ດອ.

**ການກວດຄົ້ນເຄຫະສະຖານ** ເຄຫະສະຖານໝາຍເຖິງ ເຮືອນຢູ່ແລະສິ່ງຕ່າງໆ ທີ່ຕັ້ງຢູ່ໃນບໍລິເວນເດີ່ນບ້ານ, ເຮືອ, ແພທີ່ໃຊ້ເປັນບ່ອນຢູ່ປະຈຳຂອງຄອບຄົວ, ສຳນັກງານ, ເຮືອນພັກ, ໂຮງແຮມແລະອື່ນໆລວມທັງກຸຕິວິ ຫານ, ໂບດ ສະຖານທີ່ທາງສາດສະໜາອື່ນໆ.

ການກວດຄົ້ນເຄຫະສະຖານແມ່ນການຊອກຄົ້ນແລະເກັບໂຮມວັດຖຸສິ່ງຂອງທີ່ພົວພັນກັບຄະດີຫຼືບຸກຄົນທີ່ສົງໄສວ່າເປັນຜູ້ກະທຳຜິດຫຼືມີສ່ວນຮ່ວມໃນການກະທຳຜິດຫຼົບຊ້ອນຢູ່ໃນສະຖານທີ່ຢູ່ອາໄສຫຼືບໍລິເວນໃດໜຶ່ງທີ່ໄອຍະການປະຊາຊົນຫຼືສານປະຊາຊົນເຊື່ອໝັ້ນຢ່າງໜັກແໜ້ນວ່າເປັນບ່ອນເກັບມ້ຽນ,ຊຸກເຊື່ອງ ຫຼື ຫຼົບຊ້ອນຢູ່.

**ການກວດຄົ້ນຍານພາຫະນະ** ການກວດຄົ້ນຍານພາຫະນະແມ່ນມາດຕະການສືບສວນ-ສອບສວນໜຶ່ງເພື່ອກວດກາລົດ,ເຮືອ ຫຼື ຍານພາຫະນະອື່ນໆ ທີ່ເປັນເປົ້າໝາຍສົງ ໄສວ່າໄດ້ຊຸກເຊື່ອງສິ່ງຂອງທີ່ຜິດກົດໝາຍ ຫຼື ຊຸກເຊື່ອງຜູ້ກະທຳຜິດ. ແຕ່ຕ້ອງດຳເນີນໄປໂດຍຊ້ອງໜ້າເຈົ້າຂອງຍານພາຫະນະທີ່ກ່ຽວຂ້ອງ.

**ການກວດຄົ້ນຕົວບຸກຄົນ** ການກວດຄົ້ນຕົວບຸກຄົນແມ່ນດຳເນີນໄປໃນເມື່ອມີການສົງໄສວ່າບຸກຄົນໃດບຸກຄົນໜຶ່ງ ໄດ້ຊຸກເຊື່ອງວັດຖຸສິ່ງຂອງທີ່ຜິດກົດໝາຍ ຫຼື ວັດຖຸສິ່ງຂອງທີ່ເປັນປະໂຫຍດໃຫ້ແກ່ການດຳເນີນຄະດີ.

**ການຍຶດຊັບ** ໂດຍຫຼັກການແລ້ວ, ຊັບສິ່ງຂອງທີ່ສາມາດຍົກຍ້າຍຫຼືເຄື່ອນທີ່ໄດ້ (ສັງຫາລິມະຊັບ) ດັ່ງ ຕົວຢ່າງ: ລົດ, ເງິນ, ເຄື່ອງໃຊ້ສອຍຕ່າງໆແມ່ນຕ້ອງຍຶດ, ສ່ວນຊັບສິ່ງຂອງທີ່ບໍ່ສາມາດເຄື່ອນທີ່ໄດ້ (ອະສັງຫາລິມະຊັບ) ດັ່ງເຊັ່ນເຮືອນ, ທີ່ດິນແມ່ນໃຫ້ອາຍັດໄວ້. ການຍຶດແມ່ນການນຳເອົາວັດຖຸສິ່ງຂອງໃດໜຶ່ງທີ່ແນ່ນອນ, ຊຶ່ງຕິດພັນກັບຄະດີ ແລະ ມີຄວາມໝາຍສຳຄັນໃຫ້ແກ່ການດຳເນີນຄະດີຈາກສະຖານທີ່ອັນແນ່ນອນໃດໜຶ່ງຕາມຄຳສັ່ງທີ່ເປັນລາຍລັກອັກສອນຂອງເຈົ້າໜ້າທີ່ສືບສວນ-ສອບສວນຫຼືພະນັກງານສອບສວນມາຮັກສາໄວ້.

**ການອາຍັດຊັບ** ການອາຍັດຊັບ ແມ່ນ ການເກືອດຫ້າມບໍ່ໃຫ້ປ່ຽນແປງ, ແລກປ່ຽນ, ຊື້ຂາຍ ຫຼື ມອບວັດຖຸ ສິ່ງຂອງໃດໜຶ່ງ ທີ່ບໍ່ສາມາດຍົກຍ້າຍໄດ້ທີ່ຕິດພັນກັບຄະດີ ແລະ ມີຄວາມສຳຄັນໃຫ້ແກ່ການດຳ ເນີນຄະດີໂດຍຄຳສັ່ງທີ່ເປັນລາຍລັກອັກສອນຂອງເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານສອບສວນ.

**ການຮິບຊັບ** ການຮິບຊັບ ແມ່ນ ການຕັດສິນຂອງສານຕໍ່ຊັບສິ່ງຂອງທີ່ໄດ້ຖືກຍຶດ ຫຼື ອາຍັດ ດ້ວຍຮູບການເອົາຊັບດັ່ງກາວເປັນຂອງລັດຫຼືທຳລາຍຖິ້ມ.

**ການທົດສອບຂໍ້ມູນຄືນໃໝ່** ການທົດສອບຂໍ້ມູນຄືນໃໝ່ແມ່ນການປະກອບຄືນຂັ້ນຕອນໃດ

ໜຶ່ງຂອງ ເຫດການຄະດີຕາມຂໍ້ມູນທີ່ໄດ້ມາ, ເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງ ຂໍ້ມູນນັ້ນ. ການທົດສອບຂໍ້ມູນ ຄືນໃໝ່ຕ້ອງບໍ່ໃຫ້ເປັນອັນຕະລາຍຕໍ່ຊີວິດ ແລະ ສິ່ງແວດລ້ອມທັງ ບໍ່ແຕະຕ້ອງເຖິງກຽດສັກສີຂອງບຸກຄົນ.

**ການຊີ້ຕົວ** ການຊີ້ຕົວແມ່ນມາດຕະການໜຶ່ງໃນການສືບສວນ-ສອບສວນທີ່ ສະແດງອອກດ້ວຍການໃຫ້ພະຍານຫຼືຜູ້ຖືກເສຍຫາຍເປັນຜູ້ຊີ້ຕົວຜູ້ຖືກຫາ ຫຼື ຈຳເລີຍ ທີ່ຕົນຮູ້ເຫັນວ່າ ເປັນຜູ້ກະທຳຜິດ. ສ່ວນການຢັ້ງຢືນນັ້ນກໍແມ່ນອີກມາດຕະການໜຶ່ງ ໃນການສືບສວນ-ສອບສວນ ທີ່ສະແດງອອກດ້ວຍການໃຫ້ພະຍານຫຼືຜູ້ຖືກເສຍຫາຍຢັ້ງຢືນວັດຖຸສິ່ງຂອງທີ່ພົວພັນເຖິງການກະທຳ ຜິດຫຼືຊາກສົບທີ່ຕົນຮູ້ເຫັນ.[2] ໃນຕົວຈິງການຊີ້ຕົວດຳເນີນຂຶ້ນດ້ວຍການລິເລີ່ມຂອງເຈົ້າ ໜ້າທີ່ສືບສວນ-ສອບສວນຫຼືພະນັກງານສອບສວນເມື່ອມີຄວາມສົງໄສໃນຂໍ້ມູນໃດໜຶ່ງກ່ຽວ ກັບບຸກຄົນ.

**ການຢັ້ງຢືນ** ການຢັ້ງຢືນ ແມ່ນ ການຮັບຮູ້ ຫຼື ການປະຕິເສດຫຼັກຖານ, ຊຶ່ງອາດຈະແມ່ນສິ່ງຂອງ ຫຼື ຊາກສົບໂດຍໃຫ້ພະຍານ ຫຼື ຜູ້ ຖືກເສຍຫາຍເປັນຜູ້ຊີ້ຕົວຫຼືຢັ້ງຢືນ.

**ການອະໄພຍະໂທດ.** ການອະໄພຍະໂທດແມ່ນການຫຼຸດຢ່ອນຜ່ອນໂທດຫຼືໃຫ້ປ່ອຍຕົວກ່ອນ ກຳໜົດໂທດທີ່ສານຕັດສິນໃສ່ຜູ້ກ່ຽວ ເນື່ອງຈາກເປັນຜູ້ທີ່ມີຄວາມກ້າວໜ້າໃນການປະຕິບັດໂທດ.

**ການນິລະໂທດກຳ** ການນິລະໂທດກຳແມ່ນການຍົກເວັ້ນຫຼືລຶບລ້າງການກະທຳຜິດໃດ ໜຶ່ງຕາມກົດໝາຍ.ການນິລະໂທດກຳອາດມີກ່ອນຫຼືພາຍຫຼັງຄຳຕັດສິນຂອງສານກໍໄດ້. ບຸກຄົນ ທີ່ໄດ້ຮັບການນິລະໂທດກຳ ຖື ໄດ້ວ່າເປັນຜູ້ທີ່ບໍລິສຸດ ແລະ ບໍ່ມີຄວາມຜິດໃນສະຖານດັ່ງກ່າວ.

**ການກະທຳຜິດເຊິ່ງໜ້າ** ການກະທຳຜິດເຊິ່ງໜ້າແມ່ນ ການກະທຳຜິດຂອງບຸກຄົນ ຊຶ່ງພວມກະທຳຜິດຢູ່ ຫລື ຫາກໍສິ້ນສຸດການກະທຳຜິດ;ຫຼືບຸກຄົນຜູ້ທີ່ໄດ້ກະທຳຜິດທີ່ ພວມຖືກໄລ່ຕິດຕາມໄປຫລືມີບຸກຄົນຜູ້ເຫັນເຫດການ ຫລື ຜູ້ຖືກເສຍຫາຍໄດ້ຊີ້ຕົວວ່າ ເປັນຜູ້ ກະທຳຜິດ ຫຼື ບຸກຄົນທີ່ມີຮ່ອງຮອຍຂອງການກະທຳຜິດຢູ່ໃນຕົນຕົວ, ຢູ່ໃນເຮືອນ ຫລື ບ່ອນ ເຮັດວຽກຂອງຜູ້ກ່ຽວໃນໄລຍະເວລາຊຶ່ງການກະທຳຜິດນັ້ນຫາກໍໄດ້ເກີດຂຶ້ນ.

**ການກະທຳຜິດທີ່ຖືວ່າເປັນກໍລະນີຮີບດ່ວນ** ການກະທຳຜິດທີ່ຖືວ່າເປັນກໍລະນີຮີບດ່ວນ ແມ່ນການກະທຳຜິດ ຂອງບຸກຄົນບຸກຄົນທີ່ຖືກສົງໄສວ່າໄດ້ກະທຳຜິດຊຶ່ງ ມີປະຫວັດບໍ່ດີ ຫລື ບ່ອນຢູ່ ບໍ່ແນ່ນອນ; ຫຼື ບຸກຄົນທີ່ຖືກສົງໄສວ່າໄດ້ກະທຳຜິດ ຊຶ່ງພວມຈະເອົາຕົວຫລົບໜີ( ມາດຕາ 63 ກ.ດອ).

**ການພາຕົວ** ການພາຕົວ ແມ່ນ ມາດຕະການສະກັດກັ້ນໜຶ່ງທີ່ໃຊ້ຕໍ່ບຸກ ຄົນທີ່ບໍ່ຍອມເຂົ້າ ມາສະເໜີຕົວ ໂດຍບໍ່ມີເຫດຜົນຕາມໝາຍຮຽກ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານ

---

[2] ມາດຕາ 58 ກ.ດອ

ສອບສວນ, ໄອຍະການປະຊາຊົນ ຫຼື ສານປະຊາຊົນ. ການພາຕົວໝາຍເຖິງການນຳໃຊ້ມາດຕະການສະກັດ ກັ້ນທາງອາຍາຊຶ່ງເຈົ້າໜ້າທີ່ເປັນຜູ້ນຳເອົາເປົ້າໝາຍເຂົ້າມາພົບ ແລະ ໃຫ້ການຕໍ່ເຈົ້າໜາທີ່ສືບ ສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫຼື ສານປະຊາຊົນຕາມຄຳສັ່ງ ໃຫ້ພາຕົວທີ່ອອກໂດຍທົວໜ້າອົງການສືບສວນ-ສອບສວນ ຫຼື ໄອຍະການປະຊາຊົນ

**ການກັກຕົວ** ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນຫຼືໄອຍະການ ສາມາດ ກັກຕົວຜູ້ຖືກສົງໄສ[3]ວ່າໄດ້ກະທຳຜິດທາງອາຍາ ຊຶ່ງມີຂໍ້ມູນຫຼັກຖານທີ່ໜັກແໜ້ນພໍສົມຄວນ ແລະ ມີກຳນົດໂທດຕັດອິດສະລະພາບຕາມກົດໝາຍອາຍາ. ຕາມກົດໝາຍວ່າດ້ວຍການດຳເນີນຄະດີ ອາຍາ (ປັບປຸງໃໝ່) ຫົວໜ້າອົງການສືບສວນ-ສອບສວນ ຫຼື ໄອຍະການປະຊາຊົນ ມີສິດອອກຄຳສັ່ງ ກັກຕົວ[4] ຜູ້ກ່ຽວຂ້ອງໄວ້ໄດ້ສີ່ສິບແປດຊົ່ວໂມງເພື່ອດຳເນີນການສືບສວນ-ສອບສວນຕໍ່ແຕ່ຕ້ອງ ລາຍງານໃຫ້ໄອຍະການຊົນຊາບພາຍໃນກຳນົດ ຊາວສີ່ຊົ່ວ ໂມງ ນັບແຕ່ເວລາທີ່ໄດ້ກັກຕົວເປັນ ຕົ້ນໄປ.

**ການຄຸມຕົວຢູ່ກັບທີ່** ໃການຄຸມຕົວຢູ່ກັບທີ່ ແມ່ນ ມາດຕະການທີ່ສະແດງອອກດ້ວຍ ການບໍ່ອະນຸຍາດໃຫ້ຜູ້ຖືກສົ່ງ ໄສ ຫຼືຜູ້ຖືກຫາອອກຈາກບ່ອນຢູ່ຫຼືສະຖານທີ່ໃດໜຶ່ງ ໂດຍບໍ່ໄດ້ຮັບ ອະນຸຍາດຈາກຫົວໜ້າອົງການ ສືບສວນ-ສອບສວນ ຫຼືໄອຍະການ ປະຊາຊົນ. ການຄຸມຕົວຢູ່ກັບທີ່ ຕ້ອງມີຄຳສັ່ງເປັນລາຍລັກອັກ ສອນຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ໄອຍະການປະຊາຊົນ ໂດຍວາງເງື່ອນໄຂໃນ ການປະຕິບັດໃຫ້ແກ່ຜູ້ຖືກຄຸມຕົວ ຢູ່ກັບທີ່ທີ່ ຕ້ອງໄດ້ປະຕິບັດຕາມຢ່າງເຄັ່ງຄັດ.

**ການງົດໜ້າທີ່ຫຼືຕຳແໜ່ງ** ໃການງົດໜ້າທີ່ ຫຼື ຕຳແໜ່ງເປັນມາດຕະການສະກັດກັ້ນທີ່ສຳຄັນ ໃນການດຳເນີນຄະດີອາຍາ ຊຶ່ງແມ່ນການໂຈະການເຄື່ອນໄຫວ ປະຕິບັດໜ້າທີ່ ຫຼື ຕຳແໜ່ງ ຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ໄວ້ຊົ່ວຄາວໃນໄລຍະດຳເນີນຄະດີ ເນື່ອງຈາກເຫັນວ່າ ການກະທຳຜິດ ນັ້ນພົວພັນເຖິງໜ້າທີ່ຫຼືຕຳແໜ່ງຂອງຜູ້ກ່ຽວທັງນີ້ ເພື່ອບໍ່ໃຫ້ເປັນອຸບປະສັກໃນການດຳເນີນຄະດີ. ຄຳສັ່ງໃຫ້ງົດໜ້າທີ່ ຫຼື ຕຳ ແໜ່ງຕ້ອງອອກໂດຍ ໄອຍະການປະຊາຊົນ ແລະ ຄຳສັ່ງ ດັ່ງກ່າວນີ້ ຕ້ອງສົ່ງໃຫ້ສຳນັກງານ ຫຼື ອົງ ການຈັດຕັ້ງຂອງຜູ້ກ່ຽວເພື່ອປະຕິບັດ.

---

[3] ຜູ້ຖືກສົງໄສແມ່ນບຸກຄົນທີ່ຖືກສົງໄສວ່າໄດ້ກະທຳຜິດທາງອາຍາແຕ່ຍັງບໍ່ທັນມີຄຳສັ່ງເປີດການສືບສວນ-ສອບ ສວນເທື່ອ.

[4] ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບເກົ່າບໍ່ໄດ້ກຳນົດແຈ້ງວ່າຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນມີສິດອອກຄຳສັ່ງກັກຕົວໄດ້.ແຕ່ໂດຍທົ່ວໄປແລ້ວການກັກຕົວມັກຈະກະທຳໃນກໍລະນີທີ່ເປັນ ການກະທຳຜິດເຊິ່ງໜ້າ ແລະ ໃນກໍລະນີຮີບດ່ວນ ຈຶ່ງບໍ່ຈຳເປັນຈະຂໍຄຳສັ່ງກັກຕົວກໍໄດ້.

**ການໂຈະການດຳເນີນຄະດີ/ຄຳສັ່ງໂຈະ** ໃການໂຈະການດຳເນີນຄະດີອາຍາ ແມ່ນ ການຢຸດເຊົາການເຄື່ອນໄຫວດຳເນີນຄະດີອາຍາ ໄວ້ຊົ່ວຄາວເນື່ອງຈາກມີພື້ນຖານ ໃດໜຶ່ງທີ່ພາໃຫ້ບໍ່ສາມາດ ດຳເນີນຄະດີໄດ້ ອັນເໜື່ອງມາຈາກ : ຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບຫຼີກຈາກການດຳເນີນຄະດີ ຫຼື ບໍ່ຮູ້ບ່ອນຢູ່ແນ່ນອນຂອງຜູ້ກ່ຽວ ແລະ ຫຼັກຖານໃນຄະດີ ບໍ່ທັນໜັກແໜ້ນພຽງພໍເທື່ອ; ຫຼື ບໍ່ສາມາດຮູ້ໄດ້ວ່າແມ່ນໃຜເປັນຜູ້ກະທຳຜິດໃນຄະດີ ;ຫຼືໄດ້ມີການຢັ້ງຢືນຈາກຄະນະແພດວ່າຜູ້ຖືກຫາໄດ້ມີອາການເຈັບປ່ວຍໜັກ ຫຼື ເປັນບ້າເສັຍຈິດ.
ການໂຈະການດຳເນີນຄະດີຈະຖືກຮື້ຟື້ນຄືນໃໝ່ໄດ້ກໍ່ຕໍ່ເມື່ອພື້ນຖານຂອງການໂຈະການດຳເນີນຄະດີຫາກຕົກໄປແລະອາຍຸຄວາມໃນການຮ້ອງຟ້ອງທາງອາຍາຍັງບໍ່ທັນສິ້ນສຸດເທື່ອ.ການໂຈະການດຳເນີນຄະດີຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການສືບສວນ-ສອບສວນຫຼືໄອຍະການປະ ຊາຊົນ. ສຳເນົາຄຳສັ່ງໂຈະການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງໄດ້ລາຍງານໃຫ້ໄອຍະການປະຊາຊົນຊາບໃນທັນໃດເພື່ອຕິດຕາມກວດກາ.
**ການຊັດມ້ຽນຄະດີ/ຄຳສັ່ງຊັດມ້ຽນ** ການຊັດມ້ຽນຄະດີອາຍາ ແມ່ນ ການຢຸດເຊົາ ການເຄື່ອນໄຫວດຳເນີນຄະດີອາຍາ ຢ່າງຖາ ວອນເມື່ອມີພື້ນຖານໃດໜຶ່ງທີ່ພາໃຫ້ຕ້ອງຍົກເວັ້ນການດຳເນີນຄະດີອາຍາ ແລະ ບໍ່ມີຫຼັກຖານພຽງພໍວ່າຜູ້ຖືກຫາໄດ້ກະທຳຜິດ. ການຊັດມ້ຽນ ຄະດີອາຍາຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການສືບສວນ-ສອບສວນຫຼືໄອຍະການປະຊາຊົນ.ໃນກໍລະນີຄຳສັ່ງຊັດມ້ຽນຄະດີອາຍາຫາກອອກໂດຍອົງການສືບສວນ-ສອບສວນສຳເນົາຄຳສັ່ງດັ່ງກ່າວຕ້ອງສົ່ງໃຫ້ໄອຍະການປະຊາຊົນຮັບຊາບໃນທັນໃດ.ສ່ວນຄຳສັ່ງຊັດມ້ຽນຄະດີທີ່ອອກໂດຍໄອຍະການປະຊາຊົນນັ້ນສຳເນົາຄຳສັ່ງຕ້ອງສົ່ງໃຫ້ໄອຍະການຂັ້ນເທິງຮັບຊາບເພື່ອຕິດຕາມກວດກາ.ບໍ່ວ່າໃນກໍລະນີໃດກໍຕາມທີ່ມີການຊັດມ້ຽນຄະດີໄອຍະການປະຊາຊົນຕ້ອງອອກຄຳສັ່ງ ປ່ອຍຕົວຜູ້ຖືກຫາໃນທັນໃດ.ເຈົ້າໜ້າທີ່ສືບສວນ-ສອບສວນ,ພະນັກງານສອບສວນຫຼືໄອຍະການປະຊາຊົນຕ້ອງສົ່ງເຄື່ອງຕິດຕົວທີ່ຖືກຕ້ອງຕາມກົດໝາຍລວມທັງວັດຖຸສິ່ງຂອງທີ່ຍຶດໄດ້ເປັນຂອງກາງຊຶ່ງເປັນກຳມະສິດ ຂອງຜູ້ກ່ຽວຄືນໃຫ້ຜູ້ກ່ຽວໃນທັນໃດທີ່ມີການປ່ອຍຕົວ[5]
**ການສືບຕໍ່ດຳເນີນຄະດີ(ກໍລະນີຊັດມ້ຽນ)** ຕາມຫຼັກການແລ້ວ,ກົດໝາຍ[6]ອະນຸຍາດໃຫ້ສືບຕໍ່ດຳເນີນຄະດີທີ່ຖືກຊັດມ້ຽນຄືນໃໝ່ໄດ້ໃນກໍລະນີທີ່ພື້ນຖານຂອງການຊັດມ້ຽນຄະດີນັ້ນມາຈາກການຂາດຫຼັກຖານທີ່ໜັກແໜ້ນພຽງພໍວ່າຜູ້ຖືກຫາໄດ້ກະທຳຜິດ.ການສືບຕໍ່ດຳເນີນຄະດີທີ່ຖືກຊັດມ້ຽນນັ້ນຈະດຳເນີນໄດ້ກໍ່ຕໍ່ເມື່ອໄດ້ຄົ້ນພົບຂໍ້ມູນຫຼັກຖານໃໝ່ ແລະ ອາຍຸຄວາມໃນການຮ້ອງຟ້ອງທາງອາຍາຍັງບໍ່ທັນສິ້ນສຸດເທື່ອເທົ່ານັ້ນ. ກໍລະນີນີ້ໄອຍະການປະຊາຊົນຕ້ອງ ອອກຄຳສັ່ງໃຫ້ລົບລ້າງຄຳສັ່ງຊັດມ້ຽນຄະດີແລ້ວອອກຄຳສັ່ງໃຫ້ສືບຕໍ່ດຳເນີນຄະດີທີ່ກ່ຽວຂ້ອງຄືນໃໝ່.

---

[5] ມາດຕາ 71 ກ.ດອ.

[6] ມາດຕາ 72 ກ. ດອ

**ການສັນນິຖານວ່າເປັນຜູ້ບໍລິສຸດ** ການສັນນິຖານວ່າເປັນຜູ້ບໍລິສຸດ ແມ່ນຫຼັກການນຶ່ງຂອງການດຳເນີນຄະດີອາຍາທີ່ຮັບປະກັນສິດແລະເສລີພາບຂອງບຸກຄົນທີ່ຖືກສົງໃສວ່າໄດ້ກະທຳຜິດທາງອາຍາ ຍັງຖືວ່າເປັນບຸກຄົນທີ່ບໍລິສຸດຢູ່ຕາບໃດທີ່ສານບໍ່ໄດ້ຕັດສິນລົງໂທດໃສ່ຜູ້ກ່ຽວ

**ການພິຈາລະນາຄະດີ** ການພິຈາລະນາຄະດີ ແມ່ນ ການຄົ້ນຄ້ວາຄະດີຂອງຄະນະສານຫຼືຜູ້ພິພາກສາທີ່ຮັບຜິດຊອບຄະດີ

**ການໃຫ້ສິນບົນ.** ການໃຫ້ສິນບົນແມ່ນການທີ່ບຸກຄົນໃດໜຶ່ງໄດ້ມອບຊັບ, ວັດຖຸຂອງ ຫຼື ເງິນໃຫ້ແກ່ບຸກຄົນທີ່ມີໜ້າທີ່ຕຳແໜ່ງແລະມີຄວາມຮັບຜິດຊອບ, ເພື່ອໃຫ້ປະຕິບັດຫຼືບໍ່ປະຕິບັດບັນຫາໃດໜຶ່ງທີ່ເປັນຜົນປະໂຫຍດແກ່ຜູ້ກ່ຽວ.

**ການຮັບສິນບົນ** ການຮັບສິນບົນ ແມ່ນ ການທີ່ພະນັກງານຜູ້ໃດ ຜູ້ໜຶ່ງຫາກໄດ້ທວງເອົາ, ຂໍເອົາ, ຮັບເອົາ ຫລື ຕົກລົງຮັບເອົາສິນບົນຈາກຜູ້ອື່ນດ້ວຍການໃຊ້ໜ້າທີ່ຕຳແໜ່ງຂອງຕົນ ເພື່ອຜົນປະໂຫຍດຂອງຜູ້ໃຫ້ສິນບົນ

**ການເປີດການສືບສວນ** _ການເປີດການສືບສວນ-ສອບສວນ ແມ່ນການເລີ້ມຕົ້ນດຳເນີນຄະດີຕາມກົດໝາຍ ໂດຍອີງການສືບສວນ-ສອບສວນ ຫຼື ໄອຍະການ. ການເປີດການສືບສວນ-ສອບສວນ ຕາມຫຼັກການແລ້ວຕ້ອງເລີ້ມດ້ວຍຄຳສັ່ງເປີດການສືບສວນບສອບສວນຢ່າງເປັນທາງການໂດຍຫົວນ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ._

**ສອບສວນ**

**ການກັກຂັງ(ຈຳຄຸກ)** ການກັກຂັງ ແມ່ນ ການຈຳກັດອິດສະລະພາບຂອງຜູ້ກະທຳຜິດທີ່ໄດ້ຖືກສານຕັດສິນແລ້ວຢູ່ໃນເຮືອນຈຳ ຫຼືສະຖານທີ່ຄຸມຂັງ(ຄ້າຍຄຸມຂັງ ຫຼື ຄ້າຍດັດສ້າງ).

**ການກັກຂັງພາງ** ການກັກຂັງພາງ ແມ່ນ ການຈຳກັດອິດສະລະພາບຂອງຜູ້ຖືກຫາວ່າໄດ້ກະທຳຜິດທາງອາຍາ ທີ່ກຳລັງຖືກດຳເນີນຄະດີຢູ່. ການກັກຂັງພາງຕ້ອງມີຄຳສັ່ງຢ່າງເປັນລາຍລັກອັກສອນຂອງສານຫຼືໄອຍະການ. ການກັກຂັງພາງມີກຳໜົດເວລາ ຫົກເດືອນສຳລັບການກະທຳຜິດຖານໂທສານຸໂທດ ແລະ ໜຶ່ງປີສຳລັບການກະທຳໃນສະຖານຄະຣຸໂທດ.

**ການຖອນຕົວຈາກການດຳເນີນຄະດີ** ການຖອນຕົວຈາກການດຳເນີນຄະດີ ໝາຍເຖິງ ການປະເສດບໍ່ດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ ສານ ຫຼື ໄອຍະການໃນຄະດີທີ່ມີສ່ວນກ່ຽວຂ້ອງ ຫຼື ພົວພັນກັບຕົນ.

**ການໄຕ່ສວນຄະດີ** ການໄຕ່ສວນຄະດີ ແມ່ນ ການສອບຖາມຂອງຄະນະສານຕໍ່ຜູ້ເຂົ້າຮ່ວມຕ່າງໆໃນການດຳເນີນຄະດີໃນເວລາປະຊຸມສານຕັດສິນ.

**ການຄ້ານຕົວ** ການຄ້ານຕົວ ແມ່ນ ການໃຊ້ສິດຂອງຈຳເລີຍ ຫຼື ຜູ້ເຂົ້າຮ່ວມອື່ນໆ ໃນການປະຕິເສດບໍ່ໃຫ້ຄະນະສານ ຫຼືຜູ້ພິພາກສາຜູ້ໃດຜູ້ໜຶ່ງພິຈາລະນາຄະດີໃນທີ່ປະຊຸມສານ.

**ການອຸທອນຄະດີ** ການອຸທອນຄະດີ ແມ່ນ ຮູບການປະຕິເສດຄຳຕັດສິນຂອງສານຂັ້ນຕົ້ນທີ່ໄດ້ຕັດສິນແລ້ວນັ້ນຕໍ່ສານຂັ້ນອຸທອນ. ການອຸທອນຄະດີຕ້ອງເຮັດຂຶ້ນພາຍໃນກຳໜົດ 20 ວັນພາຍຫລັງການຕັດສິນຂອງສານ, ຖ້າກາຍກຳນົດດັ່ງກ່າວແລ້ວຖືວ່າສະລະສິດ.

**ການໂຈະການໄຕ່ສວນຄະດີ** ການໂຈະການໄຕ່ສວນຄະດີໃນທີ່ປະຊຸມສານ ແມ່ນ ການຢຸດເຊົາການປະຊຸມສານຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງ ທີ່ເປັນອຸປະສັກຕໍ່ການໄຕ່ສວນຄະດີນັ້ນເປັນຕົ້ນຈຳເລີຍຫາກຖືກເຈັບເປັນຢ່າງກະທັນຫັນ ຫຼື ສູນເສຍຄວາມສາມາດທາງດ້ານການປະພຶດ.(ມ 81 ກ ດອ)

**ການເລື່ອນການໄຕ່ສວນຄະດີ** ການເລື່ອນການໄຕ່ສວນຄະດີ ແມ່ນ ການຕົກລົງເອົາຄະດີໄປໄຕ່ສວນໃນວັນຂ້າງໜ້າ ຍ້ອນຄວາມຈຳເປັນ ຕ້ອງທວງເອົາຫຼັກຖານໃໝ່ຫຼືຜູ້ເຂົ້າຮ່ວມໃນຄະດີຜູ້ໃດຜູ້ໜຶ່ງ ທີ່ມີຄວາມສຳຄັນຕໍ່ການພິຈາລະນາຄະດີນັ້ນ ບໍ່ມາເຂົ້າຮ່ວມໃນທີ່ປະຊຸມສານ ຫຼື ຍ້ອນສາເຫດອື່ນໆ.(ມ 81 ກດອ)

**ການຕັດສິນຊ້ອງໜ້າ** ການຕັດສິນຊ້ອງໜ້າ ແມ່ນ ການຕັດສິນຂອງສານທີ່ໂຈດທາງແພ່ງ ແລະ ຈຳເລີຍເຂົ້າຮ່ວມໃນການພິຈາລະນາຄະດີ ຍົກເວັ້ນການພິຈາລະນາຄະດີຢູ່ສານຂັ້ນລົບລ້າງ.(ມ 82 ກດອ).

**ການຕັດສິນຖືວ່າຊ້ອງໜ້າ(ມ 82 ກ ດອ)** ການຕັດສິນຖືວ່າຊ້ອງໜ້າ ແມ່ນການຕັດສິຂອງສານ ທີ່ໂຈດທາງແພ່ງ ຫຼື ຈຳເລີຍ ໄດ້ຮັບໝາຍຮຽກໃຫ້ເຂົ້າມາຮ່ວມປະຊຸມສານແລ້ວ ແຕ່ຫາກບໍ່ໄດ້ເຂົ້າມາຮ່ວມໂດຍບໍ່ມີເຫດຜົນ ຫຼື ໃນກໍລະນີທີ່ການກະທຳຜິດທີ່ມີລັກສະນະເບົາບາງ ຊຶ່ງໂຈດທາງແພ່ງ ຫລືຈຳເລີຍສະເໜີໃຫ້ສານພິຈາລະນາຕັດສິນຄະດີ ໂດຍທີ່ຜູ້ກ່ຽວບໍ່ໄດ້ເຂົ້າຮ່ວມນຳ. ໃນກໍລະນີນີ້ຜູ້ກ່ຽວບໍ່ມີສິດຄັດຄ້ານຄຳຕັດສິນຂອງສານ ພຽງແຕ່ມີສິດຂໍອຸທອນເທົ່ານັ້ນ.(ມ 82 ກ ດອ).

**ການຕັດສິນລັບຫຼັງ** ການຕັດສິນລັບຫຼັງ ແມ່ນການຕັດສິນຂອງສານທີ່ໂຈດທາງແພ່ງ ຫຼື ຈຳເລີຍບໍ່ໄດ້ເຂົ້າຮ່ວມໃນທີ່ປະຊຸມສານ ຊຶ່ງສານໄດ້ສົ່ງໝາຍຮຽກແລ້ວ ແລະ ເຂົ້າໃຈວ່າຜູ້ກ່ຽວໄດ້ຮັບໝາຍຮຽກແລ້ວນັ້ນ ແຕ່ຜູ້ກ່ຽວບໍ່ໄດ້ຮັບຍ້ອນສາເຫດໃດໜຶ່ງເຊັ່ນ : ໝາຍຮຽກສົ່ງຕໍ່ບໍ່ເຖິງມືຜູ້ກ່ຽວ, ຜູ້ກ່ຽວຫຼົບຫຼີກ. ໃນກໍລະນີດັ່ງກ່າວໂຈດທາງແພ່ງຫຼືຈຳເລີຍມີສິດຄັດຄ້ານໄດ້ພາຍໃນກຳນົດຊາວວັນນັບແຕ່ມື້ຮັບຊາບຄຳຕັດສິນເປັນຕົ້ນໄປ.ສານຄະນະເກົ່າຕ້ອງຕັດສິນຄະດີນັ້ນ ຄືນໃໝ່ໂດຍຊ້ອງໜ້າຜູ້ກ່ຽວຕາມລະບຽບການພິຈາລະນາຄະດີຂອງສານຂັ້ນຕົ້ນ ຊຶ່ງສານຈະນັດວັນເປີດປະຊຸມສານໃນເວລາທີ່ເໝາະສົມ.(ມ 82 ກ ດອ)

**ການຜ່ອນໂທດ** ການຜ່ອນໂທດ ໝາຍເຖິງການເຮັດໃຫ້ໂທດທີ່ສານລົງໃສ່ຜູ້ກະທຳຜິດ(ຈຳເລີຍ)ຫຼຸດລົງຈາກໂທດເດີມ ທີ່ສານຄວນຈະລົງໃສ່. ການຜ່ອນໂທດ ອາດຈະພິຈາລະນາຕໍ່ນັກໂທດທີ່ໄດ້ມີຄວາມກ້າວໜ້າໃນການປະຕິບັດໂທດ.

**ການເພີ່ມໂທດ** ການເພີ່ມໂທດໝາຍເຖິງ ການເຮັດໃຫ້ໂທດຂອງຜູ້ກະທຳຜິດ(ຈຳເລີຍ)ທີ່ສານຄວນລົງໃສ່ນັ້ນມີຈຳນວນເພີ້ມຂຶ້ນອັນເນື່ອງມາຈາກສາເຫດ ທີ່ພາໃຫ້ເພີ້ມຄວາມຮັບຜິດຊອບທາງອາຍາ(ມາດຕາ 37 ກົດໝາຍອາຍາ) ຊຶ່ງຈຳເລີຍໄດ້ກະທຳຜິດໂດຍມີການຈັດຕັ້ງເປັນກຸ່ມ, ຫລືເປັນການກະທຳທີ່ພາໃຫ້ມີຜົນສະທ້ອນອັນນັກໜ່ວງ ດັ່ງນີ້ເປັນຕົ້ນ.

**ການສະເໜີຄັດຄ້ານ(ຂອງໄອຍະການ)** ການສະເໜີຄັດຄ້ານຂອງໄອຍະການ ແມ່ນຮູບການປະຕິເສດຂອງໄອຍະການ ຕໍ່ຄຳສັ່ງຕ່າງໆ ໃນຂະບວນການດຳເນີນຄະດີ ຫລື ຄຳຕັດສິນຂອງສານ. ການຄັດຄ້ານຂອງໄອຍະການຕໍ່ຄຳຕັດສິນຂອງສານນັ້ນ ຈະດຳເນີນໄປພາຍກຳນົດເວລາ 20 ວັນ ຖ້າເປັນຄຳຕັດສິນຂອງສານຂັ້ນຕົ້ນ ແລະ ສອງເດືອນ ສຳລັບຄຳພິພາກສາຂອງສານຂັ້ນອຸທອນ ສວ່ນການສະເນີ້ຄັດຄ້ານຄຳຊີ້ຂາດ ຫລືຄຳສັ່ງຂອງສານນັ້ນແມ່ນຈະດຳເນີນໄປພາຍໃນກຳນົດເວລາ 7 ວັນນັບແຕ່ວັນອອກຄຳສັ່ງຫລືຄຳຊີ້ຂາດເປັນຕົ້ນໄປ.

**ການປະຕິບັດຄຳຕັດສິນຂອງສານ** ການປະຕິບັດຄຳຕັດສິນຂອງສານ ແມ່ນ ການເຮັດໃຫ້ຄຳຕັດສິນຂອງສານປະກົດເປັນຈິງ. ໂດຍທົ່ວໄປແລ້ວຄຳຕັດສິນຂອງສານອາຍາຈະມີສອງລັກສະນະ ຊຶ່ງຈະມີທັງໂທດອາຍາ ແລະ ຄວາມຮັບຜິດຊອບທາງແພ່ງລວມຢູ່ດ້ວຍ. ເຈົ້າໜ້າທີ່ຄ້າຍຄຸມຂັງຈະເປັນຜູ້ກຳກັບໃນການປະຕິບັດໂທດອາຍາ ສ່ວນຄວາມຮັບຜິດຊອບທາງແພ່ງນັ້ນ ຈະຂຶ້ນຢູ່ກັບພະນັກງານປະຕິບັດຄຳຕັດສິນຂອງສານ ທີຈັດຕັ້ງຂຶ້ນຢູ່ສານແຂວງ ແລະ ນະຄອນເປັນຜູ້ຈັດຕັ້ງປະຕິບັດ.

**ການຣື້ຟື້ນຄະດີ** ການຣື້ຟື້ນຄະດີ ໝາຍເຖິງການນຳເອົາຄະດີທີ່ສານໄດ້ຕັດສິນຫຼືພິພາກສາແລ້ວນັ້ນມາພິຈາລະນາຄືນໃໝ່. ສານປະຊາຊົນສູງສຸດມີສິດອຳນາດໃນການພິຈາລະນາຄະດີເປັນຂັ້ນຣື້ຟື້ນ ຕາມຄຳສະເໜີຂອງໄອຍະການປະຊາຊົນສູງສຸດ ບົນພື້ນຖານຂໍ້ມູນຫຼັກຖານໃໝ່ເທົ່ານັ້ນ.

**ການປະຕິບັດການຊ່ວຍເຫຼືອທາງດ້ານຍຸຕິທຳ** ການປະຕິບັດການຊ່ວຍເຫຼືອດ້ານຍຸຕິທຳແມ່ນ ການໃຫ້ຄວາມຮ່ວມມືໃນການດຳເນີນຄະດີອາຍາຂອງອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາຂອງ ສ ປປ ລາວ ຕາມສັນຍາ ທີ່ ສ ປປ ລາວ ໄດ້ເຊັນກັບຕ່າງປະເທດ ຫລືສົນທິສັນຍາສາກົນ ທີ່ ສ ປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ ແລະ ຕ້ອງໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາແຫ່ງ ສ ປປ ລາວ. ການຊ່ວຍເຫຼືອທາງດ້ານຍຸຕິທຳ ອາດຈະແນໃສ່ການສົ່ງຜູ້ຮ້າຍຂ້າມແດນ, ການແລກປ່ຽນນັກໂທດ, ການຍຶດ ຫລືການອາຍັດຊັບ ຂອງຜູ້ຖືກຫາ ຫລື

ຈຳເລີຍ, ການປະຕິບັດຄຳຕັດສິນຂອງສານ, ການຮ່ວມມືກັນຕ້ານອາດຊະຍາກຳຂ້າມຊາດຕາມຊາຍແດນ ແລະ ອື່ນໆ.

**ການປະຕິເສດການຊ່ວຍເຫຼືອທາງດ້ານຍຸຕິທຳ** ການປະຕິເສດການຊ່ວຍເຫຼືອທາງດ້ານຍຸຕິທຳ ແມ່ນ ການທີ່ບໍ່ເຫັນພ້ອມຂອງອົງການ ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາຂອງ ສ ປປ ລາວ ຕໍ່ ການສະເໜີຂໍຄວາມຊ່ວຍເຫຼືອທາງດ້ານຍຸຕິທຳທີ່ບໍ່ສອດຄ່ອງກັບສັນຍາ ທີ່ ສ ປປລາວໄດ້ເຊັນກັບຕ່າງປະເທດຫລືສົນທິສັນຍາສາກົນ ທີ່ ສ ປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ ແລະ ກົດໝາຍຂອງ ສ ປປ ລາວ ; ຫລື ການໃຫ້ການຊ່ວຍເຫຼືອທາງດ້ານຍຸຕິທຳ ຊຶ່ງຈະເປັນຜົນກະທົບຕໍ່ອຳນາດ ອະທິປະໄຕ, ຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ ຫລື ຜົນປະໂຫຍດອັນສຳຄັນຂອງ ສ ປປ ລາວ.

**ການແຈ້ງຄວາມ** ການແຈ້ງຄວາມ ແມ່ນ ການລາຍງານຕໍ່ເຈົ້າໜ້າທີ່ ຫລື ອົງການທີ່ມີສິດອຳນາດໃຫ້ການດຳເນີນຄະດີ ການແຈ້ງຄວາມອາດຈະເຮັດຂຶ້ນໂດຍທາງປາກເປົ່າຫລືເປັນລາຍລັກອັກສອນກໍໄດ້. ການລາຍງານກ່ຽວກັບການກະທຳຜິດຕໍ່ເຈົ້າໜ້າທີ່ຢ່າງເປັນລາຍລັກອັກສອນນັ້ນ ອາດ ມີຄວາມໝາຍຄ້າຍກັບການຮ້ອງຟ້ອງທາງອາຍາ(ເບິ່ງການຮ້ອງຟ້ອງທາງອາຍາ)

**ການຕິດຕາມກວດກາ(ຂອງໄອຍະການ)** ການຕິດຕາມກວດກາຂອງໄອຍະການແມ່ນສິດອັນໜຶ່ງຕາມພາລະບົດບາດຂອງໄອຍະການ, ຊຶ່ງນອກຈາກຈະມີສິດກ່າວຟ້ອງການກະທຳຜິດຕໍ່ສານແລ້ວ ໄອຍະການຍັງຈະຕ້ອງປະຕິບັດສິດໃນການຕິດຕາມກວດກາການປະຕິບັດກົດໝາຍທົ່ວໄປ, ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ, ຕິດຕາມກວດກາການປະຕິບັດກົດໝາຍຂອງສານ, ຕິດຕາມກວດກາການປະຕິບັດກົດໝາຍຂອງເຈົ້າໜ້າທີ່ຄຸມຂັງ ດັ່ງນີ້ເປັນຕົ້ນ.

**ການສັ່ງຟ້ອງຂຶ້ນສານໂດຍກົງ** ການສັ່ງຟ້ອງຂຶ້ນສານໂດຍກົງໝາຍເຖິງການທີ່ເຈົ້າໜ້າທີ່ຫລືພະນັກງານສອບສວນ ຈະສົ່ງສຳນວນຄະດີ ພ້ອມດ້ວຍຂອງກາງ ແລະ ຜູ້ຕ້ອງຫາໃຫ້ໄອຍະການປະຊາຊົນ ເພື່ອທຳການສັ່ງຟ້ອງຂຶ້ນສານໂດຍກົງໂດຍບໍ່ຈຳເປັນຈະຕຕ້ອງເປີດການສືບສວນ-ສອບສວນກໍໄດ້ ໃນກໍລະນີທີ່ເປັນການກະທຳຜິດຖານລະຫຸໂທດ ຫລືໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບສູງສຸດບໍ່ເກີນສາມປີ ແລະ ເມື່ອມີຫລັກຖານຄົບຖ້ວນແລ້ວ.

**ການສັ່ງຟ້ອງຄະດີຂອງໄອຍະການ** ການສັ່ງຟອ້ງຄະດີອາຍາ ແມ່ນການປະຕິບັດ ໜ້າທີ່ຂອງໄອຍະການປະຊາຊົນ ໃນຖານະທີ່ ເປັນໂຈດໃນຄະດີອາຍາຕາງໜ້າໃຫ້ລັດ ແລະສັງຄົມຮ້ອງຟ້ອງຈຳເລີຍ (ຜູ້ກະທຳຜິດ) ຂຶ້ນສານ (ອາຍາ)ເພື່ອພິຈາລະນາຕັດສິນ ຕາມກົດໝາຍໃນຂັ້ນຕໍ່ໄປ.ການສັ່ງຟ້ອງຄະດີເປັນສິດເດັດຂາດຂອງໄອຍະການປະຊາຊົນທີ່ຖືກຕ້ອງຕາມກົດໝາຍ ,ພາຍຫຼັງທີ່ໄດ້ກວດກາເບິ່ງສຳນວນຄະດີທີ່ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ສົ່ງໃຫ້ແລະພາຍໃນກຳ

ນິດ 15 ວັນ[7] ຖ້າເຫັນວ່າມີຫຼັກຖານໜັກແໜ້ນພຽງພໍວ່າເປັນຜູ້ກະທຳຜິດແລ້ວໄອຍະການ ປະຊາຊົນກໍຕ້ອງສັ່ງຟ້ອງຈຳເລີຍຂຶ້ນສານຕັດສິນຕາມຂັ້ນຕອນ ຂອງກົດໝາຍ.

**ການສອບຖາມຊ້ອງໜ້າ** ການສອບຖາມຊ້ອງໜ້າໝາຍເຖິງການນຳເອົາບຸກຄົນທີ່ໄດ້ໃຫ້ການບໍ່ກົງກັນ ຕໍ່ເຈົ້າໜ້າທີ່ ຫຼື ພະນັກງານສອບສວນ ມາສອບສວນໂດຍຊ້ອງໜ້າກັນ. ການສອບຖາມຊ້ອງໜ້າຈະດຳເນີນເທື່ອລະສອງຄົນໂດຍທີ່ເຈົ້າໜ້າທີ່ກ່ຽວຂ້ອງມີຂໍ້ມູນຂອງການສອບສວນເບື້ອງຕົ້ນແລ້ວ.

**ການຊັນນະສູດສະຖານທີ່ເກີດເຫດ** ການຊັນນະສູດສະຖານທີ່ເກີດເຫດແມ່ນການຊອກຫາຮ່ອງຮອຍຂອງການກະທຳຜິດ ແລະ ຫຼັກຖານເປັນຕົ້ນຫຼັກຖານທາງດ້ານວັດຖຸເພື່ອແນໃສ່ເຮັດໃຫ້ສະພາບຂອງການກະທຳຜິດໄດ້ຈະແຈ້ງຂຶ້ນ.ການຊັນນະສູດສະຖານທີ່ເກີດເຫດອາດຈະເຮັດກ່ອນຫຼືຫຼັງການເປີດການສືບສວນ-ສອບສວນກໍໄດ້ແລ້ວແຕ່ກໍລະນີ.

**ຂອງກາງ** ຂອງກາງ ແມ່ນ ວັດຖຸ, ພາຫະນະ, ອຸບປະກອນ ທີ່ໃຊ້ເຂົ້າໃນການກະທຳຜິດຫຼືໄດ້ມາຈາກການກະທຳຜິດ. ຂອງກາງແມ່ນຫຼັກຖານທີ່ສຳຄັນໃນການດຳເນີນຄະດີອາຍາ.

**ຄະນະສານອາຍາ** ຄະນະສານອາຍາແມ່ນບັນດາຜູ້ພິພາກສາທີ່ປະກອບເປັນ ຄະນະສານເພື່ອພິຈາລະນາຕັດສິນຄະດີອາຍາ, ຕາມຫຼັກການແລ້ວໃນເວລາຕັດສິນຄະດີ ຄະນະສານອາຍາຕອ້ງປະກອບດ້ວຍຜູ້ພິພາກສາສາມຄົນ, ໃນນີ້ຜູ້ໜຶ່ງເປັນປະທານ ແລະ ອີກສອງຄົນເປັນຄະນະສານ.(ເບິ່ງ : ສານອາຍາ)

**ຄຳສັ່ງຈັບຕົວ** ກ່ອນເຈົ້າໜ້າທີ່ສືບສວນ-ສອບສວນຈະຈັບຕົວບຸກຄົນໃດໜຶ່ງນັ້ນຕ້ອງມີຄຳສັ່ງເປັນລາຍ ລັກອັກສອນຂອງໄອຍະການປະຊາຊົນ ຫຼື ສານປະຊາຊົນ ຍົກເວັ້ນການກະທຳຜິດໃນກໍລະນີ ເຊິ່ງໜ້າ ຫຼືຮີບດ່ວນທີ່ບົ່ງໄວ້ໃນກົດໝາຍ

**ຄຳສັ່ງກັກຂັງພາງ**ການກັກຂັງພາງ ແມ່ນການກັກຂັງຊົ່ວຄາວກ່ອນຄຳຕັດສິນຂອງສານຈະໃຊ້ໄດ້ຢ່າງເດັດ ຂາດ ເພື່ອດຳເນີນການສືບສວນ-ສອບສວນ.[8] ບໍ່ວ່າ ໃນກໍລະນີໃດກໍຕາມ, ໂດຍຫຼັກການແລ້ວ ການກັກຂັງພາງຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງໄອຍະການປະຊາຊົນ[9] ແລະ ຕ້ອງອີງໃສ່ເງື່ອນໄຂອັນດຽວກັນກັບການຈັບຕົວທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາຄືຕ້ອງ ແມ່ນການກະທຳຜິດທາງອາຍາທີ່ກົດໝາຍໄດ້ກຳນົດໂທດຕັດ ອິດສະລະພາບ ແລະ ຫຼັກຖານປະກອບຄະດີຕ້ອງ ໜັກ

---

[7] ມາດຕາ 74 ກ. ດອ

[8] ມາດຕາ 65 ວັກທີ 1 ກ.ດອ

[9] ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບກ່ອນ(ມາດຕາ..)ສານປະຊາຊົນກໍມີສິດອອກຄຳສັ່ງກັກຂັງພາງ

ແໜ້ນ. ນອກຈາກນີ້ແລ້ວ ຍັງຕ້ອງອີງໃສ່ ເງື່ອນໄຂໃດໜຶ່ງຕື່ມອີກ ເພື່ອຮັບປະກັນໃຫ້ແກ່ ການເຄື່ອນໄຫວດຳເນີນຄະດີເຊັ່ນ: ຜູ້ຖືກສົງໄສ ອາດເອົາຕົວຫຼົບໜີ,ມີໂອກາດໄປທຳລາຍຫຼັກຖານ, ທຳຮ້າຍຜູ້ຖືກເສັຍຫາຍ,ພະຍານຫຼືໄປກະທຳຜິດໃໝ່ອີກ ຫຼື ຜູ້ຖືກສົງໄສອາດຈະຖືກ ທຳຮ້າຍຈາກຜູ້ຖືກເສັຍຫາຍ ຫຼື ຈາກບຸກຄົນອື່ນ.

**ຄຳຮ້ອງຟ້ອງທາງອາຍາ** ຄຳຮ້ອງຟ້ອງທາງອາຍາແມ່ນໜັງສືຫຼືເອກະສານຂອງຜູ້ຖືກເສັຍຫາຍ ຫຼື ຜູ້ຖືກເຄາະຮ້າຍຈາກການກະທຳຜິດທາງອາຍາທີ່ໄດ້ຍື່ນໃຫ້ອົງການດຳເນີນ ຄະດີ ເພື່ອໃຫ້ດຳເນີນຄະດີຕໍ່ຜູ້ຖືກກ່າວຫາວ່າໄດ້ກະທຳຜິດຕາມກົດໝາຍ. ໜັງສື ຫຼື ເອກະສານດັ່ງກ່າວນີ້ອາດສະເໜີໂດຍຜູ້ຖືກເສັຍຫາຍ, ຜູ້ຖືກເຄາະຮ້າຍ, ຄອບຄົວ, ອົງການຈັດຕັ້ງ ຫຼືທະນາຍຄວາມກໍໄດ້.

**ຄຳໃຫ້ການ** ຄຳໃຫ້ການ ແມ່ນ ການໃຫ້ປາກຄຳ ຫຼື ການອະທິບາຍບັນຫາຕ່າງໆທີ່ກ່ຽວຂ້ອງຫຼືພົວພັນກັບການກະທຳຜິດໂດຍຜູ້ຖືກສອບສວນ.

**ຄວາມຜິດ** ຄວາມຜິດ ແມ່ນ ການກະທຳທີ່ເປັນການລະເມີດກົດໝາຍ ຊຶ່ງກໍ່ຄວາມເສັຍແກ່ບຸກຄົນອື່ນແລະ ເປັນອັນຕະລາຍຕໍ່ສັງຄົມ

**ຄຳສັ່ງຂອງສານ** ຄຳສັ່ງຂອງສານ ແມ່ນ ເອກະສານຕ່າງໆຂອງສານທີ່ມີຜົນບັງຄັບທາງກົດໝາຍຕໍ່ໃນເວລາພິຈາລະນາຄະດີຢູ່ສານ ດັ່ງຕົວຢ່າງ ຄຳສັ່ງສຳນວນຄະດີໃຫ້ໄອຍະການສອບສວນເພີ້ມເຕີມ, ຄຳສັ່ງໃຫ້ເລື່ອນການພິຈາລະນາຄະດີ ດັ່ງນີ້ເປັນຕົ້ນ.

**ຄຳຊີ້ຂາດຂອງສານ** ຄຳຊີ້ຂາດຂອງສານ ແມ່ນ ການວິນິດໃສຂອງຄະນະສານຕໍ່ຄະດີໃດໜຶ່ງທີ່ສານກຳລັງພິຈາລະນາຢູ່ ດັ່ງເຊັ່ນ ຄຳສັ່ງກ່ຽວກັບການຄັດຄ້ານຜູ້ພິພາກສາ, ຄຳສັ່ງບໍ່ອະນຸຍາດໃຫ້ເລື່ອນຄະດີ ແລະ ອື່ນໆ

**ຄວາມເປັນເອກະລາດຂອງຜູ້ພິພາກສາ** ຄວາມເປັນເອກະລາດຂອງຜູ້ພິພາກສາ ແມ່ນຫຼັກການໜຶ່ງຂອງການດຳເນີນຄະດີອາຍາ ທີ່ໄດ້ໃຫ້ສິດແກ່ຜູ້ພິພາກສາໃນເວລາພິຈາລະນາຕັດສິນຄະດີ ຜູ້ພິພາກສາ ຕ້ອງຢືນຢູ່ບົນຫຼັກແຫ່ງຄວາມຍຸຕິທຳ ແລະປະຕິບັດຕາມກົດໝາຍໂດຍບໍ່ມີການແຊກແຊງຈາກອິດທິພົນຂ້າງນອກ.

**ຄ້າຍຄຸມຂັງ ຫຼື ຄ້າຍດັດສ້າງ** ຄ້າຍຄຸມຂັງຫລືຄ້າຍດັດສ້າງແມ່ນສະຖານທີ່ຄຸມຂັງ ນັກໂທດ ຫຼື ຜູ້ກະທຳຜິດ. ຄຳສັບທີ່ມັກໃຊ້ກັນແລະເຂົ້າໃຈໂດຍທົ່ວໄປ ແມ່ນ ຄຸກ.

**ຄຳຕັດສິນ** ຄຳຕັດສິນຂອງສານ ແມ່ນ ຄຳຕົກລົງຂອງຄະນະສານຕໍ່ການພິຈາລະນາຄະດີໃດໜຶ່ງ ເປັນຂັ້ນຕົ້ນ.

**ຄຳພິພາກສາ** ຄຳພິພາກສາ ແມ່ນ ຄຳຕົກລົງຂອງຄະນະສານຕໍ່ການພິຈາລະນາຄະດີໃດໜຶ່ງ ເປັນອຸທອນ ຫຼື ຂັ້ນລົບລ້າງ. ຄຳພິພາກສາມີຜົນສັກສິດໃຊ້ໄດ້ຢ່າງເດັດຂາດນັບແຕ່ມື້ທີ່ສານໄດ້ລົງຄຳຕັດສິນເປັນຕົ້ນໄປ.

**ຄຳສັ່ງປ່ອຍຕົວ** ຄຳສັ່ງປ່ອຍຕົວ ແມ່ນ ຄຳສັ່ງທີ່ອອກໂດຍໄອຍະການ ຫຼື ສານປະຊາຊົນເພື່ອໃຫ້ປ່ອຍຕົວນັກໂທດທີ່ໄດ້ປະຕິບັດໂທດຄົບຕາມກຳນົດໂທດແລ້ວ, ປ່ອຍໃນກໍລະນີທີ່ມີການຊັດມ້ຽນຄະດີ, ປ່ອຍໃນກໍລະນີບໍ່ເປັນການກະທຳຜິດທາງອາຍາ ຫຼື ປ່ອຍໃນກໍລະນີຕັດສິນໃຫ້ພົ້ນຂໍ້ກ່າວຫາ.

**ຄຳສັ່ງປ່ອຍຕົວພາງ** ການປ່ອຍຕົວພາງແມ່ນການປ່ອຍຕົວຊົ່ວຄາວກ່ອນທີ່ຄຳຕັດສິນຂອງສານຈະໃຊ້ໄດ້ຢ່າງ ເດັດຂາດ ພາຍຫຼັງທີ່ ການສືບສວນ-ສອບສວນໄດ້ສຳເລັດແລ້ວເພື່ອຕໍ່ສູ້ຄະດີຢູ່ຂ້າງນອກ.[10]

**ຄະຣຸໂທດ** ຄະຣຸໂທດ ແມ່ນ ການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບແຕ່ ຫ້າປີຂຶ້ນໄປ ຫາຕະຫລອດຊີວິດ ພ້ອມທັງໂທດປັບໄໝ ແລະ ໂທດປະຫານຊີວິດ

**ຄວາມຮັບຜິດຊອບທາງອາຍາ** ຄວາມຮັບຜິດຊອບທາງອາຍາແມ່ນພັນທະຕໍ່ໜ້າກົດໝາຍຂອງຜູ້ກະທຳຜິດ ດ້ວຍການຖືກປະຕິບັດມາດຕະການຕ່າງໆຂອງສານ: ການລົງໂທດ, ການປັບໄໝ ຫຼືຮູບການອື່ນໆ.

**ຄ່າທຳນຽມສານທາງອາຍາ** ຄ່າທຳນຽມສານທາງອາຍາແມ່ນເງິນວາງສານເພື່ອເປັນຄ່າ ໃຊ້ຈ່າຍໃນການດຳເນີນຄະດີທາງອາຍາ

**ຄວາມພະຍາຍາມກໍ່ການກະທຳຜິດ** ຄວາມພະຍາຍາມກໍ່ການກະທຳຜິດ ແມ່ນການລົງມືກະທຳຜິດ ສ່ວນໃດສ່ວນໜຶ່ງໂດຍເຈດຕະນາ ແຕ່ຍ້ອນມີສາເຫດນອກຕົວ ມາຂັດຂວາງຊຶ່ງພາໃຫ້ການກະທຳດັ່ງກ່າວນັ້ນບໍ່ສຳເລັດຜົນ.

**ເຈດຕະນາ** ເຈດຕະນາ ແມ່ນ ການກະທຳຫຼືການເມີນເສີຍຊຶ່ງ ຜູ້ກະທຳຜິດຮູ້ວ່າການ ກະທຳ ຫຼື ການເມີນເສີຍຂອງຕົນນັ້ນເປັນອັນຕະລາຍຕໍ່ສັງຄົມ ແລະ ກໍຄາດຄະເນໄດ້ເຖິງຜົນສະທ້ອນຂອງການກະທຳຫຼື ການເມີນເສີຍດັ່ງກ່າວແຕ່ຈິງໃຈເຮັດຫຼືປະປ່ອຍໃຫ້ມັນເກີດຂຶ້ນ.

**ໂຈດທາງແພ່ງ** ໂຈດທາງແພ່ງ ແມ່ນ ບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ ທີ່ໄດ້ຮັບ ຄວາມອັບປະໂຫຍດ ທາງ ດ້ານວັດຖຸ, ຈິດໃຈ ຫຼື ຮ່າງກາຍຈາກການກະທຳຜິດໂດຍກົງ ແລະ ທວງເອົາຄ່າເສັຍຫາຍ ທີ່ເກີດ ຂຶ້ນຈາກ ການກະທຳ ຜິດນັ້ນເຊັ່ນ: ພໍ່ແມ່ ຫຼື ຄອບຄົວຂອງຜູ້ຖືກເຄາະຮ້າຍໃນຄະດີຄາດຕະກຳ ຈາກຜູ້ກະທຳຜິດ ແລະ ອື່ນໆ. ສ່ວນໂຈດ (ທາງອາຍາ)ນັ້ນ ແມ່ນຜູ້ທີ່ສັ່ງຟ້ອງຈຳເລີຍ ໃຫ້ສານຕັດສິນ ຊຶ່ງກໍແມ່ນໄອຍະການນັ້ນເອງ.

**ຈຳເລີຍ** ແມ່ນຜູ້ຖືກຫາທີ່ໄອຍະການໄດ້ສັ່ງຟ້ອງຂຶ້ນສານແລ້ວນັ້ນເອີ້ນວ່າ ຈຳເລີຍ. ສ່ວນຈຳເລີຍໃນຄະດີແພ່ງແມ່ນຜູ້ທີ່ຖືກຟ້ອງວ່າໄດ້ລະເມີດສິດທິຂອງອີກຝ່າຍໜຶ່ງ ຊຶ່ງ ເປັນຜູ້ຟ້ອງ ຫຼືໂຈດນັ້ນເອງ.

[10] ວັກທີ 1 ມາດຕາ 66 ກ.ດອ

**ເຈົ້າໜ້າທີ່ສືບສວນ-ສອບສວນ** ເຈົ້າໜ້າທີ່ສືບສວນ-ສອບສວນ ແມ່ນ ເຈົ້າໜ້າທີ່ ຫລື ພະນັກງານ ທີ່ມີໜ້າທີ່ໃນການດຳເນີນຄະດີ ຢູ່ຂັ້ນສືບສວນ-ສອບສວນ. ເຈົ້າໜ້າທີ່ສືບສວນ-ສອບສວນປະກອບດ້ວຍ: ເຈົ້າໜ້າທີ່ສືບສວນ-ສອບສວນຂອງຕຳຫລວດ, ເຈົ້າໜ້າທີ່ສືບສວນ-ສອບສວນຂອງທະຫານ, ເຈົ້າໜ້າທີ່ສືບສວນ-ສອບສວນ ຂອງພາສີ, ເຈົ້າໜ້າທີ່ສືບສວນ-ສອບສວນ ຂອງປ່າໄມ້ ແລະເຈົ້າໜ້າທີ່ສືບສວນ-ສອບສວນ ຂອງພາກສ່ວນອື່ນທີ່ກົດໝາຍກຳນົດໄວ້.

**ສານປະຊາຊົນ** ສານປະຊາຊົນ ແມ່ນ ອົງການພິພາກສາຂອງລັດ.[11] ຢູ່ໃນລະບົບ ການຈັດຕັ້ງສານປະຊາຊົນ ແຫ່ງ ສປປ ລາວ, ສານປະຊາຊົນສູງສຸດ ມີໜ້າທີ່ຄຸ້ມຄອງ ດ້ານບໍລິຫານຕໍ່ ສານປະຊາຊົນທຸກຂັ້ນ, ສານທະຫານແລະກວດກາຄຳຕັດສິນຂອງສານດັ່ງກ່າວ[12]

**ສານອາຍາ** ສານອາຍາ ແມ່ນ ສານທີ່ພິຈາລະນາ ແລະ ຕັດສິນຄະດີອາຍາ. ສານອາຍາ ຍັງໝາຍເຖິງ ສຳນັກງານພິພາກສາ ແລະ ດຳເນີນການທາງອາຍາ.

**ສຳນວນຄະດີອາຍາ** ສຳນວນຄະດີອາຍາ ແມ່ນ ເອກະສານຕ່າງໆທີ່ປະກອບ ເຂົ້າກັນ ໃນການດຳເນີນຄະດີ

**ສະຕິຊຳປະຊັນຍະ** ສະຕິຊຳປະຊັນຍະໝາຍເຖິງຄວາມສາມາດທາງດ້ານການຄວບຄຸມການປະພຶດຂອງບຸກຄົນໃດໜຶ່ງ ໂດຍບັນຊາພຶດຕິກຳຫຼືການກະທຳຂອງຕົນໄດ້.

**ນັກໂທດ** ນັກໂທດແມ່ນຈຳເລີຍທີ່ໄດ້ຖືກສານຕັດສິນລົງໂທດໃສ່ຜູ້ກ່ຽວແລ້ວ. ໃນກໍລະນີ ທີ່ ສານໄດ້ຕັດສິນໃຫ້ພົ້ນຂໍ້ກ່າວຫານັ້ນ, ຈຳເລີຍກໍຈະກາຍມາເປັນຜູ້ບໍລິສຸດ.

**ບໍ່ເຂັດຫຼາບ** ການກະທຳທີ່ບໍ່ເຂັດຫຼາບແມ່ນການກະທຳຜິດຂອງຜູ້ຖືກຕັດສິນລົງໂທດຕັດອິດສະລະພາບດ້ວຍການກະທຳຜິດໂດຍເຈດຕະນາຊຶ່ງໄດ້ກະທຳຜິດໃໝ່ໂດຍເຈດຕະນາອີກໃນເວລາປະຕິບັດໂທດຢູ່ນັ້ນຫຼືໄດ້ກະທຳຜິດໃໝ່ໂດຍເຈດຕະນາໃນສະຖານດຽວກັນ ຫຼື ຄ້າຍຄືກັນພາຍໃນກຳນົດຫ້າປີພາຍຫຼັງທີ່ໄດ້ປະຕິບັດໂທດແລ້ວ.

**ບໍ່ລະມັດລະວັງ** ການກະທຳຜິດດ້ວຍຄວາມບໍ່ລະມັດລະວັງແມ່ນການກະທຳ ຫຼື ການເມີນເສີຍຊຶ່ງຜູ້ກະທຳຜິດຄາດຄະເນໄດ້ວ່າການກະທຳຫຼືການເມີນເສີຍຂອງຕົນນັ້ນອາດມີຜົນສະທ້ອນທີ່ເປັນອັນຕະລາຍຕໍ່ສັງຄົມແຕ່ຖືເບົາແລະເຊື່ອວ່າມັນຈະບໍ່ເກີດຂຶ້ນຫຼືບໍ່ຄາດຄະເນໄດ້ວ່າຜົນສະທ້ອນດັ່ງກ່າວຈະເກີດຂຶ້ນທັງໆທີ່ວ່າຕົນຕ້ອງຄາດຄະເນແລະສາມາດຄາດຄະເນໄດ້.

**ບຸກຄະລິກກະພາບ** ບຸກຄະລິກກະພາບແມ່ນລັກສະນະທ່າທາງ,ການປະພຶດແລະຈຸດພິເສດຂອງຄົນທີ່ອາດຈະ

---

[11] ມາດຕາ 80 ລັດຖະທຳມະນູນແຫ່ງ ສປປ ລາວ

[12] ມາດຕາ 80 ລັດຖະທຳມະນູນແຫ່ງ ສ ປປ ລາວ, ວັກທີ 2

ສິ່ງຜົນສະທ້ອນຕໍ່ການກະທຳຜິດ

**ປະທຸດສະຮ້າຍ(ຮ່າງກາຍ)** ປະທຸດສະຮ້າຍ ໝາຍເຖິງການກະທຳ ທີ່ພາໃຫ້ເກີດຄວາມເຈັບປວດ, ການທຳລະມານຮ່າງກາຍມະນຸດ, ຫລື ອາດພາໃຫ້ ເສັຍອົງຄະ ຫລື ເສັຍຊີວິດ.

**ໂທດຕົ້ນຕໍ** ໂທດຕົ້ນຕໍແມ່ນໂທດທີ່ສານຕ້ອງວາງອອກໃຫ້ຜູ້ກະທຳຜິດໃນທຸກຄັ້ງຂອງການພິຈາລະນາຕັດສິນຄະດີອາຍາຖ້າເຫັນວ່າຜູ້ກ່ຽວມີຄວາມຜິດ ແລະຕ້ອງໄດ້ຮັບຜິດຊອບທາງອາຍາຕໍ່ການກະທຳຜິດນັ້ນ. ໂທດຕົ້ນຕໍປະກອບດ້ວຍ ປະເພດຕ່າງໆຄື: ໂທດປະຫານຊີວິດ, ໂທດຕັດອິດສະລະພາບ, ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ, ທດຕຳໜິວິຈານຕໍ່ໜ້າມະຫາຊົນ ແລະ ໂທດປັບໄໝ.

**ໂທດເພີ້ມ** ໂທດເພີ້ມແມ່ນໂທດທີ່ສານອາດຈະວາງອອກໃສ່ຜູ້ກະທຳຜິດນັ້ນເພີ້ມເຕີມໂທດຕົ້ນຕໍທີ່ສານໄດ້ຕັດສິນໃສ່ການກະທຳດັ່ງກ່າວແລ້ວ ໃນກໍລະນີທີ່ກົດໝາຍອາຍາ ໄດ້ລະບຸເອົາໄວ້. ໂທດເພີ້ມເປັນສິດສະເພາະຕາມດຸນພິນິດຂອງສານ. ໂທດເພີ້ມປະກອບດ້ວຍ ປະເພດຕ່າງໆດັ່ງນີ້: ໂທດຣິບຊັບແລະວັດຖຸສິ່ງຂອງ, ໂທດປົດສິດເລືອກຕັ້ງແລະຮັບສະໝັກເລືອກຕັ້ງ ແລະໂທດຈຳກັດທີ່ຢູ່ ດັ່ງນີ້ເປັນຕົ້ນ.

**ໂທດຕຳໜິວິຈານຕໍ່ໜ້າມະຫາຊົນ** ໂທດຕຳນິວິຈານຕໍ່ໜ້າມະຫາຊົນ ແມ່ນ ການຕຳນິວິຈານຜູ້ກະທຳຜິດໃນທີ່ປະຊຸມສານ. ໃນກໍລະນີຈຳເປັນກໍອາດຈະເອົາຄຳຕັດສິນຂອງສານ ລົງໃນໜ້າໜັງສືພິມ ຫລື ດ້ວຍວິທີການອື່ນໆກໍໄດ້.

**ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ** ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ແມ່ນ ໂທດທີ່ຈະລົງໃສ່ຜູ້ກະທຳຜິດ ດ້ວຍການປະໃຫ້ຜູ້ກ່ຽວສືບຕໍ່ອອກແຮງງານຢູ່ບ່ອນເຮັດວຽກເດີມ ຫລື ຢູ່ບ່ອນອື່ນ ໂດຍຫັກເອົາເງິນແຕ່ ຫ້າ ຫາ ຊາວສ່ວນຮ້ອຍ ຂອງເງິນຄ່າແຮງງານທັງໝົດຂອງຜູ້ກະທຳຜິດເຂົ້າເປັນລາຍໄດ້ຂອງລັດ ຕາມຄຳຕັດສິນຂອງສານ. ໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ແມ່ນ ບໍ່ໃຫ້ເກີນໜຶ່ງປີ.

**ໂທດຕັດອິດສະລະພາບ** ໂທດຕັດອິດສະລະພາບ ແມ່ນ ໂທດທີ່ມີກຳນົດແຕ່ສາມເດືອນ ຫາຊາວປີ ຫລື ຕະຫລອດຊີວິດ.ສ່ວນໂທດຕັດອິດສະລະພາບຕະຫລອດຊີວິດກົດໝາຍຫ້າມບໍ່ໃຫ້ລົງໃສ່ຜູ້ກະທຳຜິດທີ່ມີອາຍຸຕ່ຳກ່ວາສິບແປດປີ ແລະ ຜູ້ຍິງທີ່ຖືພາ ໃນເວລາກະທຳຜິດ.

**ໂທດປະຫານຊີວິດ** ໂທດປະຫານຊີວິດ ແມ່ນ ມາດຕະການພິເສດຂອງການລົງໂທດ ທີ່ຈະລົງໃສ່ຜູ້ກະທຳຜິດໃນສະຖານໜັກເປັນພິເສດ ຊຶ່ງໄດ້ບົ່ງໄວ້ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້. ການປະຫານຊີວິດແມ່ນປະຕິບັດດ້ວຍການຍິງເປົ້າ. ກົດໝາຍຫ້າມບໍ່ໃຫ້ລົງໂທດປະຫານຊີວິດໃສ່ຜູ້ກະທຳຜິດທີ່ມີອາຍຸຕ່ຳກ່ວາສິບແປດປີ ໃນເວລາກະທຳຜິດ ແລະ ຜູ້ຍິງທີ່ຖືພາໃນເວລາກະທຳຜິດ ຫລື ໃນເວລາຕັດສິນ ຫລື ໃນເວລາປະຕິບັດໂທດ

**ໂທດປັບໄໝ** ໂທດປັບໃໝ ແມ່ນ ໂທດທາງດ້ານການເງິນຊຶ່ງແມ່ນສານເປັນຜູ້ວາງຕາມກໍລະນີ ແລະ ຂອບເຂດທີ່ກົດໝາຍໄດ້ກຳນົດໄວ້. ຈຳນວນເງິນທີ່ຈະປັບໃໝນັ້ນ ຕ້ອງກຳນົດຕາມຄວາມຮ້າຍແຮງຂອງການກະທຳຜິດໂດຍອີງໃສ່ສະພາບເສດຖະກິດຂອງຜູ້ກະທຳຜິດ. ໃນກໍລະນີທີ່ຜູ້ກ່ຽວຫາກບໍ່ສາມາດຈະເສັຽຄ່າປັບໃໝໄດ້ໃນເວລານັ້ນສານກໍສາມາດປ່ຽນໂທດປັບໃໝມາເປັນໂທດດັດສ້າງໂດຍບໍ່ຕັດອິດສະລະພາບ. ຫ້າມເອົາໂທດປັບໃໝປ່ຽນມາເປັນໂທດຕັດອິດສະລະພາບ ແລະ ຫ້າມເອົາໂທດຕັດອິດສະລະພາບປ່ຽນມາເປັນໂທດປັບໃໝ.

**ໂທດຮິບວັດຖຸສິ່ງຂອງ** ໂທດຮິບວັດຖຸສິ່ງຂອງ ແມ່ນ ການຮິບວັດຖຸສິ່ງຂອງທີ່ໃຊ້ໃນການກະທຳຜິດ ຫລື ສຳລັບໃຊ້ໃນການກະທຳຜິດ ຫລື ໄດ້ມາຈາກການກະທຳຜິດໂດຍເຈດຕະນາມາເປັນຂອງລັດ. ວັດຖຸສິ່ງຂອງຂອງບຸກຄົນອື່ນ ທີ່ຮັບໃຊ້ໃນການກະທຳຜິດນັ້ນ ຈະຖືກຮິບເປັນຂອງລັດໄດ້ກໍຕໍ່ເມື່ອເຈົ້າຂອງຜູ້ທີ່ໃຫ້ຢືມຫາກບໍ່ມີຄວາມບໍລິສຸດໃຈ ຫລື ໃນເມື່ອເຫັນວ່າການຮິບວັດຖຸສິ່ງຂອງນັ້ນ ມີຄວາມຈຳເປັນ ເພື່ອປົກປັກຮັກສາສັງຄົມ.

**ໂທດ** ໂທດແມ່ນມາດຕະການບັງຄັບຂອງລັດທີ່ລະບຸໃວ້ໃນກົດໝາຍອາຍາໂດຍແມ່ນສານຈະເປັນຜູ້ຕັດສິນໃສ່ຜູ້ກະທຳຜິດ.

**ໂທດຮິບຊັບ** ໂທດຮິບຊັບ ແມ່ນ ການເອົາຊັບທັງໝົດ ຫລື ສ່ວນໃດສ່ວນໜຶ່ງທີ່ເປັນກຳມະສິດຂອງຜູ້ກະທຳຜິດມາເປັນຂອງລັດໂດຍບໍ່ມີການໃຊ້ແທນ. ໂທດຮິບຊັບຈະລົງ ໃສ່ໄດ້ແຕ່ການກະທຳຜິດ ທີ່ເປັນອັນຕະລາຍຮ້າຍແຮງ ຊຶ່ງໄດ້ກຳນົດໄວ້ຢູ່ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້ເທົ່ານັ້ນ.

**ໂທດປົດສິດເລືອກຕັ້ງ ແລະ ຮັບສະໝັກເລືອກຕັ້ງ** ໂທດປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ແມ່ນ ການຕັດສິດ ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງຂອງຜູ້ກະທຳຜິດໃນຖານຄະຣຸໂທດ. ໂທດປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ແມ່ນບໍ່ໃຫ້ເກີນ ຫ້າປີ ນັບແຕ່ມື້ໄດ້ປະຕິບັດໂທດສິ້ນສຸດແລ້ວ ເປັນຕົ້ນໄປ.

**ໂທດຈຳກັດທີ່ຢູ່** ໂທດຈຳກັດທີ່ຢູ່ ແມ່ນ ການຫ້າມຜູ້ຖືກຕັດສິນອອກຈາກສະຖານທີ່ແຫ່ງໃດແຫ່ງໜຶ່ງ ຫລື ຫ້າມເຂົ້າໄປຢູ່ສະຖານທີ່ແຫ່ງໃດແຫ່ງໜຶ່ງຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນຂອງສານ.ໂທດຈຳກັດທີ່ຢູ່ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນ ແມ່ນບໍ່ໃຫ້ເກີນ ຫ້າປີ ນັບແຕ່ມື້ປະຕິບັດໂທດສິ້ນສຸດແລ້ວເປັນຕົ້ນໄປ. ຫ້າມລົງໂທດຈຳກັດທີ່ຢູ່ໃສ່ຜູ້ກະທຳຜິດທີ່ມີອາຍຸຕ່ຳກ່ວາສິບແປດປີ ແລະ ຜູ້ຍິງທີ່ຖືພາ ຫລື ຜູ້ຍິງທີ່ມີລູກຊຶ່ງອາຍຸບໍ່ທັນເຖິງແປດປີໃນເວລາກະທຳຜິດ.

**ໂທສານຸໂທດ** ໂທສານຸໂທດແມ່ນການກະທຳຜິດທີ່ກົດໝາຍ ໄດ້ກຳນົດໂທດດັດສ້າງ ໂດຍບໍ່ຕັດອິດສະລະ ພາບ ຫລື ໂທດຕັດອິດສະລະພາບແຕ່ ສາມເດືອນຫາສິບປີ ແລະ ໂທດປັບໄໝ

**ຜູ້ຖືກເສັຍຫາຍ-ຜູ້ຖືກເຄາະຮ້າຍ** ຜູ້ຖືກເສັຍຫາຍຫລືຜູ້ຖືກເຄາະຮ້າຍແມ່ນຜູ້ທີ່ໄດ້ຮັບຄວາມອັບປະໂຫຍດທາງດ້ານສຸຂະພາບ ຫຼື ຊີວິດ, ວັດຖຸ ຫຼື ຈິດໃຈ ຍ້ອນການກະທຳຜິດ ກົດໝາຍອາຍາຂອງບຸກຄົນອື່ນ.

**ຜູ້ກະທຳຜິດ** ຜູ້ກະທຳຜິດແມ່ນບຸກຄົນຜູ້ໃດຜູ້ໜຶ່ງທີ່ມີການກະທຳ ຫຼື ການເມີນເສີຍ(ບໍ່ກະທຳ) ຊຶ່ງເປັນອັນ ຕະລາຍຕໍ່ສັງຄົມ ແລະ ມີອົງປະກອບເປັນການກະທຳຜິດຕາມທີ່ກົດໝາຍໄດ້ກຳນົດໄວ້.

**ຜູ້ຖືກສົງໃສ** ຜູ້ຖືກສົງໃສແມ່ນບຸກຄົນທີ່ສົງໄສວ່າເປັນຜູ້ກະທຳຜິດທາງອາຍາ ແຕ່ອົງການສືບສວນ-ສອບສວນຫຼືໄອຍະການປະຊາຊົນຍັງບໍ່ສາມາດອອກຄຳສັ່ງເປີດການສືບສວນ-ສອບສວນຕໍ່ພຶດຕິກຳຂອງຜູ້ກ່ຽວເທື່ອ.

**ຜູ້ຖືກຫາ** ແມ່ນຜູ້ທີ່ໄດ້ນຳມາດຳເນີນຄະດີໂດຍມີຄຳສັ່ງເປີດການສືບສວນ-ສອບສວນຂອງເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ໄອຍະການປະຊາຊົນແລ້ວ.

**ຜູ້ຮັບຜິດຊອບທາງແພ່ງ** ຜູ້ຮັບຜິດຊອບທາງແພ່ງແມ່ນບຸກຄົນ ຫຼື ການຈັດຕັ້ງທີ່ມີພັນທະໃຊ້ແທນຄ່າເສັຍຫາຍທາງແພ່ງທີ່ເນື່ອງມາຈາກການກະທຳຜິດຂອງຜູ້ຖືກຫາ ຫຼື ຈຳເລີຍທີ່ຢູ່ໃນຄວາມ ຮັບຜິດຊອບ ຂອງຕົນ.

**ຜູ້ແປພາສາ** ຕາມຫຼັກການແລ້ວ, ພາສາລາວເປັນພາສາທີ່ໃຊ້ໃນການດຳເນີນຄະດີຢູ່ ສປປ ລາວ.ດ້ວຍ ເຫດນີ້ຜູ້ແປພາສາ ຈຶ່ງຮຽກຮ້ອງໃຫ້ເຂົ້າຮ່ວມໃນການດຳເນີນຄະດີ ໃນເມື່ອຜູ້ເຂົ້າຮ່ວມໃນຄະດີຜູ້ ໃດຜູ້ໜຶ່ງບໍ່ສາມາດເວົ້າ ແລະ ເຂົ້າໃຈພາສາລາວທີ່ໃຊ້ໃນເວລາດຳເນີນຄະດີ. ຜູ້ແປພາສາແມ່ນ ບຸກຄົນທີ່ມີຄວາມຮູ້, ຄວາມສາມາດ ຫຼືປະສົບການໃນການ ແປພາສາໃດໜຶ່ງ ຂອງຜູ້ເຂົ້າຮ່ວມໃນ ການດຳເນີນຄະດີຊຶ່ງຕ້ອງມີຄວາມຮັບຜິດຊອບຕໍ່ການ ແປຂອງຕົນແລະຍັງມີພັນທະ ໃນການຮັກສາຄວາມລັບໃນຄະດີ

**ຜູ້ປົກປ້ອງ** ຜູ້ປົກປ້ອງ ແມ່ນ ບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອປົກປ້ອງສິດ ແລະ ຜົນປະ ໂຫຍດອັນຊອບທຳຂອງບຸກຄົນອື່ນທີ່ເຂົ້າຮ່ວມ ໃນການດຳເນີນຄະດີ ອາຍາເຊັ່ນ: ຜູ້ຖືກຫາ, ຈຳເລີຍຜູ້ຖືກເສັຍຫາຍ,ໂຈດທາງແພ່ງຫຼືຜູ້ຮັບຜິດຊອບທາງແພ່ງດັ່ງນີ້ເປັນຕົ້ນ.ຜູ້ປົກປ້ອງອາດແມ່ນທະນາຍຄວາມ, ຜູ້ຕາງໜ້າອົງການຈັດຕັ້ງ, ຜົວຫຼືເມັຍ, ຜູ້ປົກຄອງຫຼືຍາດຕິພີ່ນ້ອງທີ່ໃກ້ຊິດ. ກົດໝາຍອະນຸຍາດໃຫ້ຜູ້ປົກປ້ອງມີສິດເຂົ້າຮ່ວມໃນການດຳເນີນຄະດີ ນັບແຕ່ມື້ອອກຄຳສັ່ງເປີດການສືບສວນ-ສອບສວນຂອງຫົວໜ້າອົງການ ສືບສວນ-ສອບສວນ ຫຼື ໄອຍະການປະຊາຊົນເປັນຕົ້ນໄປ.

**ຜູ້ພິພາກສາ** ຜູ້ພິພາກສາ ແມ່ນ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດໃຫ້ເປັນຜູ້ມີສິດ ພິຈາລະນາ ແລະຕັດສິນຄະດີຢູ່ສານ.

**ຜູ້ຊ່ຽວຊານ** ຜູ້ຊ່ຽວຊານແມ່ນບຸກຄົນທີ່ມີຄວາມຮູ້ ແລະ ປະສົບການທາງດ້ານ ວິຊາສະເພາະໃດໜຶ່ງທີ່ ຖືກຮັບຮູ້ຈາກສະຖາບັນທີ່ກ່ຽວຂ້ອງຊຶ່ງສາມາດ ໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາທີ່ພົວພັນກັບວິຊາ ສະເພາະຂອງຕົນ.[13]ຜູ້ຊ່ຽວຊານຈະພິສູດຫຼັກຖານ ໃດໜຶ່ງໄດ້ນັ້ນກໍ່ຕໍ່ເມື່ອ ໄດ້ຮັບການແຕ່ງຕັ້ງຢ່າງເປັນລາຍລັກອັກສອນຈາກເຈົ້າໜ້າ ທີ່ສືບສວນ-ສອບສວນ,ພະນັກງານສອບສວນ, ໄອຍະການປະຊາຊົນ ຫຼື ສານປະຊາຊົນເສັຍກ່ອນ

**ຜູ້ເຂົ້າຮ່ວມໃນການດຳເນີນຄະດີ** ຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາແມ່ນບຸກຄົນທີ່ມີສ່ວນພົວພັນ ໂດຍກົງກັບການກະທຳຜິດທາງອາຍາຫຼືບຸກຄົນ ທີ່ຊ່ວຍເຮັດໃຫ້ການດຳເນີນຄະດີອາຍາຂອງອົງການທີ່ຮັບຜິດຊອບໃນການດຳເນີນຄະດີກະຈ່າງແຈ້ງຂຶ້ນ ແລະ ເປັນປະໂຫຍດຕໍ່ຮູບຄະດີ.

**ພະຍານ** ພະຍານແມ່ນບຸກຄົນທີ່ໄດ້ຮູ້, ໄດ້ເຫັນເຫດການຂອງການກະທຳຜິດ ຫຼື ສະພາບຂອງ ຄະດີ.[14] ບາງທິດສະດີກໍໃຫ້ຄຳນິຍາມພະຍານບຸກຄົນ ຫຼື ຜູ້ທີ່ສາມາດເປັນພະຍານວ່າພະຍານບຸກຄົນຄືຜູ້ທີ່ຈະຕ້ອງເປີດເຜີຍເຖິງການຮັບຮູ້ຂອງຕົນກ່ຽວກັບຂໍ້ເທັດຈິງໂດຍການໃຫ້ຖ້ອຍຄຳ,ການຮັບຮູ້ນີ້ເປັນການຮັບຮູ້ໂດຍສຳຜັດຂອງຕົນຄືຈາກການໄດ້ເຫັນໄດ້ຟັງ,ໄດ້ກິ່ນໄດ້ລົດ (ຊາດ) ແລະໄດ້ຮູ້ສຶກ.

**ພົ້ນຂໍ້ກ່າວຫາ** ພົ້ນຂໍ້ກ່າວຫາ ແມ່ນ ການຕັດສິນ ວ່າບໍ່ມີຄວາມຜິດ ແລະ ຍົກເລີກຂໍ້ກ່າວຫາດັ່ງກ່າວ

**ພະນັກງານສອບສວນ** ພະນັກງານສອບສວນ ແມ່ນ ພະນັກງານຂອງອົງການໄອຍະການປະຊາຊົນ ທີ່ໄດ້ຖືກມອບມາຍໃຫ້ປະຕິບັດໜ້າທີ່ເປັນຜູ້ຊ່ວຍໄອຍະການໃນການກວດກາການປະຕິບັດກົດໝາຍ ແລະ ການສັ່ງຟ້ອງຜູ້ກະທຳຜິດຂຶ້ນສານຕັດສິນ.

**ພິພາກສາ** ພິພາກສາແມ່ນການພິຈາລະນາຄະດີຂອງສານຂັ້ນອຸທອນຫຼື ຂັ້ນລົບລ້າງ, ຊຶ່ງສານຂັ້ນດັ່ງກ່າວຈະລົງຄຳພິພາກສາໃນເວລາພິຈາລະນາຄະດີສິ້ນສຸດ.(ເບິ່ງ : ຄຳພິພາກສາ)

**ຢາເສບຕິດ** ຢາເສບຕິດ ແມ່ນ ວັດຖຸອອກລິດຕໍ່ຈິດປະສາດຕ່າງໆ ດັ່ງເຊັ່ນ: ເຮໂຣອິນ, ຝິ່ນ, ກັນຊາ ແລະອື່ນໆ. ການກະທຳທີ່ເປັນການເຄື່ອນໄຫວເພື່ອຄ້າຂາຍ ຫລືມີຢາເສບຕິດໃວ້ໃນຄອບຄອງ ມີໂທດຈຳຄຸກເຖິງປະຫານຊີວິດຕາມກົດໝາຍອາຍາຂອງ ສ ປປ ລາວ

**ມາດຕະການຂອງສານຕໍ່ເດັກ** ມາດຕະການຂອງສານຕໍ່ເດັກ ແມ່ນ ວິທີການ ຫລື ການດຳເນີນການທາງບໍລິຫານຕໍ່ເດັກ ໃນເມື່ອເດັກກະທຳຜິດກົດໝາຍຊຶ່ງສານ ອາດນຳໃຊ້ວິທີການໃດໜຶ່ງດັ່ງນີ້ : ປະກາດການກະທຳຜິດ, ຂໍອະໄພນຳຜູ້ຖືກເສັຍຫາຍດ້ວຍວິທີການອັນເມາະສົມ, ສົ່ງໃຫ້ອົງການຈັດຕັ້ງສັງຄົມສຶກສາອົບຮົມ, ສົ່ງໃຫ້ຜູ້ປົກຄອງສຶກສາອົບຮົມ ດັ່ງນີ້ເປັນຕົ້ນ.

---

[13] ມາດຕາ 33 ກ.ດອ

[14] ມາດຕາ 32 ກ.ດອ

**ມາດຕະການກ່ຽວກັບການປິ່ນປົວ** ມາດຕະການກ່ຽວກັບການປິ່ນປົວ ໝາຍເຖິງ ວິທີການດຳເນີນຄະດີ ຂອງສານດ້ວຍການນຳສົ່ງຜູ້ກະທຳຜິດໄປປິ່ນປົວ ແທນທີ່ຈະດຳເນີນຄະດີ ຫລື ໃຫ້ປະຕິບັດໂທດຕາມຄຳຕັດສິນຂອງສານ ເນື່ອງຈາກຜູ້ກະທຳຜິດ ມີອາການເຈັບປ່ວຍໜັກ, ຕິດຢາເສບຕິດ ຫລື ມີອາການເປັນບ້າເສັຍຈິດ.

**ມາດຕະການສືບສວນ-ສອບສວນ** ມາດຕະການສືບສວນ-ສອບສວນ ແມ່ນ ວິທີການ ດຳເນີນຄະດີຂອງເຈົ້າໜ້າທີ່ ດ້ວຍການເອົາຄຳໃຫ້ການ, ການສອບຖາມຊ້ອງໜ້າ, ການຊັນນະສູດສະຖານທີ່ເກີດເຫດ, ການຊັນນະສູດຊາກສົບ, ການກວດຄົ້ນເຄຫະສະຖານ, ຍານພາຫະນະ ຫລື ຕົວບຸກຄົນ, ການຍຶດ ຫລື ອາຍັດຊັບ, ການທົດສອບຂໍ້ມູຄືນໃໝ່, ການຊີ້ຕົວ ແລະ ການຢັ້ງຢືນ ຜູ້ກະທຳຜິດ ຊຶ່ງ ວິທີການຕ່າງໆເຫຼົ່ານີ້ ຈະຊ່ວຍໃຫ້ເຈົ້າໜ້າທີ່ຄົ້ນພົບຂໍ້ມູນຫຼັກຖານທີ່ເປັນປະໂຫຍດໃນການດຳເນີນຄະດີອາຍາ

**ມາດຕະການສະກັດກັ້ນ** ມາດຕະການສະກັດກັ້ນ ແມ່ນ ການເຄື່ອນໄຫວດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ- ສອບສວນ, ພະນັກງານສອບສວນ ຫຼື ໄອຍະການປະຊາຊົນດ້ວຍ ວິທີການສະກັດກັ້ນຕ່າງໆທີ່ກຳ ນົດໄວ້ໃນກົດໝາຍເພື່ອຮັບປະກັນບໍ່ໃຫ້ຜູ້ຖືກສົງໄສ, ຜູ້ຖືກຫາຫລືຈຳເລີຍເຕັ້ນໂຕນໂຍນໜີ, ກະ ທຳຜິດໃໝ່ຕື່ມ,ທຳລາຍຫຼັກຖານ ແລະອື່ນໆພ້ອມທັງຮັບປະກັນການດຳເນີນຄະດີອາຍາໃຫ້ເປັນ ໄປຕາມຂັ້ນຕອນຂອງກົດໝາຍ ແລະ ຖືກຕ້ອງເປັນທຳ, ສອດຄ່ອງກັບສະພາບຂອງການກະທຳ ຜິດ ແລະ ບຸກຄະລິກ ກະພາບຂອງຜູ້ກະທຳຜິດ.

**ທະນາຍຄວາມ** ທະນາຍຄວາມຄືຜູ້ທີ່ໃຫ້ຄຳປຶກສາທາງດ້ານກົດໝາຍ, ປົກປ້ອງສິດແລະຜົນປະໂຫຍດອັນ ຊອບທຳຂອງລູກຄວາມໃນຄະດີແພ່ງ,ອາຍາ,ເສດຖະກິດ ແລະອື່ນໆ,ທະນາຍຄວາມຍັງມີໜ້າທີ່ຊ່ວຍໃຫ້ຄວາມກະຈ່າງແຈ້ງໃນການດຳເນີນຄະດີແລະເປັນທີ່ປຶກສາທາງດ້ານກົດໝາຍໃຫ້ແກ່ບຸກຄົນຫລືນິຕິບຸກຄົນໄດ້.

**ລະຫຸໂທດ** ລະຫຸໂທດ ແມ່ນການກະທຳຜິດທີ່ກົດໝາຍໄດ້ກຳນົດ ໂທດຕຳນິວິຈານຕໍ່ໜ້າມະຫາຊົນ ຫຼື ໂທດປັບໄໝ

**ຫຼາຍສະຖານ** ການກະທຳຜິດຫຼາຍສະຖານແມ່ນການກະທຳຜິດ ຂອງບຸກຄົນຜູ້ໃດຜູ້ໜຶ່ງແຕ່ສອງຢ່າງຂຶ້ນ ໄປ ດ້ວຍການກະທຳອັນດຽວ ຫຼື ດ້ວຍການກະທຳຫຼາຍອັນທີ່ຜິດຕໍ່ຫຼາຍມາດຕາຂອງກົດໝາຍອາຍາ ແລະ ຈະຖືກຕັດສິນພ້ອມໆກັນໃນສານດຽວກັນ

**ຫຼັກຖານ** ຫຼັກຖານໃນຄະດີອາຍາ ແມ່ນ ຂໍ້ມູນຕົວຈິງຊຶ່ງຊີ້ບອກວ່າມີ ຫຼືບໍ່ມີພຶດຕິກຳທີ່ເປັນອັນຕະລາຍ ຕໍ່ສັງຄົມ,ຄວາມຜິດຂອງບຸກຄົນທີ່ໄດ້ສ້າງພຶດຕິກຳ ນັ້ນແລະເຫດການອື່ນ ທີ່ເປັນປະໂຫຍດ ໃຫ້ແກ່ການພິຈາລະນາຄະດີໃຫ້ຖືກຕ້ອງ.

**ອົງການໄອຍະການ** ອົງການໄອຍະການປະຊາຊົນ ແມ່ນອົງການອຳນາດແຫ່ງລັດ, ມີພາລະບົດບາດຕິດ ຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບ ຂອງບັນດາກະຊວງ, ອົງ ການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະ ຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ແລະ ການປະຕິບັດສິດກ່າວ ຟ້ອງ.[15]

**ອົງການດຳເນີນຄະດີ** ອົງການດຳເນີນຄະດີອາຍາປະກອບດ້ວຍ:ອົງການສືບສວນ-ສອບສວນ, ໄອຍະການ ປະຊາຊົນ ແລະ ສານປະຊາຊົນ[16].ສາມພາກສ່ວນນີ້ມີ ການປະສານງານຊຶ່ງກັນແລະກັນ ໃນການ ດຳເນີນຄະດີຕາມພາລະບົດບາດສະເພາະຂອງຕົນຕາມກົດໝາຍ

**ອົງປະກອບຂອງການກະທຳຜິດທາງອາຍາ** ອົງປະກອບຂອງການກະທຳຜິດທາງອາຍາ ແມ່ນ ເຄື່ອງໝາຍທາງດ້ານພາວະວິໃສ ແລະ ອັດຕະວິໃສຂອງການກະທຳຜິດ ທາງອາຍາ .ອົງປະກອບ ຂອງການກະທຳຜິດທາງອາຍາປະກອບດ້ວຍ : ວັດຖຸກຳ, ດ້ານພາວະວິໄສ, ດ້ານອັດຕະວິໄສ ແລະ ເຈົ້າກຳ.

**ອາຍຸຄວາມໃນການຮ້ອງຟ້ອງ** ອາຍຸຄວາມໃນການຮ້ອງຟ້ອງແມ່ນກຳນົດເວລາ ທີ່ແນນອນ ໃດໜຶ່ງ ທີ່ກົດໝາຍອະນຸຍາດໃຫ້ດຳເນີນຄະດີທາງອາຍາ ໂດຍອີງຕາມສະຖານການກະທຳຜິດ ທີ່ກົດໝາຍອາຍາກຳນົດໃວ້, ດັ່ງເຊັ່ນ 3 ປີ ໃນສະຖານລາຫຸໂທດ, 7 ປີໃນສະຖານໂທສານຸໂທດ ແລະ 15 ປີສຳລັບການກະທຳຜິດໃນສະ ຖານ ຄະລຸໂທດ. ຖ້າກາຍກຳໜົດເວລາ ດັ່ງກາວ ແລ້ວຈະດຳເນີນຄະດີອາຍາບໍ່ໄດ້

**ຮອ່ງຮອຍຂອງການກະທຳຜິດ** ຮ່ອງຮອຍຂອງການກະທຳຜິດ ແມ່ນ ວັດຖຸ ຫລືພາບສະທ້ອນ ທີ່ ບົ່ງບອກເຖິງການກະທຳຜິດ. ຮ່ອງຮອຍຂອງການກະທຳຜິດອາດແມ່ນຮອຍຕີນ, ຮອຍມື ຮອຍຂູດ ຂີດ ຈາກວັດຖຸໃດໜຶ່ງ ທີ່ສ່ອງແສງໃຫ້ເຫັນການກະທຳທີ່ເປັນການລະເມີດກົດໝາຍ.

---

[15] ມາດຕາ 2 ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງ ສປປ ລາວ

[16] ມາດຕາ 22 ກ.ດອ

# ຄຳສັບກົດໝາຍໃນຂົງເຂດເສດຖະກິດ

**ໃບປະກັນໄພຊີວິດ** ແມ່ນ ເອກະສານຢັ້ງຢືນໃນການປະກັນຊີວິດ ຊຶ່ງຜູ້ຮັບປະກັນ ກຳນົດຂໍ້ສັນຍາ ແລະ ເງື່ອນໄຂ ເອົາໄວ້ໃນເອກະສານນັ້ນ.

**ການຂຸດຄົ້ນແຮ່ທາດດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບ**ແມ່ນການເຄື່ອນໄຫວຂຸດຄົ້ນແຮ່ທາດໂດຍໃຊ້ເຄື່ອງມືແບບປະຖົມປະຖານ ແລະ ຖືເອົາກິດຈະການນີ້ເປັນອາຊີບ. (ມາດຕາ 35 ຂອງກົດໝາຍວ່າດ້ວຍບໍ່ແຮ່)

**ການຜັງເມືອງ (ມຕ 2 ກມ ຜມ)** ແມ່ນການຈັດສັນ ແລະ ພັດທະນາຕົວເມືອງ ລວມທັງການວາງລະບຽບການ ແລະ ມາດຕະການທາງດ້ານບໍລິຫານ , ເຕັກນິກ , ເສດຖະກິດ - ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມໃຫ້ກົມກຽວກັນ, ສົມເຫດສົມຜົນ ແລະ ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມ ໃນແຕ່ລະໄລ
ຍະ. (ກມ ປຄ)

**ການຈະລາຈອນທາງບົກ** ມ່ນການສັນຈອນໄປ ມາຂອງຄົນ ຫລື ການນຳໃຊ້ຍານພາຫະນະຊະນິດຕ່າງໆ ຕາມເສັ້ນທາງຄົມມະນາຄົມຂົນສົ່ງທາງບົກຢູ່ພາຍໃນປະເທດ. (ມາດຕາ 2 ຂໍ້ 1 ກມ ຈໍລາຈອນທາງບົກ).

**ກົດລະບຽບການຈະລາຈອນ** ແມ່ນລະບຽບການລະອຽດທີ່ບັງຄັບໃຫ້ຜູ້ສັນຈອນໄປ - ມາຕາມເສັ້ນທາງປະຕິບັດຕາມຢ່າງເຂັ້ມງວດ.( ມາດຕາ 2 ຂໍ້ 2 ກມ ຈໍລາຈອນທາງບົກ).

**ການສຳຫລວດທໍລະນີສາດຂັ້ນພື້ນຖານ** ແມ່ນການຊອກຮູ້ ແລະ ເກັບກຳຂໍ້ມູນ ເບື້ອງຕົ້ນກ່ຽວກັບຈຸດທີ່ເປັນປະກົດການແຮ່ທາດ ແລະ ໂຄງສ້າງທໍລະນີ ເພື່ອສ້າງເປັນແຜນທີ່ທໍລະນີສາດພື້ນຖານ. (ມາດຕາ 8 ຂອງກົດໝາຍວ່າດ້ວຍບໍ່ແຮ່)

**ກະຊວງ** (ກມ ປຄ) ອົງການລັດຖະການ , ມີຫົວໜ້າເປັນລັດຖະມົນຕີວ່າການ ເຊັ່ນ:
ກະຊວງສຶກສາທິການ ແມ່ນອົງການລັດຖະການທີ່ບໍລິຫານການສຶກສາ, ການຮ່ຳຮຽນ.
ກະຊວງສາທາລະນະສຸກ ແມ່ນອົງການລັດຖະການທີ່ບໍລິຫານເລື່ອງຮ່າງກາຍ ແລະ ຈິດໃຈຂອງປະຊາຊົນໃຫ້ມີສຸຂະພາບ ແລະ ອະນາໄມດີ.

**ການຄ້າ** ແມ່ນກິດຈະການຊື້ຂາຍສິນຄ້າ ແລະ ການບໍລິການທີ່ກ່ຽ....

**ກົດໝາຍການຄ້າ** ແມ່ນບັນດາຂໍ້ກຳນົດທີ່ດັດປັບສາຍພົວພັນທາງທຸລະກິດ ລະຫວ່າງບຸກຄົນ, ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງສັງຄົມ ເຊັ່ນ: ການຊື້ຂາຍ, ການບໍລິການ ທີ່ຕິດພັນກັບຊື້ຂາຍ.

**ການໄລ່ລຽງລາຍຈ່າຍ** ແມ່ນການຄຳນວນຈຳນວນເງິນທີ່ຕ້ອງຈ່າຍໃຫ້ຖືກຕ້ອງກັບຈຳນວນເງິນທີ່ບົ່ງໄວ້ໃນສັນຍາ ຫລື ໃນໃບເກັບເງິນ ພາຍຫລັງທີ່ໄດ້ຮັບສິນຄ້າ ຫລື ໃຫ້ບໍລິການທັງໝົດ ຫລື ບາງສ່ວນ.

**ໃບປະກັນໄພ** ເອກະສານທີ່ມີລາຍເຊັນຂອງຜູ້ຮັບປະກັນໄພ ແລະ ມີລາຍການສະແດງວັດຖຸທີ່ເອົາປະກັນໄພ, ຈຳນວນເງິນເອົາປະກັນໄພ, ຊື່ຜູ້ເອົາປະກັນໄພ , ຊື່ຜູ້ຮັບປະກັນໄພ , ວັນທີສັນຍາເລີ່ມຕົ້ນ, ສິ້ນສຸດ ແລະ ອື່ນໆ ຕາມທີ່ກົດໝາຍບັນຍັດເອົາໄວ້ຕະຫລອດຈົນຮອດເງື່ອນໄຂກ່ຽວກັບປະໂຫຍດ , ສິດ ແລະ ໜ້າທີ່ຂອງຜູ້ເອົາປະກັນໄພ ແລະ ຜູ້ຮັບປະກັນໄພ.

**ກຳມະການ** ແມ່ນບຸກຄົນທີ່ໄດ້ຮັບການເລືອກຕັ້ງ ຫລື ໄດ້ຮັບແຕ່ງຕັ້ງຕາມບົດບັນຍັດຂອງກົດໝາຍ ເພື່ອກິດຈະການໃດໜຶ່ງທີ່ໄດ້ຮັບມອບໝາຍ.

**ເຄື່ອງໝາຍການຄ້າ** ແມ່ນສິດຂອງຜູ້ດຽວໃນການໃຊ້ເຄື່ອງໝາຍ ແລະ ຍີ່ຫໍ້ການຄ້າຂາຍ.

**ກຳໄລສຸດທ** ແມ່ນລາຍໄດ້ມາຈາກການຜິດດ່ຽງລະຫວ່າງລາຍຮັບ ແລະ ລາຍຈ່າຍ

**ການປະກັນໄພຕໍ່.**ແມ່ນການຊື້ສັນຍາປະກັນໄພປະເພດໜຶ່ງ ຊຶ່ງຜູ້ຮັບປະກັນໄພເອົາການສ່ຽງໄພທັງໝົດ ຫລື ບາງສ່ວນຂອງຄວາມຮັບຜິດຊອບຕາມສັນຍາປະກັນໄພທີ່ຕົນເຮັດໄວ້, ໄປເອົາປະກັນໄພໄວ້ກັບຜູ້ຮັບປະກັນໄພອີກຕໍ່ໜຶ່ງ ຫລື ຫລາຍຕໍ່.

**ການດຳເນີນການປະກັນໄພ** ແມ່ນສັນຍາຊຶ່ງຝ່າຍໜຶ່ງເອີ້ນວ່າ "ຜູ້ເຊັນເອົາການປະກັນໄພ" ມີຄວາມຍິນດີຈ່າຍຄ່າທຳນຽມປະກັນໄພ ເພື່ອຈຸດປະສົງຈະໄດ້ຮັບການທົດແທນຄ່າເສຍຫາຍສຳລັບຕົນເອງ ຫລື ບຸກຄົນທີ່ສາມໃນເມື່ອໄພທີ່ສ່ຽງນັ້ນຫາກໄດ້ເກີດຂຶ້ນ ແລະ ຝ່າຍໜຶ່ງເອີ້ນວ່າ "ຜູ້ປະກັນໄພ" ຊຶ່ງຮັບປະກັນການສ່ຽງໄພດ້ວຍການທົດແທນຄືນ. (ມາດຕາ2 ກມ ປພ)

**ໂຄຕາ** ແມ່ນການກຳນົດສ່ວນແບ່ງໃຫ້ໄວ້ຢ່າງແນ່ນອນ.

**ການຂົນສົ່ງທາງບົກ** ແມ່ນການຂົນສົ່ງສິນຄ້າ, ການຂົນສົ່ງຜູ້ໂດຍສານ, ການຂົນສົ່ງວັດຖຸເຄື່ອງຂອງ ຫລື ສັດຕາມຖະໜົນດ້ວຍຍານພາຫະນະກົນຈັກປະເພດຕ່າງໆ. (ມາດຕາ 2 ຂໍ້ 3 ກມ ຂສທບ).

**ການຂົນສົ່ງສະເພາະ** ແມ່ນການຂົນສົ່ງສິນຄ້າ , ວັດຖຸເຄື່ອງຂອງ , ສັດ ຫລື ຄົນ ເພື່ອຮັບໃຊ້ຢູ່ພາຍໃນຂອບເຂດວິສາຫະກິດ ຫລື ຂອງສະເພາະຕົນເອງ. ( ມາດຕາ 7 ວັກ 3 ).

**ການຂົນສົ່ງສ່ວນຕົວ** ແມ່ນການຂົນສົ່ງສິນຄ້າ , ວັດຖຸເຄື່ອງຂອງ , ຄົນ ຫລື ສັດ ເພື່ອຮັບໃຊ້ວຽກງານສ່ວນຕົວທີ່ບໍ່ແມ່ນການຮັບຈ້າງຂົນສົ່ງທົ່ວໄປ ຫລື ບໍ່ແມ່ນການຂົນສົ່ງສະເພາະ.( ມາດຕາ 7 ວັກ 4).

**ຂອບເຂດການຂົນສົ່ງ**

( ມາດຕາ 8 ກມ ຂສທບ).

**ການຍຶດສິນຄ້າ, ເຄື່ອງຂອງທາງພາສີ** (ເບິ່ງ ຍຶດຊັບ)

**ການອາຍັດສິນຄ້າ, ເຄື່ອງຂອງ**(ເບິ່ງ ອາຍັດຊັບ)

**ການຮິບສິນຄ້າ, ເຄື່ອງຂອງທາງພາສີ** (ເບິ່ງ ຮິບຊັບ)

**ການທຸ້ມຕະຫລາດ** ແມ່ນການຂາຍສິນຄ້າຫລຸດລາຄາຕົ້ນທຶນການຜະລິດເພື່ອຍາດຕະຫລາດທີ່ມີຜົນສະທ້ອນຕໍ່ການຜະລິດ ຫລື ການຈໍລະຈອນສິນຄ້າປະເພດດຽວກັນພາຍໃນປະເທດ

**ການໂພຊະນາການ** ແມ່ນການກິນອາຫານທີ່ມີທາດບຳລຸງ , ຫຼໍ່ລ້ຽງ , ມີປະໂຫຍດ ແລະ ມີຄວາມປອດໄພ ເພື່ອເຮັດໃຫ້ຮ່າງກາຍຈະເລີນເຕີບໂຕ , ມີຄວາມສົມບູນ ແລະ ມັນສະໝອງມີການພັດທະນາ. (ມາດຕາ 4 ວັກ 1 ຂອງກົດໝາຍວ່າດ້ວຍອາຫານ).

**ການໄປສະນີ** ແມ່ນການບໍລິການຮັບຝາກ, ການຈັດສົ່ງ , ການແຈກຢາຍໄປສະນີພັນ , ພັດສະດຸໄປສະນີ ໂດຍມີການຕິດສະແຕມ ແລະ ມີຕາປະທັບຂອງໄປສະນີ ,ການບໍລິການໄປສະນີ ກ່ຽວກັບການສົ່ງຂ່າວສານທາງໂທລະເລກ , ໂທລະສານ ແລະ ທາງເອເລັກໂຕຼນິກ , ການບໍລິການດ້ານການເງິນໄປສະນີ ,ການຂາຍສະແຕມໄປສະນີ ແລະ ຜະລິດຕະພັນໄປສະນີປະເພດຕ່າງໆ ໂດຍມີການຄິດໄລ່ເອົາຄ່າບໍລິການ ຕາມການຕົກລົງຂອງລັດຖະບານ. (ມາດຕາ 2 ຂອງກົດໝາຍວ່າດ້ວຍການໄປສະນີ ).

**ການລົງທຶນ ແມ່ນການນຳເອົາທຶນຮອນທີ່ເປັນຊັບສິນ ເພື່ອນຳໃຊ້ໃນການດຳເນີນກິດຈະການໃດໜຶ່ງ ໂດຍຫວັງຜົນກຳໄລ.**

***ການລົງທຶນພາຍໃນ*** ແມ່ນການນຳເອົາທຶນຮອນ ເຊັ່ນ : ຊັບສິນ , ເຕັກໂນໂລຊີ ແລະ ບົດຮຽນເຂົ້າໃນການຜະລິດ, ທຸລະກິດຢູ່ພາຍໃນປະເທດໂດຍພົນລະເມືອງລາວ , ຄົນຕ່າງດ້າວ , ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດຢູ່ ສ ປ ປ ລາວ ລວມທັງຄົນລາວທີ່ອາໄສຢູ່ຕ່າງປະເທດ. (ມາດຕາ 2 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ).

***ການລົງທຶນຕ່າງປະເທດ*** ແມ່ນການນຳເອົາທຶນຮອນ ຊຶ່ງປະກອບດ້ວຍຊັບສິນ, ເຕັກໂນໂລຢີ ແລະ ບົດຮຽນເຂົ້າມາ ສ ປປ ລາວ ໂດຍຜູ້ລົງທຶນຕ່າງປະເທດ (ມາດຕາ 2 ວັກ 1 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ)

**ກິດຈະການໄຟຟ້າ** ແມ່ນການເຄື່ອນໄຫວກ່ຽວກັບການສຳຫຼວດ , ເກັບກຳຂໍ້ມູນ , ການອອກແບບ , ການກໍ່ສ້າງຕິດຕັ້ງ , ການຜະລິດ , ການສົ່ງ , ການຈຳໜ່າຍ , ການສົ່ງອອກ , ການນຳເຂົ້າ , ການພັດທະນາ ແລະ ການບໍລິການອື່ນໆ ກ່ຽວກັບໄຟຟ້າ (ມາດຕາ 8 ຂອງກົດໝາຍວ່າດ້ວຍໄຟຟ້າ)

**ການກວດກາວິສາຫະກິດໄຟຟ້າ** ແມ່ນກວດກາການດຳເນີນວິສາຫະກິດໄຟຟ້າ ເພື່ອເຮັດໃຫ້ວິສາຫະກິດໄຟຟ້າມີປະສິດທິຜົນ, ຮັບປະກັນດ້ານເຕັກນິກ , ປົກປັກຮັກສາສິ່ງແວດລ້ອມ ແລະ ຮັບປະກັນໃຫ້ວິສາຫະກິດໄຟຟ້າດຳເນີນໄປຖືກຕ້ອງຕາມລະບຽບກົດໝາຍ. (ມາດຕາ 47 ຂອງກົດໝາຍວ່າດ້ວຍໄຟຟ້າ)

**ກິດຈະການທ່ອງທ່ຽວ** ໝາຍເຖິງການຈັດຕັ້ງ ແລະ ການເຄື່ອນໄຫວຕ່າງໆ ເພື່ອໃຫ້ການບໍລິການແກ່ນັກທ່ອງທ່ຽວ ທັງພາຍໃນແລະ ຕ່າງປະເທດເຊັ່ນ: ແຫລ່ງທ່ອງທ່ຽວ, ສະຖານທີ່ພັກ, ການນຳທ່ຽວ; ( ມາດຕາ 3 ວັກ 2 ຂອງກົດໝາຍວ່າດ້ວຍການທ່ອງທ່ຽວ ).

**ການຂົນສົ່ງຜ່ານແດນ** ແມ່ນການຂົນສົ່ງຈາກລັດໜຶ່ງ ຜ່ານປະເທດໃດໜຶ່ງໄປປະເທດທີ່ ສາມ ຫລື ການຂົນສົ່ງຈາກປະເທດໃດໜຶ່ງຜ່ານ ອີກລັດໜຶ່ງໄປປະເທດທີ່ ສາມ.

**ຂໍ້ຂັດແຍ່ງທາງດ້ານເສດຖະກິດ** ແມ່ນຂໍ້ຜິດພາດທີ່ເກີດຂຶ້ນ ກ່ຽວກັບການຜະລິດ ແລະ ການດຳເນີນທຸລະກິດລະຫວ່າງການຈັດຕັ້ງກັບການຈັດຕັ້ງ , ການຈັດຕັ້ງກັບບຸກຄົນ , ບຸກຄົນກັບບຸກຄົນທັງພາຍໃນ ແລະ ຕ່າງປະເທດ. (ມາດຕາ 2 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ).

**ຄັງຂະຫຍາຍການຜະລິດ** ແມ່ນເງິນແຮທີ່ສະສົມໄວ້ ເພື່ອຂະຫຍາຍກິດຈະການ ໂດຍແມ່ນທະນາຄານ ເປັນຜູ້ກຳນົດອັດຕາສ່ວນຈຳນວນເງິນ ທີ່ຈະຫັກໃນແຕ່ລະປີ.

**ຄັງສຳຮອງ** ແມ່ນເງິນແຮສະເພາະຂອງທະນາຄານ ທີ່ເກັບໄວ້ ເພື່ອທົດແທນການຂາດທຶນຈາກການເຄື່ອນໄຫວວຽກງານ ຂອງທະນາຄານ ແລະ ເພື່ອນຳໃຊ້ໃນການປະຕິບັດນະໂຍບາຍເງິນຕາຂອງທະນາຄານ.

**ຄ່າບໍລິການ ແມ່ນຄ່າຕອບແທນໃນການໃຫ້ຄວາມສະດວກຢ່າງໃດຢ່າງໜຶ່ງ (ເບິ່ງຄືນ)**

**ຄວາມລັບທາງການຄ້າ.**ໝາຍເຖິງ ຂໍ້ມູນດ້ານວິທີການຜະລິດ, ທຸລະກິດ ຫລື ບໍລິການ ທີ່ມີຄວາມສຳຄັນຂອງວິສາຫະກິດ ໃດໜຶ່ງ ຊຶ່ງສ້າງຄວາມເສັຍຫາຍຕໍ່ຄວາມໝັ້ນຄົງ ແລະ ຖານະດ້ານການເງິນຂອງວິສາຫະກິດ ເມື່ອຖືກເປີດ ເຜີຍ.

**ເງິນ** ແມ່ນຊື່ທາດໂລຫະສີຂາວຊະນິດໜຶ່ງ.

**ເງິນກີບ** ແມ່ນເງິນສົ່ງໜຶ່ງທີ່ລັດຖະບານກຳນົດຂຶ້ນໃຊ້ຊຳລະໜີ້ໄດ້ຕາມກົດໝາຍ ຢູ່ພາຍໃນ ສປປ ລາວ.

**ເງິນປັນຜົນ.**ໝາຍເຖິງ ເງິນແບ່ງປັນໃຫ້ຂາຮຸ້ນ ຫລື ຜູ້ຖືຮຸ້ນຊຶ່ງໄດ້ມາຈາກກຳໄລສຸດທິຂອງວິສາຫະກິດຮຸ້ນສ່ວນ ຫລື ບໍລິສັດ ພາຍຫລັງຫັກຕົ້ນທຶນ, ຄ່າສິ້ນເປືອງ ແລະ ໜີ້ສິນຕ່າງໆອອກແລ້ວ.

**ເຈົ້າໜ້າທີ່ພາສ** ແມ່ນພະນັກງານພາສີ ທີ່ຖືກແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ປະຈຳການຢູ່ດ່ານພາສີ ຊາຍແດນ , ປ້ອມພາສີ , ໜ່ວຍພາສີເຄື່ອນທີ່ ແລະ ວຽກງານສະເພາະກິດໃດໜຶ່ງຂອງພາສີ.

**ສະຫລັກຫລັງ (ກວດຄືນ)** ໃນຄວາມໝາຍທາງດ້ານເສດຖະກິດແມ່ນການຂຽນຂໍ້ຄວາມລົງດ້ານ ຫລັງຂອງເອກະສານການເງິນ *ເພື່ອໂອນສິດທີ່ເກີດກັບເອກະສານການເງິນນັ້ນ*ເຊັ່ນ ສະຫລັກຫລັງ ເອກະສານການເງິນ.

**ສ່ວຍສາອາກອນ** ແມ່ນພັນທະເປັນເງິນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງລວມທັງຊາວ ຕ່າງປະເທດທີ່ດຳເນີນທຸລະກິດ ຫລື ທຳມະຫາກິນຖາວອນ ຫລື ຊົ່ວຄາວ ຢູ່ ສ ປ ປ ລາວ ກໍ່ຄືຜູ້ທີ່ມີ ພູມລຳເນົາ ຫລື ສະຖານທີ່ດຳເນີນທຸລະກິດຢູ່ລາວ ໄປເຄື່ອນໄຫວຢູ່ຕ່າງປະເທດທີ່ມີລາຍໄດ້ຕ້ອງໄດ້ ເສັຍຕາມອັດຕາທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ. ( ມາດຕາ 2 ຂອງກົດໝາຍ ວ່າດ້ວຍສ່ວຍສາອາກອນ ).

**ສ່ວຍສາອາກອນທາງອ້ອມ** ແມ່ນອາກອນທີ່ເກັບຈາກຜູ້ຊົມໃຊ້ສິນຄ້າ , ເຄື່ອງຂອງຈາກການ ນຳເຂົ້າ , ການຂາຍສິນຄ້າ , ເຄື່ອງຂອງ ແລະ ການບໍລິການທົ່ວໄປ ໂດຍຜ່າຍດຳເນີນກິດຈະການ ຢູ່ ດິນແດນຂອງ ສ ປ ປ ລາວ. (ມາດຕາ 8ວັກ 1 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ)

**ສ່ວຍສາອາກອນທາງກົງ** ແມ່ນອາກອນທີ່ເກັບຈາກບຸກຄົນ , ນິຕິບຸກຄົນ , ການຈັດຕັ້ງລວມທັງ ຊາວຕ່າງປະເທດ ທີ່ມີລາຍໄດ້ຢູ່ ສ ປ ປ ລາວ ກໍ່ຄືຜູ້ທີ່ມີພູມລຳເນົາ ຫລື ສະຖານທີ່ດຳເນີນທຸລະກິຢູ່ ລາວ ໄປເຄື່ອນໄຫວຢູ່ຕ່າງປະເທດ.(ມາດຕາ 9 ວັກ 1 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ).

**ຊັບພະຍາກອນ** ແມ່ນບໍ່ເກີດແຫ່ງຊັບສົມບັດທຸກຢ່າງຂອງຊາດຂອງປະຊາຊົນ.

**ຊັບສິນຂອງລັດ** ແມ່ນຊັບສົມບັດທີ່ເກີດຂຶ້ນຕາມທຳມະຊາດ ຫລື ດວ້ຍການສ້າງຂຶ້ນຂອງຄົນ ຊຶ່ງ ວົງຄະນະຍາດແຫ່ງຊາດເປັນເຈົ້າກຳມະສິດ , ປະກອບດ້ວຍສັງຫາລິມະຊັບ (ຊັບເຄື່ອນທີ່) ແລະ ອະສັງຫາລິມະຊັບ(ຊັບຄົງທີ່) ທີ່ມີຢູ່ໜ້າດິນ ,ໃຕ້ດິນ , ໜ້ານ້ຳ ແລະ ນ່ານຟ້າ ໃນຂອບເຂດພືນ ແຜ່ນດິນ ຂອງ ສ ປ ປ ລາວລວມທັງຊັບສົມບັດຕ່າງໆຂອງລັດ ສ ປ ປ ລາວ ທີ່ມີຢູ່ຕ່າງປະເທດ.

**ດຣາຟ໌** ໝາຍເຖິງເອກະສານ ຊຶ່ງທະນາຄານເປັນຜູ້ອອກໃຫ້ທະນາຄານຕົວແທນເພື່ອຈ່າຍເງິນໃຫ້ ແກ່ຜູ້ຮັບຕາມຄຳສັ່ງ ຫລື ຕາມທີ່ໄດ້ລະບຸຊື່ໄວ້.

**ດຸນການຄ້າ** ໝາຍເຖິງ ຄວາມແຕກຕ່າງກັນລະຫວ່າງມູນຄ່າຂອງສິນຄ້າທີ່ສົ່ງອອກນອກປະເທດ ກັບສິນຄ້າທີ່ນຳເຂົ້າມາໃນປະເທດ.

**ດຸນການຄ້າໄດ້ປຽບ** ໝາຍເຖິງ ມູນຄ່າຂອງສິນຄ້າທີ່ນຳເຂົ້າພໍດີກັບມູນຄ່າຂອງສິນຄ້າທີ່ສົ່ງອອກ

**ດຸນການຄ້າເສຍປຽບ** ໝາຍເຖິງ ມູນຄ່າຂອງສິນຄ້າທີ່ນຳເຂົ້າສູງກວ່າມູນຄ່າຂອງສິນຄ້າທີ່ສົ່ງ ອອກ

**ດຸນການຊຳລະເງິນ** ໝາຍເຖິງ ຄວາມແຕກຕ່າງກັນລະຫວ່າງປະລິມານເງິນທີ່ສົ່ງອອກນອກປະເທດກັບປະລິມານເງິນທີ່ນຳເຂົ້າມາໃນປະເທດ.

**ຕົ໋ວແລກເງິນ** ໝາຍເຖິງ ເອກະສານ ຊຶ່ງຜູ້ສັ່ງຈ່າຍໃຫ້ຈ່າຍເງິນຈຳນວນໜຶ່ງໃຫ້ແກ່ຜູ້ຮັບເງິນ

**ຕະຫລາດຫລັກຊັບ** ໝາຍເຖິງ ຕະຫລາດ ຫລື ສະຖານທີ່ທີ່ເປັນສູນກາງໃນການຊື້ຂາຍຫລັກຊັບ ຫລື ເອີ້ນວ່າ ຕະຫລາດຫຸ້ນ.

**ຕົ້ນກຳເນີດສິນຄ້າ** ໝາຍເຖິງ ປະເທດທີ່ໄດ້ຂຸດຄົ້ນ , ຜະລິດ ຫລື ຜ່ານຂະບວນການຜະລິດ ຫລື ປຸງແຕ່ງສິນຄ້າ , ເຄື່ອງຂອງ ຕາມລະບຽບການທີ່ໄດ້ກຳນົດໄວ້.

**ທຣັສຕ໌** ໝາຍເຖິງ ການລວມບໍລິສັດທີ່ເຮັດທຸລະກິດແນວດຽວກັນຫລາຍໆແຫ່ງ ໂດຍວິທີການໂອນຫຸ້ນຂອງບໍລິສັດເຫລົ່ານັ້ນມາໃຫ້ບຸກຄົນຄະນະໜຶ່ງ ຫລື ນິຕິບຸກຄົນ ເປັນຜູ້ບໍລິຫານ, ຄຸ້ມຄອງບັນດາບໍລິສັດດັ່ງກ່າວ.

ອີກຄວາມໝາຍໜຶ່ງ ທຣັສຕ໌ ໝາຍເຖິງ ການມອບໝາຍ ຫລື ການແຕ່ງຕັ້ງບຸກຄົນຄະນະໜຶ່ງ ຫລື ນິຕິບຸກຄົນ ເພື່ອບໍລິຫານ, ຄຸ້ມຄອງຊັບສິນຂອງຜູ້ທີ່ໄດ້ຮັບສິດຜົນປະໂຫຍດ.

**ທຶນຫຸ້ນ** ໝາຍເຖິງ ທຶນຈົດທະບຽນຂອງບໍລິສັດທີ່ແບ່ງອອກເປັນຫຸ້ນ, ມີຄ່າຫຸ້ນ ໂດຍແຕ່ລະຫຸ້ນມີມູນຄ່າເທົ່າກັນ.

**ທະນາຄານ** ໝາຍເຖິງ ສະຖາບັນການເງິນ ທີ່ເຮັດໜ້າທີ່ຄຸ້ມຄອງ, ຄວບຄຸມລະບົບເງິນຕາ.

ທະນາຄານ ແຫ່ງ ສປປລາວ ໝາຍເຖິງ ສະຖາບັນເງິນຕາ ຂອງລັດຖະບານ , ມີຖານະທຽບເທົ່າກະຊວງ , ເປັນທະນາຄານກາງ ຂອງປະເທດ , ມີຖານະເປັນນິຕິບຸກຄົນ ແລະ ມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫລວງວຽງຈັນ.

**ທີ່ດິນ** ໝາຍເຖິງ ເນື້ອທີ່ດິນ ຊຶ່ງນອນຢູ່ໃນເຂດແດນ ຂອງ ສ ປ ປ ລາວ, ປະກອບດ້ວຍ ໜ້າດິນ , ພື້ນດິນ , ພູຜາ , ເກາະດອນ ລວມທັງດິນພື້ນນ້ຳ , ນ່ານນ້ຳ ແລະ ນ່ານຟ້າ. ( ມາດຕາ 2 ວັກ 1 ຂອງກົດໝາຍວ່າດ້ວຍທີ່ດິນ ).

**ທີ່ດິນກະສິກຳ** ໝາຍເຖິງ ທີ່ດິນທີ່ໄດ້ກຳນົດໄວ້ ເພື່ອນຳໃຊ້ເຂົ້າໃນການປູກຝັງ , ລ້ຽງສັດ ແລະ ການຄົ້ນຄວ້າທົດລອງດ້ານກະສິກຳ ລວມທັງທີ່ດິນຊົນລະປະທານ.( ມາດຕາ 15 ຂອງກົດໝາຍຄຸ້ມຄອງທີ່ດິນກຳສິກຳ )

**ທີ່ດິນປ່າໄມ້** ໝາຍເຖິງ ເນື້ອທີ່ດິນທຸກຕອນທີ່ມີປ່າໄມ້ປົກຄຸມຢູ່ ຫລື ທີ່ດິນບໍ່ມີປ່າໄມ້ປົກຄຸມ ຊຶ່ງລັດ ໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍປ່າໄມ້. ( ມາດຕາ 19 ຂອງກົດໝາຍຄຸ້ມຄອງທີ່ດິນປ່າໄມ້ )

**ທີ່ດິນບໍລິເວນນ້ຳ** ໝາຍເຖິງ ທີ່ດິນຊຶ່ງຢູ່ພື້ນນ້ຳ ຫລື ຢູ່ຂອບເຂດອ້ອມແອ້ມແຫ່ງນ້ຳ: ທີ່ດິນພື້ນນ້ຳ ທີ່ດິນຍອດນ້ຳ, ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປີ່ງໃໝ່, ທີ່ດິນນ້ຳບົກປະ ຫລື ທີ່ດິນທີ່ເກີດຂື້ນ ຈາກການດັດແປງ ຫລື ອວ່າຍແລວນ້ຳ. (ມາດຕາ 23 ຂອງກົດໝາຍການຄຸ້ມຄອງທີ່ດິນບໍລິເວນນ້ຳ ).

**ທີ່ດິນອຸສາຫະກຳ** ໝາຍເຖິງ ຂອບເຂດ ຫລື ບໍລິເວນທີ່ດິນ ຊຶ່ງລັກກຳນົດໃຫ້ເປັນທີ່ຕັ້ງໂຮງຈັກ , ໂຮງງານ , ລວມທັງສະຖານທີ່ພັກເຊົາ ຂອງກຳມະກອນ , ພື້ນທີ່ອຸດສາຫະກຳ , ເຂດອຸດສາຫະກຳ , ນິຄົມອຸສາຫະກຳ , ສະຖາບັນ ຫລື ສູນຄົ້ນຄວ້າທົດລອງອຸດສາຫະກຳ ທາງດ້ານເຕັກນິກ ວິທະຍາສາດ , ສະຖານທີ່ບຳບັດນ້ຳເສັຍຄຸນບ່ອນທຳລາຍສິ່ງເສດເຫລືອອຸດສາຫະກຳ , ແຫ່ງ ວັດຖຸ ພະລັງງານ , ແລວທາງສາຍສົ່ງໄຟຟ້າ , ແລວທາງທໍ່ພະລັງງານ ແລະ ອາຍແກັດ , ທໍ່ນ້ຳປະປາ ,ເຂດ ບໍ່ແຮ່ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນເປົ້າໝາຍອຸດສາຫະກຳ. ( ມາດຕາ 27 ໃໝ່ ຂອງກົດໝາຍການ ຄຸ້ມຄອງທີ່ດິນອຸກສາຫະກຳ )

**ທີ່ດິນຄົມມະນາຄົມ** ໝາຍເຖິງ ທີ່ດິນສຳລັບໃຊ້ເປັນເສັ້ນທາງ, ຂອບທາງ, ຮ່ອງນ້ຳ, ເຂດ ສະຫງວນແລວທາງ, ສະຖານທີ່ຕັ້ງຂົວ, ແລວສາຍໂທລະສັບ, ທີ່ຕັ້ງສະຖານນີສື່ສານ ລວມທັງ ສະໜາມບິນ, ທ່າເຮືອ, ສະຖານທີລົດຂົນສົ່ງສິນຄ້າ ແລະ ລົດໂດຍສານ, ອຸໂມງ, ທາງລົດໄຟ, ສະຖານທີ່ຕັ້ງສາງຮັບໃຊ້ການຂົນສົ່ງ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກງານຄົມມະນາຄົມຂົນສົ່ງ. ( ມາດຕາ 30 ຂອງກົດໝາຍການຄຸ້ມຄອງທີ່ດິນຄົມມະນາຄົມ )

**ທີ່ດິນປ້ອງກັນຊາດ , ປ້ອງກັນຄວາມສະຫງົບ** ໝາຍເຖິງ ທີ່ດິນທີ່ໃຊ້ເຂົ້າໃນວຽກງານປ້ອງ ກັນຊາດ, ປ້ອງກັນຄວາມສະຫງົບ: ບ່ອນຕັ້ງຄ້າຍ, ສຳນັກງານ, ກົມກອງ, ບ່ອນພັກເຊົາ, ໂຮງຮຽນ ແລະ ສະໜາມຝຶກແອບວິຊາການທະຫານ, ຕຳຫລວດ, ສະໜາມປືນໃຫຍ່,ສະໜາມບິນ, ທ່າເຮືອ, ສາງ, ໂຮງໝໍ, ໂຮງຈັກ, ໂຮງງານ, ສະຖານທີ່ພັກຜ່ອນຂອງທະຫານ, ຕຳຫລວດ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ. ( ມາດຕາ 35 ຂອງກົດໝາຍການຄຸ້ມ ຄອງທີ່ດິນປ້ອງກັນຊາດ,ປ້ອງກັນຄວາມສະຫງົບ )

**ທີ່ດິນປຸກສ້າງ** ໝາຍເຖິງ ທີ່ດິນທີ່ໄດ້ກຳນົດໄວ້ ເພື່ອນຳໃຊ້ໃນການປຸກສ້າງທີ່ຢູ່ອາໄສ, ໂຮງຈັກ, ໂຮງງານ, ສຳ ນັກງານ, ອົງການ, ສະຖານທີ່ສາທາລະນະ (ມາດຕາ 38 ຂອງກົດໝາຍການຄຸ້ມ ຄອງທີ່ດິນປຸກສ້າງ).

**ທຸລະກິດຮ່ວມຕາມສັນຍາ** ໝາຍເຖິງ ການຮ່ວມທຸລະກິດນຳກັນ ລະຫວ່າງນິຕິບຸກຄົນ ລົງທຶນ ພາຍໃນ ກັບຝ່າຍຕ່າງປະເທດ ໂດຍບໍ່ໄດ້ສ້າງຕັ້ງນິຕິບຸກຄົນໃໝ່ຂື້ນຢູ່ ສ ປ ປ ລາວ(ມາດຕາ 6 ຂອງ ກົດໝາຍວ່າດ້ວຍການສົ່ງເສີມການ ລົງທຶນຕ່າງປະເທດ ).

**ທຸລະກິດທ່ອງທ່ຽວ** ໝາຍເຖິງການບໍລິການຂອງຫົວໜ່ວຍທຸລະກິດ ທາງດ້ານການເດີນທາງ, ອາຫານ, ການພັກແຮມ, ການນຳທ່ຽວ ແລະ ອື່ນໆ ໃຫ້ແກ່ນັກທ່ອງທ່ຽວ ( ມາດຕາ 2 ວັກ 3 ຂອງກົດໝາຍວ່າດ້ວຍການທ່ອງທ່ຽວ ).

**ທຸລະກິດພັກແຮມ** ໝາຍເຖິງການບໍລິການຂອງຫົວໜ່ວຍທຸລະກິດ ໃຫ້ແກ່ນັກທ່ອງທ່ຽວ ໃນການພັກເຊົາຊົ່ວຄາວເຊັ່ນ: ພັກຢູ່ໂຮງແຮມ, ເຮືອນພັກ, ເຮືອທ່ອງທ່ຽວ, ຫ້ອງພັກ ແລະ ສະຖານທີ່ພັກເຊົາອື່ນໆ ທີ່ຈັດຫາໃຫ້ແກ່ນັກທ່ອງທ່ຽວໂດຍທົ່ວໄປ; ( ມາດຕາ 3 ວັກ 4 ຂອງກົດໝາຍວ່າດ້ວຍການທ່ອງທ່ຽວ ).

**ນິຄົມອຸດສາຫະກຳ** ໝາຍເຖິງ ເນື້ອທີ່ດິນໃນເຂດອຸດສາຫະກຳ ຊຶ່ງໄດ້ກໍ່ສ້າງໂຄງລ່າງພື້ນຖານແລ້ວ ເຊັ່ນ: ຖະໜົນໄຟ ຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ອາຄານ ແລະ ອື່ນໆ ທີ່ຈຳເປັນສຳລັບກິດຈະການໂຮງງານເພື່ອ ໃຫ້ນັກທຸລະກິດເຊົ່າ ຫລື ສຳປະທານ. (ມາດຕາ 26 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ)

**ໃບຂົນສົ່ງສິນຄ້າ** ໝາຍເຖິງ ເອກະສານສະແດງລາຍການສິນຄ້າ ຊຶ່ງມີຊະນິດ, ຄຸນນະພາບ, ປະລິມານ, ນ້ຳໜັກ, ລາຄາອັນແທ້ຈິງໃນທ້ອງຕະຫລາດ ແລະ ລາຍກາຍອື່ນໆ ໂດຍຜູ້ນຳເຂົ້າ ຫລື ສົ່ງອອກສິນຄ້າເຄື່ອງຂອງ ຕ້ອງຍື່ນຕໍ່ພະນັກງານພາສີ ເມື່ອເວລານຳເອົາສິນຄ້າເຄື່ອງຂອງເຂົ້າມາໃນປະເທດ ຫລື ສົ່ງສິນຄ້າເຄື່ອງຂອງອອກນອກປະເທດ.

**ໃບຕາສົ່ງ** ໝາຍເຖິງ ເອກະສານທີ່ຜູ້ຂົນສົ່ງ ອອກໃຫ້ແກ່ຜູ້ສົ່ງສິນຄ້າ ເພື່ອເປັນຫລັກຖານສະແດງການຖືຫຸ້ນ

**ບັນຊີ** ໝາຍເຖິງ ປຶ້ມ ຫລື ເຈ້ຍສຳລັບຈົດລາຍການຕ່າງໆໄວ້ເປັນຫລັກຖານ.

**ບັນຊີເດີນສະພັດ** ໝາຍເຖິງ ຫລັກຖານເງິນຝາກຂອງທະນາຄານ ຊຶ່ງຜູ້ຝາກຖອນເງິນໄດ້ທຸກເວລາ ຫລື ບັນຊີເງິນຝາກກະແສລາຍວັນ.

**ບໍລິສັດເງິນທຶນ** ໝາຍເຖິງ ບໍລິສັດທີ່ໄດ້ຮັບໃບອະນຸຍາດໃຫ້ປະກອບທຸລະກິດການຈັດການ, ການຈັດຫາເງິນທຶນ ແລະ ໃຊ້ເງິນທຶນນັ້ນ ໃນການປະກອບກິດຈະການໃດໜຶ່ງເຊັ່ນ: ການຄ້າ, ການພັດທະນາການກໍ່ສ້າງ ແລະ ອື່ນໆ.

**ແບ່ງສັນປັນສ່ວນ** ໝາຍເຖິງ ແບ່ງໃຫ້ຕາມສັນສ່ວນທີ່ຄວນຈະໄດ້.

**ບໍລິສັດປະກັນໄພຂອງລາວ** ໝາຍເຖິງ ບໍລິສັດປະກັນໄພທີ່ໄດ້ຮັບອະນຸຍາດສ້າງຕັ້ງຂຶ້ນຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ດ້ວຍການລົງທຶນຮ່ວມລະຫວ່າງບຸນຄົນ ຫລື ນິຕິບຸກຄົນລາວນຳກັນ ຫລື ການລົງທຶນລະ ຫວ່າງບຸກຄົນ ຫລື ນິຕິບຸກຄົນລາວ ຮ່ວມກັບບຸກຄົນ ຫລື ນິຕິບຸກຄົນຕ່າງປະເທດ ແລະ ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍຂອງລາວ ຊຶ່ງມີໜ້າທີ່ໃນການຮັບຮອງວ່າຈະທົດແທນຈຳນວນເງິນໃຫ້ເມື່ອເກີດໄພຢ່າງໃດຢ່າງໜຶ່ງ.

**ລະບອບສາງ** ໝາຍເຖິງ ລະບຽບການນໍາເອົາສິນຄ້າ , ເຄື່ອງຂອງທີ່ມີຈຸດປະສົງເພື່ອສົ່ງອອກ-ນໍາເຂົ້າປະເທດ ເຂົ້າເກັບມ້ຽນໃນສາງພາຍໃນກໍານົດເວລາອັນແນ່ນອນ ໂດຍງົດເກັບພາສີ ແລະ ຢູ່ພາຍໃຕ້ການກວດກາຂອງລັດຖະການພາສີ ເພື່ອລໍຖ້າປະຕິບັດຕາມລະບອບພາສີ

**ບັນຊີຄັ້ງສໍາຮອງພິເສດ** ໝາຍເຖິງ ບັນຊີທີ່ຈົດກ່າຍກໍາໄລ ຫລື ການຂາດທຶນ ປະຈໍາປີຂອງທະນາຄານ ແຫ່ງ ສ ປ ປ ລາວ ຊຶ່ງເກີດຈາກການປ່ຽນແປງມູນຄ່າຊັບສິນ ຫລື ໜີ້ສິນເປັນຄໍາ, ເປັນເດເຕແອສ[17] ຫລື ເກີດຈາກການປ່ຽນແປງຊັບສິນ ຫລື ໜີ້ສິນທີ່ເປັນເງິນຕາຕ່າງປະເທດຂອງລັດຖະບານຫຽບໃສ່ເງິນກີບຂອງ ສປປລາວ.

**ໃບຢັ້ງຢືນທີ່ດິນ** ໝາຍເຖິງ ເອກະສານທາງການ ທີ່ຢັ້ງຢືນກ່ຽວກັບສິດໃຊ້ທີ່ດິນກະສິກໍາ ຫລື ທີ່ດິນປ່າໄມ້ຊົ່ວຄາວ ຊຶ່ງອົງການປົກຄອງເມືອງ , ເທດສະບານ ອອກໃຫ້ບຸກຄົນ ຫລື ການຈັດຕັ້ງທີ່ມີສິດໃຊ້ທີ່ດິນນັ້ນ(ມາດຕາ 48 ວັກ 1 ຂອງກົດໝາຍທີ່ດິນ)

**ໃບຕາດິນ** ໝາຍເຖິງ ເອກະສານ ທີ່ເປັນຫລັກຖານຕົ້ນຕໍອັນໜຶ່ງອັນດຽວ ກ່ຽວກັບສິດນໍາໃຊ້ທີ່ດິນຢ່າງຖາ ວອນ ຊຶ່ງໄດ້ຄັດສໍາເນົາຢ່າງຖືກຕ້ອງຈາກປຶ້ມທະບຽນທີ່ດິນ ເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງທີ່ດິນພຽງໃບດຽວ ເພື່ອຖືໄວ້ເປັນຫຼັກຖານຢ່າງຍາວນານ ຈົນກວ່າຈະມີການປ່ຽນແປງໃໝ່ ຕາມເງື່ອນໄຂທີ່ກໍານົດໄວ້ໃນກົດໝາຍ(ມາດຕາ 49 ວັກ 1 ຂອງກົດໝາຍທີ່ດິນ).

**ໃບຮຸ້ນ** ເຖິງ ເອກະສານສໍາຄັນທາງກົດໝາຍໜຶ່ງ ເພື່ອສະແດງເຖິງສິດ ແລະ ຄວາມເປັນເຈົ້າຂອງສ່ວນໜຶ່ງໃນວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດຂອງຂາຮຸ້ນ ຫລື ຜູ້ຖືຮຸ້ນ.

**ໃບຮຸ້ນກູ້** ໝາຍເຖິງ ເອກະສານກູ້ຢືມຂອງບໍລິສັດ ໂດຍບໍ່ມີຊັບຄໍ້າປະກັນເຮັດໃຫ້ຜູ້ຖືຮຸ້ນກູ້ມີສິດທິທາງດ້ານ ກົດໝາຍຕ່າງໆ ເພື່ອເປັນຫລັກຄໍ້າປະກັນໃນການໄດ້ຮັບການຊໍາລະຄືນລວມທັງດອກເບ້ຍຕາມທີ່ໄດ້ຕົກ ລົງກັນ.

**ບໍລິສັດ.**ໝາຍເຖິງ ຮູບການວິສາຫະກິດໜຶ່ງ ຊຶ່ງສ້າງຕັ້ງຂຶ້ນດ້ວຍການແບ່ງທຶນເປັນຮຸ້ນ ແຕ່ລະຮຸ້ນມີມູນຄ່າເທົ່າກັນ. ຜູ້ຖືຮຸ້ນຮັບຜູ້ຮັບຜິດຊອບຕໍ່ໜີ້ສິນຂອງບໍລິສັດບໍ່ເກີນມູນຄ່າຮຸ້ນ ທີ່ຕົນບໍ່ໄດ້ຖອກເທົ່າກັນ.

**ບໍລິສັດຈໍາກັດ** ໝາຍເຖິງ ຮູບແບບບໍລິສັດໜຶ່ງ ຊຶ່ງຜູ້ຖືຮຸ້ນແຕ່ສອງຄົນຂຶ້ນໄປ ແລະ ສູງສຸດບໍ່ເກີນສາມສິບ ຄົນ .

**ບໍລິສັດຈໍາກັດຜູ້ດຽວ** ໝາຍເຖິງ ບໍລິສັດຈໍາກັດ ຊຶ່ງມີຜູ້ຖືຮຸ້ນພຽງຜູ້ດຽວ.

**ບໍລິສັດມະຫາຊົນ** ໝາຍເຖິງ ຮູບແບບບໍລິສັດໜຶ່ງ ຊຶ່ງຜູ້ຖືຮຸ້ນທີ່ເປັນຜູ້ກໍ່ຕັ້ງຢ່າງໜ້ອຍ ເກົ້າຄົນຂຶ້ນໄປ, ສາມາດໂອນຮຸ້ນໄດ້ຢ່າງເສລີ ແລະ ສະເໜີຂາຍຮຸ້ນຢ່າງເປີດເຜີຍ ຕໍ່ມວນຊົນທົ່ວໄປໄດ້.

---

[17] ເດເຕແອສ ໝາຍເຖິງ ສິດຖອນເງິນພິເສດຂອງ ສ ປ ປ ລາວໃນກອງທຶນສາກົນ

**ບໍລິສັດລັດ** ໝາຍເຖິງ ລັດເປັນຜູ້ສ້າງຕັ້ງ, ບໍລິຫານຈັດການພາຍໃຕ້ຫຼັກການຂອງຮູບແບບບໍລິສັດ ແລະ ສາ ມາດຂາຍຮຸ້ນສູງສຸດບໍ່ໃຫ້ເຖິງ ຫ້າສິບສ່ວນຮ້ອຍ.

**ບໍລິສັດປະສົມ** ໝາຍເຖິງ ບໍລິສັດຊຶ່ງລັດຮ່ວມກັບພາກສ່ວນອື່ນ ພາຍໃນ ຫລື ຕ່າງປະເທດ ສ້າງຕັ້ງຂຶ້ນ –ໂດຍມີຮຸ້ນຝ່າຍລະຫ້າສິບສ່ວນຮ້ອຍ.

**ບໍ່ແຮ່** ໝາຍເຖິງ ແຫລ່ງສະສົມແຮ່ທາດຕາມທຳມະຊາດທີ່ມີຄວາມໝາຍສຳຄັນທາງດ້ານ ເສດຖະກິດ ຊຶ່ງມີຢູ່ໜ້າດິນ, ພື້ນດິນ ຫລື ພື້ນນ້ຳ. (ມາດຕາ 19 ຂອງກົດໝາຍວ່າດ້ວຍບໍ່ແຮ່)

**ປະຕິຮູບ** ໝາຍເຖິງ ການປັບປຸງໃຫ້ເໝາະສົມ ແລະ ສອດຄ່ອງກັບສະພາບການ ເຊັ່ນ: ປະຕິຮູບ ເສດຖະກິດ.

**ປະຕິຮູບທີ່ດິນ** ໝາຍເຖິງ ການປັບປຸງທີ່ດິນໃຫ້ເໝາະສົມ ແລະ ສອດຄ່ອງກັບສະພາບການ.

**ປະກອບທຸລະກິດ** ໝາຍເຖິງ ການເຮັດວຽກປະຈຳກ່ຽວກັບອາຊີບຄ້າຂາຍ ຫລື ກິດຈະການອື່ນໆ ທີ່ບໍ່ແມ່ນລັດຖະກອນ.

**ປະກອບອາຊີບ** ໝາຍເຖິງ ການເຮັດວຽກເພື່ອຫາລາຍໄດ້ມາລ້ຽງຊີບ.

**ປະເມີນຜົນ** ໝາຍເຖິງ ການຄາດຄະເນຜົນ, ລາຄາທີ່ຄວນຈະໄດ້ຮັບ.

**ປະເມີນຜົນກຳໄລ** ໝາຍເຖິງ ການຄາດຄະເນລາຍໄດ້ທີ່ຄວນຈະໄດ້ຮັບ.

**ປະກັນຊີວິດ** ໝາຍເຖິງ ສັນຍາປະກັນໄພຊະນິດໜຶ່ງ ໂດຍບຸກຄົນຄົນໜຶ່ງ ເອີ້ນວ່າ ຜູ້ຮັບປະກັນ ໄພຕົກລົງຈະໃຊ້ເງິນຈຳນວນໜຶ່ງໃຫ້ແກ່ຜູ້ຮັບປະໂຫຍດອາໄສການຊົງຊີບ ຫລື ມໍລະນະຂອງບຸກຄົນ ຄົນໜຶ່ງ ຊຶ່ງໃນກໍລະນີນີ້ຜູ້ເອົາປະກັນໄພຕົກລົງຈະສົ່ງເງິນ ເອີ້ນວ່າ ເບັ້ຍປະກັນໄພໃຫ້ແກ່ຜູ້ຮັບປະກັນ ໄພ ຫລື ເອີ້ນວ່າ ສັນຍາປະ ກັນຊີວິດ.

**ປະກັນວິນາດສະໄພ** ໝາຍເຖິງ ສັນຍາປະກັນໄພຊະນິດໜຶ່ງ ໂດຍຜູ້ປະກັນໄພຕົກລົງຈະໃຊ້ ຄ່າທົດແທນໃຫ້ໃນກໍລະນີເກີດຄວາມເສຍຫາຍທີ່ສາມາດປະເມີນເປັນເງິນໄດ້.

**ປ່ຽນມືບໍ່ໄດ້** ໝາຍເຖິງ ຄຳທີ່ໃຊ້ໃນການອອກເອກະສານການເງິນເພື່ອສະແດງວ່າເອກະສານນັ້ນ ບໍ່ອາດຈະໂອນໃຫ້ກັນໄດ້ດ້ວຍວິທີສະລັກຫລັງ ຫລື ສົ່ງມອບ.

**ປະເມີນລາຍຮັບທາງດ້ານພາສີ** ໝາຍເຖິງ ການກຳນົດຈຳນວນເງິນພາສີ ທີ່ພະນັກງານເກັບ ຈາກຜູ້ມີພັນທະເສຍພາສີຕາມທີ່ໄດ້ປະເມີນເອົາໄວ້.

**ປະລິມານ** ໝາຍເຖິງ ການກຳນົດຄວາມໜ້ອຍ ຫລື ຫລາຍຂອງຈຳນວນ.

**ປຶ້ມທະບຽນທີ່ດິນ** ແມ່ນປຶ້ມທີ່ໃຊ້ຈົດກ່າຍຕາມເລກລຳດັບການຂຶ້ນທະບຽນທີ່ດິນເຂົ້າໃນປຶ້ມ ທະບຽນທີ່ດິນນັ້ນ ຊຶ່ງມີລາຍເຊັນ ແລະ ຕາປະທັບຂອງຫົວໜ້າ ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ຢູ່

ໜ້າຕົ້ນ ລວມທັງໝາຍເລກລຳ ດັບ ແລະ ປະທັບຕາໃສ່ແຕ່ລະໃບ(ມາດຕາ 47 ວັກ 1 ຂອງກົດໝາຍທີ່ດິນ).

**ໄປສະນີພັນ** ໝາຍເຖິງເຄື່ອງຝາກທາງໄປສະນີ ຂະໜາດນ້ອຍເຊັ່ນ: ຈົດໝາຍ, ໄປສະນີບັດ, ເອກະສານ, ໜັງສືພິມ, ວາລະສານ ແລະ ສິ່ງພິມອື່ນໆ, ສິ່ງຂອງຫໍ່ນ້ອຍ ແລະ ເຄື່ອງຝາກປະເພດອື່ນໆ ທີ່ມີນ້ຳໜັກບໍ່ໃຫ້ເກີນ 2 kg ຕໍ່ 1 ຊອງ ຫລື 1 ຫໍ່ ເວັ້ນເສຍແຕ່ປຶ້ມອ່ານເຊິ່ງຮັບຝາກໄດ້ບໍ່ໃຫ້ເກີນ 5kg ແລະ ເຄື່ອງອ່ານຂອງຄົນຕາບອດ ຊຶ່ງຮັບຝາກບໍ່ໃຫ້ເກີນ 7 kg ( ມາດຕາ 3 ວັກ 1 ຂອງກົດໝາຍວ່າດ້ວຍການໄປສະນີ )

**ໄປສະນີກອນ** ໝາຍເຖິງບຸກຄົນທີ່ເຮັດໜ້າທີ່ແຈກຢາຍເຄື່ອງຝາກທາງໄປສະນີປະເພດຕ່າງໆ ( ມາດຕາ 3 ວັກ 5 ຂອງກົດໝາຍວ່າດ້ວຍການໄປສະນີ ).

**ຜູ້ສ້າງສັນ** ໝາຍເຖິງ ຜູ້ເຮັດ ຫລື ຜູ້ເຮັດໃຫ້ເກີດງານ ໂດຍຄວາມຄິດລິເລີ່ມຂອງຕົນເອງ.

**ຜູ້ຮັບການປະກັນໄພ** ແມ່ນຜູ້ທີ່ໄດ້ຮັບການຄ້ຳປະກັນກ່ຽວກັບຊີວິດ ຫລື ຊັບສິນບັດຈາກວິສາຫະກິດປະກັນໄພ ( ມາດຕາ 3 ວັກ 3 )

**ຜູ້ເຊັນເອົາການປະກັນໄພ** ໝາຍເຖິງ ຜູ້ອອກໜ້າເຊັນສັນຍາປະກັນໄພ ຊຶ່ງຕົກລົງຈ່າຍຄ່າທຳນຽມປະກັນໄພ ທີ່ແນໃສ່ຄ້ຳປະ ກັນຊີວິດ ຫລື ຊັບສິນບັດຂອງຕົນເອງ ( ໃນກໍລະນີນີ້ ແມ່ນຜູ້ດຽວກັນກັບຜູ້ໄດ້ຮັບການປະກັນໄພ ) ຫລື ຂອງບຸກຄົນທີສາມ ( ມາດຕາ 3 ວັກ 4 ຂອງກົດໝາຍປະກັນໄພ)

**ຜູ້ບໍລິການແຈ້ງພາສີ** ໝາຍເຖິງ ບຸກຄົນ ຫລື ນິຕິບຸກຄົນທີ່ດຳເນີນທຸລະກິດການບໍລິການແຈ້ງພາສີສຳລັບສິນຄ້າ, ເຄື່ອງຂອງ ແລະ ທັງແມ່ນຜູ້ທີ່ຕາງໜ້າໃຫ້ແກ່ບຸກຄົນ ຫລື ນິຕິບຸກຄົນອື່ນພົວພັນກັບເຈົ້າໜ້າທີ່ພາສີໂດຍກົງ

**ຜູ້ຂົນສົ່ງທາງອາກາດ** ໝາຍເຖິງຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດການບໍລິການຂົນສົ່ງດ້ວຍເຮືອບິນ (ມາດຕາ 3ຂອງກົດໝາຍວ່າດ້ວຍການບິນພົນລະເຮືອນ ).

**ຜູ້ຂົນສົ່ງທາງອາກາດຂອງຕ່າງປະເທດ** ໝາຍເຖິງຜູ້ດຳເນີນທຸລະກິດຂົນສົ່ງທາງອາກາດອາກາດຂອງຕ່າງປະເທດທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການຂົນສົ່ງທາງອາກາດ ສ ປ ປ ລາວ (ມາດຕາ 3 ຂອງກົດໝາຍວ່າດ້ວຍການບິນພົນລະເຮືອນ ).

**ຜູ້ລົງທຶນຕ່າງປະເທດ** ໝາຍເຖິງ ບຸກຄົນ ຫລື ນິຕິບຸກຄົນຕ່າງປະເທດທີ່ມາລົງທຶນຢູ່ ສ ປ ປ ລາວ ( ມາດຕາ 2 ວັກ 2 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ).

**ຜູ້ລົງທຶນພາຍໃນ** ໝາຍເຖິງຜູ້ຮ່ວມທຶນ ຫລື ຜູ້ຮ່ວມມືທຸລະກິດກັບຕ່າງປະເທດ ໂດຍບຸກຄົນ ຫລື ນິຕິບຸກຄົນຂອງຄົນລາວທີ່ຢູ່ ສ ປ ປ ລາວ ຊຶ່ງປະກອບມີບຸກຄົນ ຫລື ການຈັດຕັ້ງຂອງຄົນລາວ, ຊາວ

ຕ່າງດ້າວ ຫລື ຄົນບໍ່ມີສັນຊາດ (ມາດຕາ 2 ວັກ 3 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ).

**ຜູ້ຊໍາລະສະສາງ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຈາກສານ ຫລື ວິສາຫະກິດ ໃຫ້ປະຕິບັດສິດ ແລະ ໜ້າທີ່ໃນການເຕົ້າໂຮມຊັບສິນຂອງວິສາຫະກິດທີ່ຍຸບເລີກ ຫລື ລົ້ມລະລາຍ ເພື່ອຊໍາລະໃຫ້ແກ່ເຈົ້າໜີ້ ແລະ ແບ່ງປັນສ່ວນທີ່ເຫລືອໃຫ້ແກ່ເຈົ້າຂອງ, ຂາຮຸ້ນ ຫລື ຜູ້ຖືຮຸ້ນຂອງວິສາຫະກິດທີ່ກ່ຽວຂ້ອງ.

**ພັນທະບັດ** ໝາຍເຖິງ ເອກະສານທາງດ້ານການເງິນຊະນິດ ຊຶ່ງອອກໂດຍລັດຖະບານ ຫລື ສະຖາບັນການເງິນໃດໜຶ່ງ.

**ພະນັກງານສ່ວຍສາອາກອນ** ໝາຍເຖິງ ພົນລະເມືອງລາວຜູ້ທີ່ຖືກບັນຈຸ ແລະ ໄດ້ຮັບການແຕ່ງຕັ້ງໃຫ້ເຮັດວຽກງານປະຈໍາຢູ່ໃນລັດຖະການສ່ວຍສາອາກອນ.( ມາດຕາ 4 ວັກ 2 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ).

**ພາສີ** ໝາຍເຖິງ ພັນທະເປັນເງິນທີ່ມອບໃຫ້ລັດໂດຍບຸກຄົນ, ການຈັດຕັ້ງ, ນິຕິບຸກຄົນ ທີ່ດໍາເນີນການສົ່ງອອກ - ນໍາເຂົ້າ, ການຜ່ານແດນ ແລະ ການຈໍລະຈອນສິນຄ້າ, ເຄື່ອງຂອງ ຜ່ານແດນພາສີຊາຍແດນ ຕາມອັດຕາທີ່ໄດ້ກໍານົດໄວ້. (ມາດຕາ 2 ຂອງກົດໝາຍວ່າດ້ວຍພາສີ)

**ພະນັກງານພາສີ** ໝາຍເຖິງ ລັດຖະກອນທີ່ຖືກບັນຈຸ ແລະ ໄດ້ຮັບການແຕ່ງຕັ້ງ ໃຫ້ເຮັດວຽກງານປະຈໍາຢູ່ໃນລັດ ຖະການພາສີ. (ມາດຕາ4 ຂອງກົດໝາຍວ່າດ້ວຍພາສີ)

**ພື້ນທີ່ອຸດສາຫະກໍາ** ໝາຍເຖິງ ເນື້ອທີ່ດິນ ທີ່ໄດ້ຮັບອະນຸຍາດໃຫ້ຕັ້ງໂຮງງານ ຊຶ່ງຢູ່ນອກເຂດຈັດສັນ ຫຼື ນິຄົມອຸດສາ ຫະກໍາ. (ມາດຕາ 24 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ)

**ໄຟຟ້າ.**ໝາຍເຖິງ ພະລັງງານຊະນິດໜຶ່ງ ທີ່ປະກອບດ້ວຍກໍາລັງໄຟຟ້າ, ກະແສໄຟຟ້າ, ແຮງດັນໄຟຟ້າ ແລະ ພະລັງງານ ຊຶ່ງຜະລິດໂດຍແຫລ່ງວັດຖຸພະລັງໄຟຟ້າ: ພະລັງນໍ້າ, ພະລັງລົມ, ພະລັງແສງແດດ, ນໍ້າ ມັນເຊື້ອໄຟ ແລະ ຖ່ານຫີນ. (ມາດຕາ 2 ຂອງກົດໝາຍວ່າດ້ວຍໄຟຟ້າ)

**ໄຟຟ້າຊົນນະບົດ ແລະ ໄຟຟ້າທ້ອງຖິ່ນ** ໝາຍເຖິງ ລະບົບໄຟຟ້າທີ່ຕໍ່ຈາກລະບົບໄຟຟ້າລວມ ຫລື ເປັນລະບົບໄຟຟ້າສະເພາະຕ່າງຫາກ ຂອງເຂດໃດເຂດໜຶ່ງທີ່ຜະລິດໄຟຟ້າ ດ້ວຍພະລັງນໍ້າຂະໜາດນ້ອຍ, ດ້ວຍເຄື່ອງຈັກທີ່ແລ່ນດ້ວຍນໍ້າມັນ, ດ້ວຍພະລັງແສງແດດ, ດ້ວຍພະລັງລົມ ຫລື ພະລັງອື່ນໆ. (ມາດຕາ 38 ຂອງກົດໝາຍວ່າດ້ວຍໄຟຟ້າ)

**ມູນຄ່າແຈ້ງພາສີຂາອອກ** ໝາຍເຖິງ ມູນຄ່າແຈ້ງພາສີຂາອອກ ແມ່ນມູນຄ່າຕົວຈິງຂອງສິນຄ້າ, ເຄື່ອງຂອງທີ່ນໍາສົ່ງຮອດດ່ານພາສີຊາຍແດນບ່ອນສົ່ງອອກໂດຍອີງໃສ່ສັນຍາຊື້-ຂາຍ. (ມາດຕາ 12 ຂອງກົດໝາຍພາສີ)

**ມູນຄ່າແຈ້ງພາສີຂາເຂົ້າ** ໝາຍຖືງ ມູນຄ່າແຈ້ງພາສີຂາເຂົ້າ ແມ່ນການປະຕິບັດຕາມຫລັກການ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງທົ່ວໄປວ່າດ້ວຍພາສີ ແລະ ການຄ້າ 1994 ຂອງອົງການການຄ້າໂລກ. ລັດຖະບານເປັນຜູ້ກຳນົດການຈັດ ຕັ້ງປະຕິບັດລະອຽດ. (ມາດຕາ 12 ຂອງກົດໝາຍພາສີ)

**ມາດຕະຖານຂອງອາຫານ** ໝາຍເຖິງ ກຳນົດໝາຍ ທີ່ວັດແທກຄຸນລັກສະນະຂອງອາຫານແຕ່ ລະຊະນິດ. ( ມາດຕາ 13 ຂອງກົດໝາຍວ່າດ້ວຍອາຫານ).

**ມົນລະພິດ** ໝາຍເຖິງ ສະພາວະຂອງສິ່ງແວດລ້ອມ ທີ່ມີການປ່ຽນແປງທາງດ້ານວັດຖຸ, ຊີວະ ແລະ ເຄມີ ຍ້ອນມີສານ ຫລື ທາດຕ່າງໆ ເຈືອປົນຢູ່ໃນນ້ຳ, ດິນ, ອາກາດ ເກີນມາດຕະຖານ ຄຸນນະພາບສິ່ງແວດລ້ອມ ເປັນພິດ ແລະ ສິ່ງຜົນສະທ້ອນອັນບໍ່ດີ ຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ. (ມາດ ຕາ 20 ຂອງກົດໝາຍວ່າດ້ວຍສິ່ງແວດລ້ອມ)

**ລັດຖະສົມບັດ** ໝາຍເຖິງ ຊັບສິນຂອງລັດທີ່ບໍ່ນອນຢູ່ໃນສາຫາລະນະສົມບັດ ຊຶ່ງປະກອບດ້ວຍ ສັງຫາລິມະຊັບ ແລະ ອະສັງຫາລິມະຊັບທີ່ລັດມອບໃຫ້ອົງການຈັດຕັ້ງ ແລະ ບຸກຄົນ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້.

**ລາຄາຕະຫລາດ** ໝາຍເຖິງ ລາຄາທີ່ຊື້ຂາຍກັນທົ່ວໄປໃນທ້ອງຖິ່ນໃດທ້ອງຖິ່ນໜຶ່ງ ຫລື ໃນເວລາ ໃດໜຶ່ງ.

**ລາຍຮັບ** ໝາຍເຖິງ ເງິນ, ຊັບສິນ, ຄ່າຕອບແທນ ຫລື ປະໂຫຍດຕ່າງໆ ທີ່ໄດ້ຈາກການປະກອບ ກິດຈະ ການໃດໜຶ່ງ ບໍ່ວ່າຈະເປັນພາຍໃນປະເທດ ຫລື ນອກປະເທດທີ່ເນື່ອງມາຈາກການປະກອບ ການ.

**ລົດຂົນສົ່ງຜູ້ໂດຍສານ ຫລື ຂົນສົ່ງຄົນຂະໜາດນ້ອຍ** ໝາຍເຖິງ ລົດຂົນສົ່ງທີ່ສາມາດບັນຈຸ ຜູ້ໂດຍສານ ຫລື ບັນຈຸຄົນແຕ່ສອງບ່ອນນັ່ງເຖິງເຈັດບ່ອນນັ່ງ.(ມາດຕາ9 ຂອງກົດມາຍວ່າດວ້ຍການ ຂົນສົ່ງທາງບົກ).

**ລົດຂົນສົ່ງຜູ້ໂດຍສານ ຫລື ຂົນສົ່ງຄົນຂະໜາດກາງ** ແມ່ນລົດຂົນສົ່ງທີ່ລົດຂົນສົ່ງທີ່ສາມາດ ບັນຈຸຜູ້ໂດຍສານ ຫລື ບັນຈຸຄົນ ເກີນກວ່າ ສາມສິບຫ້າບອ່ນນັ່ງ.( ມາດຕາ9 ຂອງກົດມາຍວ່າ ດວ້ຍການຂົນສົ່ງທາງບົກ).

**ລົດຂົນສົ່ງຜູ້ໂດຍສານ ຫລື ຂົນສົ່ງຄົນຂະໜາດໃຫຍ່** ໝາຍເຖິງ ລົດຂົນສົ່ງທີ່ສາມາດບັນຈຸ ຜູ້ໂດຍສານ ຫືລ ບັນຈຸຄົນເກີນກວ່າ ສາມສິບບ່ອນນັ່ງຂຶ້ນໄປ.(ມາດຕາ9 ຂອງກົດມາຍວ່າດວ້ຍການ ຂົນສົ່ງທາງບົກ).

**ລັດຖະການສ່ວຍສາອາກອນ** ໝາຍເຖິງ ການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງການເງິນ ມີຄວາມ ຮັບຜິດຊອບໃນການປະຕິບັດກົດໝາຍວ່າດ້ວຍສ່ວຍສາອາກອນ, ການເກັບລາຍຮັບສ່ວຍສາ

ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ (ມາດຕາ 4 ວັກ 1 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ).

**ລັດຖະການພາສີ** ໝາຍເຖິງ ການຈັດຕັ້ງໜຶ່ງທີ່ຂຶ້ນກັບຂະແໜງການເງິນ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິ ບັດກົດໝາຍວ່າດ້ວຍພາສີ, ການເກັບພາສີ ແລະ ພັນທະອື່ນໆ ທີ່ພົວພັນກັບການສົ່ງອອກ - ນຳເຂົ້າ, ການ ເຄື່ອນຍ້າຍ ແລະ ການເກັບມ້ຽນສິນຄ້າ, ເຄື່ອງຂອງ. (ມາດຕາ 4 ວັກ 1 ຂອງກົດໝາຍວ່າດ້ວຍພາສີ).

**ລະບຽນການແຈ້ງພາສີ** ໝາຍເຖິງ ລະບຽບການກ່ຽວກັບການນຳເອົາສິນຄ້າ, ເຄື່ອງຂອງໄປແຈ້ງຕໍ່ເຈົ້າໜ້າທີ່ພາສີ ໂດຍເຈົ້າຂອງສິນຄ້າ, ເຄື່ອງຂອງ ຫລື ຜູ້ທີ່ໄດ້ຮັບມອບສິດ ເພື່ອດຳເນີນຕາມຂັ້ນຕອນຂອງລະບຽບກົດໝາຍກ່ຽວກັບພາສີ(ມາດຕາ4 ວັກ5 ກົດໝາຍວ່າດ້ວຍພາສີ).

**ວິສາຫະກິດ** ໝາຍເຖິງ ການຈັດຕັ້ງດຳເນີນທຸລະກິດຂອງບຸກຄົນ ຫລື ນິຕິບຸກຄົນ ຊຶ່ງປະກອບດ້ວຍຊື່, ທຶນ, ການບໍລິຫານຈັດການ, ສຳນັກງານ ແລະ ໄດ້ຂຶ້ນທະບຽນວິສາຫະກິດ(ມາດຕາ2 ວັກ1 ກົດໝາຍວ່າດ້ວຍ ວິສາຫະກິດ).

**ວິສາຫະກິດສ່ວນບຸກຄົນ** ໝາຍເຖິງ ຮູບການວິສາຫະກິດໜຶ່ງ ຊຶ່ງບຸກຄົນຜູ້ດຽວເປັນເຈົ້າກຳມະສິດ. ວິສາຫະກິດສ່ວນບຸກຄົນ ດຳເນີນທຸລະກິດໃນນາມສ່ວນຕົວຂອງເຈົ້າຂອງວິສາຫະກິດ ແລະ ຮັບຜິດຊອບຕໍ່ໜີ້ສິນຂອງວິສາຫະກິດທັງ ໝົດໂດຍບໍ່ຈຳກັດ.

**ວິສາຫະກິດຮຸ້ນສ່ວນ** ໝາຍເຖິງ ຮູບການສິສາຫະກິດໜຶ່ງ ຊຶ່ງສ້າງຕັ້ງຂຶ້ນບົນພື້ນຖານສັນຍາຂອງຜູ້ປະກອບທຶນແຕ່ສອງຄົນຂຶ້ນໄປ ເພື່ອນຳເອົາທຶນມາດຳເນີນທຸລະກິດຮ່ວມກັນ –ແນໃສ່ແບ່ງປັນຜົນກຳໄລ.

**ວິສາຫະກິດຮຸ້ນສ່ວນສາມັນ** ໝາຍເຖິງ ຮູບແບບວິສາຫະກິດຮຸ້ນສ່ວນໜຶ່ງ ຊຶ່ງຂາຮຸ້ນຮ່ວມກັນດຳເນີນທຸລະກິດ ໂດຍອີງໃສ່ຄວາມເຊື່ອໃຈຊຶ່ງກັນ ແລະ ກັນເປັນຕົ້ນຕໍ ແລະ ຂາຮຸ້ນທຸກຄົນຮ່ວມກັນຮັບຜິດຊອບຕໍ່ໜີ້ສິນຂອງວິສາ ຫະກິດ ໂດຍບໍ່ຈຳກັດ.

**ວິສາຫະກິດຮຸ້ນສ່ວນຈຳກັດ** ໝາຍເຖິງ ຮູບແບບວິສາຫະກິດຮຸ້ນສ່ວນໜຶ່ງ ຊຶ່ງຂາຮຸ້ນຈຳນວນໜຶ່ງ ຮັບຜິດຊອບຕໍ່ໜີ້ສິນຂອງວິສາຫະກິດ ໂດຍບໍ່ຈຳກັດ ເອີ້ນວ່າ "ຂາຮຸ້ນທົ່ວໄປ " ແລະອີກຈຳນວນໜຶ່ງຮັບຜິດຊອບແບບຈຳກັດ ເອີ້ນວ່າ "ຂາຮຸ້ນຈຳກັດໜີ້ສິນ".

**ວິສາຫະກິດປະກັນໄພ** ໝາຍເຖິງ ນິຕິບຸກຄົນທີ່ດຳເນີນທຸລະກິດປະກັນໄພ ຫລື ລະດົມການສະສົມທຶນ. (ມາດຕາ5 ວັກ1 ຂອງກົດໝາຍວ່າດ້ວຍການປະກັນໄພ).

**ວິສາຫະກິດການລົງທຶນຕ່າງປະເທດ** ໝາຍເຖິງ ວິສາຫະກິດລົງທຶນຕ່າງປະເທດຮ້ອຍສ່ວນຮ້ອຍ, ວິສາຫະກິດປະສົມ ແລະ ທຸລະກິດຮ່ວມຕາມສັນຍາທີ່ໄດ້ສ້າງຕັ້ງຂຶ້ນຢູ່ ສ ປ ປ ລາວ( ມາດຕາ 2 ວັກ 5 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ).

**ວິສາຫະກິດປະສົມ** ໝາຍເຖິງ ວິສາຫະກິດທີ່ສ້າງຕັ້ງ ແລະ ຂຶ້ນທະບຽນຕາມລະບຽບກົດໝາຍຂອງ ສ ປ ປ ລາວ ຊຶ່ງມີການດຳເນີນທຸລະກິດ ແລະ ເປັນກຳມະສິດຮ່ວມລະຫວ່າງຜູ້ລົງທຶນຕ່າງປະເທດ ແລະ ຜູ້ລົງທຶນພາຍໃນ (ມາດຕາ 7 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ ).

**ວິສາຫະກິດຕ່າງປະເທດຮ້ອຍສ່ວນຮ້ອຍ** ໝາຍເຖິງ ວິສາຫະກິດຂອງຕ່າງປະເທດທີ່ລົງທຶນແຕ່ຝ່າຍດຽວ ຊຶ່ງສ້າງຕັ້ງຢູ່ ສ ປ ປ ລາວ. (ມາດຕາ 8 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ).

**ຮຸ້ນ.**ໝາຍເຖິງ ທຶນຂອງວິສາຫະກິດຫຸ້ນສ່ວນ ຫລື ບໍລິສັດ ທີ່ແບ່ງອອກເປັນສ່ວນ ຊຶ່ງມີມູນຄ່າທີ່ບໍ່ເທົ່າກັນ ຫລື ເທົ່າກັນ ຂຶ້ນກັບຮູບແບບວິສາຫາກິດ ຫລື ບໍລິສັດ. (ມາດຕາ2 ວັກ14 ຂອງກົດໝາຍວ່າດ້ວຍວິ ສາຫະກິດ).

**ຮຸ້ນສາມັນ** ໝາຍເຖິງ ຫຸ້ນປະເພດໜຶ່ງ ຊຶ່ງຜູ້ເປັນເຈົ້າຂອງຮຸ້ນບໍ່ສາມາດຖອນຫຸ້ນໄດ້. (ມາດຕາ2 ວັກ15 ຂອງກົດໝາຍວ່າດ້ວຍວິສາຫະກິດ).

**ຮຸ້ນບູລິມະສິດ** ໝາຍເຖິງ ຮຸ້ນປະເພດໜຶ່ງ ຊຶ່ງເຈົ້າຂອງຮຸ້ນສາມາດຖອນໄດ້, ມີສິດ ແລະ ໜ້າທີ່ສະເພາະແຕກຕ່າງຈາກຮຸ້ນສາມັນ. (ມາດຕາ2 ວັກ16 ຂອງກົດໝາຍວ່າດ້ວຍວິສາຫະກິດ).

**ອາຫານ** ໝາຍເຖິງ ວັດຖຸໃດໜຶ່ງ ທີ່ຄົນເຮົາກິນ, ດື່ມ ຊຶ່ງຢູ່ໃນຮູບແບບສົດ, ສຸກ, ດິບ ຫລື ໄດ້ຜ່ານການປຸງ ແຕ່ງແລ້ວຍົກເວັ້ນຢາປົວພະຍາດ (ມາດຕາ2 ຂອງກົດໝາຍວ່າດ້ວຍອາຫານ).

**ອາຫານເຈືອປົນ** ໝາຍເຖິງ ອາຫານທີ່ເພີ້ມວັດຖຸໃດໜຶ່ງເຂົ້າ ຫລື ເອົາວັຖຸໃດໜຶ່ງອອກ, ເພີ້ມທາດອື່ນແທນ ຊຶ່ງເຮັດໃຫ້ອາຫານບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ ແລະ ອາດເປັນອັນຕະລາຍຕໍ່ສຸກຂະພາບຂອງຜູ້ບໍ ລິໂພກ (ມາດຕາ 4 ວັກ3 ຂອງກົດໝາຍວ່າດ້ວຍອາຫານ).

**ອາຫານປົນເປື້ອນ** ໝາຍເຖິງ ອາຫານທີ່ມີເຊື້ອພະຍາດ, ສານເຄມີເປັນພິດ, ວັດຖຸແປກປົນ ຫລື ສານອື່ນໆ ທີ່ປົນຢູ່ໃນອາຫານໃນປະລິມານ ຫລື ຈຳນວນເກີນຂອບເຂດມາດຕະຖານ ຊຶ່ງຈະເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ(ມາດຕາ4 ວັກ4 ຂອງກົດໝາຍວ່າດ້ວຍອາຫານ).

**ອາຫານປອມ** ໝາຍເຖິງ ອາຫານທີ່ນຳໃຊ້ເຄື່ອງໝາຍການຄ້າຂອງອາຫານອື່ນ ທີ່ໄດ້ຂຶ້ນທະບຽນຢ່າງເປັນທາງການແລ້ວ(ມາດຕາ 4 ວັກ6 ຂອງກົດໝາຍວ່າດ້ວຍອາຫານ).

**ອຸບັດຕິເຫດແຮງງານ** ໝາຍເຖິງ ໄພອັນຕະລາຍຢ່າງໃດຢ່າງໜຶ່ງ ທີ່ເກີດຂຶ້ນຊຶ່ງເຮັດໃຫ້ຜູ້ອອກແຮງງານໄດ້ຮັບບາດເຈັບ, ພິການ, ເສຍອົງອະ ຫລື ເສຍຊີວິດ. (ມາດຕາ51 ຂອງກົດໝາຍແຮງງານ) .

**ອາກອນຕົວເລກທຸລະກິດ** ໝາຍເຖິງ ອາກອນທາງອ້ອມ ຊຶ່ງຜູ້ຊົມໃຊ້ສິນຄ້າ, ເຄື່ອງຂອງ ຫລື ການບໍລິການທົ່ວໄປ ຕ້ອງເສຍພັນທະເຂົ້າງົບປະມານແຫ່ງລັດ ຜ່ານຜູ້ດຳເນີນກິດຈະການຕ່າງໆ. (ມາດຕາ 10 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ).

**ອາກອນຕໍ່າສຸດ** ໝາຍເຖິງ ອາກອນທາງກົງ ຊຶ່ງເປັນພັນທະຕໍ່າສຸດຂອງຜູ້ດຳເນີນທຸລະກິດ ແລະ ຜູ້ປະກອບອາຊີບອິດສະລະ ທີ່ເສຍອາກອນກຳໄລຕາມລະບົບຖືບັນຊີແບບຂະຫຍາຍຕົວ ຫລື ແບບທຳມະດາ ທີ່ແຈ້ງຂາດທຶນຫລື ມີກຳໄລບໍ່ເຖິງລະດັບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. (ມາດຕາ 48 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ).

**ອາກອນລາຍໄດ້**.ໝາຍເຖິງ ອາກອນທາງກົງ ຊຶ່ງເກັບຈາກລາຍໄດ້ຂອງບຸກຄົນ ຫລື ນິຕິບຸກຄົນທີ່ມີລາຍໄດ້ ຕາມທີ່ ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້. (ມາດຕາ 54 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ).

**ອາຫານທີ່ມີຄວາມປອດໄພ** ໝາຍເຖິງ ອາຫານທີ່ປາສະຈາກການປົດເປື້ອນຂອງເຊື້ອພະຍາດ. ສານເຄມີເປັນພິດ ຫລື ວັດຖຸເຈືອປົນ ທີ່ເປັນອັດຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ. (ມາດຕາ 14 ຂອງກົດໝາຍວ່າດ້ວຍອາຫານ).

**ອາຫານທີ່ມີອະນາໄມ** ໝາຍເຖິງ ອາຫານທີ່ໄດ້ຜະລິດດ້ວຍການນຳໃຊ້ທຸກເງື່ອນໄຂ ແລະ ມາດຕະການທີ່ຈຳເປັນ ເພື່ອຮັບປະກັນຄວາມສະອາດ ແລະ ມີຄວາມປອດໄພຂອງອາຫານໃນທຸກຂັ້ນຕອນຂອງກິດຈະການອາຫານ ເລີ່ມຈາກການຜະລິດ, ປຸງແຕ່ງ, ຫຸ້ມຫໍ່, ບໍລິການ ແລະ ອື່ນໆ ຈົນໄປເຖິງການບໍລິໂພກ(ມາດຕາ 15 ຂອງກົດໝາຍວ່າດ້ວຍອາຫານ).

**ອາຫານທີ່ມີທາດບຳລຸງ , ຫລໍ່ລ້ຽງ** ໝາຍເຖິງ ອາຫານທີ່ປະກອບດ້ວຍສານທີ່ໃຫ້ພະລັງງານ , ສານທີ່ເສີມສ້າງຮ່າງກາຍ ແລະ ເຮັດໃຫ້ຮ່າງກາຍມີຄວາມສົມດູນໃນການດຳລົງຊີວິດເຊັ່ນ : ທາດແປ້ງ, ໂປຣເຕອີນ, ນ້ຳມັນສັດ, ນ້ຳມັນພືດ, ວິຕາມິນ, ເກືອແຮ່ ແລະ ສານອື່ນໆ ທີ່ມີທາດບຳລຸງ, ຫຼໍ່ລ້ຽງ(ມາດຕາ 16 ຂອງກົດໝາຍວ່າດ້ວຍອາຫານ).

**ອິນເຕີເນັດ** ໝາຍເຖິງການເຊື່ອມຕໍ່ບັນດາລະບົບຕາໜ່າງຄອມພິວເຕີຕ່າງໆ ໃນທົ່ວໂລກໂດຍຜ່ານຕາໜ່າງໂທລະຄົມມະນາຄົມເພື່ອການສົ່ງ , ການຮັບ ແລະ ການແລກປ່ຽນຂໍ້ມູນ, ຂ່າວສານຕ່າງໆ. ( ມາດຕາ 2 ວັກ 8 ຂອງກົດໝາຍວ່າດ້ວຍການໂທລະຄົມມະນາຄົມ).

**ອຸດສາຫະກຳປຸງແຕ່ງ** ໝາຍເຖິງ ອຸດສາຫະກຳ ແລະ ຫັດຖະກຳ ກ່ຽວກັບກິດຈະການໂຮງງານຊຶ່ງໝາຍເຖິງການປ່ຽນ ແປງວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບຈາກສະພາບ ເດີມໄປ ສູ່ຜະລິດຕະພັນໃໝ່ດ້ວຍການນຳໃຊ້ເຄື່ອງຈັກ ຫລື ແຮງງານຄົນ ຢູ່ໃນໂຮງງານ ຫລື ສະຖານທີ່ອອກແຮງງານໃດໜຶ່ງກໍ່ໄດ້ຊຶ່ງຜະລິດຕະພັນ ເຫລົ່ານັ້ນ ສາ ມາດນຳເອົາໄປຈຳໜ່າຍເປັນສິນຄ້າໄດ້(ມາດຕາ2 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ).

**ອົງປະຊຸມ** ໝາຍເຖິງ ຈຳນວນຕ່ຳສຸດຂອງຜູ້ເຂົ້າຮ່ວມປະຊຸມ ຊຶ່ງອະນຸຍາດໃຫ້ເປີດກອງປະຊຸມໃດໜຶ່ງຂຶ້ນ.

# ຄວາມຫມາຍຄຳສັບກົດໝາຍແພ່ງ

**ກົດໝາຍ** ກົດຫມາຍແມ່ນນິຕິກຳຂອງສະພາແຫ່ງຊາດຊຶ່ງກຳນົດຫລັກການ, ນະໂຍບາຍ, ລະບຽບການ, ກົດຂໍ້ບັງຄັບ ແລະມາດຕະການ ແນໃສ່ດັດປັບສາຍພົວພັນສັງຄົມໃນຂົງເຂດໃດໜຶ່ງທີ່ສຳຄັນ, ມີຜົນບັງຄັບໃນຂອບເຂດທົ່ວປະເທດແລະນຳໃຊ້ຍາວນານ. ກົດຫມາຍແມ່ນສະພາແຫ່ງຊາດເປັນຜູ້ຮັບຮອງເອົາດ້ວຍຄະແນນສຽງສ່ວນຫລາຍຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ອີກຄວາມໝາຍໜຶ່ງ ກົດຫມາຍຫມາຍເຖິງບັນດາລະບຽບການທີ່ຜູ້ມີອຳນາດສູງສຸດ ສ້າງຂຶ້ນ ຫຼືເກີດຈາກຮີດຄອງປະເພນີທີ່ຫຼາຍຄົນຍອມຮັບ ແລະ ກົດຫມາຍນຳໃຊ້ເພື່ອບໍລິຫານປະເທດ ເພື່ອໃຫ້ທຸກຄົນປະຕິບັດຕາມ.

**ກົດໝາຍແພ່ງ** ໝາຍເຖິງ ກົດໝາຍທີ່ກຳນົດສາຍພົວພັນລະຫວ່າງບຸກຄົນດ້ວຍກັນ ກ່ຽວກັບສິດ ແລະ ພັນທະທີ່ມີລັກສະນະຊັບສົມບັດ ແລະສິດສ່ວນຕົວຂອງບຸກຄົນເຊັ່ນ: ສິດໃນການໃສ່ນາມສະກຸນ, ສິດໃນການສືບທອດມູນມໍຣະດົກ, ສິດເປັນເຈົ້າຂອງທາງດ້ານລິຂະສິດ, ສິດແລະພັນທະໃນສັນຍາ, ສິດໃນກຳມະສິດກ່ຽວຊັບສິນໃດໜຶ່ງ, ສິດ ແລະພັນທະລະຫວ່າງພໍ່ແມ່ກັບລູກ ຫລືສະມາຊິກຄອບຄົວດ້ວຍກັນ ເປັນຕົ້ນ.

**ກົດໝາຍສ່ວນບຸກຄົນ** ໝາຍເຖິງ ກົດໝາຍທີ່ກຳນົດສິດ ແລະພັນທະໃນສາຍພົວພັນລະຫວ່າງບຸກຄົນດ້ວຍກັນກ່ຽວກັບຊັບສົມບັດ ຫລື ສິດສ່ວນຕົວຂອງບຸກຄົນເຊັ່ນ: ກົດຫມາຍທີ່ກຳນົດກ່ຽວກັບສະພາບການເປັນບຸກຄົນຕາມກົດໝາຍ, ກົດຫມາຍທີ່ກຳນົດສິດ ແລະພັນທະຂອງບຸກຄົນ ກ່ຽວກັບຊັບສິນ, ກົດຫມາຍທີ່ກຳນົດສິດແລະພັນທະຂອງຄູ່ສັນຍາ, ກົດຫມາຍກ່ຽວກັບມູນມໍຣະດົກ, ກົດຫມາຍ ຊັບສິນທາງປັນຍາ, ກົດຫມາຍກຳມະສິດ ເປັນຕົ້ນ.

**ກຳມະສິດ** ໝາຍເຖິງ ກຳມະສິດ ແມ່ນສິດອັນຄົບຖ້ວນ ແລະເດັດຂາດຂອງລັດ, ລວມໝູ່, ເອກະເທດ, ເອກະຊົນ ແລະສ່ວນຕົວໃນການຄອບຄອງ, ນຳໃຊ້, ໄດ້ຮັບຫມາກຜົນ ແລະຊີ້ຂາດກ່ຽວກັບຊັບສິ່ງຂອງອັນໃດອັນຫນຶ່ງໃນຂອບເຂດທີ່ກົດຫມາຍໄດ້ກຳນົດໄວ້.

ອີກຄວາມຫມາຍຫນຶ່ງກຳມະສິດຫມາຍເຖິງສິດອັນເດັດຂາດຂອງຜູ້ເປັນເຈົ້າຂອງຊັບຊຶ່ງສາມາດຄຸ້ມຄອງ, ນຳໃຊ້ ແລະສິດຊີ້ຂາດກ່ຽວກັບຊັບສິນໃດຫນຶ່ງ.

**ກຳມະສິດຂອງລັດ** ຫມາຍເຖິງ ສິດໃນຊັບສົມບັດຂອງລັດ ຊຶ່ງຖືກຄຸ້ມຄອງດ້ວຍບັນດາຂໍ້ກຳນົດກົດໝາຍ, ຊັບສົມບັດຂອງລັດແມ່ນບັນດາພາຫະນະການຜະລິດທີ່ເປັນຂອງລັດ ຊຶ່ງປະກອບມີຊັບຄົງທີ່ ແລະຊັບເຄື່ອນທີ່ ທີ່ຖືກນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງລັດແນ່ໃສ່ຕອບສະຫນອງສິດຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ.

**ກຳມະສິດເອກະເທດ** ໝາຍເຖິງ ກຳມະສິດຂອງເຈົ້າຊັບນ້ອຍ, ຊາວກະສິກອນ, ນາຍຊ່າງ, ຊ່າງຫັດຖະກຳ ຊຶ່ງຖືກຄຸ້ມຄອງດ້ວຍບັນດາລະບຽບກົດໝາຍ ທີ່ຄ້ຳປະກັນໃນຄວາມອາດສາມາດໃນສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ ແລະ ສິດຊີ້ຂາດກ່ຽວກັບຊັບສິນບັດຂອງຕົນ.

**ກຳມະສິດເອກະຊົນ** ໝາຍເຖິງ ກຳມະສິດຂອງຫົວໜ່ວຍເສດຖະກິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ວິສາຫະກິດຊຶ່ງຖືກຄຸ້ມຄອງດ້ວຍກົດໝາຍ ແລະລະບຽບພາຍໃນຂອງຫົວໜ່ວຍເສດຖະກິດນັ້ນ, ສິດໃນກຳມະສິດເອກະຊົນແມ່ນຄວາມອາດສາມາດ ມີສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດຊີ້ຂາດກ່ຽວກັບຊັບສິນບັດທີ່ເປັນກຳມະສິດຂອງຕົນ.

**ກຳມະສິດສ່ວນຕົວ** ແມ່ນກຳມະສິດຂອງສ່ວນຕົວບຸກຄົນ ຊຶ່ງສະແດງອອກໃນຄວາມສາມາດມີສິດຄອບຄອງ, ນຳໃຊ້, ສິດໄດ້ຮັບໝາກຜົນ ແລະ ສິດຊີ້ຂາດກ່ຽວກັບຊັບສິນບັດຂອງຕົນ ເປົ້າໝາຍກຳມະສິດສ່ວນຕົວບຸກຄົນ ແມ່ນເຄື່ອງມືໃຊ້ສອຍປະຈຳວັນ, ທີ່ພັກອາໄສ, ລາຍໄດ້ທີ່ຫາມາດ້ວຍຕົນເອງ, ຊັບສິ່ງຂອງທີ່ໄດ້ມາດ້ວຍການສືບທອດ, ຊັບສິ່ງຂອງທີ່ໄດ້ມອບໃຫ້ບຸກຄົນສະເພາະ ແລະອື່ນໆ ສຳລັບການຄຸ້ມຄອງສິດດັ່ງກ່າວແມ່ນຖືກກຳນົດໄວ້ໃນຂໍ້ກຳນົດກົດໝາຍ.

**ກຳມະສິດລວມໝູ່** ໝາຍເຖິງ ກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນໆ (ສາມາຄົມ); ສິດໃນກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ ແມ່ນຖືກຄຸ້ມຄອງດ້ວຍຂໍ້ກຳນົດກົດໝາຍ ຫຼື ລະບຽບການສະເພາະ ທີ່ໄດ້ຄ້ຳປະກັນສິດຄອບຄອງ, ສິດນຳໃຊ້, ສິດໃນຮັບໝາກຜົນ ແລະ ສິດຊີ້ຂາດ ກ່ຽວກັບຊັບສິນບັດທີ່ເປັນກຳມະສິດຂອງລວມໝູ່.

**ກຳມະສິດຮ່ວມ** ໝາຍເຖິງ ສິດຂອງຫຼາຍຄົນໃນການເປັນເຈົ້າຂອງຊັບສິນອັນໃດອັນໜຶ່ງ.

**ການຍຸຕິທຳ** ໝາຍເຖິງ ວິທີການຄຸ້ມຄອງສິດ, ເສລີພາບ ແລະ ການໃຫ້ຄວາມເປັນທຳໃນ ກົດໝາຍ ໂດຍບຸກຄົນ, ອົງການ ຫຼືສະຖາບັນຕ່າງໆ ທີ່ມີໜ້າທີ່ໃນການບໍລິຫານວຽກງານຍຸຕິທຳເຊັ່ນ: ສານ, ໄອຍະການ, ຕຳຫຼວດ, ທະຫານ, ທະນາຍຄວາມ ແລະ ຜູ້ປົກປ້ອງກົດໝາຍອື່ນໆ.

**ການຄ້ຳປະກັນ** ໝາຍເຖິງ ການຮັບປະກັນການປະຕິບັດພັນທະດ້ວຍອະສັງຫາລິມະຊັບ ຫຼື ສັງຫາລິ ມະຊັບຂອງລູກໜີ້ ຫຼື ດ້ວຍຊັບຂອງບຸກຄົນອື່ນທີ່ຍອມຜູກພັນຕົນຕໍ່ເຈົ້າໜີ້ ເພື່ອໃຊ້ແທນໜີ້ສິນຕາງລູກໜີ້ທີ່ຕົນຄ້ຳປະກັນໄວ້ ໃນເມື່ອລູກໜີ້ຫາກລະເມີດສັນຍາ ຫຼື ກົດໝາຍ.

**ການດຳເນີນຄະດີແພ່ງ** ໝາຍເຖິງ ວິທີການ ຫຼືຂັ້ນຕອນການເຄື່ອນໄຫວຂອງສານ ແລະຜູ້ເຂົ້າຮ່ວມໃນການດຳເນີນຄະດີເຊັ່ນ : ຄູ່ຄວາມ, ພະຍານ, ທະນາຍຄວາມ, ໄອຍະການ ...ເພື່ອພິຈາລະນາແກ້ໄຂຂໍ້ຂັດແຍ່ງທາງແພ່ງ, ການຄ້າ, ຄອບຄົວ, ເດັກ ແລະຂໍ້ຂັດແຍ່ງອື່ນໆ

**ການສະເໜີ** ໝາຍເຖິງ ການແຈ້ງ ຫລື ການສະແດງເຈດຈຳນົງຂອງຕົນ ຕໍ່ບຸກຄົນອີກຝ່າຍໜຶ່ງວ່າຈະກະທຳ ຫຼື ບໍ່ກະທຳສິ່ງໃດໜຶ່ງ.

**ການຕອບຮັບ** ຫມາຍເຖິງການແຈ້ງຫລືການສະແດງເຈດຈຳນົງ ຕອບສະໜອງຕາມການສະເຫນີ ຂອງບຸກຄົນອີກຝ່າຍຫນຶ່ງ.

**ການຊວດຈຳ** ແມ່ນການຕົກລົງຂອງຄູ່ສັນຍາຊຶ່ງຝ່າຍໜຶ່ງ(ເອີ້ນວ່າ: ຜູ້ຊວດຈຳ) ໄດ້ນຳເອົາຊັບ ສິ່ງຂອງໄປຈຳໄວ້ນຳອີກຝ່າຍໜຶ່ງ (ເອີ້ນວ່າຜູ້ຮັບຊວດຈຳ) ເພື່ອຮັບປະກັນການໃຊ້ແທນໜີ້ສິນ ແລະ ຜູ້ຊວດຈຳມີສິດໄຖ່ເອົາຄືນຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນສັນຍາກູ້ຢືມ. (ມາດຕາ 25 ວັກ 1 ກົດໝາຍຂໍ້ຜູກພັນໃນສັນຍາ)

**ກັກຕຸນ** ໝາຍເຖິງ ການຄອບຄອງສິນຄ້າໄວ້ເກີນປະລິມານທີ່ຈຳເປັນໂດຍບໍ່ເອົາອອກຈຳໜ່າຍ

**ຂົ່ມຂືນໃຈ** ໝາຍເຖິງ ການກະທຳທີ່ເກີດຈາກຄວາມບໍ່ສະໝັກໃຈຂອງບຸກຄົນໃດຫນຶ່ງ ແຕ່ຈຳເປັນຕ້ອງຝືນໃຈປະຕິບັດເພາະບໍ່ສາມາດຫຼີກລ່ຽງຫຼືຂັດຂືນໄດ້ເຊັ່ນ: ບັງຄັບໃຫ້ລົງລາຍເຊັນມອບຊັບສິນ, ຂົ່ມຂືນໃຈໃຫ້ເຮັດໃນສິ່ງທີ່ບໍ່ຖືກກົດໝາຍ.

**ຂົ່ມຂູ່** ໝາຍເຖິງການເຮັດໃຫ້ຄົນອື່ນຢ້ານກົວວ່າຈະເກີດເກີດໄພອັນຕະລາຍ ຫລືເກີດຄວາມເສັຍຫາຍຕໍ່ຕົນເອງ, ຕໍ່ຄອບຄົວ ຫຼື ຍາດພີ່ນ້ອງ ຫຼື ຊັບສິນຂອງຕົນ.

**ຂາຍດ້ວຍວິທີປະມູນ** ໝາຍເຖິງ ການຂາຍຊັບສິນ ດ້ວຍວິທີເປີດໂອກາດໃຫ້ຜູ້ຊື້ຕໍ່ສູ້ລາຄາກັນຖ້າຜູ້ໃດໃຫ້ລາ ຄາສູງ ແລະ ຜູ້ຂາຍໄດ້ຕົກລົງສະແດງວ່າຜູ້ນັ້ນເປັນຜູ້ຊື້ຊັບສິນນັ້ນ.

**ຂາຍຝາກ** ໝາຍເຖິງ ການຊື້ຂາຍແບບຫນຶ່ງ ຊຶ່ງກຳມະສິດໃນຊັບສິນໄດ້ຍ້າຍໄປຫາຜູ້ຊື້ແຕ່ມີຂໍ້ຕົກລົງວ່າຜູ້ຂາຍຈະໄຖ່ເອົາຊັບນັ້ນຄືນພາຍໃນກຳນົດເວລາ.

**ຂາຍແບບມອບເໝົາ** ແມ່ນການຂາຍຊຶ່ງຜູ້ຊື້ຕົກ ລົງຊື້ຊັບສິນທັງໝົດທີ່ຜູ້ຂາຍ ສະເໜີຕາມທີ່ໄດ້ຕົກລົງກັນ.

**ຂອບເຂດສິດອຳນາດຂອງສານ** ໝາຍເຖິງ ຂອບເຂດດິນແດນ ແລະປະເພດຄະດີໃດໜຶ່ງທີ່ສານມີສິດພິຈາລະນາ.

**ຂອງກາງ** ຫມາຍເຖິງ ຊັບສິ່ງຂອງທີ່ຜູ້ລະເມີດໄດ້ນຳໃຊ້ ຫຼືມີໄວ້ຄອບຄອງ ເພື່ອໃຊ້ໃນການກະທຳຄວາມຜິດ ຫຼື ແມ່ນຊັບສິ່ງຂອງທີ່ໄດ້ມາຈາກການກະທຳຜິດ ຫຼື ຊັບທີ່ກ່ຽວຂ້ອງກັບການກະທຳຜິດ ຊຶ່ງເຈົ້າຫນ້າທີ່ຍຶດໄວ້ເພື່ອໃຊ້ເປັນຫລັກຖານ.

**ຂາຍທອດຕະຫລາດ** ຫມາຍເຖິງ ການຂາຍຊັບສິນທີ່ເຮັດແບບເປີດເຜີຍໃຫ້ແກ່ບຸກຄົນທົ່ວໄປດ້ວຍວິທີເປີດ ໂອກາດໃຫ້ຜູ້ຊື້ສູ້ລາຄາກັນ ຜູ້ໃດໃຫ້ລາຄາສູງ ແລະຜູ້ຂາຍຕົກລົງດ້ວຍການກະທຳ ຫຼື ສະແດງ ກິລິຍາໃດຫນຶ່ງເຊັ່ນ : ເຄາະໄມ້ ຕາມປະເພນີການຄ້າຖືວ່າຜູ້ນັ້ນເປັນຜູ້ຊື້ຊັບສິນ.

**ຄະດີ** ໝາຍເຖິງ ເລື່ອງທີ່ຂັດແຍ່ງ ຫຼືເລື່ອງກ່າວຫາກັນເຊັ່ນ: ຄະດີແພ່ງ, ຄະດີການຄ້າ, ຄະດີລົ້ມລະລາຍ, ຄະດີອາຍາ, ຄະດີເດັກ ແລະອື່ນໆ.

**ຄະດີແພ່ງ** ໝາຍເຖິງ ເລື່ອງທີ່ຂັດແຍ່ງກັນກ່ຽວກັບສິດສ່ວນຂອງບຸກຄົນ, ສິດໃນສາຍພົວພັນກ່ຽວກັບຊັບສິນບັດເຊັ່ນ : ຂໍ້ຂັດແຍ່ງກ່ຽວກັບກຳມະສິດ, ການລະເມີດລິຂະສິດ, ການລະເມີດສັນຍາ, ການຍາດແຍ່ງມູນມໍຣະດົກ, ການຢ່າຮ້າງ, ການເອົາເດັກມາເປັນລູກລ້ຽງ, ການຖືນາມສະກຸນ ແລະອື່ນໆ

**ຄະນະສານແພ່ງ** ຫມາຍເຖິງ ສານທີ່ມີສິດອຳນາດໃນການພິຈາລະນາຕັດສິນ ຫຼື ພິພາກສາຂໍ້ຂັດແຍ່ງ ກ່ຽວກັບກຳມະສິດ, ມູນມໍຣະດົກ, ລະເມີດສັນຍາ, ການທວງເອົາການໃຊ້ແທນຄ່າເສັຍຫາຍ, ຄ່າແຮງງານ ...

**ຄະນະສານຄອບຄົວ** ຫມາຍເຖິງ ສານທີ່ມີສິດອຳນາດໃນການພິຈາລະນາຕັດສິນ ຫຼື ພິພາກສາຂໍ້ຂັດແຍ່ງ ກ່ຽວກັບຄອບຄົວເຊັ່ນ : ການບໍ່ປະຕິບັດຕາມການສູ່ຂໍ, ການຮ່ວມປະເວນີກ່ອນການແຕ່ງດອງ, ການແຕ່ງດອງທີ່ເປັນໂມຄະ, ການຢ່າຮ້າງ, ການແບ່ງປັນສິນສົມສ້າງ, ການຮ້ອງຂໍຄ່າລ້ຽງດູຜົວ ຫລື ເມັຍ ຫລືລູກ, ການຮັບຮູ້ການເປັນສາຍຍາດ, ການຫາຍສາບສູນ, ການໃສ່ຊື່ ແລະນາມສະກຸນ ...

**ຄະນະສານເດັກ** ຫມາຍເຖິງ ສານທີ່ມີສິດອຳນາດໃນການພິຈາລະນາຕັດສິນ ຫຼື ພິພາກສາຂໍ້ຂັດແຍ່ງ ກ່ຽວກັບການກະທຳຂອງເດັກທີ່ມີອາຍຸຕ່ຳກວ່າສິບແປດປີເຊັ່ນ : ການລະເມີດສິດທິຂອງເດັກ, ຄະດີກ່ຽວກັບແຮງງານຂອງເດັກ, ຄະດີລະຫວ່າງເດັກດ້ວຍກັນ ...

**ຄະນະສານການຄ້າ** ຫມາຍເຖິງ ສານທີ່ມີສິດອຳນາດໃນການພິຈາລະນາຕັດສິນ ຫຼື ພິພາກສາຂໍ້ຂັດແຍ່ງ ກ່ຽວກັບເສດຖະກິດເຊັ່ນ : ສັນຍາທາງການຄ້າ, ການລົ້ມລະລາຍຂອງວິສາຫະກິດ, ການລະເມີດລິຂະສິດ ຫລືເຄື່ອງຫມາຍການຄ້າ ...

**ຄ່າເສຍຫາຍ** ໝາຍເຖິງຈຳນວນເງິນທີ່ຜູ້ກໍ່ຄວາມເສຍຫາຍຕ້ອງຈ່າຍ ໃຫ້ຜູ້ໄດ້ຮັບຄວາມເສຍຫາຍ.

**ຄ່າປ່ວຍການ** ຫມາຍເຖິງ ຈຳນວນເງິນທີ່ຜູ້ຖືກເສຍຫາຍສົມຄວນຕ້ອງໄດ້ຮັບຈາກການເສຍເວລາ, ເສຍໂອກາດໃນການເຄື່ອນໄຫວ.

**ຄ່າໄຖ່ຖອນ** ໝາຍເຖິງ ຈຳນວນເງິນ ຫລື ຊັບສິນ ຫລື ຜົນປະໂຫຍດໃດຫນຶ່ງ ທີ່ບຸກຄົນ ໃດໜຶ່ງຮຽກຮ້ອງເອົາເພື່ອເປັນການແລກປ່ຽນ.

**ຄ່າທົດແທນ** ໝາຍເຖິງ ຈຳນວນເງິນ ຫຼື ຊັບສິນທີ່ຜູ້ກໍ່ຄວາມເສຍຫາຍຕ້ອງທົດແທນ ກ່ຽວກັບຊັບສິນ ທີ່ເສຍຫາຍ.

**ຄ່າແຮງງານ** ໝາຍເຖິງ ຈຳນວນເງິນ ຫຼືຈຳນວນຊັບສິ່ງຂອງຊຶ່ງຈ່າຍເປັນຄ່າຕອບແທນ ເນື່ອງຈາກຜູ້ອອກແຮງງານໄດ້ເຮັດວຽກງານໃດໜຶ່ງໃຫ້ຜູ້ໃຊ້ແຮງງານຕາມທີ່ຜູ້ໃຊ້ແຮງງານ ແລະຜູ້ອອກແຮງງານໄດ້ຕົກລົງກັນເຊັ່ນ: ຈ່າຍເງິນເປັນມື້, ເປັນເດືອນ ຫຼືຈ່າຍເປັນໄລຍະເວລາໃດໜຶ່ງ.

**ຄົນບໍ່ມີຄວາມສາມາດທາງດ້ານການປະພຶດ** ໝາຍເຖິງ ເດັກທີ່ອາຍຸບໍ່ທັນເຖິງກະສຽນອາຍຸ (ສິບແປດປີ) ຕາມທີ່ກົດໝາຍກຳນົດໄວ້ ຫຼືບຸກຄົນທີ່ສານມີຄຳສັ່ງວ່າເປັນຄົນບ້າເສຍຈິດ.

**ຄົນທີ່ມີຄວາມສາມາດທາງດ້ານການປະພຶດ** ໝາຍເຖິງ ບຸກຄົນທີ່ສາມາດປະຕິບັດສິດ ແລະພັນທະດ້ວຍຕົນເອງ ຊຶ່ງບຸກຄົນນັ້ນ ຕ້ອງເຖິງກະສຽນອາຍຸຕາມທີ່ກົດໝາຍກຳນົດໄວ້, ບໍ່ເປັນບ້າເສຍຈິດ ຫຼືບຸກຄົນທີ່ສານມີຄຳສັ່ງໃຫ້ ສາມາດປະຕິບັດສິດ ແລະພັນທະດ້ວຍຕົນເອງໄດ້.

**ຄົນພິການ** ຫມາຍເຖິງ ຄົນທີ່ມີຮ່າງກາຍ, ຈິດໃຈ, ສະຕິປັນຍາທີ່ຜິດປົກກະຕິ.

**ຄວາມຮັບຜິດຊອບທາງແພ່ງ** ໝາຍເຖິງ ພັນທະທາງແພ່ງ ຊຶ່ງຕ້ອງກະທຳສິ່ງໃດໜຶ່ງທີ່ມີລັກສະນະແນ່ນອນ ເນື່ອງຈາກການລະເມີດສັນຍາ ຫລືລະເມີດກົດຫມາຍເຊັ່ນ: ຜູ້ລະເມີດສັນຍາຈ່າຍເງິນປັບໄຫມຕາມສັນຍາ, ພໍ່ແມ່ໃຊ້ແທນຄ່າເສັຽຫາຍທີ່ລູກໄດ້ກໍ່ຂຶ້ນ, ການໃຊ້ແທນຄ່າເສັຽຫາຍຈາກການເຮັດ ໃຫ້ບຸກຄົນອື່ນໄດ້ຮັບບາດເຈັບ ເປັນຕົ້ນ.

**ຄວາມຮັບຜິດຊອບຕາມຂໍ້ຜູກພັນໃນສັນຍາ** ໝາຍເຖິງ ຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມໃນຂໍ້ຜູກພັນ ກ່ຽວກັບພັນທະທີ່ເກີດຂຶ້ນ ຈາກຂໍ້ຕົກລົງໃນສັນຍາ ເນື່ອງຈາກການບໍ່ປະຕິບັດພັນທະ ຫຼື ການປະຕິບັດພັນທະບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມກຳນົດເວລາ.

**ຄວາມຮັບຜິດຊອບຕາມຂໍ້ຜູກພັນນອກສັນຍາ** ຫມາຍເຖິງ ຄວາມຮັບຜິດຊອບທີ່ເນື່ອງມາຈາກຄວາມຜິດຂອງຕົນ, ຂອງບຸກຄົນອື່ນ, ຂອງສັດ ຫລື ວັດຖຸສິ່ງຂອງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

**ຄວາມຮັບຜິດຊອບເປັນພູດ ຫຼື ເປັນສ່ວນ** ຫມາຍເຖິງ ຄວາມຮັບຜິດຊອບຊຶ່ງລູກໜີ້ແຕ່ລະຄົນມີຄວາມຮັບຜິດຊອບຕາມພູດ ຫຼື ຕາມສ່ວນຂອງຕົນທີ່ກຳນົດໄວ້ໃນສັນຍາ ຫລືກົດຫມາຍ.

**ຄວາມຮັບຜິດຊອບຮ່ວມກັນ** ຫມາຍເຖິງ ຄວາມຮັບຜິດຊອບຕໍ່ໜີ້ສິນທັງໝົດຂອງລູກໜີ້ຮ່ວມກັນເຊັ່ນ: ຜົວເມັຽໄດ້ກູ້ຢືມເງິນມາໃຊ້ຈ່າຍເພື່ອຜົນປະໂຫຍດຂອງຄອບຄົວ ຜົວເມັຽຕ້ອງຮັບຜິດຊອບຮ່ວມກັນ, ລູກໄປກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນພໍ່ແມ່ຕ້ອງຮ່ວມກັນຮັບຜິດຊອບຮ່ວມກັນ, ຄວາມຮັບຜິດຊອບທີ່ເກີດຂຶ້ນໃນກໍລະນີຕ່າງໆຝ່າຍຕ່າງລະເມີດ ຊຶ່ງບໍ່ສາມາດແບ່ງຄວາມຜິດຂອງແຕ່ລະຝ່າຍ ໄດ້ ຈຶ່ງຕ້ອງເອົາຜົນເສັຽຫາຍທັງຫມົດ ມາແບ່ງຄວາມຮັບຜິດຊອບໃຫ້ເທົ່າກັນ.

**ຄວາມຮັບຜິດຊອບແບບເພີ່ມເຕີມ** ຫມາຍເຖິງ ຄວາມຮັບຜິດຊອບທີ່ຜູ້ກໍ່ຄວາມເສັຍຫາຍບໍ່ໄດ້ໃຊ້ແທນຄ່າເສັຍຫາຍດ້ວຍຕົນເອງທັງໝົດ ແຕ່ມີຜູ້ອື່ນມາຈ່າຍສ່ວນໃດຫນຶ່ງໃຫ້ເຊັ່ນ: ຜູ້ຄ້ຳປະກັນ

ຊຳລະໜີ້ສິນບາງສ່ວນຂອງລູກໜີ້, ລູກປະຕິບັດພັນທະທາງແພ່ງສ່ວນໃດສ່ວນໜຶ່ງດ້ວຍຕົນເອງ ສ່ວນທີ່ຍັງເຫຼືອແມ່ນພໍ່ແມ່ເປັນຜູ້ຮັບຜິດຊອບເພີ່ມເຕີມ.

**ຄວາມເສັຽຫາຍ** ຫມາຍເຖິງ ການເຮັດໃຫ້ຄຸນນະພາບ ຫຼື ປະລິມານຂອງສິ່ງໃດສິ່ງໜຶ່ງ ຫລຸດຫນ້ອຍລົງ ທາງດ້ານຄຸນຄ່າໃນສະພາບປົກກະຕິ. ຄວາມເສຍຫາຍສະແດງອອກໃນທາງຊັບສິ່ງຂອງ, ຊີວິດ, ສຸຂະພາບ, ຈິດໃຈຂອງບຸກຄົນອື່ນ.

**ຄອບຄອງ** ໝາຍເຖິງ ການຢຶດຖືໄວ້, ມີສິດໃນການຄຸ້ມຄອງ.

**ຄອບຄອງຊັບສິ່ງຂອງທີ່ຜິດກົດໝາຍດ້ວຍຄວາມບໍລິສຸດໃຈ** ຫມາຍເຖິງ ການຍຶດຖືຊັບ ໂດຍບຸກຄົນທີ່ບໍ່ຮູ້ ແລະ ບໍ່ອາດຈະຮູ້ໄດ້ວ່າຊັບສິ່ງຂອງທີ່ຕົນ ຄອບຄອງນັ້ນຍັງເປັນກຳມະສິດ ຂອງບຸກຄົນອື່ນຢູ່. ໃນກໍລະນີນີ້ຊັບສິ່ງຂອງທັງໝົດນັ້ນຕ້ອງໄດ້ ສົ່ງໃຫ້ເຈົ້າກຳມະສິດ ແລະເຈົ້າກຳມະສິດຕ້ອງຈ່າຍເງິນຄືນໃຫ້ຜູ້ຄອບຄອງນັ້ນ.

**ຄອບຄອງຊັບສິ່ງຂອງທີ່ຜິດກົດໝາຍດ້ວຍຄວາມບໍ່ບໍລິສຸດໃຈ** ຫມາຍເຖິງ ການຍຶດຖືຊັບ ໂດຍບຸກຄົນທີ່ຮູ້ ຫຼືອາດຈະຮູ້ໄດ້ວ່າຊັບສິ່ງຂອງທີ່ຕົນຄອບ ຄອງນັ້ນຍັງເປັນກຳມະສິດຂອງ ບຸກຄົນອື່ນຢູ່. ໃນກໍລະນີນີ້ຊັບສິ່ງຂອງທັງໝົດນັ້ນຕ້ອງໄດ້ຍຶດ ຈາກຜູ້ຄອບຄອງທີ່ຜິດກົດຫມາຍ ແລ້ວສົ່ງໃຫ້ເຈົ້າກຳມະສິດໂດຍບໍ່ມີການຈ່າຍເງິນຄືນໃຫ້. ຜູ້ຄອບຄອງ ຈະຕໍ່ວ່າເອົາການໃຊ້ແທນຄ່າເສັຍຫາຍ ຈາກຜູ້ທີ່ໄດ້ມອບຊັບສິ່ງຂອງໃຫ້ຕົນໂດຍບໍ່ຖືກຕ້ອງນັ້ນກໍໄດ້ແຕ່ບໍ່ສາມາດຮ້ອງຟ້ອງຕໍ່ສານ ເນື່ອງຈາກຕົນເອງຮູ້ເຖິງການຄອບຄອງທີ່ຜິດກົດຫມາຍນັ້ນ.

**ຄອບຄົວ** ໝາຍເຖິງ ຫົວໜ່ວຍພື້ນຖານຂອງລະບົບການປົກຄອງໃນສັງຄົມຊຶ່ງໂຄງສ້າງຕົ້ນຕໍ ຂອງຄອບຄົວປະກອບມີຜົວເມັຽ, ລູກ ຫລື ສາຍຍາດ.

**ຄຳກ່າວເຕືອນ** ຫມາຍເຖິງຂໍ້ຄວາມທີ່ບຸກຄົນຝ່າຍໜຶ່ງໄດ້ແຈ້ງເຈດຈຳນົງຂອງຕົນດ້ວຍວາຈາ ຫຼື ເປັນ ລາຍລັກອັກສອນກ່ຽວກັບເລື່ອງໃດຫນຶ່ງ ສົ່ງໄປໃຫ້ບຸກຄົນອີກຝ່າຍຫນຶ່ງເຊັ່ນ: ການແຈ້ງເຕືອນ ຈາກເຈົ້າຫນີ້ຕໍ່ລູກຫນີ້ກ່ຽວກັບກຳນົດເວລາຂອງສັນຍາ, ການແຈ້ງຂໍຍົກເລີກສັນຍາ, ການແຈ້ງ ຄວາມຫຍຸ້ງຍາກໃນການຊຳລະຫນີ້ສິນ ເປັນຕົ້ນ.

**ຄ້ຳປະກັນຕາມສັນຍາ** ຫມາຍເຖິງການຕົກລົງຮັບປະກັນໃຊ້ແທນຫນີ້ສິນ ລະຫວ່າງເຈົ້າຫນີ້ກັບລູກຫນີ້ດ້ວຍຊັບ ຫຼື ການຕົກລົງໃຊ້ຫນີ້ສິນຕາງລູກຫນີ້ ຊຶ່ງອາດຈະແມ່ນບຸກຄົນ ຫຼື ນິຕິບຸກຄົນໃດຫນຶ່ງໃນກໍລະນີ ລູກຫນີ້ ຫາກບໍ່ປະຕິບັດຕາມສັນຍາ.

**ຄ້ຳປະກັນຕາມກົດຫມາຍ** ຫມາຍເຖິງ ການຮັບປະກັນໃຊ້ແທນໜີ້ສິນ ຫຼື ພັນທະອື່ນໆທີ່ໄດ້ກຳນົດໄວ້ໃນກົດຫມາຍ ໂດຍອີງໃສ່ເຫດຜົນທາງດ້ານມະນຸດສະທຳ ແລະ ທາງດ້ານຜົນປະໂຫຍດ ລວມ ຂອງຊາດເຊັ່ນ: ການຈ່າຍຄ່າແຮງງານ, ເງິນເດືອນ ຫຼື ຜົນປະໂຫຍດອື່ນໆ ຕາມທີ່ໄດ້ ກຳນົດໄວ້ໃນກົດໝາຍ ແຮງງານ, ການເສັຍພາສີ - ອາກອນ ແລະ ການຈ່າຍອື່ນໆ ເພື່ອຮັບປະກັນ

ຜົນປະໂຫຍດຂອງ ຊາດ ຊຶ່ງບໍ່ກວມເອົາໜີ້ສິນ ຫຼື ຜົນປະໂຫຍດອື່ນໆ ທີ່ເກີດຈາກສັນຍາລະຫວ່າງລັດກັບບຸກຄົນ ຫຼື ການຈັດຕັ້ງອື່ນໆ.

**ຄໍ້າປະກັນດ້ວຍຊັບ** ຫມາຍເຖິງ ການຕົກລົງລະຫວ່າງເຈົ້າຫນີ້ກັບລູກຫນີ້ ຊຶ່ງລູກຫນີ້ໄດ້ ເອົາຊັບ ຫຼື ເອກະສານ ຢັ້ງຢືນຊັບໄປໄວ້ໃນການຄອບຄອງຂອງເຈົ້າຫນີ້ ຫຼື ໄວ້ນໍາບຸກຄົນອື່ນ ທີ່ໄດ້ຮັບມອບຫມາຍ ໂດຍ ເຈົ້າຫນີ້ມີບຸລິມະສິດໄດ້ຮັບການໃຊ້ແທນຫນີ້ສິນດ້ວຍຊັບທີ່ຄໍ້າປະກັນນັ້ນ.

**ຄໍ້າປະກັນດ້ວຍບຸກຄົນ** ຫມາຍເຖິງ ບຸກຄົນໃດຫນຶ່ງໄດ້ເຮັດສັນຍາຄໍ້າປະກັນຢ່າງເປັນລາຍລັກອັກສອນ ໂດຍ ຕົກລົງໃຊ້ແທນຫນີ້ສິນ ຫຼືປະຕິບັດພັນທະອື່ນຕາງລູກຫນີ້ ໃນກໍລະນີທີ່ລູກຫນີ້ຫາກບໍ່ສາມາດ ໃຊ້ແທນຫນີ້ສິນ ຫຼືບໍ່ສາມາດປະຕິບັດພັນທະອື່ນດ້ວຍຕົນເອງ.

**ຄໍ້າປະກັນດ້ວຍນິຕິບຸກຄົນ** ຫມາຍເຖິງ ນິຕິບຸກຄົນໃດຫນຶ່ງໄດ້ເຮັດສັນຍາຄໍ້າປະກັນຢ່າງ ເປັນລາຍລັກອັກສອນ ໂດຍຕົກລົງໃຊ້ແທນຫນີ້ສິນ ຫຼືປະຕິບັດພັນທະອື່ນຕາງລູກຫນີ້ ໃນກໍລະນີທີ່ລູກຫນີ້ຫາກບໍ່ ສາມາດໃຊ້ແທນຫນີ້ສິນ ຫຼືບໍ່ສາມາດປະຕິບັດພັນທະອື່ນດ້ວຍຕົນເອງ.

**ຄໍາຮ້ອງຟ້ອງ** ຫມາຍເຖິງ ເອກະສານຂອງບຸກຄົນ, ອົງການຈັດຕັ້ງ ຫຼືວິສາຫະກິດທີ່ພັນລະນາເຫດການຂອງຄະດີ ທີ່ຍື່ນຕໍ່ສານເພື່ອພິຈາລະນາຕັດສິນ ໂດຍອ້າງວ່າຕົນໄດ້ຮັບຄວາມເສັຍຫາຍຍ້ອນຖືກຜູ້ອື່ນລະເມີດ ຫຼືໂຕ້ແຍ່ງສິດຫລືຜົນປະໂຫຍດຂອງຕົນ

**ຄໍາແກ້ຟ້ອງ** ຫມາຍເຖິງ ເອກະສານຂອງຈໍາເລີຍທີ່ຍື່ນຕໍ່ສານ ເພື່ອແກ້ຄໍາຮ້ອງຟ້ອງ ຂອງໂຈດທີ່ຍື່ນ ຟ້ອງຕົນກ່ອນ ໂດຍອ້າງວ່າຄໍາຮ້ອງຟ້ອງຂອງໂຈດບໍ່ມີມູນຄວາມຈິງ ຫຼືໂຈດຮ້ອງຂໍ ເອົາຄ່າເສັຍຫາຍ ຫຼືທວງເອົາຊັບສິ່ງຂອງເກີນຄວາມເປັນຈິງ ຫຼືຂາດເຫດການໃດຫນຶ່ງ.

**ຄໍາຟ້ອງແຍ່ງ** ຫມາຍເຖິງ ເອກະສານຂອງຈໍາເລີຍທີ່ຍື່ນຕໍ່ສານ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນໂດຍອ້າງວ່າໂຈດໄດ້ລະເມີດ ຫລືຍັງມີພັນທະປະຕິບັດຕໍ່ຕົນ ເພື່ອໃຫ້ສານພິຈາລະນາໄປພ້ອມກັນ.

**ຄໍາຫມັ້ນໝາຍ** ຫມາຍເຖິງ ຄໍາຮັບຮອງຊຶ່ງບຸກຄົນໃດຫນຶ່ງໄດ້ກ່າວໄວ້ວ່າຈະເຮັດສິ່ງໃດສິ່ງຫນຶ່ງຢ່າງແນ່ ນອນເຊັ່ນ: ຄໍາຫມັ້ນໝາຍວ່າຈະມາສູ່ຂໍ, ຄໍາຫມັ້ນໝາຍວ່າຈະໃຫ້ລາງວັນເປັນຕົ້ນ.

**ຄູ່ຄວາມໃນຄະດີແພ່ງ** ຄູ່ຄວາມໃນຄະດີແພ່ງແມ່ນໂຈດ ແລະ ຈໍາເລີຍ. *(ເບິ່ງໂຈດ ແລະຈໍາເລີຍ)*

**ຄູ່ຂັດແຍ່ງ** ຫມາຍເຖິງ ບຸກຄົນສອງຝ່າຍທີ່ມີການໂຕ້ແຍ່ງກັນໃນເລື່ອງໃດເລື່ອງໜຶ່ງ.

**ຄູ່ສັນຍາ** ຫມາຍເຖິງ ບຸກຄົນທີ່ເຂົ້າຮ່ວມເຮັດສັນຍານໍາກັນ ຊຶ່ງປະກອບດ້ວຍເຈົ້າຫນີ້, ລູກຫນີ້.

**ຄູ່ຫມັ້ນ** ຫມາຍເຖິງ ຊາຍ ແລະ ຍິງ ຊຶ່ງຫມັ້ນຫມາຍວ່າຈະແຕ່ງດອງກັນ.

**ເຄື່ອງໝາຍການຄ້າ** ໝາຍເຖິງ ສັນຍາລັກໜຶ່ງ ທີ່ໄດ້ນຳໃຊ້ເປັນເຄື່ອງໝາຍຂອງຜະລິດຕະພັນສິນຄ້າ ຫລືໃຊ້ກັບການບໍລິການໃດໜຶ່ງຊຶ່ງສະແດງໃຫ້ເຫັນວ່າຜະລິດຕະພັນ ແລະການບໍລິການນັ້ນແມ່ນຂອງເຈົ້າຂອງເຄື່ອງໝາຍການຄ້າທີ່ສ້າງຂຶ້ນ.

**ເຄຫະ** ໝາຍເຖິງ ເຮືອນ ຫຼື ສິ່ງປຸກສ້າງທີ່ໃຊ້ເປັນທີ່ຢູ່ອາໄສ ຫຼື ນຳໃຊ້ເພື່ອຜົນປະໂຫຍດ ໃດໜຶ່ງ.

**ເຄຫະສະຖານ** ໝາຍເຖິງ ເຮືອນຢູ່ ແລະສິ່ງຕ່າງໆ ທີ່ຕັ້ງຢູ່ໃນບໍລິເວນເດີ່ນບ້ານ ຫລືເຂດແດນໃດໜຶ່ງ, ເຮືອ, ແພ, ທີ່ໃຊ້ເປັນບ່ອນຢູ່ປະຈຳຂອງຄອບຄົວ, ສຳນັກງານ, ເຮືອນພັກ, ໂຮງແຮມ...

**ເງິນຕາ** ໝາຍເຖິງ ເງິນທີ່ລັດກຳນົດຂຶ້ນເພື່ອການໃຊ້ຈ່າຍໃນການຊຳລະໜີ້ສິນຕາມກົດໝາຍເຊັ່ນ: ເງິນກີບ, ເງິນຫລຽນ ຫຼື ອາດຈະເປັນທະນະບັດກໍໄດ້.

**ເງິນທົດແທນ** ໝາຍເຖິງ ຈຳນວນເງິນທີ່ຜູ້ໃຊ້ແຮງງານຕ້ອງຈ່າຍໃຫ້ຜູ້ອອກແຮງງານ ຫຼື ໃຫ້ຜູ້ ທີ່ມີສິດ ໄດ້ຮັບການທົດແທນເຊັ່ນ: ພໍ່, ແມ່, ຜົວ ຫຼື ເມັຍ, ລູກ ແລະ ອື່ນໆໃນກໍລະນີທີ່ຫາກຜູ້ອອກແຮງງານເກີດໄພອັນຕະລາຍ ຫຼື ເຈັບເປັນ.

**ເງິນປັນຜົນ** ໝາຍເຖິງ ເງິນແບ່ງປັນໃຫ້ຂາຫຸ້ນ ຫຼືຜູ້ຖືຫຸ້ນຊຶ່ງໄດ້ຈາກກຳໄລສຸດທິຂອງວິສາຫະກິດຫລືບໍລິສັດຕ່າງໆ ພາຍຫລັງຫັກຕົ້ນທຶນ ແລະຄ່າໃຊ້ຈ່າຍອື່ນໆອອກແລ້ວ.

**ເງື່ອນໄຂຂອງສັນຍາ** ໝາຍເຖິງ ຂໍ້ຄວາມທີ່ກຳນົດ ຫຼືຫລັກການທີ່ວາງໄວ້ ເພື່ອໃຫ້ຜູ້ເຮັດສັນຍາໃຊ້ເປັນຂໍ້ອ້າງອີງໃນການເຮັດສັນຍາ ເພື່ອໃຫ້ເກີດຂໍ້ຜູກພັນໃດໜຶ່ງ ຫຼື ເຮັດໃຫ້ສັນຍານັ້ນປ່ຽນແປງຫລື ສິ້ນສຸດ.

**ເງື່ອນໄຂທີ່ຈະມາເຖິງ** ໝາຍເຖິງ ຂໍ້ຄວາມທີ່ກຳນົດໄວ້ເພື່ອເຮັດໃຫ້ສັນຍານັ້ນມີຜົນສົມບູນເມື່ອເງື່ອນໄຂ ນັ້ນມາເຖິງ.

**ເງື່ອນໄຂລົບລ້າງ** ໝາຍເຖິງ ຂໍ້ຄວາມທີ່ກຳນົດໄວ້ເພື່ອເຮັດໃຫ້ສັນຍານັ້ນສິ້ນສຸດ ໃນເມື່ອເງື່ອນໄຂນັ້ນສຳເລັດ.

**ຍາດສາຍຕັ້ງ** ໝາຍເຖິງ ລຳດັບຍາດໃກ້ຊິດ ຊຶ່ງນັບແຕ່ພໍ່ແມ່ຂຶ້ນໄປ ແລະນັບແຕ່ພໍ່ແມ່ລົງມາເຊັ່ນ: ພໍ່ແມ່, ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ທວດ ຫລື ພໍ່ແມ່, ລູກ, ຫລານ, ເຫລັນ ລົງມາ.

**ຍາດສາຍຂວາງ** ໝາຍເຖິງ ສາຍຍາດພີ່ນ້ອງທີ່ບໍ່ແມ່ນຍາດສາຍຕັ້ງ ເຊັ່ນ : ລຸງ, ປ້າ, ອາວ, ອາ, ນ້າສາວ, ນ້າບ່າວ,

**ຈັບຈ່ອງ, ຈັບຈອງ** ໝາຍເຖິງ ການເຂົ້າໄປຄອບຄອງສິ່ງໃດສິ່ງໜຶ່ງ ເພື່ອເປັນເຈົ້າກຳມະສິດ.

**ຈຳເລີຍ** ( *ທາງແພ່ງ* ) ໝາຍເຖິງ ບຸກຄົນ, ອົງການຈັດຕັ້ງ ຫຼືວິສາຫະກິດທີ່ຖືກຮ້ອງຟ້ອງຕໍ່ສານວ່າໄດ້ລະເມີດ ຫຼື ໂຕ້ແຍ່ງສິດຂອງບຸກຄົນອື່ນ.

**ໂຈດທາງແພ່ງ** ຫມາຍເຖິງ ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດທີ່ຍື່ນຄຳຮ້ອງຟ້ອງທາງແພ່ງຕໍ່ສານວ່າສິດຂອງຕົນໄດ້ຖືກຜູ້ອື່ນລະເມີດ ຫຼື ໂຕ້ແຍ່ງ ເພື່ອໃຫ້ຜູ້ຖືກຫາ ຫລືຈຳເລີຍ ຫລືຜູ້ຮັບຜິດຊອບທາງແພ່ງ ໃຊ້ແທນຄ່າເສັຍຫາຍໃຫ້ແກ່ຕົນ.

**ເຈົ້າຂອງ** ຫມາຍເຖິງ ຜູ້ມີກຳມະສິດໃນຊັບສິນຂອງຕົນ.

**ເຈົ້າມູນມໍຣະດົກ** ຫມາຍເຖິງ ຜູ້ທີ່ເສັຍຊີວິດ ຊຶ່ງມີຊັບສິນຕົກທອດແກ່ຜູ້ສືບທອດ.

**ເຈົ້າຫນີ້** ຫມາຍເຖິງ ຜູ້ທີ່ມີສິດທວງໃຫ້ລູກຫນີ້ປະຕິບັດພັນທະເຮັດສິ່ງໃດຫນຶ່ງທີ່ແນ່ນອນ.

**ສະພາບການເປັນບຸກຄົນ** ຫມາຍເຖິງ ການມີຖານະເປັນບຸກຄົນທົ່ວໄປ ທີ່ກົດຫມາຍຮັບຮູ້ນັບແຕ່ມື້ເກີດຈົນເຖິງ ມື້ເສັຽຊີວິດ.

**ສະມາຄົມ** ຫມາຍເຖິງ ການຮວມຕົວຂອງບຸກຄົນທີ່ມີອາຊີບ ຫລືກິດຈະກຳຄ້າຍຄືກັນ ເພື່ອສ້າງເປັນອົງການຈັດຕັ້ງ ຫລືເປັນນິຕິບຸກຄົນ ໂດຍມີຄວາມມຸ້ງຫວັງເຄື່ອນໄຫວຈຸດປະສົງໃດຫນຶ່ງ ຮ່ວມກັນ.

**ສັນຍາ** ຫມາຍເຖິງ ການຕົກລົງລະຫວ່າງບຸກຄົນກັບບຸກຄົນ, ບຸກຄົນກັບອົງການຈັດຕັ້ງ ແລະ ລະຫວ່າງອົງການຈັດຕັ້ງດ້ວຍກັນ, ຊຶ່ງພາໃຫ້ສິດ ແລະ ພັນທະທາງແພ່ງເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ.

**ສັນຍາທີ່ເປັນໂມຄະ** ໝາຍເຖິງ ສັນຍາທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມເງື່ອນໄຂຂອງການເຮັດສັນຍາ.

**ສັນຍາທີ່ເປັນໂມຄະເດັດຂາດ** ຫມາຍເຖິງ ສັນຍາທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມເງື່ອນໄຂຂອງການເຮັດສັນຍາ ແລະ ສັນຍານັ້ນໄດ້ພົວພັນເຖິງສິດ, ຜົນປະໂຫຍດລວມຂອງລັດ ຫຼືຂອງສັງຄົມໂດຍຄູ່ສັນຍາບໍ່ມີສິດຕົກລົງແລະຮັບຮອງເອົາສັນຍາທີ່ເປັນໂມຄະເດັດຂາດນັ້ນໄດ້ແຕ່ຢ່າງໃດ. ສັນຍາທີ່ເຮັດຂຶ້ນໂດຍຂັດກັບຜົນປະໂຫຍດຂອງລັດ ຫຼືຂອງສັງຄົມເຊັ່ນ : ສັນຍາທີ່ເຮັດຂຶ້ນໂດຍນິຕິບຸກຄົນຊຶ່ງຂັດກັບກົດລະບຽບກ່ຽວກັບການຈັດຕັ້ງ ແລະການເຄື່ອນໄຫວຂອງຕົນ, ສັນຍາທີ່ເຮັດຂຶ້ນໂດຍການ ເຊື່ອງອຳ, ສັນຍາທີ່ເຮັດຂຶ້ນດ້ວຍການລະເມີດຮູບການຂອງສັນຍາ.

**ສັນຍາທີ່ເປັນໂມຄະບໍ່ເດັດຂາດ** ຫມາຍເຖິງ ສັນຍາທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມເງື່ອນໄຂຂອງການເຮັດສັນຍາແລະ ສັນຍານັ້ນໄດ້ພົວພັນເຖິງສິດ ແລະຜົນປະໂຫຍດຂອງບຸກຄົນເທົ່ານັ້ນ ສັນຍາທີ່ເປັນໂມຄະບໍ່ເດັດຂາດຫາກມີການເຫັນດີ ຫຼືຮັບຮອງເອົາຈາກຝ່າຍທີ່ເສັຽສິດ ແລະຜົນປະໂຫຍດແລ້ວກໍຈະຖືວ່າເປັນສັນຍາທີ່ໃຊ້ໄດ້ເຊັ່ນ : ສັນຍາທີ່ເຮັດຂຶ້ນດ້ວຍການຕົວະຍົວະຫລອກລວງ ຫຼື ບັງຄັບນາບຂູ່ ຫຼື ເຮັດຂຶ້ນໂດຍຝ່າຍໜຶ່ງໄດ້ຮັບຄວາມອັບປະໂຫຍດ, ສັນຍາທີ່ເຮັດຂຶ້ນໂດຍຜູ້ທີ່ບໍ່ມີ

ຄວາມສາມາດທາງດ້ານການປະພຶດ, ສັນຍາທີ່ເຮັດຂຶ້ນໂດຍບຸກຄົນທີ່ຂາດສະຕິສຳນຶກ, ສັນຍາທີ່ເຮັດຂຶ້ນໂດຍເຈດຕະນາບໍ່ດີຂອງຜູ້ຕາງໜ້າ, ສັນຍາທີ່ເຮັດຂຶ້ນດ້ວຍຄວາມຈຳເປັນໃນສະພາບການທີ່ໜັກໜ່ວງເປັນພິເສດ.

**ສັນຍາທີ່ເປັນໂມຄະທັງໝົດ** ໝາຍເຖິງສັນຍາທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມເງື່ອນໄຂຂອງການເຮັດສັນຍາແລະສາເຫດທີ່ພາໃຫ້ເປັນໂມຄະນັ້ນພົວພັນກັບທຸກພາກສ່ວນຂອງສັນຍາ ກໍຈະຖືວ່າສັນຍານັ້ນເປັນໂມຄະທັງໝົດ ແລະຈະໃຊ້ບໍ່ໄດ້.

**ສັນຍາທີ່ເປັນໂມຄະບາງສ່ວນ** ໝາຍເຖິງສັນຍາທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມເງື່ອນໄຂຂອງການເຮັດສັນຍາແລະສາເຫດທີ່ພາໃຫ້ເປັນໂມຄະນັ້ນ ຫາກພົວພັນກັບພາກສ່ວນໃດພາກສ່ວນໜຶ່ງຂອງສັນຍາ ກໍຈະຖືວ່າສັນຍານັ້ນເປັນໂມຄະ ສະເພາະແຕ່ພາກສ່ວນທີ່ກ່ຽວຂ້ອງສ່ວນທີ່ເຫຼືອນັ້ນກໍຍັງໃຊ້ໄດ້ຢູ່.

**ສັນຍາຊື້ຂາຍ** ໝາຍເຖິງ ສັນຍາແບບໜຶ່ງຊຶ່ງເກີດຈາກການຕົກລົງຂອງ ຄູ່ສັນຍາໂດຍຜູ້ຂາຍຕ້ອງມອບຊັບສິ່ງຂອງໃຫ້ຜູ້ຊື້ເປັນກຳມະສິດ ແລະ ຜູ້ຊື້ຕ້ອງຮັບເອົາຊັບສິ່ງຂອງ ແລະ ຈ່າຍເງິນຕາມລາຄາທີ່ໄດ້ຕົກລົງກັນ.

**ສັນຍາແລກປ່ຽນ** ໝາຍເຖິງ ການຕົກລົງຂອງຄູ່ສັນຍາ ຊຶ່ງຝ່າຍໜຶ່ງໄດ້ເອົາຊັບສິ່ງຂອງມອບໃຫ້ອີກຝ່າຍໜຶ່ງ ແລະຝ່າຍນີ້ກໍໄດ້ເອົາຊັບສິ່ງຂອງອັນອື່ນຕອບແທນໃຫ້.

**ສັນຍາຂາຍຝາກ** ໝາຍເຖິງ ການຕົກລົງຂອງຄູ່ສັນຍາ ເພື່ອຊື້ຂາຍຊັບສິ່ງຂອງ ຊຶ່ງຜູ້ຂາຍຍັງມີສິດຊື້ຊັບ ສິ່ງຂອງທີ່ຂາຍນັ້ນຄືນໄດ້ພາຍໃນກຳນົດສາມປີຕາມລາຄາທີ່ຕົນໄດ້ຂາຍໄປ. ເມື່ອໝົດກຳນົດເວລາສາມປີແລ້ວ ຜູ້ຂາຍມີສິດຕໍ່ກຳນົດເວລາຂາຍຝາກອອກໄປອີກ ຖ້າຫາກວ່າໄດ້ມີການຕົກລົງກັນກ່ອນໃນເວລາເຮັດສັນຍາແຕ່ບໍ່ໃຫ້ເກີນໜຶ່ງປີ. ເມື່ອຮອດກຳນົດເວລາແລ້ວ ຖ້າວ່າຜູ້ຂາຍຫາກບໍ່ຊື້ເອົາຊັບສິ່ງຂອງນັ້ນຄືນ ຜູ້ຊື້ກໍຈະເປັນເຈົ້າກຳມະສິດກ່ຽວກັບຊັບສິ່ງ ຂອງນັ້ນໂດຍເດັດຂາດ.

**ສັນຍາກູ້ຢືມ** ໝາຍເຖິງ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ໃຫ້ຢືມຕ້ອງມອບເງິນ ຫຼື ຊັບສິ່ງຂອງໃຫ້ເປັນກຳມະສິດແກ່ຜູ້ກູ້ຢືມ ແລະຜູ້ກູ້ຢືມຕ້ອງສົ່ງຈຳນວນເງິນ ຫຼືຊັບສິ່ງຂອງປະເພດທີ່ກູ້ຢືມນັ້ນ ຕາມຈຳນວນເທົ່າທຽມກັນ ແລະຄຸນນະພາບດຽວກັນຄືນໃຫ້ແກ່ຜູ້ໃຫ້ຢືມ ຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນສັນຍາ.

**ສັນຍາຢືມຊັບສິ່ງຂອງໄປໃຊ້** ໝາຍເຖິງການຕົກລົງຂອງຄູ່ສັນຍາຊຶ່ງຜູ້ໃຫ້ຢືມໄດ້ມອບຊັບສິ່ງຂອງໃຫ້ແກ່ຜູ້ຢືມໄປໃຊ້ໂດຍບໍ່ຄິດໄລ່ຄ່າ ແລະຜູ້ຢືມຕ້ອງສົ່ງຊັບສິ່ງຂອງດັ່ງກ່າວຄືນ ໃຫ້ແກ່ເຈົ້າຂອງຊັບໃນສະພາບເດີມ ຕາມກຳນົດເວລາທີ່ໄດ້ຕົກລົງກັນ.

**ສັນຍາເຊົ່າຊັບສິ່ງຂອງ** ຫມາຍເຖິງ ການຕົກລົງຂອງຄູ່ສັນຍາຊຶ່ງຜູ້ໃຫ້ເຊົ່າໄດ້ມອບ ຊັບສິ່ງຂອງທີ່ເປັນກຳມະສິດ ຂອງຕົນໃຫ້ຜູ້ນຳໃຊ້ຊົ່ວຄາວ ແລະຜູ້ໃຊ້ຕ້ອງຈ່າຍຄ່າເຊົ່າຕາມເວລາ ແລະກຳນົດເວລາທີ່ໄດ້ ຕົກລົງກັນ.

**ສັນຍາຝາກຊັບສິ່ງຂອງ** ຫມາຍເຖິງ ການຕົກລົງຂອງຄູ່ສັນຍາຊຶ່ງຜູ້ຝາກໄດ້ມອບຊັບສິ່ງຂອງໃຫ້ແກ່ຜູ້ຮັບຝາກ ເພື່ອປົກປັກຮັກສາ ແລະຜູ້ຮັບຝາກຕ້ອງສົ່ງຊັບສິ່ງຂອງດັ່ງກ່າວຄືນໃນສະພາບເດີມໃຫ້ແກ່ຜູ້ຝາກ ເມື່ອຜູ້ກ່ຽວຫາກທວງຖາມເອົາ.

**ສັນຍາມອບຫມາຍ** ຫມາຍເຖິງ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ຮັບມອບຫມາຍຕ້ອງເຮັດສິ່ງໃດສິ່ງຫນຶ່ງ ໃນນາມ ແລະດ້ວຍທຶນຂອງຜູ້ມອບຫມາຍ. ຜູ້ມອບຫມາຍມີພັນທະຈ່າຍຄ່າຕອບແທນໃຫ້ຜູ້ຮັບມອບຫມາຍ ຖ້າຫາກວ່າໄດ້ບົ່ງໄວ້ໃນສັນຍາ ຫຼືກົດຫມາຍ.

**ສັນຍາບໍລິການ** ຫມາຍເຖິງ ການຕົກລົງຂອງຄູ່ສັນຍາຊຶ່ງຜູ້ບໍລິການຕ້ອງຮັບໃຊ້, ເຮັດ ຫຼື ສ້າງສິ່ງໃດສິ່ງຫນຶ່ງ ຕາມຄວາມຕ້ອງການຂອງຜູ້ໃຊ້ບໍລິການ ແລະຜູ້ໃຊ້ບໍລິການຕ້ອງຈ່າຍຄ່າບໍລິການນັ້ນຕາມລາຄາທີ່ໄດ້ຕົກລົງກັນ.

**ສັນຍາຮັບເໝົາກໍ່ສ້າງ** ຫມາຍເຖິງການຕົກລົງຂອງຄູ່ສັນຍາຊຶ່ງຜູ້ຮັບເໝົາຕ້ອງກໍ່ສ້າງສິ່ງໃດສິ່ງຫນຶ່ງອັນແນ່ນອນ ຕາມໂຄງການຂອງເຈົ້າຂອງໂຄງການ ດ້ວຍວັດຖຸປະກອນຂອງເຈົ້າຂອງໂຄງການ ຫຼືຂອງຕົນເອງ. ສ່ວນເຈົ້າຂອງໂຄງການນັ້ນຕ້ອງຮັບເອົາ ແລະຈ່າຍຄ່າສິ່ງທີ່ກໍ່ສ້າງຊຶ່ງໄດ້ເຮັດແລ້ວນັ້ນ.

**ສັນຍາຂົນສົ່ງ** ຫມາຍເຖິງ ການຕົກລົງຂອງຄູ່ສັນຍາ ຊຶ່ງຝ່າຍຫນຶ່ງ ແມ່ນຜູ້ຂົນສົ່ງເປັນຜູ້ຮັບຜິດຊອບນຳສົ່ງຜູ້ໂດຍສານ, ເຄື່ອງບັນທຸກ ຫຼື ສິນຄ້າໄປຮອດຈຸດຫມາຍ ຫຼືຕາມຈຸດປະສົງຂອງອີກຝ່າຍຫນຶ່ງ.

**ສັນຍາຫຸ້ນສ່ວນ** ຫມາຍເຖິງ ການຕົກລົງລະຫວ່າງສອງຄົນ ຫຼືຫລາຍຄົນເພື່ອເອົາເງິນ ຫຼືຊັບສິ່ງຂອງມາຮ່ວມກັນລົງທຶນດຳເນີນທຸລະກິດ ແລະແບ່ງປັນຜົນກຳໄລ.

**ສັນຍາແຮງງານ** ຫມາຍເຖິງ ການຕົກລົງລະຫວ່າງຜູ້ອອກແຮງງານກັບຜູ້ໃຊ້ແຮງງານ ຫຼືຕົວແທນຊຶ່ງ ຜູ້ໃຊ້ແຮງງານຕ້ອງມອບວຽກແລະຈ່າຍເງິນ ຫຼືຄ່າແຮງງານ ແລະຮັບປະກັນ ສິດຜົນປະໂຫຍດ ອັນຊອບທຳໃຫ້ແກ່ຜູ້ອອກແຮງງານ. ຜູ້ອອກແຮງງານຕ້ອງຢູ່ພາຍ ໃຕ້ການ ບັນຊາຂອງຜູ້ໃຊ້ ແຮງງານ ແລະເຮັດວຽກເພື່ອຜົນປະໂຫຍດຂອງຜູ້ໃຊ້ແຮງງານ.

**ສົມບັດມໍລະດົກ** ຫມາຍເຖິງ ມໍລະດົກຕົກທອດທີ່ມີຄຸນຄ່າສູງ, ໂດດເດັ່ນເປັນພິເສດທາງດ້ານວັດທະ ນະທຳ, ປະຫວັດສາດ, ທຳມະຊາດທີ່ຫາຍາກ ແລະເປັນເອກະລັກຂອງຊາດທີ່ເປັນວັດຖຸ, ບໍ່ເປັນວັດຖຸ, ສັງຫາລິມະຊັບ ຫລື ອະສັງຫາລິມະຊັບ

**ສິດ** ໝາຍເຖິງ ຄວາມອາດສາມາດຂອງບຸກຄົນທີ່ກົດໝາຍຮັບຮອງ ຊຶ່ງສາມາດກະທຳ ຫຼື ບໍ່ກະທຳ.

**ສິດຄອບຄອງ** (*ໃຫ້ເບິ່ງ ຄອບຄອງ)*

**ສິດທິບັດ** ໝາຍເຖິງ ເອກະສານທີ່ໃຫ້ສິດແກ່ບຸກຄົນໃດໜຶ່ງເພື່ອນຳໃຊ້ເໜືອກວ່າຜູ້ອື່ນ ໃນການຄຸ້ມຄອງການປະດິດ[18]ຫຼື ການອອກແບບຜະລິດຕະພັນໃດໜຶ່ງທາງດ້ານອຸດສາຫະກຳ, ການຄ້າ, ການກະເສດ ເພື່ອສະແດງການເປັນເຈົ້າຂອງ.

**ສິດໃນການຍຶດໜ່ວງ** ໝາຍເຖິງ ສິດໃນການຄອບຄອງຊັບສິນຂອງຜູ້ອື່ນ ໄວ້ຈົນກວ່າຈະໄດ້ຮັບໃຊ້ແທນໜີ້ ສິນ.

**ສິນສົມຣົດ** (*ໃຫ້ເບິ່ງ ສິນສົມສ້າງ)*

**ສິນສ່ວນຕົວ** (*ໃຫ້ເບິ່ງຊັບສິນສ່ວນຕົວ)*

**ສິນສອດ** ໝາຍເຖິງ ຊັບສິນທີ່ຝ່າຍຊາຍມອບໃຫ້ພໍ່ແມ່ ຫຼືຜູ້ປົກຄອງຝ່າຍຍິງຕາມຮີດຄອງປະເພນີເພື່ອເປັນສິ່ງຜູກພັນໃນການແຕ່ງດອງ.

**ສັງຫາລິມະຊັບ** ໝາຍເຖິງ ຊັບທີ່ສາມາດເຄື່ອນຍ້າຍໄດ້ເຊັ່ນ : ຍານພາຫະນະ, ພັດສະດຸຕ່າງໆ ສັງຫາລິມະຊັບຍັງລວມເຖິງສິດກ່ຽວກັບຊັບສິນນັ້ນດ້ວຍ.

**ຊວດຈຳ** *(ໃຫ້ເບິ່ງການຊວດຈຳ)*

**ຊັບສ່ວນຄວບ** ໝາຍເຖິງ ຊັບສິ່ງຂອງສ່ວນໜຶ່ງທີ່ຕິດພັນກັບຊັບຕົ້ນຕໍ ຊຶ່ງບໍ່ອາດສາມາດແຍກອອກ ຈາກກັນໄດ້ເຊັ່ນ : ກ້ອງວີດີໂອຕ້ອງມີອຸປະກອນເພື່ອບັນທຶກພາບ, ສາຍກີຕ້າເປັນສ່ວນໜຶ່ງຂອງກີຕ້າ ເປັນຕົ້ນ.

**ຊັບສ່ວນປະກອບ** ໝາຍເຖິງ ຊັບສິ່ງຂອງສ່ວນທີ່ເຮັດໃຫ້ຊັບໃດໜຶ່ງສົມບູນຂຶ້ນເຊັ່ນ: ບານປ່ອງຢ້ຽມ, ບານປະຕູ ເປັນສິ່ງປະກອບຂອງເຮືອນ ເປັນຕົ້ນ.

**ຊື່** ໝາຍເຖິງ ຊື່ປະຈຳຕົວຂອງບຸກຄົນ

**ເຊົ່າຕໍ່** ໝາຍເຖິງ ຜູ້ເຊົ່າໄດ້ເອົາຊັບສິນທີ່ຕົນເຊົ່າໄປໃຫ້ຜູ້ອື່ນເຊົ່າຕໍ່.

---

[18] ການປະດິດຕ້ອງມີລັກສະນະເຮັດຂຶ້ນໃໝ່, ການປະດິດທີ່ມີຂັ້ນຕອນສູງຂຶ້ນ ແລະສາມາດປະຍຸກໃຊ້ໃນດ້ານອຸດສາຫະກຳ, ຫັດຖະກຳ , ການຄ້າ ແລະການກະເສດ.

**ເຊົ່າຊື້** ຫມາຍເຖິງ ຊື່ຂອງສັນຍາແບບຫນຶ່ງ ຊຶ່ງເຈົ້າຂອງໄດ້ເອົາຊັບສິນອອກໃຫ້ເຊົ່າ ແລະ ໃຫ້ ຄຳຫມັ້ນສັນຍາວ່າຈະຂາຍຊັບສິນນັ້ນ ຫຼື ຈະໃຫ້ຊັບສິນນັ້ນຕົກເປັນກຳມະສິດແກ່ຜູ້ເຊົ່າ ໂດຍມີເງື່ອນໄຂວ່າຜູ້ເຊົ່າຕ້ອງຈ່າຍເງິນຕາມຈຳນວນທີ່ໄດ້ຕົກລົງກັນເປັນແຕ່ລະໄລຍະ.

**ເຊົ່າຊັບສິນ** *(ສັນຍາເຊົ່າຊັບສິນ)* ຫມາຍເຖິງ ສັນຍາແບບຫນຶ່ງ ຊຶ່ງບຸກຄົນຫນຶ່ງເອີ້ນວ່າ ຜູ້ໃຫ້ເຊົ່າ ໄດ້ຕົກລົງໃຫ້ບຸກຄົນ ອີກຄົນຫນຶ່ງ ເອີ້ນວ່າ ຜູ້ເຊົ່າ ໄດ້ນຳໃຊ້ ຫຼືໄດ້ຮັບຜົນປະໂຫຍດ ໃນຊັບສິນສິ່ງໃດຫນຶ່ງ, ໃນໄລຍະ ເວລາໃດຫນຶ່ງ ແລະ ຜູ້ເຊົ່າຕົກລົງຈະໃຫ້ຄ່າເຊົ່າ.

**ຊັບ** ຫມາຍເຖິງ ເງິນ, ຄຳ, ວັດຖຸສິ່ງຂອງ, ທີ່ດິນ, ຊັບສິນທີ່ບໍ່ມີຕົວຕົນເຊັ່ນ: ລິຂະສິດ, ພູມປັນຍາ...

**ຊັບຜິດກົດຫມາຍ** ຫມາຍເຖິງ ວັດຖຸທີ່ກົດຫມາຍຫ້າມຄອບຄອງ, ນຳໃຊ້, ຂາຍ, ໂອນ ແລະ ຫ້າມຊື້ຂາຍ.

**ຊັບທີ່ແບ່ງໄດ້** ຫມາຍເຖິງ ຊັບທີ່ອາດຈະແຍກອອກຈາກກັນເປັນສ່ວນໆ ຊຶ່ງຍັງຮັກສາ ລັກສະນະຮູບຮ່າງເດີມໄວ້ ແຕ່ປະລິມານ, ຂະຫນາດ, ຄຸນຄ່ານຳໃຊ້ອາດຈະຫລຸດລົງເຊັ່ນ: ເຂົ້າສານແບ່ງອອກເປັນກິໂລ, ນ້ຳມັນແບ່ງອອກເປັນລິດ ເປັນຕົ້ນ.

**ຊັບທີ່ແບ່ງບໍ່ໄດ້** ຫມາຍເຖິງ ຊັບທີ່ບໍ່ອາດຈະແຍກອອກຈາກກັນໄດ້ ຖ້າແບ່ງແລ້ວຈະເຮັດໃຫ້ປ່ຽນແປງຮູບຮ່າງ, ສະພາບລັກສະນະນຳໃຊ້ ແລະ ຄຸນຄ່າອື່ນໆເຊັ່ນ: ລົດເມື່ອແຍກເຄື່ອງຈັກ ອອກແລ້ວກໍຈະໃຊ້ບໍ່ໄດ້, ກີຕ້າເມື່ອແຍກສາຍອອກກໍໃຊ້ບໍ່ໄດ້ ເປັນຕົ້ນ.

**ຊັບສິນ** ຫມາຍເຖິງ ວັດຖຸສິ່ງຂອງ, ເພັດ, ນິນ, ເງິນ, ຄຳ ຫຼື ຊັບສິນທີ່ມີຕົວຕົນ ຫຼື ຊັບສິນ ບໍ່ມີຕົວຕົນຊຶ່ງອາດຈະມີລາຄາເຊັ່ນ: ຊັບສິນທາງປັນຍາ, ສິດທິບັດ, ສິດທວງ ເປັນຕົ້ນ.

**ຊັບສິນຂອງລັດ** ຫມາຍເຖິງ ຊັບສິນທີ່ລັດເປັນເຈົ້າກຳມະສິດ ຊຶ່ງປະກອບດ້ວຍສັງຫາລິມະຊັບ ແລະ ອະສັງຫາລິມະຊັບໃນຂອບເຂດພື້ນແຜ່ນດິນຂອງ ສ ປ ປ ລາວ ລວມທັງຊັບສົມບັດຕ່າງໆຂອງລັດທີ່ມີຢູ່ຕ່າງ ປະເທດ.

**ຊັບສິນສ່ວນຕົວ** ຫມາຍເຖິງ ຊັບສິນທີ່ບຸກຄົນໃດຫນຶ່ງເປັນເຈົ້າຂອງ.

**ຊັບເດີມ** ຫມາຍເຖິງ ຊັບສົມບັດທີ່ຜົວ ຫຼື ເມັຽໄດ້ມາກ່ອນການແຕ່ງດອງ ຫຼື ແມ່ນຊັບສົມບັດທີ່ໄດ້ມາຈາກການສືບທອດມູນມໍຣະດົກ ຫຼື ຈາກການມອບ ຫຼື ການຍົກຊັບໃຫ້ຜົວ ຫຼື ເມັຽສະເພາະພາຍຫລັງການແຕ່ງດອງ ແລະ ແມ່ນຊັບສົມບັດທີ່ຍັງຄົງຢູ່ ຫຼື ປ່ຽນສະພາບໄປເປັນຊັບສິ່ງຂອງໃຫມ່ແລ້ວ.

**ຍຶດຊັບ** ຫມາຍເຖິງ ການເອົາຊັບສິນໄປຈາກການຄອບຄອງຂອງບຸກຄົນຜູ້ທີ່ຝ່າຝືນຫຼືລະເມີດກົດຫມາຍ.

**ດອກເບັ້ຽ** ໝາຍເຖິງ ລາຍຮັບຈາກຄ່າຕອບແທນທີ່ບຸກຄົນໜຶ່ງ (ຜູ້ກູ້ຢືມ) ຕ້ອງຈ່າຍ ໃຫ້ອີກບຸກ ຄົນໜຶ່ງ(ຜູ້ໃຫ້ຢືມ) ເພື່ອຕອບແທນຕາມທີ່ໄດ້ຕົກລົງກັນ ຫຼື ເພື່ອເປັນການທົດແທນຈາກການບໍ່ຊຳລະໜີ້ສິນ ຫຼືຊຳລະໜີ້ສິນບໍ່ຖືກຕ້ອງ.

**ດອກເບັ້ຽທົບຕົ້ນທຶນ** ໝາຍເຖິງ ຈຳນວນດອກເບັ້ຽທີ່ຍັງຄ້າງຊຳລະ ຊຶ່ງນຳມາລວມກັບຕົ້ນທຶນ ເພື່ອຄິດໄລ່ດອກເບັ້ຽຕໍ່ໄປ.

**ຕົວແທນ** ໝາຍເຖິງ ບຸກຄົນຜູ້ທີ່ມີສິດໃນການເຮັດສິ່ງໃດໜຶ່ງແທນບຸກຄົນອື່ນ.

**ຖອນຄຳຮ້ອງຟ້ອງ** ໝາຍເຖິງ ໜັງສືສະແດງເຈດຈຳນົງຂອງໂຈດທີ່ຍື່ນຕໍ່ສານ ເພື່ອຂໍຖອນຄຳຮ້ອງຟ້ອງທີ່ ຕົນໄດ້ຮ້ອງຟ້ອງບຸກຄົນໃດໜຶ່ງກ່ອນການຕັດສິນຂອງສານ.

**ໄຖ່,ໄຖ່ຖອນ** ໝາຍເຖິງ ຊຳລະໜີ້ສິນເພື່ອຖອນຊັບສິນທີ່ຈຳໄວ້ຄືນ, ຊື້ຊັບສິນທີ່ຂາຍຝາກໄວ້ຄືນ. ຄຳວ່າ **ໄຖ່** ຕາມກົດໝາຍອາຍາໃຫ້ຄວາມໝາຍວ່າ ແມ່ນການເອົາຊັບສິນໄປແລກປ່ຽນເສລີພາບຂອງຜູ້ທີ່ຖືກຕົວ ຫລື ຜູ້ຖືກກັກຂັງ.

**ທຸຈະລິດ** ໝາຍເຖິງ ຄວາມປະພຶດທີ່ບໍ່ຖືກຕ້ອງ ຫຼື ເປັນການປະພຶດທີ່ຂັດກັບສິນທຳ.

**ທີ່ດິນ** ໝາຍເຖິງ ເນື້ອທີ່ດິນທົ່ວໄປຊຶ່ງລວມມີໜ້າດິນ, ພູເຂົາ, ຫ້ວຍ, ຮ່ອງ, ຄອງບຶງ, ແມ່ນ້ຳ, ດອນ ເປັນຕົ້ນ.

**ນາມສະກຸນ** ໝາຍເຖິງ ຊື່ປະຈຳວົງຕະກຸນ.

**ນາຍຈ້າງ** ໝາຍເຖິງ ຜູ້ໃຊ້ແຮງງານທີ່ຕົກລົງຮັບເອົາຜູ້ອອກແຮງງານເຂົ້າເຮັດວຽກ ໂດຍມີການຈ່າຍຄ່າແຮງງານໃຫ້.

**ນາຍໜ້າ** ໝາຍເຖິງ ບຸກຄົນຜູ້ຊີ້ສ່ອງທາງ ຫຼືຜູ້ແນະນຳ, ຕິດຕໍ່, ຊັກຊວນໃຫ້ບຸກຄົນສອງຝ່າຍໄດ້ເຂົ້າເຮັດສັນຍານຳກັນ.

**ນິຕິກຳທາງແພ່ງ** ໝາຍເຖິງ ການສະແດງເຈດຈຳນົງທີ່ເປັນລາຍລັກອັກສອນ ໂດຍຄວາມສະໝັກໃຈ ທີ່ ມີຈຸດປະສົງພາໃຫ້ເກີດ, ປ່ຽນແປງ ແລະ ສິ້ນສຸດສາຍພົວພັນລະຫວ່າງບຸກຄົນ.

**ນິຕິກຳອຳພາງ** ໝາຍເຖິງ ນິຕິກຳທາງແພ່ງທີ່ເຮັດຂຶ້ນໂດຍມີເຈດຕະນາຫຼອກລວງ ເພື່ອປິດບັງນິຕິກຳ ທີ່ແທ້ຈິງ.

**ນິຕິການ** ໝາຍເຖິງ ເຫດການທີ່ມີຜົນທາງດ້ານກົດໝາຍເຊັ່ນ : ການແຈ້ງຂໍ້ຫຍຸ້ງຍາກໃນການຊຳລະໜີ້ສິນ, ເຫດສຸດວິໄສ, ເຫດບັງເອີນ ເປັນຕົ້ນ.

**ນິຕິພາວະ** ຫມາຍເຖິງ ຜູ້ທີ່ມີຄວາມສາມາດນຳໃຊ້ສິດ ແລະປະຕິບັດພັນທະຂອງຕົນໄດ້ຕາມກົດຫມາຍ.

**ນິຕິເຫດ** ຫມາຍເຖິງ ເຫດການທີ່ມີຜົນທາງດ້ານກົດຫມາຍ ໂດຍເກີດຈາກການກະທຳຫລືເກີດຈາກທຳມະຊາດ, ການກະທຳແມ່ນເຫດທີ່ເກີດຈາກຄົນໂດຍແບ່ງອອກເປັນການກະທຳທີ່ຖືກຕ້ອງ ແລະ ບໍ່ຖືກຕ້ອງຕາມກົດຫມາຍ.

**ນິຕິສຳພັນ** ຫມາຍເຖິງ ສາຍພົວພັນທີ່ກ່ຽວຂ້ອງກັບກົດຫມາຍ.

**ບຸກຄົນ** ຫມາຍເຖິງ ຜູ້ທີ່ມີສິດ ແລະ ພັນທະຕາມກົດຫມາຍ.

**ບຸກຄົນທີສາມ** ຫມາຍເຖິງ ບຸກຄົນທີ່ບໍ່ແມ່ນຄູ່ກໍລະນີ ຫຼືບໍ່ແມ່ນຄູ່ສັນຍາ ແຕ່ມີສິດແລະພັນທະທີ່ກ່ຽວຂ້ອງ.

**ບຸລິມະສິດຕໍ່ຫນີ້ສິນ** ຫມາຍເຖິງ ສິດຂອງເຈົ້າຫນີ້ທີ່ຈະໄດ້ຮັບການໃຊ້ແທນ ຫນີ້ສິນ ຈາກຊັບສິນຂອງລູກຫນີ້ກ່ອນເຈົ້າຫນີ້ຄົນອື່ນ.

**ເບັ້ຽລ້ຽງ** ຫມາຍເຖິງ ຈຳນວນເງິນທີ່ຈ່າຍໃຫ້ເປັນຄ່າອາຫານປະຈຳວັນ ໃນການເຮັດວຽກງານໃດຫນຶ່ງ.

**ເບັ້ຽປະກັນໄພ** ຫມາຍເຖິງ ຈຳນວນເງິນຕາມສັນຍາປະກັນໄພ ທີ່ຜູ້ເອົາປະກັນໄພຈະຕ້ອງຈ່າຍໃຫ້ແກ່ຜູ້ຮັບປະກັນໄພ ເພື່ອຈະໄດ້ຮັບເງິນຜົນປະໂຫຍດ ຫຼື ຄ່າທົດແທນເມື່ອຕົນເສັຽຊີວິດ ຫຼື ເມື່ອໄດ້ຮັບ ຄວາມເສັຽຫາຍຕາມປະເພດຂອງການປະກັນໄພທີ່ຕົນໄດ້ສັນຍາໄວ້.

**ໃບຫຸ້ນ** ຫມາຍເຖິງ ເອກະສານສຳຄັນທາງດ້ານກົດຫມາຍ ເພື່ອສະແດງເຖິງສິດ ແລະ ຄວາມ ເປັນເຈົ້າຂອງສ່ວນຫນຶ່ງໃນວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດຂອງຂາຮຸ້ນ ຫຼື ຜູ້ຖືຮຸ້ນ.

**ປະກັນໄພ** ຫມາຍເຖິງ ການຮັບຮອງວ່າຈະທົດແທນໃຫ້ເມື່ອເກີດໄພຢ່າງໃດຢ່າງຫນຶ່ງ.

**ປະເດັນ** ຫມາຍເຖິງ ຂໍ້ຄວາມໃດຫນຶ່ງທີ່ເປັນເນື້ອໃນສຳຄັນຊຶ່ງຄູ່ຄວາມ ຫຼືເຈົ້າຫນ້າທີ່ ທີ່ມີສ່ວນກ່ຽວຂ້ອງຍົກຂຶ້ນມາພິຈາລະນາ.

**ປະນີປະນອມ** ຫມາຍເຖິງ ຄຳຕົກລົງຂອງຄູ່ສັນຍາ ທີ່ຜ່ອນຜັນຂໍ້ຂັດແຍ່ງທີ່ເກີດຂຶ້ນ.

**ປະໝາດ** ໝາຍເຖິງ ການກະທຳທີ່ຂາດຄວາມລະມັດລະວັງ ຊຶ່ງບຸກຄົນໃນສະພາບການນັ້ນ ສາມາດຄາດຄະເນເຖິງການກະທຳຂອງຕົນແຕ່ເຊື່ອໝັ້ນ ແລະ ໝັ້ນໃຈວ່າ ຖ້າເຫດການນັ້ນເກີດ ຂຶ້ນຕົນຈະສາມາດປ້ອງກັນ ຫຼື ຫຼີກລ່ຽງໄດ້.

**ປັບໃໝ** ໝາຍເຖິງ ມາດຕະການທາງດ້ານການເງິນທີ່ວາງໄວ້ເພື່ອລົງໂທດໃສ່ຜູ້ທີ່ລະເມີດ ກົດໝາຍ ຫຼື ລະເມີດສັນຍາ.

**ປົດໜີ້ສິນ** ໝາຍເຖິງ ເຈົ້າໜີ້ຕົກລົງບໍ່ເອົາໜີ້ສິນນຳລູກໜີ້ ຊຶ່ງເຮັດໃຫ້ລູກໜີ້ພົ້ນຈາກການເປັນ ໜີ້ສິນ.

**ປູຊະນີຍະສະຖານ** ໝາຍເຖິງ ສະຖານທີ່ຊຶ່ງເປັນບ່ອນເຄົາລົບບູຊາຂອງປະຊາຊົນ ທີ່ຕິດພັນ ກັບການເຄື່ອງໄຫວທາງສາສະໜາ, ຮີດຄອງປະເພນີ ແລະຮ່ອງຮອຍປະຫວັດສາດ

**ຜິດນັດໝາຍ** ໝາຍເຖິງ ລູກໜີ້ບໍ່ຊຳລະໜີ້ສິນຕາມກຳນົດເວລາ ຫຼືເຈົ້າໜີ້ບໍ່ຮັບເອົາ ການຊຳລະໜີ້ສິນ ໂດຍບໍ່ມີເຫດຜົນ.

**ຜູ້ຊ່ຽວຊານ** ໝາຍເຖິງ ຜູ້ທີ່ມີຄວາມຮູ້ ແລະຊຳນານງານດ້ານໃດດ້ານໜຶ່ງເຊັ່ນ : ວິທະຍາສາດ, ການແພດ, ສິນລະປະ, ການຄ້າ, ກົດໝາຍ ແລະ ອື່ນໆ ຊຶ່ງຄວາມເຫັນຂອງຜູ້ນັ້ນອາດຈະມີປະ ໂຫຍດໃນການພິຈາລະນາຄະດີ.

**ຜູ້ຕາງໜ້າ** ໝາຍເຖິງ ບຸກຄົນທີ່ໄດ້ຖືກມອບໝາຍໃຫ້ໄປເຮັດວຽກແທນຕາມຂອບເຂດສິດ ແລະ ພັນທະທີ່ມອບໃຫ້.

**ຜູ້ປົກຄອງເດັກ** ໝາຍເຖິງ ບຸກຄົນທີ່ສານ ຫຼື ນາຍບ້ານເປັນຜູ້ແຕ່ງຕັ້ງໃຫ້ເປັນຜູ້ເບິ່ງແຍງ ລ້ຽງດູເດັກ ຫຼື ຜູ້ຕາງໜ້າເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ເນື່ອງຈາກເດັກນັ້ນບໍ່ມີພໍ່ແມ່ ຫຼື ຖືກສານປົດສິດ ໃນການເປັນພໍ່ແມ່.

**ຜູ້ຄຸ້ມຄອງ** ໝາຍເຖິງ ບຸກຄົນທີ່ໄດ້ຮັບມອບໝາຍໃຫ້ຄຸ້ມຄອງບຸກຄົນທີ່ເປັນບ້າເສັຽຈິດ ຫຼື ຜູ້ຄຸ້ມ ຄອງເດັກຢູ່ໂຮງຮຽນ ຫຼືສະຖານທີ່ໃດໜຶ່ງເຊັ່ນ: ຜູ້ຄຸ້ມຄອງເດັກອະນຸບານເປັນຕົ້ນ. ຜູ້ຄຸ້ມຄອງ ຍັງລວມເຖິງບຸກຄົນທີ່ຖືກມອບໝາຍໃຫ້ປົກປັກຮັກສາ ແລະ ຄຸ້ມຄອງຊັບສິ່ງຂອງ.

**ຜູ້ຫຸ້ນສ່ວນ** ໝາຍເຖິງ ບຸກຄົນທີ່ນຳເອົາສິ່ງໃດສິ່ງໜຶ່ງອາດຈະເປັນຊັບສິນ, ແຮງງານ ຫຼື ເງິນມາ ຮ່ວມຫຸ້ນສ່ວນ ເພື່ອດຳເນີນກິດຈະການໃດໜຶ່ງເຊັ່ນ: ລົງທຶນຮ່ວມກັນ ເປັນຕົ້ນ.

**ຜູ້ປະກັນໄພ** ໝາຍເຖິງ ວິສາຫະກິດທີ່ໄດ້ຮັບອະນຸຍາດຈາກລັດ ໃຫ້ດຳເນີນທຸລະກິດປະກັນໄພ ຊຶ່ງ ຕົກລົງຈະທົດແທນຄ່າເສັຽຫາຍຕາມສັນຍາປະກັນໄພ.

**ຜູ້ໄດ້ຮັບການປະກັນໄພ** ໝາຍເຖິງ ຜູ້ທີ່ໄດ້ຮັບການຄ້ຳປະກັນກ່ຽວກັບຊີວິດ, ສຸຂະພາບ ຫຼື ຊັບສິນບັດ ຈາກວິສາຫະກິດປະກັນໄພ.

**ຜູ້ເຊັນເອົາການປະກັນໄພ** ໝາຍເຖິງ ຜູ້ອອກໜ້າເຊັນສັນຍາປະກັນໄພ ຊຶ່ງຕົກລົງຈ່າຍຄ່າທຳນຽມປະກັນໄພ ທີ່ແນໃສ່ຄ້ຳປະກັນຊີວິດ ຫຼື ຊັບສິນບັດຂອງຕົນເອງ ຫຼື ຂອງບຸກຄົນທີສາມ.

**ຜູ້ໄດ້ຮັບຜົນປະໂຫຍດ** ໝາຍເຖິງ ຜູ້ທີ່ໄດ້ຮັບສິນປະກັນໄພ ຫຼື ສິນທົດແທນປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ ເມື່ອຄວາມເສຍຫາຍຫາກໄດ້ເກີດຂຶ້ນ.

**ຜູ້ສືບທອດຕາມກົດໝາຍ** ໝາຍເຖິງ ຜູ້ສືບທອດຕາມສາຍເລືອດ ຫຼື ຕາມລຳດັບທີ່ກົດໝາຍກຳນົດໄວ້ເຊັ່ນ: ລູກ, ພໍ່ ແມ່, ຜົວ ຫຼື ເມັຽ, ຍາດສາຍຕັ້ງ, ຍາດສາຍຂວາງ ເປັນຕົ້ນ.

**ຜູ້ສືບທອດຕາມພິໄນກຳ** ໝາຍເຖິງ ບຸກຄົນ ຫຼື ອົງການຈັດຕັ້ງທີ່ມີສິດໄດ້ຮັບມູນມໍຣະດົກຕາມທີ່ເຈົ້າມູນມໍຣະດົກ ໄດ້ຂຽນຫຼື ໄດ້ກ່າວໄວ້.

**ຜູ້ຂຽນພິໄນກຳ** ໝາຍເຖິງ ຜູ້ທີ່ສະແດງເຈດຈຳນົງຂອງຕົນດ້ວຍການຂຽນ ຂໍ້ຄວາມກ່ຽວກັບການມອບຊັບ ຫຼືຍົກຊັບໃຫ້ຜູ້ໃດຜູ້ໜຶ່ງ ຫຼື ໃຫ້ອົງການຈັດຕັ້ງໃດໜຶ່ງ ໃນເວລາທີ່ຕົນຍັງມີຊີວິດ. ຜູ້ຂຽນພິໄນກຳອາດຈະແມ່ນເຈົ້າມູນມໍຣະດົກເອງ ຫຼືບຸກຄົນອື່ນກໍໄດ້.

**ຜູ້ຄ້ຳປະກັນ** ໝາຍເຖິງ ບຸກຄົນ ຫຼືນິຕິບຸກຄົນ ທີ່ຮັບປະກັນວ່າຈະໃຊ້ໜີ້ສິນແທນລູກໜີ້ ໃນເມື່ອລູກໜີ້ ຫາກລະເມີດສັນຍາ.

**ຜູ້ຫາຍສາບສູນ** ໝາຍເຖິງ ບຸກຄົນທີ່ອອກຈາກບ່ອນຢູ່ສຸດທ້າຍ ໂດຍບໍ່ຮູ້ຂ່າວຄາວ ວ່າຢູ່ບ່ອນໃດ, ໄດ້ ຊອກຫາ ຫຼືແຈ້ງຂ່າວຫາຜູ້ກ່ຽວແຕ່ບໍ່ມີການຕອບຮັບ ຈົນລ່ວງເລີຍເວລາທີ່ກົດໝາຍກຳນົດໄວ້ ແລະມີຄຳຕັດສິນຂອງສານວ່າເປັນຜູ້ຫາຍສາບສູນ.

**ຜູ້ຖືກສານປະກາດວ່າເສັຍຊີວິດ** ໝາຍເຖິງ ບຸກຄົນທີ່ອອກຈາກບ່ອນຢູ່ສຸດທ້າຍ ໂດຍບໍ່ຮູ້ຂ່າວຄາວວ່າຢູ່ບ່ອນໃດ, ໄດ້ ຊອກຫາ ຫຼືແຈ້ງຂ່າວຫາຜູ້ກ່ຽວແຕ່ບໍ່ມີການຕອບຮັບ ຈົນລ່ວງເລີຍເວລາທີ່ກົດໝາຍກຳນົດໄວ້ ແລະມີຄຳຕັດສິນຂອງສານວ່າເປັນຜູ້ເສັຍຊີວິດ.

**ຜູ້ເສັຍຫາຍ** ໝາຍເຖິງ ບຸກຄົນທີ່ຮັບຄວາມເສັຍຫາຍທາງດ້ານສຸຂະພາບ ຫລື ຊີວິດ, ວັດຖຸ, ຈິດໃຈ ຍ້ອນການລະເມີດສັນຍາ ຫລືໄດ້ກະທຳຄວາມຜິດສະຖານໃດໜຶ່ງ

**ພາສີ** ຫມາຍເຖິງ ພັນທະເປັນເງິນທີ່ມອບໃຫ້ລັດໂດຍບຸກຄົນ, ການຈັດຕັ້ງ, ນິຕິບຸກຄົນ ທີ່ດຳເນີນການສົ່ງອອກ-ນຳເຂົ້າ, ການຜ່ານແດນ ແລະການຈໍລະຈອນສິນຄ້າ, ເຄື່ອງຂອງຜ່ານແດນຕາມອັດຕາທີ່ກຳນົດໄວ້ໃນປື້ມສາລະບານອັດຕາພາສີ.

**ພັນທະບັດ** ຫມາຍເຖິງ ເອກະສານທາງດ້ານການເງິນຊະນິດຫນຶ່ງ ຊຶ່ງອອກໂດຍລັດຖະບານ ຫຼື ສະຖາບັນການເງິນໃດໜຶ່ງ.

**ພິໄນກຳ** ຫມາຍເຖິງ ການສະແດງເຈດຈຳນົງດ້ວຍວາຈາ ຫຼືເປັນລາຍລັກອັກສອນ ເພື່ອຊີ້ຂາດຊັບສົມບັດຂອງຕົນໃຫ້ບຸກຄົນອື່ນກ່ອນເສັຽຊີວິດ.

**ແພ່ງ** ຫມາຍເຖິງ ສິດ ແລະພັນທະທີ່ພົວພັນກັບບຸກຄົນ, ຮີດຄອງປະເພນີ ຫລື ຂະນົບທຳນຽມຂອງພົນລະເມືອງ.

**ພູມລຳເນົາ** ຫມາຍເຖິງ ບ່ອນຢູ່ອາໄສເດີມ, ຖິ່ນຖານທີ່ເກີດ.

**ມູນມໍຣະດົກ** ຫມາຍເຖິງ ຊັບສົມບັດທຸກປະເພດ ລວມທັງສິດ ແລະພັນທະຕ່າງໆຂອງຜູ້ທີ່ເສັຽຊີວິດ ເວັ້ນເສັຽແຕ່ສິດ ແລະ ພັນທະຊຶ່ງກົດໝາຍ ຫຼືສັນຍາໄດ້ກຳນົດໄວ້ໃຫ້ຜູ້ເສັຽຊີວິດຕ້ອງໄດ້ປະຕິບັດດ້ວຍຕົນເອງ. ໃນມູນມໍຣະດົກນັ້ນອາດຈະມີຊັບເດີມ ແລະສິນສົມສ້າງ.

**ມໍຣະດົກແຫ່ງຊາດ** ຫມາຍເຖິງ ຜະລິດຕະພັນທີ່ມະນຸດສ້າງຂຶ້ນ ຫລືເກີດຂຶ້ນເອງໂດຍທຳມະຊາດ ທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ ຫລທຳມະຊາດ, ເປັນຊັບສົມບັດອັນລ້ຳຄ່າ, ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດລາວ ຊຶ່ງຖືກພາກສ່ວນອື່ນຮັບຮອງເປັນມໍຣະດົກພາກພື້ນ ຫລືມໍຣະດົກໂລກ.

**ມໍຣະດົກສະຖານ** ຫມາຍເຖິງ ບູຮານສະຖານ, ປູຊະນີຍະສະຖານ, ອະນຸສອນສະຖານ, ສະຖານທີ່ທຳມະຊາດ ແລະສະຖາປັດຕະຍະກຳຊຶ່ງມີຄຸນຄ່າທາງດ້ານວັດທະນະທຳ, ປະຫວັດສາດ, ວິທະຍາ ສາດ ຫລືເຕັກໂນໂລຊີ, ທັດສະນີຍະພາບ ທີ່ສືບທອດກັນມາ.

**ມໍຣະດົກທາງດ້ານວັດທະນະທຳທີ່ເປັນວັດຖຸ** ຫມາຍເຖິງ ສັງຫາລິມະຊັບ ແລະອະສັງຫາລິມະຊັບທີ່ມີຕົວຕົນຊຶ່ງເປັນຂອງລ້ຳຄ່າທາງດ້ານວັດທະນະທຳເຊັ່ນ : ວັດຖຸບູຮານ, ສະຖານບູຮານ, ປູຊະນີຍະສະຖານ ...

**ມໍຣະດົກທາງດ້ານວັດທະນະທຳທີ່ບໍ່ເປັນວັດຖຸ** ຫມາຍເຖິງ ມໍລະດົກທີ່ບໍ່ມີຕົວຕົນຊຶ່ງເປັນສິ່ງລ້ຳຄ່າທາງດ້ານວັດທະນະທຳເຊັ່ນ : ພູມປັນຍາ, ປັດຊະຍາຂອງມະຫາຊົນ, ຄວາມເຊື່ອຖື, ມາລະຍາດ, ພາສາ, ຕົວອັກສອນ, ຮີດຄອງປະເພນີ ...

**ມັດຈຳ** ຫມາຍເຖິງ ບຸກຄົນໃດຫນຶ່ງໄດ້ເອົາຊັບສິ່ງຂອງໄປຈຳໄວ້ນຳບຸກຄົນອີກຄົນຫນຶ່ງເພື່ອເປັນຫລັກປະກັນວ່າຈະມາໄຖ່ຖອນເອົາຊັບນັ້ນຄືນຕາມກຳນົດເວລາທີ່ວາງໄວ້.

**ໂມຄະ** ຫມາຍເຖິງ ໃຊ້ບໍ່ໄດ້ ຫຼື ບໍ່ມີຄຸນຄ່າທາງດ້ານກົດຫມາຍ

**ລາຄາຕາມທ້ອງຕະຫລາດ** ຫມາຍເຖິງ ລາຄາທີ່ຊື້ຂາຍກັນທົ່ວໄປໃນທ້ອງຖິ່ນໃດຫນຶ່ງ ຫລື ໃນຂະນະໃດຫນຶ່ງ.

**ລົ້ມລະລາຍ** ຫມາຍເຖິງ ບຸກຄົນ ຫຼືນິຕິບຸກຄົນທີ່ມີຫນີ້ສິນເກີນຄວາມສາມາດຊຳລະສະສາງ ແລະ ຖືກສານຕັດສິນໃຫ້ລົ້ມລະລາຍ.

**ລະເມີດ** ຫມາຍເຖິງ ການລ່ວງເກີນ, ການຂັດຂືນຕໍ່ລະບຽບກົດໝາຍ.

**ລິຂະສິດ** ຫມາຍເຖິງ ການຄຸ້ມຄອງ ຫລືການສະຫງວນສິດຂອງຜູ້ທີ່ປະດິດຄິດແຕ່ງ, ຜູ້ຄົ້ນຄວ້າທາງດ້ານວັນນະກຳ ແລະສິລະປະກຳ.

**ລູກຫນີ້** ຫມາຍເຖິງ ຜູ້ທີ່ມີພັນທະເຮັດສິ່ງໃດສິ່ງໜຶ່ງທີ່ແນ່ນອນເພື່ອຜົນປະໂຫຍດຂອງເຈົ້າໜີ້.

**ວັດຖຸບູຮານ** ຫມາຍເຖິງ ຜະລິດຕະພັນທາງດ້ານວັດຖຸ ທີ່ສ້າງຂຶ້ນໂດຍມະນຸດ ອັນເປັນຫລັກຖານຢັ້ງຢືນເຖິງປະຫວັດສາດແຫ່ງຂະບວນວິວັດຂອງສັງຄົມມະນຸດ.

**ວັດຖຸຈຳລອງແບບ** ຫມາຍເຖິງ ວັດຖຸທີ່ສ້າງຂຶ້ນໃຫມ່ ໂດຍການກ່າຍເອົາແບບວັດຖຸບູຮານ ຊຶ່ງມີລັກສະນະຮູບຊົງ, ສັດສ່ວນ, ສີສັນ, ລວດລາຍ, ການຕົບແຕ່ງ ແລະຈຸດພິເສດອື່ນໆ ຕາມແບບສະບັບເດີມ.

**ເຫດສຸດວິໄສ** ຫມາຍເຖິງ ເຫດການໃດຫນຶ່ງທີ່ເກີດຂຶ້ນໂດຍບໍ່ຂຶ້ນກັບ ເຈດຈຳນົງຂອງຄົນຊຶ່ງຈະເຮັດໃຫ້ເກີດໄພອັນຕະລາຍ ໂດຍບຸກຄົນບໍ່ອາດສາມາດປ້ອງກັນໄດ້.

**ຫ້ອງພັກ** ຫມາຍເຖິງ ສະຖານທີ່ພັກເຊົາຊົ່ວຄາວທີ່ມີສີ່ຫ້ອງນອນລົງມາ ແລະມີສິ່ງອຳນວຍຄວາມສະດວກອັນຈຳເປັນໃຫ້ແກ່ຄົນເດີນທາງ.

**ອະສັງຫາລິມະຊັບ** ຫມາຍເຖິງ ຊັບສິນທີ່ບໍ່ສາມາດເຄື່ອນຍ້າຍໄດ້ເຊັ່ນ : ທີ່ດິນ, ເຮືອນ, ຕຶກອາຄານ, ໂຮງຈັກໂຮງງານ, ເຂື່ອນໄຟຟ້າ, ສະຖານທີ່ວັດ, ກິດຈະການກໍ່ສ້າງໂຄງລ່າງ ເປັນຕົ້ນ.

**ອະນຸສອນສະຖານ** ຫມາຍເຖິງ ສະຖານທີ່ລະນຶກເຖິງວິລະກຳຂອງບັນພະບູລຸດ ແລະຂະບວນການຕໍ່ສູ້ອັນພິລະອາດຫານຂອງປະຊາຊົນລາວບັນດາເຜົ່າ ໃນການປົກປັກຮັກສາ ແລະສ້າງສາປະເທດຊາດເພື່ອຄວາມຊົງຈຳຂອງອະນຸຊົນຮຸ່ນຫລັງ.

**ອຸດສາຫະກຳທ່ອງທ່ຽວ** ຫມາຍເຖິງ ການບໍລິການແກ່ນັກທ່ອງທ່ຽວພາຍໃນ ແລະຕ່າງປະເທດຢ່າງເປັນລະບົບຄົບວົງຈອນ ຊຶ່ງປະກອບດ້ວຍ : ທຸລະກິດຂົນສົ່ງ, ແຫຼ່ງທ່ອງທ່ຽວ, ນຳທ່ຽວ, ທີ່ພັກແຮມ, ອາຫານ, ເຄື່ອງລະນຶກ, ການວາງສະແດງ, ນິທັດສະການ, ງານບຸນ ແລະງານອື່ນໆ ຊຶ່ງນຳໃຊ້ແຮງງານ, ມີການລົງທຶນ ແລະວິຊາສະເພາະສູງ, ໃຊ້ເຕັກນິກທີ່ທັນສະໄຫມ, ມີການວາງແຜນ, ການຕະຫລາດ ແລະການຈັດຕັ້ງຢ່າງເປັນລະບົບ.

**ໂອນສິດ** ຫມາຍເຖິງ ການເຮັດໃຫ້ສິດຂອງຕົນຕົກໄປເປັນຂອງບຸກຄົນອື່ນ.

**ໂອນກຳມະສິດ** ຫມາຍເຖິງ ການເຮັດໃຫ້ສິດໃນການເປັນເຈົ້າຂອງຊັບສິນ ຕົກໄປເປັນຂອງບຸກຄົນອື່ນ.

**ເຮືອບິນ** ຫມາຍເຖິງ ຍານພາຫະນະໃດຫນຶ່ງທີ່ສາມາດຊູຕົວ ແລະເຄື່ອນຍ້າຍໄປໃນທ້ອງຟ້າໄດ້.

**ເຮືອນ** *(ໃຫ້ເບິ່ງ ເຄຫະ)*

**ເຮືອນພັກ** ຫມາຍເຖິງ ສະຖານທີ່ພັກແຮມ ປະກອບດ້ວຍສິບສີ່ຫ້ອງນອນລົງມາ ແຕ່ບໍ່ຫລຸດຫ້າຫ້ອງນອນ ຊຶ່ງມີສິ່ງອຳນວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ເຫມາະສົມ ແລະບໍລິການທີ່ມີມາດຕະຖານດີ ໂດຍຈຸດປະສົງດຳເນີນທຸລະກິດບໍລິການທີ່ພັກແຮມ ສຳລັບຄົນເດີນທາງໂດຍມີຄ່າບໍລິການ

**ໂຮງຊວດຈຳ** ຫມາຍເຖິງ ຫົວຫນ່ວຍທຸລະກິດຮັບຊວດຈຳທີ່ຖືກສ້າງຕັ້ງຂຶ້ນເພື່ອບໍລິການຮັບການຊວດຈຳ.

**ໂຮງແຮມ** ຫມາຍເຖິງ ສະຖານທີ່ພັກເຊົາຊົ່ວຄາວ ປະກອບດ້ວຍສິບຫ້າຫ້ອງຂຶ້ນໄປ ຊຶ່ງມີສິ່ງອຳນວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ທີ່ມີຄຸນນະພາບ ແລະບໍລິການທີ່ມີມາດຕະຖານດີໂດຍຈຸດປະສົງດຳເນີນທຸລະກິດບໍລິການທີ່ພັກເຊົາຊົ່ວຄາວ ສຳລັບຄົນເດີນທາງໂດຍມີຄ່າບໍລິການ

**ຫນີ້ສິນ** ຫມາຍເຖິງ ຈຳນວນເງິນ ຫຼື ຊັບສິນທີ່ເຈົ້າຫນີ້ຄວນຈະໄດ້ຮັບຈາກລູກຫນີ້.

**ຫມັ້ນຫມາຍ** *(ໃຫ້ເບິ່ງ ການຫມັ້ນ)*

**ໝົດອາຍຸຄວາມ** ໝາຍເຖິງ ກາຍກຳນົດເວລາທີ່ກົດຫມາຍກຳນົດໄວ້ຊຶ່ງຜູ້ມີສິດໃນການທວງ ຫຼື ຮ້ອງຟ້ອງບໍ່ໃຊ້ສິດຕາມເວລາດັ່ງກ່າວ.

## ຄຳສັບທາງການທູດ ແລະ ການພົວພັນສາກົນ

**ການທູດ** ແມ່ນພິທີການເຄື່ອນໄຫວຂອງລັດເພື່ອສ້າງ ແລະ ຮັກສາສາຍພົວພັນ ຮ່ວມກັນຂອງສອງ ຫຼື ຫຼາຍປະເທດ,ເພື່ອຕິດຕໍ່ຊຶ່ງກັນ ແລະ ກັນ ຫຼື ດຳເນີນການພົວພັນ ທາງດ້ານການເມືອງ ຫຼື ທາງດ້ານກົດ ໝາຍນຳກັນ ໂດຍຜ່ານຕົວແທນ ທີ່ໄດຮັບມອບໝາຍ ໃຫ້ມີສິດອຳນາດ.

**ການໃຫ້ສັນຊາດ** ແມ່ນການອະນຸມັດໃຫ້ສັນຊາດແກ່ຄົນຕ່າງດ້າວ ໂດຍຜ່ານຂະບວນການ ທີ່ເປັນ ທີ່ເປັນທາງການພາຍຫຼັງທີ່ໄດ້ຍື່ນສະເໜີຂໍສັນຊາດ.

**ການຕອບຮັບນັກການທູດ** ແມ່ນການຕອບຮັບອອກມາຢ່າງເປັນທາງການຈາກປະເທດໜຶ່ງວ່າ ຈະຍອມຮັບ ນັກການທູດທີ່ ຈະມາປະຈຳ ຢູ່ປະເທດຕົນ. ເນື່ອງຈາກວ່າ ແຕ່ລະລັດສາມາດ ປະຕິເສດ ການຍອມຮັບບຸກຄົນໃດ ໜຶ່ງໄດ້.

**ການສົ່ງຜູ້ຮ້າຍຂ້າມແດນ** ແມ່ນການຍອມປ່ອຍຕົວຜູ້ກະທຳຜິດທາງອາຍາ ໂດຍລັດ ກໍ ໃຫ້ລັດ ຂໍ ຊຶ່ງຜູ້ກະທຳຜິດດັ່ງກ່າວ ໄດ້ກະທຳຜິດໃນດິນແດນຂອງລັດ ຂໍ.

**ການຮຸກຮານ** ແມ່ນການນຳໃຊ້ກຳລັງອາວຸດ ໂດຍລັດໜຶ່ງຕໍ່ລັດທີ່ມີເອກະລາດອະທິປະໄຕອື່ນ ຫຼື ດ້ວຍວິທີການໃດໆກໍ່ຕາມທີ່ບໍ່ສອດຄ່ອງກັບກົດບັດຂອງອົງການສະຫະປະຊາຊາດ.

**ກົງສູນ** ແມ່ນຕົວແທນຂອງລັດທີ່ສົ່ງໄປປະຈຳຢູ່ຕ່າງປະເທດເພື່ອສົ່ງເສີມທາງດ້ານການຄ້າ ແລະ ອຸດສາຫະກຳຂອງລັດ ແລະ ໃຫ້ການຄຸ້ມຄອງແກ່ບຸກຄົນທີ່ມີສັນຊາດຕົນທີ່ເຂົ້າໄປອາໃສຢູ່ ຫຼື ເດີນທາງ ໄປທ່ອງທ່ຽວໃນລັດນັ້ນ.

**ການຄຸ້ມຄອງແກ່ຜູ້ລີ້ໄພ** ແມ່ນການບໍລິການບ່ອນພັກອາໄສໂດຍລັດຖະບານ, ສຳລັບບຸກຄົນທີ່ຖືກປະຫັດປະຫານ ຫຼື ຈະ ຖືກດຳເນີນຄະດີຕໍ່ຜູ້ກ່ຽວໃນປະເທດຂອງເຂົາເຈົ້າເອງ.

**ກົດໝາຍສາກົນ** ແມ່ນບັນດາເອກະສານຫຼັກການທາງກົດໝາຍ ທີ່ກຳນົດໃນສົນທິສັນຍາ, ເອກະສານ ແລະ ປື້ມບົດຮຽນກົດໝາຍທີ່ມີຄວາມໝາຍດັດປັບການປະພຶດຂອງລັດ.

**ການພົວພັນສາກົນ** ແມ່ນການພົວພັນທຸກຮູບແບບນັບທັງພາກມະຫາຊົນ, ເອກະຊົນ, ການຄ້າ ແລະ ວັດທະນະທຳ ລະຫວ່າງບັນດາລັດຕ່າງໆ.

**ການກະທຳຜິດນອກດິນແດນຂອງຕົນ** ແມ່ນການກະທຳຜິດທາງອາຍາ ຊຶ່ງກະທຳຜິດ ໃນປະເທດ ຂໍ ແລະ ການດຳເນີນຄະດີດັ່ງກ່າວ ຕ້ອງດຳເນີນຢູ່ປະເທດ ກໍ ຊຶ່ງເປັນບ່ອນອາໄສ ຂອງຜູ້ກະທຳຜິດ.

**ການເນລະເທດ** ແມ່ນການສົ່ງຄົນຕ່າງດ້າວ ຫຼື ຄົນຕ່າງປະເທດ ອອກຈາກລັດ ໜຶ່ງໄປ ສູ່ລັດອື່ນ ຊຶ່ງຄົນຕ່າງດ້າວ ຫຼື ຕ່າງປະເທດດັ່ງກ່າວ ຖືກຕັດສິນວ່າຂັດກັບ ສະຫວັດດີການ ຂອງ ລັດນັ້ນ.

**ການບໍ່ສົ່ງກັບ** ແມ່ນຫຼັກການໜຶ່ງ ຊຶ່ງບໍ່ມີລັດໃດ ມີສິດສົ່ງຜູ້ລີ້ໄພອອກນອກປະເທດຂອງຕົນກັບຄືນໄປຍັງລັດຂອງຜູ້ຂໍລີ້ໄພ ເພາະອາດຈະຖືກດຳເນີນຄະດີ.

**ການສົມຮູ້ຮ່ວມຄິດ** ແມ່ນການລວມກັນຂອງສອງຄົນ ຫຼື ຫຼາຍຄົນ ແລະ ຈັດຕັ້ງກັນຂຶ້ນເພື່ອກໍ່ອາດສະຍາກຳ.

**ການຍຶດເອົາເປັນຂອງລັດ** ແມ່ນການໄດ້ມາ ຫຼື ບັງຄັບເອົາຊັບສົມບັດຂອງບຸກຄົນ ຫຼື ເອກະຊົນ ໂດຍລັດຖະບານ

**ການເຈລະຈາ** ແມ່ນເຕັກນິກທາງການທູດເພື່ອໃຊ້ລະງັບຂໍ້ພິພາດລະຫວ່າງກັນໂດຍສັນຕິ, ເຊິ່ງມີຈຸດປະສົງໃນ ການປະນີປະນອມ ແລະ ຜ່ອນສັ້ນຜ່ອນຍາວ ໃຫ້ກັນແລະກັນ ໂດຍຜ່ານບຸກຄົນໂດຍກົງ.

**ການໃຫ້ສັດຕະຍາບັນ** ແມ່ນການຢືນຢັນຂອງລັດ ທີ່ເຫັນດີຢ່າງເປັນທາງການຕໍ່ບົດບັນຍັດຂອງສົນທິສັນຍາ ທີ່ຝ່າຍບໍລິຫານຂອງລັດໄດ້ລົງນາມ ໃນສົນທິສັນຍາໄປແລ້ວ.ໂດຍຜ່ານການເຫັນດີຂອງຝ່າຍນິຕິບັນຍັດຊຶ່ງ ອາດຈະເປັນສະພາດຽວ ຫຼື ສອງສະພາ ຂຶ້ນກັບ ລັດຖະທຳ- ມະນູນຂອງແຕ່ລະປະເທດໄດ້ບັນຍັດ ເອົາໄວ້.

**ການຍຸດຕິຂໍ້ພິພາດໂດຍສັນຕິ** ແມ່ນການຍຸດຕິຂໍ້ພິພາດ ລະຫວ່າງປະເທດໂດຍປາສະຈາກການໃຊ້ກຳລັງ ເພື່ອຊ່ວຍ ໃຫ້ຂໍ້ຂັດ ແຍ່ງໃນເລື່ອງສິດທິຂອງ ລັດຄູ່ພິພາດ ຍຸດຕິລົງ.

**ການປະນີປະນອມ** ແມ່ນວິທີການ ທີ່ຜູ້ແທນຂອງກຸ່ມລັດຕ່າງໆ ມາຮ່ວມກັນຄົ້ນຄ້ວາຫາຂໍ້ເທັດຈິງທີ່ເກີດ ຂໍ້ພພາດກັນຢູ່ນັ້ນ. ອາດຈະມີການຕັ້ງ ຄະນະກຳມະການ ການ ປະນີປະນອມສະເພາະກິດ ຂຶ້ນມາເພື່ອຊ່ວຍ ໃຫ້ມີການປະນີປະນອມກັນ ລະຫວ່າງຄູ່ກໍລະນີທີ່ພິພາດກັນນັ້ນ.

**ການເປັນສື່ກາງ** ແມ່ນການໄກ່ເກ່ຍໂດຍບຸກຄົນພາຍນອກ ເພື່ອອຳນວຍໃຫ້ແກ່ ການເລີ່ມເຈລະຈາ ຂອງຄູ່ກໍລະນີຂໍ້ຂັດແຍ່ງ

**ການສອບສວນທາງສາກົນ** ແມ່ນການຄົ້ນຄວ້າຫາຂໍ້ເທັດຈິງຢ່າງເປັນທາງການ ກ່ຽວກັບເລື່ອງທີ່ຄູ່ກໍລະນີກຳລັງມີຂໍ້ພິພາດລະຫວ່າງປະເທດຢູ່ນັ້ນ.

**ການໄກ່ເກ່ຍທາງສາກົນ** ແມ່ນການແກ້ໄຂຂໍ້ຂັດແຍ່ງໂດຍບຸກຄົນທີສາມ ທີ່ເປັນກາງຂອງຂໍ້ຂັດແຍ່ງ ເພື່ອໃຫ້ສາມາດຊອກ ຫາຊ່ອງທາງແກ້ໄຂຂໍ້ຂັດແຍ່ງຮ່ວມກັນ ໂດຍການ ເຈລະຈາ ແລະ ປະນີປະນອມ.

**ການພິຈາລະນາຕັດສິນຄະດີຂອງສານສາກົນ** ແມ່ນການພິຈາລະນາຂອງສານສາກົນ ເພື່ອແກ້ໄຂຂໍ້ຂັດແຍ່ງ ລະຫວ່າງປະເທດ ຫຼືລະຫວ່າງນິຕິບຸກຄົນຕ່າງໆ ໃນບັນດາລັດ.

**ສຽງປະຊາມະຕິ** ແມ່ນການໃຫ້ປະຊາຊົນທັງໝົດທີ່ຢູ່ໃນພື້ນທີ່ເຊິ່ງກຳລັງ ມີບັນຫາກັນຢູ່ນັ້ນ ໄດ້ລົງຄະແນນສຽງລົງມະຕິກັນ ກ່ຽວກັບການຍົກດິນແດນໃຫ້ກັນ, ຕ້ອງຂໍຄວາມເຫັນດີຈາກປະຊາຊົນກ່ອນ ທີ່ຈະໂອນອຳນາດອະທິປະໄຕໄປຢູ່ໃນດິນແດນຂອງລັດໃດລັດໜຶ່ງ.

**ການຮັບຮອງລັດໂດຍພຶດຕິໄນ** ແມ່ນການທີ່ລັດໃດໜຶ່ງ ໃຫ້ການຮັບຮອງລັດໃຫມ່ແບບຊົ່ວຄາວ.

**ການຮັບຮອງລັດໂດຍນິຕິໄນ** ແມ່ນການທີ່ລັດໃດໜຶ່ງໄດ້ໃຫ້ການຮັບຮອງຢ່າງສົມບູນແກ່ອີກລັດໃໝ່ໜຶ່ງ. ການຮັບຮອງໂດຍນິ ຕິໄນ ມັກຈະກ່ຽວຂ້ອງກັບ ການສະຖາປະນາການພົວພັນທາງການທູດຂັ້ນປົກະຕິຕໍ່ກັນ.

**ການຮັບຮອງລັດຖະບານ** ແມ່ນການຍອມຮັບວ່າມີລັດຖະບານໃດໜຶ່ງເກີດຂຶ້ນ ແລະ ຢຳ້ເຖິງຄວາມພ້ອມຂອງຕົນ ທີ່ຈະດຳເນີນການຕິດຕໍ່ພົວພັນທາງການທູດກັບລັດຖະບານນັ້ນໆ.

**ການຮັບຮອງລັດ** ແມ່ນການຍອມຮັບຈາກລັດທັງຫຼາຍ ໃຫ້ເຂົ້າເປັນສະມາຊິກ ໃໝ່ຂອງປະຊາຄົມໂລກ.

**ກົດໄອຍະການເສິກ** ແມ່ນການໃຊ້ອຳນາດທາງການທະຫານເຂົ້າປົກຄອງປະຊາຊົນ ໃນຍາມສົງຄາມ ຫຼື ໃນຍາມ ສຸກເສີນ.

**ກະຕິກາສົງຄາມ** ແມ່ນຫຼັກການທີ່ປະຕິບັດໃນກົດໝາຍລະຫວ່າງຊາດ ພື່ອຄວບຄຸມພຶດ-ຕິກຳຂອງ ປະເທດທີ່ກຳລັງສູ້ຮົບກັນ.

**ການປິດລ້ອມທາງທະເລ** ແມ່ນການປ້ອງກັນການສົ່ງກຳລັງ ເພື່ອບໍ່ໃຫ້ໄປເຖິງສັດຕູ ຫຼື ເພື່ອບໍ່ໃຫ້ຊັບພະຍາກອນ ແລະ ອາຫານຕ່າງໆຕົກໄປເຖິງປະຊາຊົນພົນລະເມືອງທັງໝົດກໍ່ໄດ້ ຫຼືເອີ້ນວ່າການ ປິດລ້ອມທາງ ທະເລຍາມສັນຕິ.

**ການປ້ອງກັນພົນລະເຮືອນ** ແມ່ນແຜນການຕ່າງໆຂອງລັດຖະບານເພື່ອປົກປ້ອງ ພົນລະເຮືອນກໍລະນີທີ່ຖືກໂຈມຕີ.

**ການຫ້າມພົນລະເຮືອນອອກນອກສະຖານທີ່** ແມ່ນຄຳສັ່ງຫ້າມພົນລະເຮືອນ ອອກນອກບ້ານ ໃນຍາມຄ່ຳມືດ.ໂດຍຜູ້ບັນຊາການທະຫານຂັ້ນທ້ອງຖິ່ນ ນຳມາໃຊ້ໃນການສູ້ຮົບ ກັບຜູ້ກໍ່ການຮ້າຍ ຫຼື ສົງຄາມກອງໂຈນ.

**ການປະກາດສົງຄາມ** ແມ່ນການປະກາດຢ່າງເປັນທາງການໂດຍປະເທດ ໃດປະເທດໜຶ່ງ ວ່າສະຖານະການທາງກົດໝາຍຂອງປະເທດໜຶ່ງ ໄດ້ເກີດຂຶ້ນແລ້ວກັບອີກປະເທດໜຶ່ງ.

**ການແຊກແຊງ** ແມ່ນການກະທຳຂອງລັດໜຶ່ງ ທີ່ເຂົ້າໄປຫຍຸ້ງກ່ຽວດ້ວຍ ກຳລັງທະຫານ, ໃນວຽກງານຕ່າງໆຂອງອີກລັດໜຶ່ງ ເພື່ອໃຫ້ມີຜົນກະທົບຕໍ່ນະໂຍບາຍພາຍໃນ ແລະ ນະໂຍບາຍພາຍນອກ.

**ການລະດົມກຳລັງ** ແມ່ນການປະຕິບັດຕ່າງໆ ຂອງລັດໃດລັດໜຶ່ງ ເພື່ອໃຫ້ຕົນຢູ່ໃນ ສະພາບກຽມພ້ອມທີ່ຈະເຮັດສົງຄາມໄດ້.

**ການຕອບໂຕ້** ແມ່ນມາດຕະການບັງຄັບທີ່ບໍ່ເຖິງຂັ້ນເຮັດສົງຄາມ ໂດຍລັດໜຶ່ງຕໍ່ອີກ ລັດໜຶ່ງ ເພື່ອເປັນການລົງ ໂທດຕໍ່ການກະທຳຂອງປະເທດນັ້ນ.

**ການກໍ່ວິນາດສະກຳ** ແມ່ນການທຳລາຍສິ່ງອຳນວຍຄວາມສະດວກທາງດ້ານ ການທະຫານ, ການອຸດສາຫະກຳ,ການຄົມມະນາຄົມຂົນສົ່ງໃນດິນແດນຂອງຝ່າຍກົງກັນຂ້າມໂດຍພວກກອງໂຈນ ຫຼືສາຍລັບ ເພື່ອຕັດກຳ ລັງຂອງສັດຕູ.

**ການສະສົມສິ່ງຂອງ** ແມ່ນການສະສົມວັດຖຸດິບ ແລະ ສິ່ງຂອງສຳເລັບຮູບ ເພື່ອນຳ- ອອກມາໃຊ້ ໃນຍາມເກີດສົງຄາມ ຫຼື ເມື່ອຖືກປິດລ້ອມ.

**ການທໍລະຍົດ** ແມ່ນການກະທຳຜິດທາງອາຍາຊຶ່ງລວມເຖິງການພະຍາຍາມ ຈະໂຄ່ນລົ້ມ ລັດຖະບານ ຂອງລັດໃດໜຶ່ງ ທີ່ຜູ້ກະທຳຜິດມີຄວາມຈົງຮັກພັກດີ.

**ການປະຕິວັດ** ແມ່ນການລຸກຮື້ຂຶ້ນຂອງປະຊາຊົນເພື່ອໂຄ່ນລົ້ມລະບອບການປົກຄອງເກົ່າ ແລະ ປ່ຽນແປງສະ ຖາບັນທາງດ້ານການເມືອງ, ເສດຖະກິດ - ສັງຄົມພາຍໃນລັດ.

**ການຈຳແນກຜິວ** ແມ່ນນະໂຍບາຍຂອງປະເທດສາທາລະນະລັດອາຟລິກາໃຕ້ ໂດຍໃຊ້ວິທີການ ອອກກົດໝາຍ ເພື່ອໃຫ້ຄົນກຸ່ມນ້ອຍ ຊາວຢູໂຣບສາມາດປົກຄອງ ຄົນ-ອາຟລິກາຜິວດຳ ໂດຍການເລືອກປະຕິບັດຢ່າງ ເປີດເຜີຍ.

**ການກຳນົດການປົກຄອງ** ແມ່ນແນວຄວາມຄິດທີ່ຖືວ່າທຸກໆຊົນຊາດຄວນມີສິດໃນ ການປົກຄອງ ຕົນເອງ ໃນລັດຂອງຕົນ.

**ກະຕິກາສັນຍາແອນຊັສ** ແມ່ນສົນທິສັນຍາການເປັນພັນທະມິດແບບໄຕຣພາຄີທີ່ໄດ້ລົງນາມກັນ ໃນປີ 1951 ໂດຍ ປະເທດ ອອສເຕຣເລັຍ, ນິວຊີແລນດ໌ ແລະ ອາເມລິກາ ເພື່ອຮ່ວມກັນ ຮັກສາຄວາມໝັ້ນຄົງໃນພາກ ພື້ນປາຊີຟິກ.

**ກະຕິກາສັນຍາແບກແດດ** ແມ່ນການເປັນພັນທະມິດກັນ ເພື່ອຮັກສາສັນຕິພາບ ແລະ ຄວາມໝັ້ນຄົງໃນຕາເວັນອອກ ກາງ ທີ່ໄດ້ລົງນາມກັນໃນປີ 1955 ໂດຍມີປະເທດອີຣັກ, ຕວາກກີ, ອັງກິດ, ປາກິດສະຖານ ແລະ ອີຣານ.

**ກະຕິກາສັນຍາວາກໂຊວີ** ແມ່ນສົນທິສັນຍາການໃຫ້ຄວາມຊ່ວຍເຫຼືອກັນໃນຢູໂຣບຕາເວັນອອກໃນໄລຍະເວລາ 20 ປີ ຊຶ່ງຈັດຕັ້ງຂຶ້ນມາໂດຍກຸ່ມປະເທດ ສັງຄົມ ນິຍົມ ໃນປີ 1955 ປະກອບດ້ວຍປະເທດ ອານບານີ, ບູນກາລີ, ເຊັກໂກສະໂລວາກີ, ສາທາລະນະລັດ ປະຊາທິປະໄຕ ເຢຍລະມັນ, ຮົງກາລີ, ໂປໂລຍ, ຣູມານີ ແລະ ສະຫາພາບໂຊວຽດ.

**ການຢຸດຍິງ** ແມ່ນການຢຸດຕິການສູ້ຮົບຊົ່ວຄາວ ຊຶ່ງຕົກລົງກັນໂດຍຄູ່ສົງຄາມ ເພື່ອເປັນການເປີດໂອກາດໃຫ້ຝ່າຍທີສາມ ຫຼື ໃຫ້ອົງການຈັດຕັ້ງສາກົນເຂົ້າມາໄກ່ເກ່ຍ.

**ກະຕິກາສັນຍາເຄລລອກ-ບຣີອັງ** ເປັນສົນທິສັນຍາແບບທົ່ວໆໄປລົງນາມກັນໃນປີ1928 ແລະເກືອບທຸກປະເທດໄດ້ໃຫ້ສັດ ຕະຍາບັນ, ເປັນສົນທິສັນຍາ ທີ່ຖືວ່າການໃຊ້ສົງຄາມ ເປັນ ເຄື່ອງມືຂອງນະໂຍບາຍແຫ່ງຊາດ ເປັນການຜິດກົດໝາຍ ຫຼື ເອີ້ນອີກຢ່າງໜຶ່ງວ່າ “ກະຕິກາ ສັນຍາປາຣີ”.

**ການຢູ່ຮ່ວມກັນໂດຍສັນຕິ** ເປັນຫຼັກການໜຶ່ງທີ່ ປະທານປະເທດ ນິກິຕາ ຄຣຸດຊອບຂອງສະຫະພາບໂຊວຽດ ສະເໜີຕໍ່ ກອງປະຊຸມພັກຄອມມູນິດຄັ້ງທີ 20 ປີ 1956 ໂດຍໄດ້ຮຽກຮ້ອງໃຫ້ຫຼີກລ້ຽງສົງຄາມນິວເຄລັຍ ແລະ ເປັນການຍອມຮັບ ເຖິງໄພອັນຕະລາຍຈາກການໃຊ້ອາວຸດນິວເຄລັຍ *(ອະທິບາຍ 5 ຫລັການ).*

**ການໃຊ້ຄ່າເສຍຫາຍ, ຄ່າປະຕິກຳສົງຄາມ** ແມ່ນການຊົດໃຊ້ຄ່າເສຍຫາຍໃຫ້ລັດທີ່ໄດ້ໄຊຊະນະທີ່ໄດ້ຮຽກຮ້ອງເອົາຈາກລັດຜູ້ເສຍໄຊທີ່ໄດ້ກໍ່ຂຶ້ນໃນຊ່ວງສົງຄາມ.

**ການຂະຫຍາຍສົງຄາມ** ແມ່ນການຂະຫຍາຍພື້ນທີ່ທາງພູມສາດໃນການສູ້ຮົບ, ການເພີ່ມກຳລັງພົນ, ເພີ່ມຈຳນວນປະ ເທດເຂົ້າມາຊ່ວຍ, ການໃຊ້ອາວຸດຍຸດໂທປະກອນ ທີ່ມີອະນຸພາບໃນການທຳລາຍ ເພື່ອເຮັດໃຫ້ຝ່າຍກົງກັນຂ້າມຍອມແພ້.

**ການຄວບຄຸມອາວຸດ** ແມ່ນມາດຕະການຕ່າງໆທີ່ດຳເນີນການ ໂດຍຝ່າຍດຽວ ຫຼື ຜ່ານການຕົກລົງ ລະຫວ່າງປະເທດເພື່ອຫຼຸດຜ່ອນອາວຸດສົງຄາມໂດຍວິທີການໃດໜຶ່ງ.

**ກອງປະຊຸມສັນຕິພາບກຸງເຮັກ 1899** ແມ່ນກອງປະຊຸມລະຫວ່າງຊາດ ຄັ້ງພິເສດ ໂດຍການລິເລີ່ມຂອງ ພະເຈົ້າຊາຣ໌ ນິໂກລັສ ແຫ່ງລັດເຊຍເພື່ອໃຫ້ມີການຕົກລົງກັນກ່ຽວກັບ ການຄວບຄຸມອາວຸດຖືວ່າເປັນພື້ນຖານສຳຄັນໃນການ ຫຼຸດຜ່ອນກຳລັງອາວຸດ.

**ການເຈລະຈາຈຳກັດອາວຸດທາງຍຸດທະສາດ)** ແມ່ນການເຈລະຈາລະຫວ່າງ ອາເມລິກາ ກັບ ສະຫະພາບໂຊວຽດ ຄັ້ງທຳອິດ ເມື່ອປີ 1969 ເພື່ອກຳຈັດການ ສ້າງລະບົບຕໍ່ຕ້ານຂີປະນາວຸດ.

**ການບັງຄັບໃຊ້** ແມ່ນການຈັດຕັ້ງກົນໄກ ແລະ ດຳເນີນການ ເພື່ອໃຫ້ເປັນໄປຕາມຂໍ້ຕົກລົງ.

**ການກວດກາ** ແມ່ນການຈັດຕັ້ງກົນໄກກວດສອບວ່າມີການປະຕິບັດຕາມ ຫຼື ການລະເມີດ ສົນທິສັນຍາຫຼືບໍ່.

**ການສ້າງເຂດປອດນິວເຄຼຍ** ແມ່ນຂໍ້ຕົກລົງຫ້າມນຳອາວຸດນິວເຄຼຍ ເຂົ້າໄປໃນເຂດ, ໃນປະເທດ ຫຼື ໃນພູມມິພາກແຫ່ງໃດແຫ່ງໜຶ່ງ ທີ່ກຳນົດໄວ້ສະເພາະ.

**ກົດບັດອັຕລັງຕິກ** ແມ່ນຖະແຫຼງການຮ່ວມ ໂດຍປະທານນາທິບໍດີ ອາເມລິກາ ຣຸສເວລທ໌ ແລະ ນາຍົກລັດຖະມົນຕີອັງກິດ ເຊີຣ໌ຊິວລ໌ ໃນເດືອນສິງຫາ 1941 ຫຼັງຈາກປະຊຸມກັນໃນເຮືອລຳ ໜຶ່ງກາງ ມະຫາສະໝຸດ ອັຕລັງຕິກ.

**ການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການ** ແມ່ນການຕັດສິນ ຂໍ້ຂັດແຍ່ງດ້ວຍກຳມະ ການທີ່ເປັນກາງ, ບໍ່ເຂົ້າຂ້າງອອກຂາຜູ້ໃດຜູ້ໜຶ່ງ (ຫຼືຫຼາຍຄົນ) ເຊິ່ງຖືກເລືອກເອົາ ໂດຍຄູ່ກໍລະນີ ຂັດແຍ່ງ ແລະ ພວກກ່ຽວເປັນຜູ້ທີ່ຕົກລົງເຫັນດີ ຈະຍຶດຖືປະຕິບັດ ຕາມຄຳຕັດສິນ ຂອງກຳມະການ ຕັດສິນຂໍ້ຂັດແຍ່ງທີ່ກຳນົດຂຶ້ນພາຍຫຼັງການພິຈາລະນາຂໍ້ຂັດແຍ່ງ.

**ກົດທຳມະຊາດ** ແມ່ນກົດເກນໜຶ່ງຂອງລະບົບກົດລະບຽບ ຫຼື ຫຼັກການໜຶ່ງ ເພື່ອຊີ້ທາງໃນ ການເຄື່ອນໄຫວຂອງມະນຸດ ທີ່ບໍ່ມີການປ່ຽນແປງ ແລະ ໃຊ້ໄດ້ໃນລະດັບສາກົນ.

**ການໂຄສະນາຊວນເຊື່ອ** ແມ່ນວິທີການສື່ສານແນວໜຶ່ງ ໂດຍຜ່ານທາງສື່ມວນຊົນ ແລະ ມີການປັບປຸງສິລະປະຊັກຊວນທາງຈິດຕະວິທະຍາ ເພື່ອຈຸດປະສົງໃດໜຶ່ງ.

**ຂໍ້ຂັດແຍ່ງ** ແມ່ນການບໍ່ຕົກລົງເຫັນດີກ່ຽວກັບບັນຫາທາງກົດໝາຍ ຫຼືຕົວຈິງ, ເປັນຂໍ້ຂັດແຍ່ງ ທາງດ້ານ ທັດສະ ນະກົດໝາຍ ຫຼື ຜົນປະໂຫຍດລະຫວ່າງຄູ່ກໍລະນີທັງສອງຝ່າຍ.

**ຂ່າວທີ່ໄດ້ວິເຄາະແລ້ວ** ແມ່ນຂ່າວສານທີ່ລວບລວມຂໍ້ມູນ ແລະ ໄດ້ກວດກາແລ້ວກ່ຽວກັບ ຄວາມສາມາດ ແລະ ແຜນການຂອງອີກລັດໜຶ່ງ ລວມທັງລັດທີ່ເປັນມິດ ແລະ ເປັນສັດຕູ.

**ຂະບວນການບໍ່ຮ່ວມກຸ່ມ** ແມ່ນບັນດາປະເທດຕ່າງໆ ທີ່ມີການລວມຕົວກັນ ຊຶ່ງມີສະມາຊິກ ຫຼາຍກວ່າ ຮ້ອຍປະເທດ ທີ່ໄດ້ປະຕິເສດການເຂົ້າຮ່ວມທາງການເມືອງ ແລະ ການທະຫານກັບ ກຸ່ມຕາເວັນຕົກ ຫຼື ກັບກຸ່ມສະຫະພາບ.

**ຂໍ້ສະຫງວນ** ແມ່ນຖະແຫຼງການທີ່ເຮັດຂຶ້ນຝ່າຍດຽວຈາກລັດໜຶ່ງເພື່ອຫຼີກເວັ້ນ ບາງຂໍ້ກຳນົດຂອງສົນທິສັນຍາ ໃນການປະຕິບັດຕໍ່ລັດນັ້ນ.

***ວັດຖຸຕ້ອງຫ້າມ*** ແມ່ນວັດຖຸທາງສົງຄາມທີ່ລັດເປັນກາງ ບໍ່ອາດຂາຍ, ມອບໃຫ້ລັດທີ່ເປັນຄູ່ສົງຄາມ.

**ຂໍ້ຕົກລົງ ຢານຕາ** ແມ່ນຂໍ້ຕົກລົງຂອງຝ່າຍບໍລິຫານ ໃນລະຫວ່າງສົງຄາມໂລກຄັ້ງທີ 2 ຊຶ່ງໄດ້ລົງນາມຮ່ວມກັນຢູ່ ສາທາລະນະລັດ ໄຄຣເມຍ ຂອງລັດເຊຍ ລະຫວ່າງຜູ້ນຳສາມຊາດຄື: ປະທານນາທິບໍດີ ຣຸດເວລ ຂອງ ອາເມລິກາ, ນາຍົກ ເຊີຊິລ ຂອງອັງກິດ ແລະ ປະທານປະເທດ ສະຕາລິນ ຂອງສະຫະພາບໂຊວຽດ ໃນເດືອນ ກຸມພາ ປີ 1945 ຊຶ່ງເປັນຂໍ້ຕົກລົງທີ່ສຳຄັນກ່ຽວກັບການກໍ່ຕັ້ງອົງການສະຫະປະຊາຊາດ.

**ເຂດອິດທິພົນ** ແມ່ນດິນແດນທີ່ຖືກຄອບງຳໂດຍປະເທດມະຫາອຳນາດ ຊຶ່ງເຂົ້າໄປຈຳກັດອະທິປະໄຕ ຂອງ ລັດອິດສະລະ .

**ຂະບວນການໄຊອອນນິສຕ໌** ແມ່ນຂະບວນການຄືນສູ່ມາຕາພູມຂອງຊາວຢິວ ເພື່ອສ້າງ ລັດອິດສະລະແອນຂຶ້ນໃນປີ1948.

**ຂໍ້ຕົກລົງກຸງເຮນຊິງກີ** ແມ່ນຂໍ້ຕົກລົງທາງການທູດທີ່ສຳຄັນ, ຊຶ່ງລົງນາມກັນທີ່ນະຄອນ ເຮັນຊິງກິ ປະເທດແຟັງລັງໃນ ປີ 1975. ຊຶ່ງພະຍາຍາມ ຫຼຸດຜ່ອນການເປັນສັດຕູກັນ ລະຫວ່າງ ຝ່າຍຕາເວັນອອກກັບຕາເວັນຕົກ ໂດຍມີຜູ້ເຂົ້າຮ່ວມປະຊຸມ ແລະ ລົງນາມກັນ 48 ປະເທດຈາກກຸ່ມສົນທິສັນຍານາໂຕ້ 38ປະເທດ ແລະ ຈາກກຸ່ມກະຕິກາສັນຍາວາກໂຊວີ 13 ປະເທດ.

**ຂໍ້ຕົກລົງຮອຕໄລ** ແມ່ນບົດບັນທຶກຄວາມເຂົ້າໃຈ ລະຫວ່າງອາເມລິກາ ກັບ ສະຫະພາບໂຊວຽດໄດ້ລົງນາມຮ່ວມ ກັນທີ່ນະຄອນເຊີແນວ ໃນວັນທີ 20 ມິຖຸນາ 1963 ວ່າດ້ວຍການຕິດຕັ້ງສາຍເຊື່ອມໂຍງ ຕິດຕໍ່ທາງໄກ ລະຫວ່າງວໍຊິງຕັນກັບມົດສະກູ ເພື່ອໃຫ້ປະມຸກລັດທັງສອງສາມາດຕິດຕໍ່ກັນໂດຍກົງໄດ້ ໃນລະຫວ່າງ ເກີດວິກິດການ.

**ເຂດຕໍ່ເນື່ອງ** ແມ່ນພາກສ່ວນພື້ນທະເລ ຫ່າງຈາກຝັ່ງ 12 ຫາ 24 ໄມລ໌ທະເລ ຊຶ່ງໃນລະຫວ່າງເຂດນີ້ ຕາມກົດໝາຍທາງທະເລສາກົນ ລັດສາມາດນຳໃຊ້ມາດຕະການຕ່າງໆໄດ້.

**ເຂດເສດຖະກິດຈຳເພາະ** ແມ່ນເຂດພາກສ່ວນທະເລ ນັບແຕ່ຝັ່ງຂອງລັດເອກະລາດ ໃດໜຶ່ງໄປເຖິງ 200 ໄມລ໌ທະເລ, ຊຶ່ງເປັນເຂດທີ່ລັດດັ່ງກ່າວ ມີສິດອະທິປະໄຕ ໃນແຫຼ່ງຊັບພະຍາກອນທີ່ມີຊີວິດ ແລະ ບໍ່ມີຊີວິດ.

**ຄະນະກຳມະການສອບສວນ** ແມ່ນຄະນະກຳມະການພາຍນອກທີ່ມີໜ້າທີ່ຊອກຫາຄວາມຈິງ ໃນຂໍ້ຂັດແຍ່ງໃດໜຶ່ງ ແລະສະຫງວນໃຫ້ຄູ່ກໍລະນີທີ່ມີຂໍ້ຂັດແຍ່ງກັນຊາບ.

**ຂໍ້ຕົກລົງຣັດ - ບາອຕ ປີ 1817**

ແມ່ນສົນທິສັນຍາລະຫວ່າງການາດາ ກັບອາເມລິກາ ເພື່ອສ້າງເຂດປອດທະຫານ ທີ່ຊາຍແດນອາເມລິກາ ແລະ ການາດາ, ນອກຈາກນັ້ນ, ຍັງເປັນຂໍ້ຕົກລົງໃນການສະໜັບສະໜູນການພົວພັນ ອັນດີທາງການເມືອງ, ເສດຖະກິດ ແລະ ສັງຄົມລະຫວ່າງສອງຊາດ.

**ຍື່ນຄຳຂາດ** ແມ່ນການຕິດຕໍ່ສື່ສານເປັນທາງການເທື່ອສຸດທ້າຍ ຈາກລັດໜຶ່ງ ໄປຫາອີກລັດໜຶ່ງ ເພື່ອແຈ້ງໃຫ້ຍິນຍອມຕາມຄວາມປະສົງຂອງລັດທີ່ຍື່ນຄຳຂາດນັ້ນ ເພື່ອ ເປັນການຂົ່ມຂູ່ ຫຼື ເປັນສັນຍານບອກວ່າ ວິກິດການຮ້າຍແຮງ ໃນການພົວພັນ ລະຫວ່າງ ຊາດ ໄດ້ເກີດຂຶ້ນແລ້ວ.

**ຄົນຕ່າງດ້າວ** ແມ່ນບຸກຄົນຕ່າງປະເທດທີ່ບໍ່ໄດ້ຖືກຮັບຮູ້ວ່າເປັນພົນລະເມືອງ ຂອງປະເທດ ນັ້ນ ຫຼື ບໍ່ຮັບຮູ້ວ່າ ເປັນຄົນສັນຊາດໃດ. *ຄົນຕ່າງດ້າວຕາມກົດໝາຍ ວ່າດ້ວຍສັນຊາດລາວແມ່ນ ...(ຕາມ ກມ ລາວ)*

**ໂຄງການຍຸດທະສາດ** ແມ່ນໂຄງການວິໄຈທີ່ລິເລີ່ມ ໂດຍປະທານນາທິບໍດີ ໂຣນັລດ໌ເຣເກນ ຂອງອາເມລິກາທີ່ມີ ຈຸດມຸ້ງໝາຍເພື່ອປ້ອງກັນການໂຈມຕີຂອງໂຊວຽດ ຫຼື ຮຽກວ່າໂຄງການ "Starwar" ສົງຄາມໝູ່ດາວ.

**ໂຈນສະຫຼັດ** ແມ່ນການກະທຳທີ່ຜິດກົດໝາຍອາຍາ ຊຶ່ງເປັນການໃຊ້ຄວາມຮຸນແຮງ ເພື່ອຈຸດປະສົງບັງຄັບ ເອົາຊັບສົມບັດຂອງບຸກຄົນອື່ນທີ່ກຳລັງໂດຍສານທາງເຮືອ ຫຼື ເຮືອບິນ.

**ຈັກກາພັດນິຍົມທາງວັດທະນະທຳ** ເປັນນະໂຍບາຍ ຊຶ່ງລັດຖະບານໜຶ່ງ ບັງຄັບໃຊ້ຄ່ານິຍົມຂອງຕົນ ຕໍ່ອີກລັດຖະບານໜຶ່ງ ທີ່ອ່ອນແອກວ່າໃນຮູບການຄອບງຳ ຫຼື ທຳລາຍວັດທະນະທຳເດີມໄປ ຊຶ່ງພາສາ ຖືເປັນພາຫານະຂັ້ນພື້ນຖານທີ່ຮັບໃຊ້ສຳລັບ ເພື່ອສະແດງອອກເຖິງວັດທະນະທຳ.

**ຈັກກາພັດນິຍົມທາງເສດຖະກິດ** ແມ່ນການຜູກພັນເສດຖະກິດ ຂອງປະເທດໜຶ່ງ ກັບອີກຂອງປະເທດໜຶ່ງທີ່ອ່ອນແອກວ່າ, ເມື່ອລັດທີ່ອ່ອນແອ ກວ່າຈຳເປັນຕ້ອງເພິ່ງພາ ທາງ ເສດຖະກິດຕໍ່ລັດທີ່ເຂັ້ມແຂງກວ່າຫຼາຍເທົ່າໃດ,ລັດທີ່ອ່ອນແອ ກວ່າ ກໍ່ຍາກທີ່ຈະຕ້ານທານ ການຮຽກຮ້ອງທາງການເມືອງ ຂອງລັດທີ່ເຂັ້ມແຂງກວ່າຫຼາຍເທົ່ານັ້ນ.

**ຄົນໃນຊາດ** ແມ່ນກຸ່ມປະຊາຊົນຂອງຊາດໃດຊາດໜຶ່ງທີ່ເຊື່ອຖື ລັກສະນະຮູບປະພັນສັນຖານຂອງຊົນຊາດຂອງຕົນເອງ ແລະ ສະແດງອອກດັ່ງນີ້: ປາດຖະໜາ ການປົກຄອງດ້ວຍຕົນເອງ, ປາກເວົ້າພາສາຂອງຊາດຕົນເອງ, ມີຮີດຄອງປະເພນີ ຮ່ວມກັນ, ມີລັກສະນະຕໍ່ເນື່ອງ ທາງດ້ານປະຫວັດສາດ, ມີລັກສະນະຈຳເພາະທີ່ແຕກຕ່າງ ຈາກ ກຸ່ມຄົນອື່ນ ແລະ ມີພື້ນຖານຕົ້ນກຳເນີດທາງດ້ານເຊື້ອຊາດດຽວກັນ.

**ສານຕາຕັ້ງ** ແມ່ນເອກະສານທາງການທີ່ປະມຸກລັດຝ່າຍຜູ້ສົ່ງ ໄດ້ແນະນຳຕົວແທນ ທາງການທູດຂອງຕົນ ຕໍ່ປະມຸກລັດຂອງປະເທດຝ່າຍຜູ້ຮັບ.

**ສົນທິສັນຍາ** ແມ່ນຂໍ້ຕົກລົງ ຫຼື ຂໍ້ຜູກພັນຢ່າງເປັນທາງການລະຫວ່າງ ລັດອະທິປະໄຕດ້ວຍກັນ ທີ່ເຮັດຂຶ້ນ ເປັນລາຍລັກອັກສອນພາຍໃຕ້ກົດໝ!ຍລະຫວ່າງຊາດ.

**ສົງຄາມ** ແມ່ນການສູ້ຮົບລະຫວ່າງລັດກັບລັດ ຫຼື ກຸ່ມຄົນພາຍໃນ ລັດ ໂດຍການນຳໃຊ້ກຳລັງ ທະຫານ.

**ສົງຄາມກາງເມືອງ** ແມ່ນສົງຄາມສູ້ຮົບລະຫວ່າງກຸ່ມທີ່ມີການ ແຕກແຍກທາງ ການເມືອງ ຫຼື ລະຫວ່າງກຸ່ມທີ່ແຕກແຍກທາງອຸດົມການ ທີ່ເກີດຂຶ້ນໃນປະເທດ ດຽວກັນ .ສົງຄາມກາງເມືອງນີ້ ອາດຈະເປັນການສູ້ຮົບລະຫວ່າງ ຝ່າຍລັດຖະບານ ກັບ ກອງກຳລັງຕໍ່ຕ້ານລັດຖະບານ ຫຼື ລະຫວ່າງກຸ່ມຕ່າງໆທີ່ແຍ່ງຊີງອຳນາດ ເພື່ອຈັດຕັ້ງ ລັດຖະບານໃໝ່.

**ສິນຄ້າຫ້າມຄ້າຂາຍໃນຍາມສົງຄາມ** ແມ່ນອາວຸດເສິກ, ລູກປືນ ແລະ ສິນຄ້າປະເພດອື່ນໆ ທີ່ກົດໝາຍສາກົນຫ້າມປະເທດທີ່ເປັນກາງນຳເອົາໄປໃຫ້ຄູ່ສົງຄາມ.

**ສົງຄາມເຢັນ** ແມ່ນສະພາວະຄວາມຕຶງຄຽດ ທີ່ເກີດຂຶ້ນລະຫວ່າງມະຫາອຳນາດຕາເວັນຕົກ ກັບ ຝ່າຍສັງຄົມນິຍົມເອີລົບຕາເວັນອອກ ພາຍຫຼັງສົງຄາມໂລກຄັ້ງທີ II ລັກສະນະ ຂອງສົງຄາມເຢັນ ແມ່ນມີການເຄື່ອນໄຫວທາງການເມືອງ, ຖົກຖຽງທາງການທູດ, ຈິດຕະວິທະຍາ, ອຸດົມການທາງ ການເມືອງ, ເສດຖະກິດ ແລະ ມີການແຂ່ງຂັນກັນ ໃນການສະສົມອາວຸດ ຍຸດທະພັນຕ່າງໆ.

**ສົງຄາມກອງໂຈນ** ແມ່ນສົງຄາມທີ່ຜູ້ຖືອາວຸດກຸ່ມນ້ອຍ ຫຼອນໂຈມຕີກອງທັບຜູ້ຮຸກຮານ ຫຼື ຕໍ່ຕ້ານ ກັບ ລັດຖະບານທີ່ຖືກຕ້ອງຕາມກົດໝາຍ.

**ສົງຄາມຈິດຕະສາດ** ແມ່ນການຕໍ່ສູ້ແບບໜຶ່ງທີ່ນຳໃຊ້ເຕັກນິກ ແລະ ວິທີການແທນການ ໃຊ້ກຳ ລັງທະຫານໂດຍວິທີ ກະຕຸ້ນປະຕິກິລິຍາ ຄວາມຮູ້ສຶກຕ່າງໆໃຫ້ເກີດຂຶ້ນ ເປັນຕົ້ນແມ່ນຄວາມ ຢ້ານກົວ, ຄວາມກຽດຊັງຫຼືເປັນມິດໂດຍນຳໃຊ້: ວິທະຍຸ, ໂທລະພາບ, ຮູບເງົາ, ໜັງສືພິມ, ວາລະ ສານ ແລະ ອື່ນໆ ເປັນເຄື່ອງມື.

**ສິດອຳນາດຂອງສານສາກົນ** ແມ່ນອຳນາດຂອງສານ ຫຼື ອົງການຈັດຕັ້ງໃດໜຶ່ງ ໃນການພິຈາລະນາ ແລະ ຕັດສິນບັນຫາລະຫວ່າງປະເທດທີ່ແຕກຕ່າງກັນ.

**ຊາດ** ແມ່ນກຸ່ມຄົນທາງສັງຄົມຊຶ່ງມີອຸດົມການ,ສະຖາບັນ, ຮີດຄອງປະເພນີ ແລະ ຄວາມຮູ້ສຶກ ເປັນອັນໜຶ່ງອັນດຽວກັນ.

**ຊາດນິຍົມ** ແມ່ນຄວາມຮູ້ສຶກໃນຄວາມເປັນເຈົ້າຂອງຮ່ວມກັນ ຫຼື ເຈດຈຳນົງຮ່ວມກັນ ທີ່ຈະຮັກສາ ເອກະລັກຂອງກຸ່ມໄວ້ ໂດຍການຈັດຕັ້ງເປັນສະຖາບັນຂຶ້ນມາໃນຮູບແບບຂອງລັດ, ເປັນຄວາມຮູ້ສຶກ ທີ່ຊ່ວຍເຮັດໃຫ້ລັດເປັນຈຸດລວມສູນສູງສຸດ ຂອງ ຄວາມຈົງຮັກພັກດີ ຂອງບຸກຄົນແຕ່ລະຄົນ.

**ຊາດນິຍົມແບບເດັດຂາດ** ແມ່ນຊາດນິຍົມໃນຮູບແບບທີ່ຍຶດຫຼັກການຖືພວກເຮົາດີກວ່າ ພວກເຂົາຢ່າງເດັດຂາດຈະຍົກຍ້ອງລັດເປັນສູນລວມສູງສຸດຂອງຄວາມຈົງຮັກພັກດີຂອງແຕ່ລະຄົນພາຍໃນລັດ.

**ຊາດນິຍົມແບບເສລີ** ແມ່ນຄວາມຫວັງຂອງກຸ່ມຊົນຊັ້ນກາງ ທີ່ຈະໃຫ້ບັນລຸເຖິງຄວາມເປັນລັດທີ່ສົມບູນ ແລະ ຈັດ ຕັ້ງລັດຖະບານຂຶ້ນມາບົນພື້ນຖານຂອງອະທິປະໄຕປວງຊົນ, ຊາດນິຍົມແບບເສລີເນັ້ນການມີ ອິດສະຫຼະ ຈາກການຄອບງຳຂອງຕ່າງຊາດ, ການປົກຄອງຕົນເອງ ແລະ ລະບອບປະຊາທິປະໄຕຂອງຊົນຊັ້ນກາງ.

**ຍອມແພ້ໂດຍບໍ່ມີເງື່ອນໄຂ** ແມ່ນການຢຸດຕິການສູ້ຮົບໂດຍບໍ່ມີການກຳນົດ ເງື່ອນໄຂໃນການຍອມແພ້, ເປັນນະໂຍບາຍຝ່າຍພັນທະມິດ ທີ່ຮຽກຮ້ອງໃຫ້ຝ່າຍມະຫາອຳນາດທີ່ກໍ່ສົງຄາມຍອມແພ້ ໂດຍບໍ່ມີເງື່ອນໄຂໃນສົງຄາມໂລກຄັ້ງທີສອງ.

**ດຳລັດຂອງພະສັນຕະປະປາ** ແມ່ນຄຳສັ່ງທາງການທີ່ອອກໂດຍພະສັນຕະປະປາພາຍໃຕ້ ກົດໝາຍຂອງພະສົງ ມີເປົ້າໝາຍເພື່ອແນໃສ່ປົກຄອງບັນດາຫົວໜ້າ ຜູ້ນຳສາສະໜາ ຄຣິດຕຽນພາຍໃຕ້ສິດອຳນາດຂອງພະສັນທະປະປາ.

**ດິນແດນເຊົ່າ** ແມ່ນດິນທີ່ຖືກໃຊ້ສອຍໂດຍລັດຕ່າງປະເທດພາຍໃຕ້ຂໍ້ຕົກລົງເຊົ່າກັບ ເຈົ້າຂອງແຫ່ງດິນແດນ (ເຈົ້າອະທິປະໄຕ), ການເຊົ່າອາດຈະເປັນການເຊົ່າໃນເວລາສັ້ນ ຫຼື ຍາວນານກໍ່ໄດ້.

**ດິນແດນໃນອາລັກຂາ** ແມ່ນການພົວພັນກັນລະຫວ່າງລັດທີ່ເຂັ້ມແຂງກ່ວາກັບລັດທີ່ຍັງອ່ອນແອ ຫຼື ດິນແດນທີ່ຍັງບໍ່ທັນໄດ້ມີການຮັບຮອງວ່າເປັນລັດ.

**ດິນແດນປະຊາຄົມ** ແມ່ນດິນແດນທີ່ບໍ່ໄດ້ເປັນຂອງຜູ້ໃດ. (ໝາຍເຫດ: ເປັນສັບກົດໝາຍພາສາລາຕິນ ຊຶ່ງແປວ່າຊັບສົມບັດຂອງສ່ວນກາງ, ບໍ່ແມ່ນຂອງຜູ້ໃດ, ເປັນຂອງລວມ).

**ດຸນອຳນາດ** ແມ່ນແນວຄວາມຄິດ ວ່າດ້ວຍການທີ່ລັດຕ່າງໆ ໃຊ້ໃນຄວາມໝັ້ນຄົງແຫ່ງຊາດ ໃນຮູບແບບຂອງການເຂົ້າເປັນພັນທະມິດ ຫຼື ພັກຝ່າຍ, ເປັນການຍົກຍ້າຍສັບປ່ຽນການລວມຕົວກັນຂອງມະຫາອຳນາດຕ່າງໆ.

**ດິນແດນທີ່ບໍ່ມີເຈົ້າຂອງ** ແມ່ນດິນແດນທີ່ບໍ່ໄດ້ຖືກຮຽກຮ້ອງສິດຄວາມເປັນເຈົ້າຂອງ ຈາກລັດໃດເໜືອດິນແດນດັ່ງກ່າວ ( ໝາຍເຫດ : ເປັນສັບກົດໝາຍພາສາລາຕິນ ຊຶ່ງແປວ່າຊັບ ສົມບັດທີ່ບໍ່ມີເຈົ້າຂອງ) .

**ດຸນການຮຸກຮານ** ແມ່ນດຸນຍະພາບແຫ່ງ ອຳນາດລະຫວ່າງລັດທີ່ມີອາວຸດນິວເຄຼຍ. ເນື່ອງມາຈາກຢ້ານ ຄວາມພິນາດ ທີ່ຈະເກີດຂຶ້ນລະຫວ່າງກັນໃນສົງຄາມນິວເຄຼຍ.

**ຖິ່ນທີ່ຢູ່** ແມ່ນສະຖານທີ່ໆບຸກຄົນໃດໜຶ່ງໃຊ້ເປັນບ່ອນຢູ່ອາໄສ ຫຼື ມີເຮືອນຂອງຕົນເອງ.

**ແນວທີຫ້າ** ແມ່ນນຂະບວນການທີ່ສ້າງຄວາມອ່ອນແອ ໃຫ້ແກ່ລັດຖະບານ ໃນ ລະຫວ່າງເກີດສົງຄາມກາງເມືອງ ຫຼື ຖືກໂຈມຕີຈາກອີກຝ່າຍໜຶ່ງ ຫຼື ເອີ້ນວ່າ: ໄສ້ເສິກ ເຊິ່ງເກີດຂຶ້ນໃນປະເທດ ສະເປນໃນຊ່ວງສົງຄາມກາງເມືອງ.

**ທະເລສາກົນ** ແມ່ນຂອບເຂດທະເລ ຊຶ່ງຢູ່ນອກເໜືອຂອບເຂດ ສິດອຳນາດດິນແດນຂອງລັດທີ່ມີຊາຍແດນ ຕິດທະເລ (12 miles ອອກໄປ).

**ນັກການທູດ** ແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຈາກ ກະຊວງການຕ່າງປະເທດ ໄປປະຕິບັດໜ້າທີ່ ວຽກງານ ຢູ່ ຕ່າງປະເທດ.

**ນະໂຍບາຍການຕ່າງປະເທດ** ແມ່ນເປົ້າໝາຍໃດໜຶ່ງທີ່ກຳນົດຂຶ້ນໂດຍລັດໃດລັດໜຶ່ງ ເພື່ອ ສົ່ງເສີມຜົນປະໂຫຍດອັນແນ່ນອນຂອງຊາດຕົນ ໂດຍຜ່ານການມີສ່ວນຮ່ວມຂອງຕົນ ໃນສາຍພົວພັນສາກົນ.

**ນະໂຍບາຍເປັນກາງ** ແມ່ນຈຸດຢືນທາງການເມືອງຂອງລັດໃດລັດໜຶ່ງທີ່ເປັນ ອິດສະລະ, ບໍ່ເຂົ້າຂ້າງຝ່າຍໃດຝ່າຍໜຶ່ງ ໃນການຕໍ່ສູ້ແຍ່ງຊີງອຳນາດລະຫວ່າງຝ່າຍຕາເວັນອອກ ກັບຝ່າຍ ຕາເວັນຕົກ.

**ບັດເຫັນຊອບ** ແມ່ນໜັງສືຮັບຮອງຢ່າງເປັນທາງການ ທີ່ລັດຜູ້ຮັບ ໃຫ້ການຮັບຮອງ ສະຖານະພາບຂອງກົງສູນ ທີ່ໄດຮັບການແຕ່ງຕັ້ງໃໝ່.

**ບຸກຄົນທີ່ເພິ່ງປາດຖະໜາ** ແມ່ນການສະແດງອອກຂອງລັດຜູ້ຮັບວ່າບຸກຄົນໜຶ່ງຈະໄດ້ຮັບການຍອມຮັບຫຼື ຍັງຄົງໄດ້ຮັບການຍອມຮັບຕໍ່ໄປວ່າເປັນຜູ້ແທນ ທາງການຂອງລັດ ຕ່າງປະເທດ.

**ໃບມອບອຳນາດ** ແມ່ນເອກະສານທີ່ມອບໃຫ້ໂດຍອຳນາດການປົກຄອງຂອງລັດ ແຕ່ງຕັ້ງບຸກຄົນໜຶ່ງ ຫຼື ຫຼາຍຄົນຕາງໜ້າໃຫ້ລັດດັ່ງກ່າວ ເພື່ອເຈລະຈາ, ຕົກລົງ, ຮັບຮອງ ຫຼື ຮັບຮູ້ຂໍ້ຄວາມທີ່ຖືກຕ້ອງຂອງສົນທິສັນຍາ,ເພື່ອສະແດງອອກເຖິງການຍິນຍອມຂອງ ລັດທີ່ຈະເຂົ້າຜູກພັນ ຕາມສົນທິສັນຍາ.

**ແບບແຜນແຫ່ງຊາດ** ແມ່ນແບບແຜນທາງພຶດຕິກຳ ທີ່ເປັນ ເອກະລັກສະເພາະຂອງລັດ ເພື່ອພະຍາຍາມແກ້ໄຂບັນ ຫາກ່ຽວກັບນະໂຍບາຍ ການຕ່າງປະເທດ.

**ຜູ້ຊ່ວຍທູດ** ແມ່ນຜູ້ຊ່ຽວຊານທາງເຕັກນິກດ້ານໃດດ້ານໜຶ່ງ ທີ່ໄດ້ຮັບການມອບໝາຍ ໃຫ້ປະຕິບັດກິດຈະ ການທາງການທູດ ໄປເຮັດໜ້າທີ່ເປັນຜູ້ແທນ ແລະ ຜູ້ລາຍງານ ໃນສ່ວນທີ່ກ່ຽວຂ້ອງກັບເລື່ອງ ທີ່ຕົນຊ່ຽວຊານນັ້ນ.

**ຜົນປະໂຫຍດແຫ່ງຊາດ** ແມ່ນຈຸດປະສົງຂັ້ນພື້ນຖານ ແລະ ການກຳນົດຂອງອຳນາດການປົກຄອງຂອງລັດໃນການສ້າງ ນະໂຍບາຍການຕ່າງປະເທດ.

**ຜູ້ລີ້ໄພ** ແມ່ນບຸກຄົນທີ່ລີບໜີອອກຈາກປະເທດທີ່ຕົນມີສັນຊາດຢູ່ ຍ້ອນໄພສົງຄາມ, ໄພທຳມະຊາດ ແລະ ວິກິດການທາງດ້ານການເມືອງ.

**ປືນໃຫຍ່** ແມ່ນອາວຸດເສີກ ຫຼື ເຄື່ອງມືປະຫັດປະຫານໃນສົງຄາມສຳລັບຍິງກະສຸນ, ອາວຸດ ຫຼື ຈະຫຼວດ.

**ໄມຕຣີຈິດລະຫວ່າງປະເທດ** ແມ່ນຄວາມເອື້ອເຟື້ອທີ່ລັດໜຶ່ງມີຕໍ່ອີກລັດໜຶ່ງເປັນການຊ່ວຍເຫຼືອ ຫຼື ເພິ່ງພາອາໄສເຊິ່ງກັນ ແລະ ກັນ.

**ມົນລະພິດ** ແມ່ນການເຮັດໃຫ້ເກີດການເປິເປື້ອນໃນສິ່ງແວດລ້ອມໂດຍມະນຸດ ຊຶ່ງເປັນການປົນເປື້ອນ ທີ່ ເກີດຈາກການນຳໃຊ້ວັດຖຸສິ່ງຂອງ ຫຼື ພະລັງງານ ຊຶ່ງມີຜົນສະທ້ອນເປັນອັນຕະລາຍຕໍ່ສິ່ງທີ່ມີຊີວິດ ຫຼື ລະ ບົບນິເວດ.

**ໂລກທີສາມ** ແມ່ນກຸ່ມປະເທດດ້ອຍພັດທະນາ ແລະ ກຸ່ມປະເທດກຳລັງພັດທະນາ ທາງດ້ານເສດຖະກິດ.

**ໂລກທີສີ່** ແມ່ນຊື່ທີ່ອົງການສະຫະປະຊາຊາດ ຕັ້ງຊື່ໃຫ້ກຸ່ມປະເທດດ້ອຍພັດທະນາທີ່ສຸດ ຊຶ່ງຈຳເປັນຕ້ອງ ໄດ້ປະຕິບັດເປັນພິເສດ ໃນການໃຫ້ຄວາມຊ່ວຍເຫຼືອ ໃນໂຄງການພັດທະນາຕ່າງໆ.

**ລັດຖະບານທະຫານ** ແມ່ນການນຳລະບົບການປົກຄອງໂດຍທະຫານ ໄປໃຊ້ກັບປະຊາຊົນຝ່າພົນລະເຮືອນໃນດິນແດນທີ່ໄດ້ມາໂດຍການຍຶດຄອງ.

**ລັດທິກໍ່ການຮ້າຍ** ແມ່ນກິດຈະກຳຕ່າງໆທີ່ກະທຳໂດຍລັດ ຫຼື ບໍ່ແມ່ນລັດ ຊຶ່ງໃຊ້ເຕັກນິກວິທີການທີ່ຮຸນແຮງໃນຄວາມພະຍາຍາມ ເພື່ອໃຫ້ບັນລຸເປົ້າໝາຍທາງ ການເມືອງ.

**ລັດພັນທະມິດ** ແມ່ນລັດໃດໜຶ່ງ ຊຶ່ງໄດ້ໃຫ້ການຮ່ວມມື ຫຼື ເຄື່ອນໄຫວຊ່ວຍເຫຼືອ ປະເທດທີ່ເປັນສັດຕູໃນສົງຄາມ ຫຼື ໄດ້ລົງນາມໃນສົນທິສັນຍາ ເປັນພັນທະມິດກັບລັດດັ່ງກ່າວ.

**ລັດທິຈັກກະພັດນິຍົມ** ແມ່ນການແຜ່ຂະຫຍາຍອຳນາດຂອງຕົນ ເພື່ອກຳນົດລະບົບການເມືອງ, ການປົກຄອງ ແລະ ເສດຖະກິດ-ສັງຄົມຕໍ່ລັດອື່ນ.

**ລັດທີ່ເຂົ້າຮ່ວມການເຈລະຈາ** ແມ່ນລັດທີ່ເຂົ້າຮ່ວມໃນການຮຽບຮຽງ ແລະ ຮັບຮອງເອົາຂໍ້ຄວາມ ຂອງສົນທິສັນຍາ.

**ລັດພາຄີ** ແມ່ນລັດທີ່ຍິນຍອມທີ່ຈະເຂົ້າຜູກພັນຕາມສົນທິສັນຍາໝາຍ ເຖິງສົນທິສັນຍາ ດັ່ງກ່າວຈະມີຜົນບັງຄັບໃຊ້ ຫຼື ບໍ່ກໍ່ຕາມ.

**ລັດທີສາມ** ແມ່ນລັດທີ່ບໍ່ແມ່ນພາຄີຂອງສົນທິສັນຍາ.

**ລັດເປັນກາງ** ແມ່ນລັດໃດລັດໜຶ່ງທີ່ບໍ່ໄດ້ມີສ່ວນຮ່ວມໃນການເປັນປໍລະປັກ ຫຼື ສົງຄາມກັບ ລັດໃດ.

**ລັດຖະບານພັດຖິ່ນ** ແມ່ນກຸ່ມຄົນໃດໜຶ່ງທີ່ກຳລັງລີ້ໄພການເມືອງ, ໂດຍສະເພາະແມ່ນຜູ້ທີ່ເຄີຍດຳລົງຕຳແໜ່ງທາງການເມືອງທີ່ຕໍ່ຕ້ານລັດຖະບານຢູ່ໃນດິນແດນຂອງປະເທດອື່ນ.

**ລັດຖະປະຫານ** ແມ່ນການເຂົ້າຍຶດອຳນາດຢ່າງກະທັນຫັນຈາກລັດຖະບານ ໂດຍເດັດ ຂາດດ້ວຍກຳລັງທະຫານ ຢູ່ໃນລະບົບດຽວກັນ.

**ວັດຖຸປະສົງ** ແມ່ນເປົ້າໝາຍທີ່ນະໂຍບາຍຕ່າງປະເທດທີ່ຕ້ອງການດຳເນີນໄປ ເພື່ອໃຫ້ບັນລຸເຖິງຈຸດປະສົງຂອງນະໂຍບາຍຕ່າງປະເທດ.

**ວິກິດການ** ແມ່ນເຫດການທີ່ເກີດຂຶ້ນເກີນຂອບເຂດດິນແດນຂອງລັດໃນສາຍພົວພັນສາກົນ, ຊຶ່ງເປັນເຫດ ການທີ່ເກີດຂຶ້ນຢ່າງກະທັນຫັນ, ເປັນບັນຫາດ່ວນ, ໂດຍທົ່ວໄປແລ້ວພົວພັນ ເຖິງບັນຫາສົງຄາມ ແລະ ສັນຕິພາບ.

**ວັດສະດຸຍຸດທະສາດ** ແມ່ນວັດຖຸດິບ ແລະ ຜະລິດຕະພັນເຄື່ອງສຳເລັດຮູບ ທີ່ມີຄວາມ ຈຳເປັນສຳລັບການສູ້ຮົບໃນສົງຄາມສະໄໝໃໝ່.

**ເອກະສິດ ແລະ ສິດຄຸ້ມກັນທາງການທູດ** ແມ່ນຂໍ້ຍົກເວັ້ນຕ່າງໆ ທີ່ນັກການທູດບໍ່ຕົກຢູ່ໃນຂໍ້ບັງຄັບທາງສານແພ່ງ ແລະ ສານອາຍາ ຂອງ ລັດເຈົ້າຖິ່ນທີ່ຕົນໄປປະຈຳຢູ່ນັ້ນ.

**ອົງການຈັດຕັ້ງສາກົນ** ແມ່ນການເຕົ້າລວມ ຫຼື ສະມາຄົມບັນດາລັດ ເຊິ່ງສ້າງຕັ້ງຂຶ້ນພາຍໃຕ້ຂໍ້ຕົກລົງ ຫຼື ສົນທິສັນຍາລະຫວ່າງຊາດ ໂດຍມີໂຄງສ້າງດ້ານການຈັດຕັ້ງ ແລະ ມີຈຸດປະສົງຂອງຕົນເອງ.

**ອົງກອນທີ່ມີອຳນາດຕັດສິນຄະດີຕາມກົດໝາຍສາກົນ** ແມ່ນສະຖາບັນທີ່ມີລັກສະນະເປັນຄະນະກຳມະການຕັດສິນ ຫຼື ສານທີ່ມີອົງປະກອບດ້ວຍ ສອງລັກສະນະຄື: (1) ຕັດສິນຂໍ້ຂັດແຍ່ງສາກົນ ແລະ (2) ຍ້ອນເຫດຜົນທຳມະຊາດທາງດ້ານອຳນາດ ຫຼື ແຫຼ່ງທີ່ມາທາງດ້ານກົດໝາຍ ຫຼື ຂອບເຂດສິດອຳນາດຂອງມັນ, ຈຶ່ງມີລັກສະນະເປັນສານສາກົນ, ບໍ່ແມ່ນສານພາຍໃນປະເທດໃດໜຶ່ງ.

**ວັດຖຸຕ້ອງຫ້າມ** ແມ່ນວັດຖຸທາງສົງຄາມທີ່ລັດເປັນກາງບໍ່ອາດຂາຍໃຫ້ແກ່ຄູ່ສົງຄາມໄດ້.